ວິທະຍາໄລຄູ ສາລະວັນ

# ເອກກະສານຄົ້ນຄວ້າບົດແຕ່ງແບບຢ່າງ







ປີ 2023

# ເອກກະສານຄົ້ນຄວ້າບົດແຕ່ງແບບຢ່າງ

ຜູ້ຄົ້ນຄວ້າ

ອາຈານ ນາງ ຄຳສະຫວັນ ຈັນສີຍະວົງ

ກວດແກ້ໂດຍ

ຊອ ປທ ນາງ ບົວສະຫວັນ ຫອມສີສົມບັດ

ທ່ານ ພູວົງ ຄຳມະນີວົງ

ທ່ານ ສຸລິໄຊ ສີຜາລາດ

ປີ 2023

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ ..55...... ສພ.ວຂ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຄົ້ນຄວ້າຂຽນເອກະສານປະກອບການສອນ

## ຫົວຂໍ້: ປຶ້ມຫັດແຕ່ງ

- ອີງຕາມ: ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- ອີງຕາມ: ແຜນປັບປຸງຄູມບະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- ອີງຕາມ: ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 0640/ວຄວ, ລົງວັນທີ 17 ກຸມພາ 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າປຶດຄົ້ນຄວ້າຂຽນເອກະສານປະກອບການສອນມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈິ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
| --- | --- |
| ທ່ານ ອຈ ປທ ບ. ຂຽງຄຳ ຈັນທະວົງສັກ | ................................ |
| ທ່ານ ຊອ ປທ ມອນໄຊ ຂັນທະຈັກ | ................................ |
| ທ່ານ ຊອ ປອ ໄພທອງ ພົງສິງຄາມ | ................................ |

ທີ່ສາລະວັນ, ວັນທີ ...23...MAR...2023..

**ປະທານສະພາວິທະຍາສາດ**

ອຈ. ນ ລົມປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະພັນແມ່ຍິງແຂວງສາລະວັນ

ວັນທີ 05 ພຶດສະພາ 2023

# ໜັງສືເຊີນ

ເພື່ອເປັນການສະຫຼຸບຕີລາຄາຄືນການຊີ້ນຳ-ນຳພາວຽກງານຮອບດ້ານຂອງຄະນະບໍລິຫານງານສະຫະພັນແມ່ຍິງແຂວງ, ຮາກຖານ, ໜ່ວຍແມ່ຍິງອ້ອມຂ້າງແຂວງ ໄລຍະຜ່ານມາ ແລະ ວາງທິດທາງແຜນການໃນຕໍ່ໜ້າ.

ປະທານຄະນະບໍລິຫານງານສະຫະພັນແມ່ຍິງແຂວງສາລະວັນ ຂໍຖືເປັນກຽດຮຽນເຊີນທ່ານ: ຄະນະບໍລິຫານງານສະຫະພັນແມ່ຍິງແຂວງ, ປະທານຮາກຖານ, ໜ່ວຍແມ່ຍິງອ້ອມຂ້າງແຂວງ ເຂົ້າຮ່ວມກອງປະຊຸມລ່ອງແຜງລາຍງານປະຈຳເດືອນ 5/2023 ແລະ ວາງທິດທາງແຜນການເດືອນ 6/2023 ພ້ອມທັງປຶກສາຫາລືວຽກຈຳນວນໜຶ່ງ. ເຊິ່ງຈະໄດ້ຈັດຂຶ້ນໃນວັນທີ 9 ພຶດສະພາ 2023, ເວລາ 8:30 ໂມງ, ສະຖານທີ່: ສູນວິຊາຊີບສະຫະພັນແມ່ຍິງແຂວງ.

ຫວັງຢ່າງຍິ່ງວ່າທ່ານຄົງຈະສະຫຼະເວລາອັນມີຄ່າເຂົ້າຮ່ວມຕາມຄຳເຊີນນີ້ດ້ວຍ.

ເບີໂທຕິດຕໍ່: 020 9806 8636

ປະທານຄະນະບໍລິຫານງານສະຫະພັນແມ່ຍິງແຂວງສາລະວັນ

ປະທານ

ປ. ວາດສະໜາ ໄພໄຊຍະວົງ

# ຄຳນຳ

ປື້ມປະກອບການສອນເຫຼັ້ມນີ້ຂ້າພະເຈົ້າໄດ້ຄົ້ນຄວ້າຂຶ້ນເພື່ອປະກອບໃນການຈັດກິດຈະກຳ-ການຮຽນການສອນ ໃນລາຍວິຊາວິທັດແຕ່ງ ສາຍຄູພາສາລາວ ເພື່ອໃຫ້ນັກຮຽນຄູຈະໄດ້ຮູ້ກ່ຽວກັບຫຼັກການ, ວິທີສອນຫັດແຕ່ງ , ທັກສະຂັ້ນພື້ນນຖານຂອງການສອນພາສາລາວ, ການສອນຂຽນ, ການແຕ່ງເລື່ອງ, ການແຕ່ງບົດຫັດແຕ່ງປະເພດຕ່າງໆ ນອກຈາກນີ້ນັກຮຽນຄູຈະໄດ້ຮຽນຮູ້ ເຕັກນິກການສອນໃນຮູບແບບຕ່າງໆ ແລະ ນອກຈາກນີ້ຍັງໄດ້ຮູ້ກ່ຽວກັບການແຕ່ງບົດສອນ ແລະ ທົດລອງສອນໃນຫ້ອງຮຽນໄດ້.

ປື້ມປະກອບການສອນເຫຼັ້ມນີ້ໄດ້ມີການພັດທະນາຂຶ້ນມາ ພາຍຫຼັງໄດ້ນຳມາສອນຕົວຈິງ ແລະ ຜ່ານຂັ້ນຕອນການກວດແກ້ຂອງທີມງານຄູສອນພາສາລາວ-ວັນນະຄະດີຂອງວິທະຍາໄລຄູສາລະວັນມາແລ້ວ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ຄູ- ອາຈານ, ນັກຮຽນຄູ ແລະ ແລະ ພາກສ່ວນອື່ນໆຫາກຍັງພົບເຫັນບັນຫາໃດໜຶ່ງທີ່ບໍ່ເໝາະສົມ, ບໍ່ສອດຄ່ອງ ແລະ ບໍ່ທັນສະພາບ, ກະລຸນາປະກອບຄຳເຫັນຂອງຕົນ ເພື່ອຊ່ວຍປັບປຸງເຮັດໃຫ້ປື້ມເຫຼັ້ມນີ້ສົມບູນ ແລະ ມີປະສິດທິຜົນຍິ່ງຂຶ້ນໃນອະນາຄົດ.

ອາຈານ ນາງ ຄຳສະຫ້ອນ ຈັນສີຍະວົງ

# ສາລະບານ


ບົດທີ 1 ການຂຽນປະເພດຕ່າງໆ......1
1. ຄວາມໝາຍ ແລະ ຄວາມສຳຄັນຂອງການຂຽນ......1
2. ປະເພດຂອງການຂຽນ......2

ບົດທີ 2 ການແຕ່ງເລື່ອງ......5
1. ຄວາມໝາຍຂອງການແຕ່ງເລື່ອງ......5
2. ຫຼັກການຂອງການແຕ່ງເລື່ອງ......5
3. ອົງປະກອບຂອງການແຕ່ງເລື່ອງ......6
4. ຂັ້ນຕອນການແຕ່ງເລື່ອງ......7
5. ການວາງໂຄງຮ່າງ......7

ບົດທີ 3 ການແຕ່ງບົດພັນລະນາ......10
1. ຄວາມໝາຍຂອງການຂຽນບົດພັນລະນາ......10
2. ປະເພດຂອງບົດພັນລະນາ......10
3. ຂັ້ນຕອນການແຕ່ງບົດພັນລະນາ......10
4. ແບບຢ່າງບົດພັນ......21

ບົດທີ 4 ການແຕ່ງບົດອະທິບາຍ......31
1. ຄວາມໝາຍ, ຄວາມສຳຄັນຂອງບົດອະທິບາຍ......31
2. ວິທີຂຽນບົດອະທິບາຍ......31
3. ແບບຢ່າງບົດອະທິບາຍ......31

ບົດທີ 5 ການແຕ່ງບົດພິສູດ......40
1. ຄວາມໝາຍ ແລະ ຄວາມສຳຄັນຂອງບົດພິສູດ......40
2. ວິທີຂຽນບົດພິສູດ......40
3. ຂັ້ນຕອນການແຕ່ງບົດພິສູດ......40
4. ແບບຢ່າງບົດພິສູດ......46

ບົດທີ 6 ການແຕ່ງບົດວິຈານ......48
1. ຄວາມໝາຍ,ຄວາມສຳຄັນຂອງການແຕ່ງບົດວິຈານ......48
2. ວິທີສອນຂຽນບົດວິຈານ......48
3. ປະເພດຂອງບົດວິຈານ......48
4. ລັກສະນະ ແລະ ວິທີແຕ່ງບົດວິຈານ......49
5. ແບບຢ່າງບົດພິສູດ......59

ບົດທີ 7 ການແຕ່ງບົດແຕ່ງປະສົມ......63

1. ຄວາມໝາຍ, ຄວາມສຳຄັນຂອງບົດແຕ່ງປະສົມ........................................................63
2. ວິທີແຕ່ງບົດແຕ່ງປະສົມ...............................................................................63
3. ການສົມທຽບລະຫວ່າງບົດອິທິບາຍ, ບົດພິສູດ ແລະ ບົດວິຈານ......................................65
4. ບົດແບບຢ່າງແຕ່ງປະສົມ...............................................................................71
ບົດທີ 8 ການແຕ່ງບົດວິເຄາະ..............................................................................79
1. ຄວາມໝາຍ, ຄວາມສຳຄັນ ຂອງການແຕ່ງບົດວິເຄາະ................................................79
2. ຫຼັກການວິເຄາະບົດປະພັນວັນນະຄະດີ.....................................................................81
3. ວິເຄາະບົດປະພັນວັນນະຄະດີ..............................................................................83

# ບົດທີ 1
# ການຂຽນປະເພດຕ່າງໆ

## 1. ຄວາມໝາຍຄວາມສຳຂອງການຂຽນ.

ການຂຽນຄືການນຳເອົາພະຍັນຊະນະໄປປະກອບໃສ່ສະຫຼະ ໃຫ້ກາຍເປັນຄຳເວົ້າໃດໜຶ່ງ ການ ຂຽນແມ່ນທັກສະຢ່າງໜຶ່ງໃນ 4 ທັກສະທາງພາສາ ເຊັ່ນ ທັກສະການຟັງ, ທັກສະການອ່ານ, ທັກສະການ ຂຽນ, ທັກສະການເວົ້າເຊິ່ງໃນຊີວິດປະຈຳວັນເຮົາສັງເກດໄດ້ທັກສະການຂຽນແມ່ນທັກສະທີ່ນຳໃຊ້ໜ້ອຍ ທີ່ສຸດ, ດັ່ງນັ້ນທັກສະການຂຽນຈຶ່ງເປັນທັກສະທີ່ຂ້ອນຂ້າງຍາກກວ່າທັກສະອື່ນໆ ເນື່ອງຈາກວ່າຄົນເຮົາບໍ່ໄດ້ເຝິກຝົນຢ່າງເຕັມທີ່, ເຮັດໃຫ້ຫຼາຍຄົນພຽງແຕ່ຂຽນໄດ້ບໍ່ແມ່ນຂຽນເປັນ.

ການຂຽນໄດ້ແມ່ນແຕກຕ່າງຈາກການຂຽນເປັນ ການຂຽນໄດ້ແມ່ນຜູ້ຂຽນສາມາດປ່ຽນຕົວ ອັກສອນໃຫ້ເປັນຄຳເວົ້າຕ່າງໆໄດ້ ໂດຍບໍ່ຄຳນຶງເຖິງຜູ້ອ່ານຈະເຂົ້າໃຈສິ່ງທີ່ຂຽນ ຫຼື ບໍ່, ສ່ວນການຂຽນເປັນ ນັ້ນຜູ້ຂຽນຈະຕ້ອງຄຳນຶງເຖິງຜູ້ອ່ານວ່າຈະຕ້ອງຕ້ອງໄດ້ອາໄສອີງປະກອບຫຼາຍຢ່າງ.

ສະຫຼຸບແລ້ວການຂຽນ ແມ່ນການສື່ສານຄວາມໝາຍຢ່າງໜຶ່ງໄປຍັງຜູ້ອ່ານໄດ້ ຄວາມຮູ້, ຄວາມ ຄິດ ແລະ ຄວາມຮູ້ສຶກຂອງຜູ້ຂຽນ.



**ລັກສະນະຂອງຜູ້ຂຽນທີ່ດີມີດັ່ງນີ້:**

- ແມ່ນເປັນຜູ້ສົນໃຈການອ່ານໜັງສືທຸກປະເພດ, ບໍ່ວ່າຈະເປັນຕຳລາ, ວາລະສານ, ບົດຄວາມ,ນະວະນິຍາຍ, ເລື່ອງສັ້ນ, ບົດຮ້ອຍກອງຫຼື ເອກະສານຕ່າງໆໂດຍຜູ້ນັ້ນຈະຕ້ອງອ່ານບໍ່ແມ່ນພຽງ ແຕ່ອ່ານໄດ້ເທົ່ານັ້ນ.
- ແມ່ນເປັນຜູ້ທີ່ມີແນວຄິດລິເລີ່ມສ້າງສັນ, ມີຄວາມຄິດແປກໃຫມ່ທີ່ບໍ່ຊ້ຳກັບຄົນອື່ນ, ເຊິ່ງເຊິ່ງອ່ານສາມາດນຳໄປໃຊ້ໃຫ້ເກີດປະໂຫຍດໄດ້.
- ແມ່ນເປັນຜູ້ທີ່ມີຄວາມສາມານຳໃຊ້ພາສາໄດ້ດີ, ຮູ້ຈັກນຳໃຊ້ພາສາງ່າຍດາຍບໍ່ສັບສົນ ແລະ ເປັນພາສາທີ

ເສາະໃສ່ວົງງານ.

- ແມ່ນເປັນຜູ້ທີ່ມີປະສົບການໃນເລື່ອງຕ່າງໆໄດ້ເປັນຢ່າງດີ, ສາມາດນໍາເຫດການຫຼື ເລື່ອງທີ່ພົບເຫັນ ມາປະສົມກັບບົດຂຽນ. ແມ່ນເປັນຜູ້ທີ່ຍອມຮັບຄວາມຄິດເຫັນຂອງຄົນອື່ນ, ບໍ່ມີອະຄະຕິຕໍ່ຄົນອື່ນ ແລະ ສາມາດສະແດງ ຄວາມຄິດເຫັນໄດ້ຢ່າງມີເຫດຜົນ,
- ແມ່ນເປັນຜູ້ທີ່ຮູ້ຈັກວິທີການຕ່າງໆໃນການຂຽນເຊັ່ນ ສອດແຊກຄາລົມຄວາມມ່ວນຊື່ນໃຊ້ພາສາ ເປັນກັນເອງເຫມືອນກັບກໍາລັງເວົ້າຜູ້ອື່ນຢູ່ສະເຫມີ.
- ແມ່ນເປັນຜູ້ຮູ້ຈັກວິທີການເລີ່ມຕົ້ນເລື່ອງ ການດໍາເນີນເລື່ອງ ແລະ ການຈົບເລື່ອງຢ່າງປະທັບໃຈ ເຮັດໃຫ້

ຜູ້ອ່ານຢາກຕິດຕາມບົດຂຽນຂອງຕົນ.

- ແມ່ນເປັນຜູ້ຂຽນທີ່ດີບໍ່ລອກແບບການຂຽນຂອງຄົນອື່ນ ແລະ ບໍ່ເຮັດໃຫ້ຜູ້ອື່ນໄດ້ຮັບຄວາມເສຍຫາຍ ແລະ ເດືອດຮ້ອນຈາກບົດຂຽນນັ້ນ.
- ແມ່ນເປັນຜູ້ທີ່ມີນິໄສມັກຄົ້ນຄວ້າຫາຄວາມຮູ້ຢູ່ສະເຫມີ.
- ແມ່ນເປັນທີ່ມີຄວາມອົດທົນ, ບໍ່ທໍ້ຖອຍຕໍ່ອຸປະສັກຫຼື ຄໍາວິພາກວິຈານຕ່າງໆແລ້ວເຝິກຝົນການຂຽນຢ່າງສະຫມໍ່າສະເຫມີ.



**2. ປະເພດຂອງການຂຽນ**

- ການຂຽນແບ່ງອອກເປັນ 2 ປະເພດໃຫຍ່ຄື:

**2.1 ປະເພດຂອງການຂຽນຄໍາຮ້ອຍກອງ**

- ແມ່ນການຂຽນເປັນຄຳກອນ, ມີການຈັດວັກຕອນມີການກຳນົດຈຳນວນຄຳໃນແຖວ, ມີການມີການສຳພັດ, ມີການເນືອງສຽງເອກໂທ. ຮູບແບບຂອງຄຳຮ້ອຍກອງແມ່ນຂຽນເປັນເປັນກາບ, ກອນ, ໂຄງ,ສານ. ນອກຈາກການໃຊ້ຄຳເວົ້າແລ້ວ ຍັງຕ້ອງນຳເອົາຄຳເວົ້າມາຮຽບຮຽງຕາມກຳນົດກົດເກນຂອງສັນທະກະວີແຕ່ລະຊະນິດອີກດ້ວຍ.

**2.2 ປະເພດຂຽນຄຳຮ້ອຍແກ້ວ**

- ແມ່ນການຂຽນທີ່ບໍ່ກຳນົດຄຳໃນແຖວເຊິ່ງການຂຽນມີອິດສະຫຼະໃນການເລືອກຄຳເວົ້າມາຮຽບ ຮຽງໃຫ້ເປັນປະໂຫຍກ, ເປັນຂໍ້ຄວາມ ແລະ ເປັນເລື່ອງຕາມຮູບແບທີ່ກຳນົດ ຫຼື ຕາມຄວາມ ນິຍົມ. ຮູບແບບຂອງຄຳຮ້ອຍແກ້ແມ່ນບົດຄວາມ, ສາລະຄະດີ, ນະວະນິຍາຍ, ເລື່ອງສັ້ນ, ຈົດຫມາຍ, ບົດບັນທຶກ, ບົດລະຄອນເຫຼົ່ານີ້ເປັນຕົ້ນ. ,

**ຮູບແບບການຂຽນບົດປະເພດຕ່າງໆ**

**ບົດກະວີ**

ຫມາຍເຖິງບົດຮ້ອຍກອງທີ່ງາມທັງພາສາ ແລະ ຄວາມຄິດມີການສ້າງສັງຄວາມງາມດ້ວຍສຳນວນ ຄຳເວົ້າທີ່ມີການເກາະກ່າບ, ມ່ວນອອນຊອນ, ມັນເປັນສັນຍາລັກແທນບາງສິ່ງບາງຢ່າງທີ່ມີຊີວິດຊີວາສາມາດເຮັດໃຫ້ຜູ້ອ່ານນຶກເຫັນພາບໄດ້ຢ່າງສວຍງາມ, ມີຈິນຕະນາການທີ່ກ້າວໄກ, ມີຄວາມສະເທືອນໃຈຢ່າງເລິກເຊິ່ງ.

- **ບົດບັນເທີງຄະດີ**

ຫມາຍເຖິງການຂຽນທີ່ຜູ້ແຕ່ງຈິນຕະນາການໃຫ້ຄວາມມ່ວນຊື່ນແກ່ຜູ້ອ່ານໃນເບື້ອງຕົ້ນ. ແຕ່ກໍ່ ອາດຈະມີເນື້ອໃນຄວາມຮູ້ທີ່ມີຄ່າຢ່າງຍິ່ງຈາກເບື້ອງຫຼັງຄວາມມ່ວນຊື່ນເທົ່ານັ້ນ.

- **ບົດນະວະນິຍາຍ**

ເປັນບົດວັນນະກຳທີ່ໄດ້ຮັບຮູບແບບຈາກຕາເວັນຕົກ ເຊິ່ງມີວິທີດຳເນີນເລື່ອງຫຼາຍແບບ, ເຊິ່ງຜູ້ ແຕ່ງສາມາດເຮັດໄດ້ຕາມຄວາມຖະຫນັດ ແລະ ຄວາມພໍໃຈຂອງຕົນ, ມີຄວາມແບ່ງແຍກລະຫວ່າງ ການບັນຍາຍ, ການພັດທະນາ ແລະ ສົນທະນາເຊິ່ງເຫມືອນກັບຊີວິດຈິງໃນສັງຄົມຂະນະນັ້ນ.

- **ເລື່ອງສັ້ນ**

ເປັນຮູບການຂຽນຊະນິດຫນຶ່ງຂອງບັນເທີງຄະດີຄຳຮ້ອຍແກ້ວທີ່ມີຂະຫນາດສັ້ນ, ມີການບັນຍາຍ ສາກ, ມີຕົວລະຄອນສຳຄັນບໍ່ຫຼາຍ ແລະ ມັກປ່ອຍຕົວລະຄອນອອກມາໂດຍໄວເພື່ອໃຫຍ່ຜູ້ອ່ານ ສາມາດອ່ານຈົບໄດ້ເວລາອັນສັ້ນ.

- **ບົດຄວາມ**

ແມ່ນການຮຽງຄວາມຊະນິດຫນຶ່ງທີ່ມີຄຳນຳເນື້ອເລື່ອງ, ສະຫຼຸບເລື່ອງ, ມີຂໍ້ຄວາມຫຼັກຖານເປັນຈິງ. ໃນການສະເຫນີຂໍ້ຄິດເຫັນກ່ຽວກັບເລື່ອງຫຼື ເຫດການຕ່າງໆທີ່ເກີດຂຶ້ນ, ເລື່ອງທີ່ຂຽນເປັນບົດ ຄວາມຈະຕ້ອງເປັນເລື່ອງທີ່ຄົນກຳລັງສົນໃຈ, ທັນເຫດການມີເນື້ອໃນແຊກທັດສະນະທີ່ຊວນຄິດ ຊວນອ່ານ.

**3. ອົງປະກອບຂອງການຂຽນ**

ຢາກຂຽນບົດໄດ້ດີເຮົາຄວນເອົາໃຈໃສ່ບາງບັນຫາດັ່ງນີ້:

ກ. ບົດຕ້ອງມີຄວາມຊັດເຈນ, ເມື່ອອ່ານແລ້ວເຂົ້າໃຈທັນທີ, ບໍ່ມີຂໍ້ສົງໄສ, ການໃຊ້ພາສາເຂົ້າໃຈງ່າຍ, ຖືກຕາມຄວາມຫມາຍ.

ຂ. ມີຈຸດປະສົງມຸ້ງຫມາຍທີ່ຊັດເຈນ, ບໍ່ມີເນື້ອໃນສຳຮອງຫຼາຍເກີນໄປ, ອ່ານແລ້ວເຂົ້າເຈດຕະນາຂອງ ຜູ້ຂຽນທັນທີ.

ຄ. ມີຄວາມສຳຄັນ, ດຳເນີນເລື່ອງໄປຕາມລຳດັບຕໍ່ເນື່ອງກັນ, ເຮັດໃຫ້ຜູ້ອ່ານສາມາດຕິດຕາມໄດ້ງ່າຍ.
ງ, ມີຄວາມກວ້າງຂວາງ, ອ່ານແລ້ວມີຄວາມຮູ້, ຄວາມບັນເທີງ 3. ຈະມີຄວາມປານີດ, ຄືເລືອກຄຳມາສ້າງປະໂຫຍກໃຫ້ຖືກຕ້ອງ ແລະ ເຫມາະສົມ
ສ. ມີຄວາມເສາະໃສຈັບງາມ, ເຮັດໃຫ້ຜູ້ອ່ານເຂົ້າໃຈພາສາທີ່ໄດ້ 4. ຫຼັກການຂຽນ

**4.1 ການເລືອກເລື່ອງທີ່ຈະຂຽນ**

ຜູ້ຂຽນຄວນເລືອກເອົາເລື່ອງທີ່ຕົນມີຄວາມຮູ້ຄວາມເຂົ້າໃຈ ແລະ ປະສົບການກ່ຽວກັບເລື່ອງນັ້ນຢ່າງດີທີ່ສຸດ.





## ບົດທີ 2
## ການແຕ່ງເລື່ອງ




### 1. ຄວາມຫມາຍຂອງການແຕ່ງເລື່ອງ

ການແຕ່ງເລື່ອງ ຫມາຍເຖິງການຈັດລຳດັບຂໍ້ຄວາມຕ່າງໆ ໃຫ້ກາຍເປັນເລື່ອງທີ່ຫນ້າສົນໃຈ.ການແຕ່ງເລື່ອງ ເປັນການເຝິກໃຫ້ຜູ້ຂຽນຮູ້ຈັກໃຊ້ຄວາມຄິດ, ຄວາມເຫັນ ແລະ ຄວາມຮູ້ຂອງ ຕົນເອງໃນການຂຽນ ເພື່ອຖ່າຍທອດອອກມາໃຫ້ຜູ້ອ່ານຮັບຮູ້.

ຜູ້ທີ່ຈະແຕ່ງເລື່ອງໃຫ້ຫນ້າສົນໃຈໄດ້ນັ້ນ ຈະຕ້ອງເປັນຄົນທີ່ມີຄວາມຮູ້, ມີປະສົບການ, ຊ່າງສັງເກດ. ຊ່າງຄິດ, ຈົດຈຳ ແລະ ມີຄວາມສາມາດໃນການໃຊ້ພາສາ ເພື່ອຈະມາຮຽບຮຽງເປັນເລື່ອງໃຫ້ຜູ້ອານ ເຂົ້າໃຈໄດ້ຢ່າງຈະແຈ້ງ.

### 2 ຫຼັກການຂອງການແຕ່ງເລື່ອງ

- ຂຽນຊື່ເລື່ອງໄວ້ເຄິ່ງກາງຫນ້າເຈ້ຍ.
- ຂຽນດ້ວຍລາຍມືທີ່ອານງ່າຍ, ຊັດເຈນ, ຖືກຕ້ອງ, ຫຍໍ້ຫນ້າເຈ້ຍໃຫ້ພໍດີງາມບໍ່ຂຽນແຍກຄຳ.
- ຍະຫວ່າງຫນ້າເຈ້ຍທາງດ້ານຊ້າຍ ແລະ ດ້ານຂວາໃຫ້ພໍດີພໍງາມ ບໍ່ຂຽນກາຍຂອບເຈ້ຍ ຫຼື ຂຽນ ຕົກຂອບເຈ້ຍ.
- ວາງ ໂຄງເລືອງ ເພື່ອຈັດລຽງເນື້ອໃນໃຫ້ເປັນໄປຕາມລຳດັບກອນ ແລ້ວຈິ່ງລົງມືຂຽນ.
- ບໍ່ຄວນແຕ່ງເລື່ອງພຽງຫຍໍ້ຫນ້າດຽວ ຕ້ອງແບ່ງເປັນແຕ່ລະຫຍໍ້ຫນ້າເຊັ່ນ: ເປີດຫົວເລື່ອງ, ເນື້ອເລື່ອງ ແລະ ສະຫຼຸບເລື່ອງ ການຕັ້ງຫຍໍ້ຫນ້າແຕ່ລະເທື່ອຄວນໃຫ້ຊື່ກັນ.
- ການແຕ່ງເລື່ອງຕ້ອງໃຫ້ອົງປະກອບທັງສາມສ່ວນກ່ຽວເນື່ອງກັນ, ເປັນເລື່ອງດຽວກັນຕາມ ລຳດັບເນື້ອໃນ.

- ໃຊ້ພາສາງ່າຍໆ ບໍ່ໃຊ້ສັບຍາກ.
- ໃຊ້ພາສາທາງການ ແລະ ພາສາເຄິ່ງທາງການ ບໍ່ຄວນໃຊ້ພາສາເວົ້າ, ພາສາທ້ອງຖິ່ນ ຫຼື ພາສາຕະຫຼາດ.
- ບໍ່ໃຊ້ຄຳຫຍໍ້ ຫຼື ຕົວເລກຍົກເວັ້ນເວົ້າເຖິງ ວັນ, ເດືອນ, ປີ, ສະຖິຕິ ຫຼື ຈຳນວນຕ່າງໆ. ຫາກຈຳເປັນ ຕ້ອງໃຊ້ອັກສອນຫຍໍ້ ຕ້ອງໃຊ້ອັກສອນຫຍໍ້ທີ່ຄົນທົ່ວໄປເຂົ້າໃຈ ແລະ ຍອມຮັບ ຫຼື ນິຍົມໃຊ້.
- ໃຊ້ຄຳ ແລະ ສຳນວນໃຫ້ກະທັດຮັດກົງກັບຄວາມຫມາຍ ບໍ່ຟຸ່ມເຟືອຍ ແລະ ກວມລວມເກີນໄປ. : ເນັ້ນເນື້ອໃນສຳຄັນຂອງເລື່ອງໂດຍໃຊ້ປະໂຫຍກສັ້ນ.
- ເນື້ອໃນຕ້ອງປະກອບດ້ວຍຂໍ້ມູນທີ່ເປັນຈິງ. ຜູ້ຂຽນຄວນຄົ້ນຄວ້າເລື່ອງທີ່ຈະຂຽນໃຫ້ລະອຽດເສຍກ່ອນ.

## . 3. ອົງປະກອບຂອງການແຕ່ງເລື່ອງ

ການແຕ່ງເລື່ອງ ກໍຄືກັບການຂຽນປະເພດອື່ນໆ ເຊິ່ງປະກອບດ້ວຍ 3 ພາກສ່ວນດັ່ງນີ້:

**1 ) ເປີດຫົວເລື່ອງ**

ເປັນສ່ວນທີ່ສ້າງຄວາມສົນໃຈໃຫ້ແກ່ຜູ້ອ່ານ, ມີຄວາມຍາວພໍປະມານ ໃຊ້ສະແດງຄວາມຮູ້ສຶກນຶກຄິດຂອງຜູ້ຂຽນຕໍ່ຫົວຂໍ້ເລື່ອງ ແຈ້ງຈຸດປະສົງເພື່ອນຳເຂົ້າສູ່ເນື້ອເລື່ອງ. ການຂຽນເປີດຫົວເລືອງ ອາດຈະ ຂຶ້ນຕົ້ນດ້ວຍການຍົກຄຳສຸພາສິດ ຫຼື ຄຳຄະຕິພົດມານຳສະເຫນີ ເພື່ອເປັນການອະທິບາຍຄວາມຫມາຍ, ຍົກຂໍ້ຄວາມທີ່ຕັດຕອນມາກາວ, ເລົ່າເຫດການ ຫຼື ຍົກບັນຫານຳເຂົ້າສູ່ເນື້ອເລື່ອງ.

**ຕົວຢ່າງ:**

ຄົນເຮົາບໍ່ແມ່ນວ່າຈະອາໄສຕົນເອງໄດ້ສະເຫມີໄປ ຄົນຮັ່ງມີກໍອາດຍາກຈົນລົງໄດ້, ຄົນແຂງແຮງກໍຍັງ ມີເວລາເຈັບປ່ວຍ, ຄົນສະຫຼາດ, ຄົນແຂງແຮງ ຖ້າມີໂລກໄພໄຂ້ເຈັບເປັນໂລກອຳມະພາດ ຫຼື ປະສາດພິການ ກໍຊ່ວຍຕົນເອງບໍ່ໄດ້, ເມື່ອເປັນແນວນັ້ນການທີ່ເຮົາຈະອວດອົ່ງທະນົງຕົນບໍ່ຕ້ອງເພິ່ງພາອາໄສຜູ້ອື່ນ ຈຶ່ງເປັນຄວາມປະຫມາດອັນຍິ່ງໃຫຍ່.

**2) ເນື້ອເລື່ອງ**

ເປັນຫຍໍ້ຫນ້າຖັດຈາກເປີດຫົວເລື່ອງ ສວນຂອງເນື້ອເລື່ອງເປັນເນື້ອໃນທີ່ສຳຄັນຂອງເລື່ອງ ທີ່ເປັນຄວາມຈິງ, ຄວາມຮູ້, ຄວາມຄິດເຫັນຂອງຜູ້ຂຽນທີ່ຕ້ອງການສື່ສານໃຫ້ຜູ້ອ່ານຮັບຮູ້ ຫາກເນື້ອເລື່ອງແຍກ ເປັນປະເດັນຍອຍໆໄດ້ຫຼາຍປະເດັນ ອາດຈະແຍກຂຽນເປັນປະເດັນລະຫຍໍ້ຫນ້າ, ແຕ່ທຸກປະເດັນຕ້ອງກ່ຽວ ເນື່ອງກັນຕາມລຳດັບຂອງເວລາ, ເຫດການ ແລະ ມີເຫດຜົນ. ຫາກເປັນເລື່ອງທີ່ສຶກສາຄົ້ນຄວ້າມາຕ້ອງ ມີຫຼັກຖານອ້າງອີງ.

**ຕົວຢ່າງ:**

ມະນຸດເຮົາເກີດມາດຳລົງຊີວິດຢູ່ໃນໂລກນີ້ຍ່ອມມີການເກີດ, ແກ່, ເຈັບ ແລະ ຕາຍ ຕາມການປ່ຽນແປງຂອງອາຍຸສັງຂານ ຄືກັບສິ່ງທີ່ມີຊີວິດອື່ນໆໃນໂລກ. ທຸກໆຊີວິດຍອມມີການເພິ່ງພາອາໄສເຊິ່ງກັນ ແລະກັນເຊັ່ນ: ສັດປ່າຈະມີຊີວິດຢູ່ໄດ້ຍ້ອນມີພູຜາປ່າໄມ້ ເຊິ່ງເປັນແຫຼ່ງຂອງອາຫານສຳລັບສັດ, ປາຈະມີຊີວິດ ຢູ່ໄດ້ຕ້ອງອາໄສນ້ຳ, ຄົນຈະມີຊີວິດຢູ່ໄດ້ຕ້ອງອາໄສປັດໄຈພື້ນຖານສີ່ຢ່າງຄື: ອາຫານ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ ອາໄສ ແລະຢາປົ່ນປົວພະຍາດ. ບໍ່ພຽງແຕ່ເທົ່ານັ້ນຄົນເຮົາທີ່ຢູ່ໃນສັງຄົມຫນຶ່ງໆ ຈະຢູ່ໂດດດ່ຽວພຽງລຳພັງບໍ່ ໄດ້ຕ້ອງອາໄສຜູ້ອື່ນ ເພາະວ່າຄົນເຮົາບໍ່ແມ່ນຈະຮູ້ ແລະ ຈະເກັ່ງຫມົດທຸກຢ່າງ, ນັກຮຽນຈະຮຽນເກັ່ງກໍຕ້ອງ ອາໄສຮໍາຮຽນນຳຄູອາຈານ, ຫມູ່ເພື່ອນ ແລະ ບຸກຄົນອື່ນໆທີ່ມີປະສົບການມາກ່ອນ, ຄົນມີເງິນກໍຕ້ອງອາໄສ ເຫື່ອແຮງ. ອາໄສແນວຄິດມັນສະຫມອງຂອງຄົນທີ່ມີຄວາມຮູ້ຄວາມສາມາດ, ຜູ້ບໍລິຫານຢາກມີຄວາມ ສຳເລັດໃນການປະຕິບັດວຽກງານໃດຫນຶ່ງ ກໍຕ້ອງອາໄສເພື່ອນຮ່ວມງານທີ່ດີ, ມີຄວາມຮູ້, ຄວາມສາມາດ ຈຶ່ງຈະປະສົບຜົນສຳເລັດທີ່ເປັນຫນ້າເພິ່ງພໍໃຈ.

### 3) ສະຫຼຸບເລື່ອງ

- ເປັນການສະຫຼຸບເນື້ອໃນສຳຄັນຂອງເລື່ອງທັງຫມົດໃຫ້ຜູ້ອ່ານໄດ້ຮັບຮູ້, ຝາກຂໍ້ຄິດ, ໂດຍໃຊ້ຄຳສຸພາສິດ ທີ່ກ່ຽວຂ້ອງກັບບົດເພື່ອໃຫ້ເກີດຄວາມປະທັບໃຈໃຫ້ແກ່ຜູ້ອ່ານ.

**ຕົວຢ່າງ:**

ສະຫຼຸບລວມແລ້ວ, ຄົນເຮົາຕ້ອງມີການເພິ່ງພາອາໄສເຊິ່ງກັນ ແລະ ກັນ. ສະນັ້ນ, ຈິ່ງຕ້ອງມີເພື່ອນ ມິດສະຫາຍ, ເຮົາຈະເຮັດຫຍັງກໍຕ້ອງຄຳນຶງເຖິງປະໂຫຍດສ່ວນຕົວ ແລະ ປະ ໂຫຍດຂອງຜູ້ອື່ນບໍ່ໃຫ້ຂັດກັນ ໂດຍສະເພາະ ຕ້ອງຄຳນຶງເຖິງປະໂຫຍດສ່ວນລວມເປັນໃຫຍ ເພື່ອຄວາມຢູ່ເຢັນເປັນສຸກຂອງຕົນເອງ ແລະ ຂອງສ່ວນລວມດັ່ງຄຳສຸພາສິດທີ່ວ່າ:

ໄມ້ລຳດຽວ ລ້ອມຮົ້ວບໍ່ໄຂວ່
ໄພ່ບໍ່ພ້ອມ, ແປງບ້ານບໍ່ເຮືອງ”

## 4 ຂັ້ນຕອນການແຕ່ງເລື່ອງ

1) ຫາຂໍ້ມູນ ແລະ ປະສົບການກ່ຽວກັບເລື່ອງທີ່ຈະຂຽນໂດຍການອ່ານ, ການເບິ່ງ ແລະ ການຟັງ ! ຈາກແຫຼ່ງຄວາມຮູ້ຕ່າງໆ ແລ້ວລວບລວມຄວາມຮູ້, ປະສົບການ ແລະ ຄວາມຄິດ ແລ້ວມາວາງແນວທາງການຂຽນ ເຊິ່ງມີການຈັດຮຽງຄວາມຄິດໄວ້ຢ່າງເປັນລະບຽບ.

2) ນຳເອົາລຳດັບຄວາມຄິດທີ່ກຳນົດເປັນແນວທາງການຂຽນ ມາເຮັດເປັນໂຄງຮ່າງບົດ ໂດຍການ - ຈັດເປັນຫົວຂໍ້ຕ່າງໆ ແລະ ມີລາຍລະອຽດປະກອບ.

3) ນຳເອົາຫົວຂໍ້ທີ່ກຳນົດໄວ້ໃນໂຄງຮ່າງມາຂຽນໃນຂັ້ນຮ່າງ, ມີຫຍໍ້ຫນ້າ, ຫົວຂໍ້ແຕ່ລະຫົວຂໍ້ອາດເປັນຫຍໍ້ຫນ້າຫນຶ່ງ ຂຽນໃຫ້ມີຄວາມສຳພັນຕໍ່ເນື່ອງກັນ. 4) ເມື່ອຂຽນຂັ້ນຮ່າງແລ້ວ ຈິ່ງນຳມາປັບປຸງ ແກ້ໄຂ ແລະ ຮຽບຮຽງໃຫ້ເປັນບົດສົມບູນ.

5) ປັບປຸງແກ້ໄຂຖ້ອຍຄຳສຳນວນຂັ້ນສຸດທ້າຍ ເພື່ອໃຫ້ຖືກຕ້ອງຕາມລຳດັບຂັ້ນຕອນລະອຽດລວມທັງຕົວສະກົດ, ສະຫຼະ, ພະຍັນຊະນະ ແລະ ວັນນະຍຸດໃຫ້ຖືກຕ້ອງຕາມຫຼັກຂອງພາສາລາວ

## 5. ການວາງໂຄງຮ່າງ

ການວາງໂຄງຮ່າງ ຄືການນຳເອົາຄວາມຄິດທັງຫມົດມາລຽງລຳດັບເປັນຂໍ້ຄວາມສັ້ນ ໃຫ້ມີຄວາມ ສຳພັນຕໍ່ເນື່ອງກັນ ເຊິ່ງເປັນວິທີຫນຶ່ງທີ່ຈະຊ່ວຍໃຫ້ເກີດຄວາມຄິດໃນເລື່ອງໃດເລື່ອງຫນຶ່ງໄດ້ ກໍຄືການເຝິກ ຊອກຫາຄຳທີ່ມີຄວາມກ່ຽວຂ້ອງກັບຄຳທີ່ກຳນົດໃຫ້ຢ່າງນ້ອຍ 10 ຄໍ ແລ້ວນຳຄຳເຫຼົ່ານັ້ນໄປແຕ່ງເປັນ ປະໂຫຍກສັ້ນໆ ດັ່ງຕົວຢ່າງລຸ່ມນີ້:

ເຮືອນ ເປັນຄຳທີ່ກຳນົດໃຫ້ຄຳອື່ນໆທີ່ກ່ຽວຂ້ອງ 10 ຄໍໆຄື: ພໍ່, ແມ່, ລູກ, ຄວາມສຸກ, ຮັກ, ນ້ຳ, ພັກຜ່ອນ ອາຫານ, ສະບາຍ, ສຳຄັນ ໆລໆ ເມື່ອນຳຄຳເຫຼົ່ານີ້ມາຜູກເປັນປະໂຫຍກສັ້ນໆ ກໍຈະໄດ້ປະໂຫຍກເຊັ່ນ:

ເຮືອນ ເປັນບ່ອນທີ່ໃຫ້ຄວາມສຸກແກ່ເຮົາ.

ເຮົາໄດ້ພັກຜ່ອນ ໄດ້ກິນອາຫານ ແລະ ດື່ມນ້ຳທີ່ເຮືອນ

ພໍ່ແມ່ຮັກລູກ ແລະ ລ້ຽງດູລູກໃຫ້ສຸກສະບາຍ

ເຮືອນມີຄວາມສຳຄັນສຳລັບຄົນເຮົາຫມົດທຸກຄົນ ໆລໆ.

**ຕົວຢ່າງ:**

ຢູ່ແບບມີຫມູ່ເພື່ອນ ຄົນເຮົາບໍ່ແມ່ນວ່າຈະອາໄສຕົນເອງໄດ້ສະເຫມີໄປ ຄົນຮັ່ງມີກໍ່ອາດຍາກຈົນລົງໄດ້, ຄົນແຂງແຮງ ກໍຍັງມີເວລາເຈັບປ່ວຍ, ຄົນສະຫຼາດ, ຄົນແຂງແຮງ ຖ້າມີໂລກໄພໄຂ້ເຈັບເປັນໂລກອຳມະພາດ ຜູ້

ປະສາດການກໍຊອຍຕົນເອງບໍ່ໄດ້, ເມື່ອເປັນແນວນັ້ນການທີ່ເຮົາຈະອອດອີ່ງທະນົງຕົນ ບໍ່ຕ້ອງເພິ່ງພາອາໃສ ຜູ້ອື່ນ ຈຶ່ງເປັນຄວາມປະຫມາດອັນຍິ່ງໃຫຍ່,

ມະນຸດເຮົາເກີດມາດຳລົງຊີວິດຢູ່ໃນໂລກນີ້ຍອມ ມີເກີດ, ແກ່, ເຈັບ ແລະ ຕາຍຕາມການປຽນແປງ ຂອງອາຍຸສັງຂານ ຄືກັບສິ່ງທີ່ມີຊີວິດອື່ນໆໃນໂລກ. ທຸກໆຊີວິດຍ່ອມມີການເພິ່ງພາອາໄສເຊິ່ງກັນ ແລະ ກັນ ເຊັ່ນ: ສັດປາຈະມີຊີວິດຢູ່ໄດ້ຍ້ອນມີພຜາປ່າໄມ້ເຊິ່ງເປັນແຫຼ່ງຂອງອາຫານສຳລັບສັດ, ປ່າຈະມີຊີວິດ ຢູໄດ້ຕ້ອງ ອາໄສ, ຄົນຈະມີຊີວິດຢູ່ໄດ້ຕ້ອງອາໄສປັດໄຈພື້ນຖານສີ່ຢ່າງຄື: ອາຫານ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ ອາໄສ ແລະ ຢາ ປິ່ນປົວພະຍາດ ບໍ່ພຽງແຕ່ເທົ່ານັ້ນຄົນເຮົາທີ່ຢູ່ໃນສັງຄົມຫນຶ່ງໆ ຈະຢູ່ໂດດດຽວພຽງລຳພັງບໍ່ ໄດ້ຕ້ອງອາໄສຜູ້ອື່ນ ເພາະວ່າຄົນເຮົາບໍ່ແມ່ນຈະຮູ້ ແລະ ຈະເກັ່ງຫມົດທຸກຢ່າງ. ນັກຮຽນຈະຮຽນເກັ່ງກໍຕ້ອງ ອາໄສຮ່ຳຮຽນນຳຄູ ອາຈານ, ຫມູ່ເພື່ອນ ແລະ ບຸກຄົນອື່ນໆທີ່ມີປະສົບການມາກ່ອນ, ຄົນມີເງິນກໍຕ້ອງອາໄສ ເຫື່ອແຮງ, ອາໄສແນວ ຄິດມັນສະຫມອງຂອງຄົນທີ່ມີຄວາມຮູ້ຄວາມສາມາດ, ຜູ້ບໍລິຫານຢາກມີຄວາມ ສຳເລັດໃນການປະຕິບັດວຽກ ງານໃດຫນຶ່ງ ກໍຕ້ອງອາໄສເພື່ອນຮ່ວມງານທີ່ດີ, ມີຄວາມຮູ້.ຄວາມສາມາດ . ຈຶ່ງຈະປະສົບຜົນສຳເລັດທີ່ເປັນຫນ້າ ເພິ່ງພໍໃຈ.

ສະຫຼຸບລວມແລ້ວ ຄົນເຮົາຕ້ອງມີການເພິ່ງພາອາໄສກັນ, ສະນັ້ນ, ຈຶ່ງຕ້ອງມີເພື່ອນມິດສະຫາຍ. ເຮົາຈະ ເຮັດຫຍັງກໍຕ້ອງຄຳນຶງເຖິງປະໂຫຍດສ່ວນຕົວ ແລະ ປະໂຫຍດຂອງຜູ້ອື່ນບໍ່ໃຫ້ຂັດກັນ ໂດຍສະເພາະ ຕ້ອງຄຳນຶງ ເຖິງປະ ໂຫຍດສ່ວນລວມເປັນໃຫຍ ເພື່ອຄວາມຢູ່ເຢັນເປັນສຸກຂອງຕົນເອງ ແລະ ສ່ວນລວມ. ດັ່ງຄຳສຸພາສິດ ເວົ້າວ່າ:

“ໄມ້ລຳດຽວ ລ້ອມຮົ້ວບໍ່ໄຂ່ວ
ໄພ່ບໍ່ພ້ອມ ແປງບ້ານບໍ່ເຮືອງ”

**ຂໍ້ສັງເກດ**

1) ຂໍ້ຄວາມໃນແຕ່ລະຫຍໍ້ຫນ້າມີຄວາມສຳພັນຕໍ່ເນື່ອງກັນແຕ່ຕົ້ນຈົນຈົບ. ສະຫຼຸບຂໍ້ຄວາມສຳຄັນ ໄດ້ວ່າ ຄົນເຮົາຕ້ອງເພິ່ງພາອາໄສກັນ ຈຶ່ງຕ້ອງມີຫມູ່ເພື່ອນໄວ້ ແລະ ຈະເຮັດຫຍັງກໍຕ້ອງຄຳນຶງ ເຖິງປະ ໂຫຍດທັງຂອງຕົນເອງ ແລະ ຂອງຜູ້ອື່ນບໍ່ໃຫ້ຂັດກັນ.

2) ມີການລົງທ້າຍດ້ວຍບົດສຸພາສິດນັບວ່າເຫມາະສົມທີ່ສຸດ.




ນິທານລາວ
Julyjulee
ນິທານລາວ
ຜົວແກ້ວເມຍທິບ

# ບົດທີ3

## ການແຕ່ງບົດພັນລະນາ

### 1. ຄວາມໝາຍຂອງການຂຽນບົດພັນລະນາ:

ບົດພັນລະນາແມ່ນບົດແຕ່ງປະເພດໜຶ່ງທີ່ໃຊ້ຄຳເວົ້າ ແລະ ສຳນວນເພື່ອວາດພາບທິວທັດ, ພາບຄົນ ,ພາບສັດ ແລະ ພາບການເຄື່ອນໄຫວດຳລົງຊີວິດຕ່າງໆ.

### 2. ປະເພດຂອງບົດພັນລະນາ:

ບົດພັນລະນາມີ 4 ປະເພດຄື:

1. ບົດພັນລະນາຄົນ
2. ບົດພັນລະນາສັດ
3. ບົດພັນລະນາວັດຖຸສິ່ງຂອງ
4. ບົດພັນລະພາບ

### 3. ຂັ້ນຕອນການແຕ່ງບົດພັນລະນາ

**1. ພັນລະນາຄົນ**

**1).ຄວາມໝາຍຂອງບົດພັນລະນາຄົນ.**

ບົດພັນລະນາຄົນແມ່ນບົດພັນລະນາປະເພດໜຶ່ງ ທີ່ພັນລະນາເຖິງໂຄງສ້າງບຸກຄະລິກກະພາບພາຍນອກ ແລະ ພາຍໃນ ຂອງຄົນເຮົາ.

**2). ວິທີແຕ່ງບົດພັນລະນາຄົນ**

ການພັດທະນາຄົນເລີ່ມຈາກການພັນລະນາຮູບຮ່າງ,ລັກສະນະ,ນິໄສໃຈຄໍ,ຄວາມຮູ້ສຶກນຶກຄິດ ແລະ ການກະທຳເຊິ່ງສາມພາກສ່ວນນີ້ ມີການພົວພັນຢ່າງສະໜິດແໜ້ນນຳກັນ ເພາະວ່ານິໄສໃຈຄໍ ແລະຄວາມຮູ້ສຶກນຶກຄິດສະແດງອອກໂດຍຮູບຮ່າງ ແລະ ການກະທຳ, ແຕ່ສ່ວນຫຼາຍຈະສະແດງອອກໂດຍຜ່ານການກະທຳເປັນຕົ້ນຕໍ. ການພັນລະນາຄົນມີ 3 ປະເພດ ຄື ພັນລະນາຮູບການພາຍນອກ, ພັນລະນານິໄສໃຈຄໍ ແລະຄວາມຮູ້ສຶກ, ພັນລະນາການເຄື່ອນໄຫວ.



3). ໂຄງຮ່າງພັນລະນາຮູບຮ່າງເລົ່າຄືງ

ກ ເປີດຫົວເລື່ອງ

ແນະນາຄົນຜູ້ນັ້ນ ລາວຢູ່ໃສ?ເປັນຄົນແນວໃດ?

ຂ ເດີ່ນເລື່ອງ

ພັນລະນາໂດຍທົ່ວໄປ ອາຍຸເທົ່າໃດ?ໃຫຍ່ປານໃດ(ກ່າວເຖີງລັກສະນະພິເສດຂອງຜູ້ນັ້ນ ເຊັ່ນ ສູງໂປກເປກ,ຕໍ່າອໍ້ປໍ້ ຫຼື ບໍ່ສູງ ບໍ່ຕໍ່າ,ຮ່າງກາຍແຂງແຮງ) ຮູບຊົງຜົມ,ດັງ,ເລົ່າລີງ,ແຂນຂາເປັນແນວໃດ?(ກ່າວເຖີງຈຸດຕ່າງກັນເຊັ່ນ: ຜິວສີໜາກຫວ້າ,ແຂນຂາສ້ອຍຫຼືລີບ) ການນຸ່ງຖືງ່າຍດາຍ,ສຸພາບ,ສະອາດ,ຕາມປົກກະຕິມັກນຸ່ງເຄື່ອງສີ…ກິລິຍາ,ທ່າທີ,ການໄປມາ,ການຍ່າງ,ໜ້າຊື່ນບານ,ສຸພາບອອນໂຍນຫຼື ເຄັ່ງຂຶມ,ດບູດເບິ່ງເຫຼົ່ານີ້ເປັນຕົ້ນ.

ຄ ສະຫຼຸບເລື່ອງ

- ຄວາມຮູ້ສຶກຂອງຕົນຕໍ່ຜູ້ນັ້ນ
- ບົດຮຽນທີ່ໄດ້ມາຈາກຄົນຜູ້ນັ້ນ

## 2. ພັນລະນາສັດ:

**1).ຄວາມໝາຍຂອງບົດພັນລະນາສັດ:**ບົດພັນລະນາສັດ ແມ່ນບົດພັນລະນາປະເພດໜຶ່ງທີ່ມີເປັນສິ່ງກາງໃນການພັນລະນາເຊັ່ນ: ພັນລະນາຮູບຮ່າງພາຍນອກ, ການເຄື່ອໄຫວນິອາຈິນ ແລະ ຄຸນປະໂຫຍດຂອງສັດ...







2).ວິທີພັນລະນາສັດ

ຢາກພັນລະນາສັດໄດ້ຄວນເອົາໃຈໃສ່ຄື:

ການພັນລະນາຮູບຮ່າງສັດ ຕ້ອງເລີ່ມແຕ່ຮູບຊົງທົ່ວໄປກ່ອນ ຫຼັງຈາກນັ້ນ ອັນໃດເປັນຈຸດເດັ່ນເຫັນໄດ້ງ່າຍຫຼືເປັນຈຸພິເສດຈຶ່ງເວົ້າໃຫ້ລະອຽດການພັນລະນານິໃສ,ອາຈິນ ແລະ ການເຄື່ອນໄຫວຂອງສັດຄວນຍົກໃຫ້ເຫັນຄວາມແຕກຕ່າງຂອງສັດແຕ່ລະຈຳພວກແລະແຕ່ລະໂຕໃນການພັນລະນາຄວນນຳໃຊ້ຄຳສັບທີ່ພາໃຫ້ເກີດຄວາມອອ່ນຊອ້ຍ ແລະ ປຽບທຽບດວ້ຍຕົວຢ່າງຄຳສັບທີ່ພາໃຫ້ມວ່ນ ແລະອອ່ນຊອ້ຍ ເຊັ່ນ :ຊາບງາບ,ໂຈ້ໂກ້,ຊົກງົກ,ພຽງລິດ,ດຳປີ້ໆ,ເວດທະນາຄຳປຽບທຽບ ເຊັ່ນ :ກົ່ງດັ່ງຂາທະນູ,ຂາວຈານຜານ,ຂາວຈອກພວກປານໄຂ່ປອກ,ດຳປີ້ໆປານຕໍ່ກາງໄຮ່,ບາງປານເຈ້ຍໄວປານຟ້າແມບ …

**ໂຄງຮ່າງຂອງພັນລະນາສັດ**

**ກ ເປີດຫົວເລື່ອງ**

ແນະນຳສັດຕົວນັ້ນມັນຢູ່ໃສ?ຕົນໂຕຂອງມັນເປັນແນວໃດ

**ຂ ເດັ່ນເລື່ອງ**

- ພັນລະນາໂດຍທົ່ວໄປ ສັດໂຕນີ້ໃຫຍ່ຫຼືນອ້ຍແນວໃດ?ມີລັກສະນະພິເສດເຊິ່ງແຕກຕ່າງຈາກສັດໂຕອື່ນ ທີ່ແມ່ນປະເພດດຽວກັນກັນມັນແນວໃດ?
- ອະໄວຍະວະຕ່າງໆຫົວ,ຫາງ,ຂົນ,ຫູ,ຕາ,ເລົາຄີງ…ເປັນ"ນວໃດ?
- ນິໃສ,ອາຈິນ, ແລະການເຄື່ອນໄຫວ ອາດຊີງ,ທ່າທາງ,ການໄປມາ,ການນອນ,ການ'ະພຶດ,ການດຳລົງຊີວິດ ແລະ ການຫາກິນຂອງມັນ

**ຄ ສະຫຼຸບເລື່ອງ**

ຄຸນປະໂຫຍດຂອງສັດມີຕໍ່ຄົນເຮົາ,ສະແດງຄວາມຮູ້ສຶກຂອງຕົນຕໍ່ສັດ

**3.ພັນລະນາວັດຖຸ**

**1) ຄວາມໝາຍຂອງບົດພັນລະນາວັດຖຸ.**

ແມ່ນບົດພັນລະນາວັດຖຸ ແມ່ນບົດພັນລະນາປະເພດໜຶ່ງ ທີ່ໃຊ້ວັດຖຸສິ່ງຂອງເປັນສື່ກາງໃນການພັນລະນາເຊັ່ນ: ພັນລະນາລັກສິນະສີສັນ ແລະ ຄຸນປະໂຫຍດ...





**ຮູບພາບ 3 ຮູບວັດຖຸສິ່ງຂອງ**

2).ໂຄງຮ່າງຂອງບົດພັນລະນາວັດຖຸ

ກ ເປີດຫົວເລື່ອງ

ບອກຊື່ແລະຈຸດປະສົງທີ່ເຮົາພັນລະນາ

ຂ ເດີ່ນຫົວເລື່ອງ

ຮູບຮ່າງລັກສະນະ, ສີສັນ, ຂະໜາດ ແລະ ສ່ວນປະກອບອື່ນໆຂອງວັດຖຸ ທີ່ເຮົາຈະພັນລະນາ

**ຄ ສະຫຼຸບເລື່ອງ**

ເວົ້າເຖິງຄຸນປະໂຫຍດ ແລະ ການບົວລະບັດສິ່ງດັ່ງກ່າວ

**4.ພັນລະນາພາບ.**

**1) ຄວາມໝາຍຂອງບົດພັນລະນາພາບ.**

ບົດພັນລະນາພາບແມ່ນບົດພັນລະນາປະເພດໜຶ່ງທີ່ໃຊ້ພາບເປັນສື່ກາງໃນການພັນລະນາເຊັ່ນ: ການພັນລະນາທັດສະນີຍະພາບ, ພັນລະນາພາບຊີວິດປະຈຳວັນ ແລະ ການພັນລະນາປະກົດການທຳມະຊາດ



**ຮູບທີ 4 ຮູບພາບທຳມະຊາດໝູ່ບ້ານແຫ່ງໜຶ່ງຢູ່ເມືອງຕະໂອ້ຍ**

**2) ວິທີພັນລະນາພາບມີຄືດັ່ງນີ້:**

- ກ່ອນຈະພັນລະນາພາບ ຕອ້ງກຳນົດເນື້ອໃນໃຈຄວາມ ແລະ ຄວາມຮູ້ສຶກລວມຂອງບົດເຊັ່ນ ພາບນັ້ນມວ່ນ ຫຼື ໂສກເສົ້າມັນມີການເຄື່ອນໄຫວ ຫຼື ສະຫງັດ, ເວລາແຕ່ງຕອ້ງໃຊ້ຮູບພາບໃຫ້ເໝາະສົມກັບຄວາມຮູ້ສຶກລວມ. ຕ້ອງແຕ່ງພາບໃຫ້ຖືກຕາມກາລະແລະລະດູການ ເຊັ່ນ ຍາມຝົນ, ຍາມແດດ, ຍາມເຊົ້າ, ຍາມແລງ…
- ຕອ້ງໃຫ້ຮູບພາບຕົວຈິງ ບົດພັນລະນາຈະດູດດຶງໃຈຄົນໄດ້ ຍ້ອນວ່າເນື້ອໃນຂອງບົດໄດ້ຜ່ານຮູບພາບທີ່ເປັນຈິງ ແລະ ມີຊີວິດຊີວາ. ໃນບົດແຕ່ງພັນລະນາພາບນັ້ນຜູ້ແຕ່ງກໍ່ຮູ້ໃຊ້ຄຳສັບທີ່ສາມາດສາແດງອອກດວ້ຍຮູບ, ສຽງ, ຮູ້ຈັກປຽບທຽບ ແລະ ປຽນແປ່ງພາບຄື:ສັດ, ສິ່ງຂອງ…ມີຊີວິດຄືກັນ.

- ຖ້າຢາກຮຽນຮູ້ຄືດັ່ງກ່າວມານັ້ນ ນັກຮຽນຕ້ອງດຸໝັ່ນອ່ານປື້ມ,ຟັງຜູ້ອື່ນເລົ່າເລື່ອງ ແລະ ຊອກຮູ້ນຳຊີວິດຕົວຈິງອີກດວ້ຍ



ຮູບທີ5: ຮູບພາບແກ້ກຸ





**ຮູບທີ6:ຮູບພາບທຳມະຊາດເຊລະມັງ ເມືອງຕະໂອ້ຍ ແຂວງສາລະວັນ**

ການພັດທະນາ ພາບລວມມີ 3 ປະເພດຄື:

1 ການພັນລະນາທັດສະນີຍະພາບ

- ພາບທຳມະຊາດດອກໄມ້,ພູຜາປາດົງ,ແມ່ນ້ຳລຳເຊ…
- ທັດສະນີຍະພາບໂດຍຄົນສ່າງຂຶ້ນ,ໂຮງຮຽນ,ຮ້ານຄ້າ,ຕະຫຼາດ…

2 ພັນລະນາພາບຊີວິດປະຈຳວັນ

- ການກຽ່ວເຂົ້າໃນຕອນໜື່ງ, ການອອກແຮງງານເພີ້ມພູນລວມໝູ່…

3 ການພັນລະນາປະກົດການທຳມະຊາດ

- ທ່າຝົນ,ລົມພະຍຸ,ຕາເວັນຂຶ້ນ,ລະດູ,ລະດູໜາວ…

. ໂຄງຮ່າງບົດພັນລະນາພາບທຳມະຊາດ



**ຮູບທີ7: ພາບທຳມະຊາດປ່າໄມ້**

**ກ ເປີດຫົວເລື່ອງ**

- ທີ່ຕັ້ງຂອງປ່າ

**ຂ ເດີນເລື່ອງ**

- ແຕ່ງພາບລວມ
- ຄຸນປະໂຫຍກແລະການນຳໃຊ້ໄມ້
- ຜົນສະທ້ອນໃນການທຳລາຍປ່າ
- ການຂະຫຍາຍ-ປູກໄມ້ທົດແທນ

**ຄ. ສະຫຼຸບເລື່ອງ**

- ປ່າໄມ້ມີຜົນປະໂຫຍດແນວໃດ ? ຕໍ່ທຸກໆຊີວິດ ຫຼື ຕໍ່ຄົນ ແລະ ສັດ.
- ຕ້ອງປົວລະບັດຮັກສາປ່າໄມ້ແນວໃດ ?

ກິດຈະກຳ  ວິທີສອນບົດພັນລະນາ ເວລາ 45 ນາທີ

ອຸປະກອນ

- ວັດຖຸຈິງ ( ທີ່ມີໃນທ້ອງຖິ່ນ )
- ຮູບພາບ, ເຈ້ຍລ່ານ, ບັດຫົວເລື່ອງຕ່າງໆ.

ວິທີດຳເນີນກິດຈະກຳ

- ຄູອະທິບາຍແນະນຳກ່ຽວກັບວິທີແຕ່ງບົດພັນລະນາແຕ່ລະປະເພດໃຫ້ນັກຮຽນຟັງ.
- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ.
- ຄູຢາຍຫົວບົດໃຫ້ແຕ່ລະກຸ່ມຄົ້ນຄວ້າເຊັ່ນ: ພັນລະນາຄົນ, ພັນລະນາສັດ, ພັນລະນາວັດຖຸ ແລະ ພັນລະນາທຳມະຊາດ
- ຄູໃຫ້ນັກຮຽນແຕ່ລະກຸ່ມສັງເກດເບິ່ງວັດຖຸຕົວຈິງທີ່ຈະນຳມາພັນລະນາ

  ຕົວຢ່າງ:
- ທຳມະຊາດຕ້ອງສັງເກດເບິ່ງພາບທີ່ຢູ່ໃນບໍລິເວນໂຮງຮຽນແລະອື່ນໆ.
- ຄົນຕ້ອງສັງເກດເບິ່ງໝູ່ເພື່ອນຢູ່ໃນຫ້ອງຮຽນ ຫຼື ຄົນຢູ່ໃນຄອບຄົວ ແລະ ບຸກຄົນອື່ນໆ.
- ວັດຖຸຕ້ອງສັງເກດວັດຖຸທີ່ຢູ່ໃກ້ຕົວເຮົາເຊັ່ນ: ປື້ມ, ສໍ, ກະດານ, ໂຕະ, ຕັ່ງ…
- ສັດຕ້ອງສັງເກດເບິ່ງສັດທີ່ຢູ່ໃກ້ຕົວເຮົາເຊັ່ນ: ໃນໂຮງຮຽນ, ໃນຄອບຄົວ ຫຼື ສັງເກດເບິ່ງຢູ່ຕາມຮູບພາບ.
- ຄູໃຫ້ນັກຮຽນແຕ່ລະກຸ່ມສ້າງໂຄງຮ່າງດ້ວຍຕົນເອງ.
- ຄູໃຫ້ແຕ່ລະກຸ່ມສະເໜີໂຄງຮ່າງທີ່ກຸ່ມຕົນເອງສ້າງແລ້ວໃຫ້ໝູ່ຟັງ.
- ຄູສົມທຽບໂຄງສ້າງທີ່ນັກຮຽນສ້າງຂຶ້ນໃສ່ກັບຕົວຢ່າງຂອງຄູ ຈາກນັ້ນຄູອະທິບາຍແນະນຳເພີ່ມເຕີມ
- ຄູໃຫ້ແຕ່ລະກຸ່ມກຽມຂຽນບົດພັນລະນາຕົວຈິງຕາມຫົວຂໍ້ທີ່ຄູຢາຍໃຫ້ພ້ອມທັງແຕ້ມຮູບປະກອບ.
- ຄູເກັບບົດນັກຮຽນໄວ້ກວດ.
- ຄູເອົາບົດນັກຮຽນທີ່ກວດແລ້ວມາຕິດໄວ້ພາຍໃນຫ້ອງຮຽນເພື່ອໃຫ້ນັກຮຽນຜູ້ອື່ນໆໄດ້ອ່ານ.

## ບົດພັນລະນາແຕ່ລະປະເພດ

### 1. ບົດພັນລະນາວັດຖຸ

### ພັນລະນາສໍດຳເສັ້ນໜຶ່ງ

ເຂົ້າສົກຮຽນໃຫມ່ມາກໍ່ໄດ້ຫລາຍວັນແລ້ວ, ແຕ່ຫລານຍັງບໍ່ທັນມີ ສໍດຳເທື່ອ. ເມື່ອຄູໃຫ້ແຕ້ມຮູບຫລານໃຈບໍ່ດີເລີຍທີ່ບໍ່ມີສໍແຕ້ມ. ມື້ລຸນ ມາແມ່ຂອງຫລານໄປຕະຫລາດ, ຫລານກໍໄດ້ສັ່ງເພິ່ນຊື້ສໍດຳມາໃຫ້.

ຕອນທ່ຽງຂອງມື້ນັ້ນຫລານກໍເລີຍໄດ້ມີສໍດຳງາມເສັ້ນຫນຶ່ງນຳຫມູ່, ສໍ ດຳເສັ້ນນີ້ ລວງຍາວຂອງມັນປະມານຄືບຫນຶ່ງ, ສົ້ນຫນຶ່ງຂອງມັນມີຢາງລຶບ ສີຂາວຕິດຢູ່ໃນຂອບອາລູມີນຽມສີທອງ, ຮູບຮ່າງເປັນລ່ຽມທາສີເຫລືອງ ແກມສີຟ້າ ເຄິ່ງສໍ.ມີຕົວເລກ 777 ແລະ ຕົວຫນັງສືສາກົນເປັນສີເຫລືອງ ເຫລື້ອມ, ເບິ່ງແລ້ວຈັ່ງແມ່ນງາມຕາແທ້ໆ, ເມື່ອຫລານປິ່ນອີກສົ້ນຫນຶ່ງມາ ເບິ່ງກໍເຫັນໄສ້ສີດຳປີໆຢູ່ໃນໃຈກາງຂອງເສັ້ນສໍ, ຫລານຈັບແຍງໄປແຍງ ມາຫລາຍເທື່ອ ກໍຮູ້ສຶກມີກິ່ນຫອມຂອງໄມ້ທີ່ຍັງບໍ່ທັນຈາງຫາຍ. ຫລານ ເອົາມີດຄົມໆມາແຫລມມັນແລ້ວຄ່ອຍໆເນັ້ນປາຍມີດໃສ່ເຫລັ້ມສໍດ້ວຍ ຄວາມລະມັດລະວັງ, ກີບໄມ້ທີ່ຖືກຄົມມີດກໍກະເດັນອອກ ໄສ້ສໍດຳກໍພົ້ນ ອອກມາ.. ກິ່ນຫອມຂອງມັນກໍກຸ້ມຂຶ້ນໃສ່ດັງຫລານຈົນເຮັດໃຫ້ຫລານ ລະເມີເພີ້ຝັນໄປນຳກິ່ນຂອງມັນຫລານແຫຼມໃຫ້ມັນກ້ຽງໆແລະກໍແຫລມ ດີເບິ່ງແລ້ວເປັນຕາຢາກຂຽນແທ້ໆ.

ນັບແຕ່ນັ້ນມາສໍດຳກໍ່ກາຍເປັນເພື່ອນສະນິດສະຫນົມຂອງຫລານ ເວລາຂີດຂຽນຫຼືແຕ້ມຮູບ ຫຼານບໍ່ກັງວົນລໍຖ້າ ຢືມຫມູ່ອີກແລ້ວ. ຫຼານຈະ ຮັກ ແລະ ສະຫນອມວັນຈົນກ່ວາມັນຈະຫມົດໄປຈາກມືຂອງຫຼານ.



# ພັນລະນາ ກະດານດຳແຜ່ນໜຶ່ງ

ມື້ໄຂສົກຮຽນໃຫມ່ ຫລານໄດ້ເຂົ້າໄປຫ້ອງຮຽນຂອງຫລານພ້ອມກັບເພື່ອນ ເລີຍ, ເຫັນກະດານດຳແຜ່ນຫນຶ່ງທີ່ຕິດຢູ່ຝາຫ້ອງຮຽນຂ້າງໂຕະຄູມັນຍັງໃຫມ່ຢູ່.

ກະດານດຳທີ່ຕິດຢູ່ຝາຫ້ອງຮຽນຍັງໃຫມ່ບໍ່ທັນມີຮອຍຂຽນເທື່ອ ໃຜເຫັນກໍ່ ດີອົກດີໃຈຄິດຢາກຈະຂຽນໃສ່, ເພື່ອນບາງຄົນກໍເວົ້າວ່າກະດານແຜ່ນນີ້ມີລວງຍາວໄດ້ ຫ້າສອກ, ລວງກວ້າງສາມສອກ, ພວກເຮົາບໍ່ສາມາດບອກຖືກເລີຍວ່າກະດານມີລວງ ກ້ວາງ ແລະ ລວງຍາວເທົ່າໃດແທ້. ຈົນກວ່າມີຄູຍ່າງກາຍຫນ້າຫ້ອງມາໄດ້ຍິນພໍດີ, ເພິ່ນ ກໍ່ບອກວ່າກະດານເຜ່ນນີ້ລວງກ້ວາງແທກໄດ້ແມັດຫ້າສິບ, ລວງຍາວແທກໄດ້ສອງ ແມັດຫ້າສິບ, ເມື່ອໄດ້ຍິນແນວນັ້ນການຄາດເດົາຂອງພວກຫລານກໍ່ໄດ້ມິດລົງ, ຫລານຢືນເບິ່ງກະດານມັນເຫລື້ອມຍິບຍັບ, ເບິ່ງຢູ່ໄກແລ້ວຄືແຜ່ນກຳມະຍີ່ດຳ, ເທິງກະດານມີ ເຫລັກຕາປູໃຫຍ່ສອງດອກ ຢູ່ທາງລຸ່ມກໍມີອີກສອງດອກເພື່ອຕອກໃສ່ກະດານຕິດໃສ່ ຝາ ໃຫ້ມັນແຈບ ແລະ ແຫນ້ນຫນາດີ, ຢູ່ແຈກະດານເບື້ອງຊ້າຍມີບ່ອນໃສ່ສໍຂາວຈັ່ງແມ່ນ ສະດວກແທ້. ກະດານຫ້ອງຂອງຫລານເຮັດດ້ວຍແປ້ນອັດທີ່ມີຄວາມຫນາປະມານຫນຶ່ງຊັງຕີແມັດ.ຫລານສັງເກດເບິ່ງແລ້ວກໍ່ຢາກຈະຈັບເອົາສໍຂາວອອກມາຂຽນແທ້ໆ ກະ ດານແຜ່ນນີ້ສົມແລ້ວທີ່ເພິ່ນໄດ້ເວົ້າວ່າ: "ຄູຂາດກະດານຂຽນ, ນັກຮຽນຂາດຄູແລ້ວ ຊາດຈະຢູ່ຢ່າງໃດ ".

ກະດານແຜ່ນນີ້ເປັນຕາຫນ້າຮັກແທ້, ຍ້ອນກະດານແຜ່ນນີ້ແຫລະພວກຫລານ ຈຶ່ງໄດ້ຮ່ຳຮຽນສຶກສາດີ. ທຸກມື້ພວກຫລານກໍໄດ້ແບ່ງປັນຫນ້າທີ່ກັນເສັດຖຸກະດານ, ຍ້ອນມີນ້ຳໃຈອົນຂະຫຍັນຫມັ່ນພຽນ ແລະ ດູແລຮັກສາຂອງສ່ວນລວມ, ສະນັ້ນ, ກະ ດານໃນຫ້ອງຮຽນຂອງພວກຫລານ ຍາມໃດກໍ່ໃຫມ່ຢູ່ສະເຫມີ.



# ພັນລະນາ ປຶ້ມແບບຮຽນຫົວໜຶ່ງ

ຍັງອີກອາທິດຫນຶ່ງກໍຈະເຖິງມື້ເປີດສົກຮຽນໃຫມ່ແລ້ວ ແມ່ຂອງຫລານກໍໄດ້ ຊື້ປຶ້ມແບບຮຽນ ມາໃຫ້ຫລານໃນນັ້ນມີປຶ້ມພາສາລາວ, ຄະນິດສາດ ແລະ ໂລກອ້ອມ ຕົວສິ່ງທີ່ຫຼານປະທັບໃຈກໍຄື ປຶ້ມຄະນິດສາດນີ້ແຫລະ ເພາະມັນມີສີສັນງົດງາມຫລາຍ.

ຫລານຈັບປຶ້ມຄະນິດສາດຫົວນັ້ນແຍງໄປແຍງມາ, ລວງກວ້າງຂອງມັນຄືງ ຈະປະ ມານ 20 ຊັງຕີແມັດ ແລະ ລວງຍາວ ກໍຈະປະມານ 25 ຊັງຕີແມັດ, ຫລັງ ຂອງມັນແຂງ, ສີພື້ນເປັນສີສົ້ມ ສົ້ນເບື້ອງຊ້າຍລາຍສາມສີຄື ສີແດງ, ສີເຫຼືອງ ແລະ ສີຟ້າ, ສ່ວນທາງເບື້ອງເທິງຂອງປຶ້ມມີຕົວຫນັງສືຂຽນວ່າແບບຮຽນຄະນິດສາດປີທີ່ຫ້າ ແລະ ຢູ່ສົ້ນເບື້ອງຂວາມີກາສັນຍາລັກຂອງ ສຶກສາທິການ ແລະ ກິລາ. ສ່ວນຢູ່ໃນວົງ ສີຂາວສີ່ຫຼ່ຽມນັ້ນມີຮູບເລຂາຄະນິດຕ່າງໆ, ເຊັ່ນວ່າຢູ່ແຖວເທິງຂອງຮູບແມ່ນຮູບທີ່ນຶ່ງ. ບອກເຖິງການແບ່ງສ່ວນ, ທັດລົງມາແມ່ນຮູບແບບ ແລະ ຮູບແທ້ຂອງຮູບກ້ອນຫຼາຍ ຫລານຈັບແຍງໄປແຍງມາແລ້ວຫຼານກໍ່ອົດບໍ່ໄດ້ທີ່ຈະເປີດເບິ່ງຂ້າງໃນຂອງມັນ, ຫຼານຄ່ອຍໃຊ້ມືເປີດຫນ້າເຈ້ຍຂອງແຕ່ລະຫນ້າດ້ວຍມືເບົາໆ ປະກອບມີຫຼາຍບົດຫລາຍ ແບບ ທີ່ປະກອບມີເນື້ອໃນແຕກຕ່າງກັນ, ຫຼານເປີດໄປເປີດມາກໍ່ໄປຄຶດເອົາຄຳເວົ້າຂອງ ແມ່ວ່າ" ສະໄຫມຕອນທີ່ແມ່ເປັນນັກຮຽນປະຖົມ, ບໍ່ມີປຶ້ມແບບນີ້ ທີ່ຈະຮຽນເລີຍມີ ແຕ່ຄູຈົດໃສ່ກະດານໃຫ້ແລ້ວກ່າຍເອົາໃຜກ່າຍຊ້າກໍ່ຈະບໍ່ທັນຫມູ່"ສະນັ້ນມາຮອດປັດຈຸບັນນີ້ມີຄວາມສະດວກສະບາຍຫຼາຍ ເປັນຍ້ອນພັກລັດທີ່ເພິ່ນໄດ້ໃຫ້ຄວາມສຳຄັນຂອງການສຶກສາສູງກວ່າຫມູ່ໃນຖັນແຖວຂອງວຽກງານອື່ນໆ. ຫຼານກໍ່ມີຄວາມພາກພູມ ໃຈເປັນທີ່ສຸດ ທີ່ໄດ້ເກີດມາໃນຍຸກສະໄຫມຂອງສັງຄົມທີ່ມີການພັດທະນາ ແລະ ມີ ເທັກໂນໂລຢີສູງ.

ປຶ້ມຫົວນີ້ມັນຄືງຈະໃຫ້ປະໂຫຍດແກ່ຫລານຫຼາຍ, ຫຼານຈະຖະຫນອມມັນ ໃຫ້ດີເພື່ອບໍ່ໃຫ້ມັນຈີກຂາດ , ໃຫ້ມັນຢູ່ຄູ່ກັບຫຼານຈົນສິ້ນປີຮຽນ ແລະ ກໍ່ຈະຖະຫນອມ ໃຫ້ນ້ອງນຸ່ງຂອງຕົນໄດ້ຮ່ຳໄດ້ຮຽນຕໍ່ໄປ.



## 2. ບົດພັນລະນາສັດ

### ພັນລະນາແມວໂຕຫນຶ່ງ

ຢູ່ເຮືອນຂອງຫລານມີຫນູຫລາຍ, ເອື້ອຍຂອງຫລານຈິ່ງໄດ້ໄປຂໍເອົາແມວນຳ ເພື່ອນ ຂອງລາວມາລ້ຽງໄວ້ເພື່ອເອົາມາກຳຈັດຫນູເບິ່ງແລ້ວມັນເປັນແມວທີ່ຄຳຮູ້ ແລະ ຫນ້າຮັກ.

ແມວໂຕນີ້ມັນມີຂົນສີຂາວ ແລະ ຂົນສີຟານປົນກັນ ຢ່າງລະອຽດອ່ອນ ເລີຍ ກາຍ ເປັນສີດ່າງຍ້ອນແມວນັ້ນຫລານເລີຍໃສ່ຊື່ໃຫ້ມັນວ່າ "ບັກດ່າງ" ຢູ່ພື້ນທ້ອງຂອງ ມັນເປັນສີຂາວຖ້າຫາກຢູ່ໄກໆເບິ່ງຂົນສີຟານອາດຈະບໍ່ເຫັນແຈ້ງດີ, ແຕ່ຄວາມຈິງແລ້ວ ຂົນຂອງມັນສະອາດ ຖ້າເຮົາເອົາມືລູບຄຳຫຼິ້ນຮູ້ສຶກວ່າມື່ນລື່ດໆຄືເອົາມືລູບຜ້າກຳມະຍີ່. ຮູບຮ່າງຂອງແມວໂຕນີ້ກໍຄືແມວທົ່ວໆໄປ ມັນບໍ່ມີຮີມສົບແຕ່ວ່າມັນມີດັງສີແດງໆ ເປັນຕາຫນ້າຮັກ, ຕາທັງຄູ່ຂອງມັນມົນມຶ້ງກິ້ງໃສຄ້າຍຄືຫນ່ວຍຫມາກບີຕ້ອງແສງຕາເວັນ, ຢູ່ກ້ອງຮູດັງ ແລະ ກ້ອງຄາງມີຫນວດແຂງໆ, ເລົາຄີງອ່າວຕຸ້ຍຫນ້ອຍຫນຶ່ງ, ເລັບຕີນ ແຫລມໆ ແລະ ສະອາດດີ, ຕອນກາງເວັນມັນນອນຢູ່ຕາມຄີໄຟສົ່ງສຽງຫາຍໃຈ ຫຼືດຫາດ ! ຫຼືດຫາດ ! ພໍຮອດຍາມກາງຄືນຊໍ້າພັດບໍ່ນອນ ມັນອອກໄປຫາກິນ ມັນສະແດງ ແຜງລິດຄ່ອຍໆຈອບໆມອງໆ ຢ່ອງເຢ່ງໄປຕາມເງົາມືດ ເຫມືອນດັ່ງອ້າຍທະຫານຢືນ ຍາມ ຄອຍຖ້າຈັບເອົາຫນູມາເປັນອາຫານຂອງມັນ.” ຍາມເມື່ອມັນຫິວມັນກໍ່ຮ້ອງບອກ ເປັນສຽງຕິດໆກັນວ່າ ແມວ ແມວ ເພື່ອໃຫ້ເຈົ້າຂອງເອົາຂອງກິນມາໃຫ້ມັນກິນ. ແມວ ຂອງຫລານໂຕນີ້ຄຳຮູ້ກວ່າແມວໂຕອື່ນໆມັນບໍ່ລັກກິນຊີ້ນ, ບໍ່ລັກປີນຂຶ້ນພາເຂົ້າ. ແຕ່ ລະມື້ຫລານໄດ້ເອົາເຂົ້າປົນກັບປາ ຫຼື ຊີ້ນມາໃຫ້ມັນກິນ. ເມື່ອກິນອີ່ມແລ້ວ ມັນກໍໃຊ້ ຕີນທັງສອງເບື້ອງປ່ຽນກັນລູບໆ ແລະ ຖູປາກພ້ອມກັບຫນວດຂອງມັນ ໃຫ້ສະອາດຢູ່ ສະເຫມີ.

ແມວບັກດ່າງຂອງຫຼານໂຕນີ້ທ່າທາງອາດຫານ ແລະ ໃຈດີ ຖ້າມີຫນູມາກັດ ເຄື່ອງນຸ່ງຮົ່ມ, ກັດຖົງ, ກິນເຂົ້າຢູ່ໃນເລົ້າມັນກໍຈະເຂົ້າໄປຈອບ ແລະ ໂດດຄຸບເອົາຫນູ ຈົນໄດ້, ດັ່ງນັ້ນ ຄົນຢູ່ໃນຄອບຄົວຂອງຫຼານໃຜໆກໍຮັກມັນ. ສະນັ້ນ, ຫຼານເອງກໍຈະ ຖະຫນຸຖະຫນອມມັນໃຫ້ຢູ່ຄູ່ກັບຄອບຄົວຂອງຫລານຕະຫຼອດໄປ !



# ພັນລະນາ ຄວາຍໂຕຫນຶ່ງ

ໃນຄອບຄົວຂອງຫຼານມີຄວາຍເຖິກດຳ ໂຕຫນຶ່ງເຊິ່ງພໍ່ໄດ້ໄປຊື້ນຳອາວທອງດີຢູ່ທີ່ ບ້ານເຫມືອນມາລ້ຽງແຕ່ຄາວມັນຫາກໍປະນົມ ຮູບຮ່າງຂອງມັນຕຸ້ຍພີດີງາມເປັນຕາຫນ້າຮັກທັງ ແຂງແຮງອີກດ້ວຍ,

ຄວາຍເຖິກໂຕນີ້ພໍ່ຂອງຫລານຊື້ມັນມາລ້ຽງໄວ້ເພື່ອແກ່ຄາດແກ່ໄຖໄດ້ສອງປີແລ້ວ, ຕົນໂຕຂອງມັນໃຫຍ່ກວ່າງົວຫນ້ອຍຫນຶ່ງ, ມັນເປັນຄວາຍເຖິກສີດຳ ພໍ່ຂອງຫຼານຈິ່ງໃສ່ຊື່ໃຫ້ມັນ ວ່າ " ບັກດຳ " ຕົນໂຕຂອງມັນໃຫຍ່ຕຸ້ຍພີດີງາມ ແລະ ແຂງແຮງ. ຫົວຂອງມັນໃຫຍ່, ເຂົາ ແຫລມໆເປັນສີດຳນິນກົ່ງເຂົ້າກັນຄ້າຍຄືຄັນທະນູ, ຕາທັງຄູ່ແດງມົນມຶງກຶງ, ຫູຂອງມັນໃຫຍ່ ຍາວ ແລະ ແຫລມຕິງພັບວັບໆ, ດັ່ງທີ່ຖືກເຊືອກຄັນໄຖຫັດ ແລະ ຮຸກຖຸຫລາຍຈົນເຮັດໃຫ້ ຮູດັງປິ່ງ ສ່ວນສິບຈັກວ່າໄດ້ກິນ ຫຼື ບໍ່ໄດ້ກິນ ມັນກໍ່ຫຍໍ້ຢູ່ຕະຫຼອດເວລາ. ປາຍຫາງຂອງຄວາຍໂຕນີ ຊໍ້າພັດເປັນມີສີຂາວປັດໄກວ່ ໄປມາເບິ່ງແລ້ວເປັນຕາແປກແທ້ໆຕົນໂຕດຳປີກລູກມີພຽງ ສີຂາວຢູ່ປາຍຫາງຫນ້ອຍດຽວເທົ່ານັ້ນ. ພໍເຖິງລະດູເຮັດນາ ຄວາຍໂຕນີ້ມັນກໍ່ຢູ່ຄູ່ກັບນາລໍຖ້າເຈົ້າ ຂອງອອກຄຳສັ່ງ, ມັນເຮັດວຽກຢ່າງເອົາຈິງເອົາຈັງຕາມຄຳສັ່ງເຈົ້າຂອງຈົນສຳເລັດຜົນ. ບໍ່ພຽງແຕ່ ເທົ່ານັ້ນຄວາຍເຖິກໂຕນີ້ຍັງມີນິດໄສຫຶງຫວງໂຕແມ່ເຊັ່ນເວລາມີຄວາຍເຖິກໂຕອື່ນມາພໍ່ມັນກໍ ໄລ່ຊົນໂລດ. ຄວາຍເຖິກໂຕນີ້ມັນມັກດຳລົງຊີວິດຢູ່ຕາມທົ່ງຫຍ້າ ຫຼື ບວກຫນອງຄອງບຶງ ແລະ ບ່ອນທີ່ມີຫຍ້າຫຼາຍ. ມັນກໍບໍ່ເຄີຍຈັກເທື່ອທີ່ມັນຈະເຂົ້າໄປກິນເຂົ້າກ້າ ຫຼື ໄປຢຽບຢ່າທຳລາຍ ຜົນລະປູກຂອງຊາວບ້ານ. ເວລາຕອນສວາຍຍາມແດດກ້າມັນກໍ່ຈະລົງໄປລຸຍນໍ້າພໍ່ຮອດແລງມາ ຫຼານກໍເອົາມັນໄປແຫຼ່ງ, ເອົາເກືອໃຫ້ມັນກິນ ແລະ ສູມໄຟໃຫ້ມັນເພື່ອບໍ່ໃຫ້ສິ້ນ ຫຼື ຍຸງກັດ, ເຖິງ ແມ່ນວ່າປັດຈຸບັນນີ້ສັງຄົມເຮົາມັນທັນສະ ໄຫມຂຶ້ນ ເພິ່ນນິຍົມກັນໃຊ້ລົດໄຖເດີນຕາມກັນໄປ
ຫມົດແລ້ວ.ແຕ່ຄອບຄົວຂອງຫລານກໍຍັງຍຶດຖືເອົາຄວາຍໂຕນີ້ຢູ່ຄູ່ນາຂອງຄອບຄົວຫຼານ ຕະ ຫຼອດມາ.

ຄອບຄົວຂອງຫຼານມີຄວາມສຸກ, ມີເຂົ້າກິນຫຼຸດຜ່ອນການໃຊ້ແຮງງານຄົນໃນແຕ່ລະ ປີ, ກໍ່ຍ້ອນຄວາຍໂຕນີ້ແທ້ໆ. ສະນັ້ນ,ຄອບຄົວຂອງຫຼານໃຜໆກໍຮັກແພງມັນ ແລະ ຫຼານກໍ່ຈະ ເອົາໃຈໃສ່ບົວລະບັດຮັກສາມັນເພື່ອໃຫ້ມັນຢູ່ຄູ່ກັບຄອບຄົວຂອງຫຼານຕະຫຼອດໄປ.



## 3. ບົດພັນລະນາຄົນ

## ພັນລະນາ ພັກຮຽນເກັ່ງຄົນຫນຶ່ງ

ຢູ່ໃນຫ້ອງຂອງຫລານມີນັກຮຽນດີຜູ້ຫນຶ່ງລາວມີຊື່ວ່າ: ທ້າວ ຈັນທິດາ ໄຊຍະເພັດ ຊຶ່ງຮຽນຢູ່ ຊັ້ນປະຖົມສຶກສາປີ ທີ່ຫ້າຢູ່ທີ່ຫມວດໂຮງຮຽນປະຖົມສາທິດນາໂດນ ລາວເປັນນັກຮຽນທີ່ເພື່ອນ ໆໃຜໆກໍຍ້ອງວ່າລາວເປັນຄົນເກັ່ງ ແລະ ດຸຫມັ່ນ.

ທ້າວ ຈັນທິດາ ໄຊຍະເພັດ ລາວມີອາຍຸປະມານ 11 ປີ ລາວເປັນຄົນເຕ້ຍຕໍ່າຕ້ອກປ້ອກ, ຮ່າງກາຍ ຂອງລາວແຂງແຮງດີ, ຜົມກູດມີສີດໍາເຫຼື້ອມ, ດັງແຫມບ, ຕາທັງຄູ່ດໍາ, ຄິ້ວກົ່ງ, ສົບບາງ ແລະ ໃບຫນ້າຂອງ ລາວສ້ອຍຄືກັບໃບໂພ, ຄີງນ້ອຍຕໍ່າ ແລະ ຜີວດໍາຄືກມຶກ, ແຂນສອງເບື້ອງສ້ອຍ ແລະ ສັ້ນ, ຂາສອງເບື້ອງ ກໍ່ສັ້ນຈົນເຮັດໃຫ້ຫມູ່ເອີ້ນຢອກລາວວ່າ: "ທ້າວເຕ້ຍ". ເວົ້າເຖິງການນຸ່ງຖືຂອງລາວແມ່ນສຸພາບຮຽບຮ້ອຍ, ບໍ່ມະຍຸມະຍະເຊັ່ນວ່າ ເວລາລາວຢູ່ເຮືອນລາວກໍນຸ່ງເຄື່ອງທໍາມະດາຄື: ສົ້ງເສື້ອແມ່ນແພຝ້າຍລາວ ທີ່ຍ້ອມດ້ວຍສີນໍ້າພີນ ແລະ ສະອາດຢູ່ສະເຫມີ. ຕາມປົກກະຕິແລ້ວເວລາລາວໄປໂຮງຮຽນມັກນຸ່ງສົ້ງຂາຍາວສີຫມາກຄໍ້ແກ່ ແລະ ນຸ່ງເສື້ອຂາວແຂນສັ້ນສ່ວນຜົມຂອງລາວກໍຕັດສັ້ນຢູ່ເລື້ອຍ. ລາວເປັນນັກຮຽນດີຍ້ອນວ່າ ລາວຕັ້ງໃຈຟັງຄໍາອະທິບາຍຂອງຄູ. ຄົ້ນຄິດ ແລະ ຕອບຄໍາຖາມຂອງຄູໄດ້ດີ ພ້ອມທັງເອົາໃຈໃສ່ຈົດກ່າຍ ບົດຮຽນ ແລະ ແກ້ບົດເຝິກຫັດແລ້ວ ທຸກເທື່ອທີ່ຄູໃຫ້. ສີຈັນ ເຄີຍສະແດງຄວາມກ້າຫານຂອງຕົນດ້ວຍ ການເຜີຍແຜ່ຄວາມຮູ້ອອກສູ່ຄູ ແລະ ຫມູ່ຄູ່ດ້ວຍຄວາມຈິງໃຈ. ພ້ອມກັນນັ້ນລາວຍັງອອກແຮງງານ, ຊ່ວຍເຫຼືອຫມູ່ຄູ່ຜູ້ທີ່ບໍ່ທັນເຂົ້າໃຈບົດຮຽນ ຫຼື ບໍ່ທັນຮູ້ວິທີຮໍ່າຮຽນທີ່ດີ, ບໍ່ພຽງແຕ່ເທົ່ານັ້ນລາວຍັງສະແດງ ທ່າທີສຸພາບອ່ອນນ້ອມໃນເວລາເວົ້າຈາກັບຄູເຊັ່ນວ່າ: ໂດຍ, ຂ້ານ້ອຍ, ສ່ວນເວົ້ານໍາຫມູ່ຄູ່ກໍເວົ້າວ່ານ້ອງ ຫຼື ຂ້ອຍ. ນອກຈາກນັ້ນເວລາຢູ່ເຮືອນລາວກໍຊ່ວຍວຽກເຮືອນການຊານພໍ່ແມ່ເຊັ່ນ ຫນຶ້ງເຂົ້າ, ຕັກນໍ້າ, ລ້າງ ຖ້ວຍ, ກວາດເຮືອນ ແລະ ວຽກອື່ນໆ ຕື່ມອີກ. ດ້ວຍທັດສະນະແບບແຜນຄວາມດຸຫມັ່ນຂະຫຍັນພຽນ ຂອງລາວໃນເວລາຢູ່ ໂຮງຮຽນ ຈຶ່ງມີຄະແນນການຮໍ່າຮຽນດີ ແລະ ນໍາຫນ້າຫມູ່ຕະຫຼອດມາ, ເວລາຢູ່ບ້ານກໍ. ໄດ້ຮັບຄວາມຮັກແພງສະຫນິດສະຫນົມຈາກຫມູ່ຄູ່ ແລະ ພໍ່ແມ່ພີ່ນ້ອງ ສ່ວນຢູ່ໃນໂຮງຮຽນກໍໄດ້ຮັບຄວາມຍ້ອງຍໍສັນລະເສີນຈາກຄູບາອາຈານ ແລະ ຫມູ່ຄູ່ໃນຫ້ອງຮຽນກໍຄືຢູ່ພາຍໃນໂຮງຮຽນໄດ້ເປັນຢ່າງດີ, ສົມ ກັບຄໍາເວົ້າທີ່ວ່າ : " ເຢົາວະຊົນດີ ມີສີແກ່ຊາດ ເຢົາວະຊົນສະຫຼາດພາຊາດຈະເລີນ".

ຈັນທິດາ, ສົມແລ້ວທີ່ເປັນນັກຮຽນດີ ແລະ ກໍເປັນຜູ້ຫນຶ່ງທີ່ຫນ້ານັບຖືພ້ອມທັງເປັນແບບຢ່າງທີ່ຈົບງາມ ແລະ ກໍເປັນແວ່ນແຍງອັນໃສແຈ້ງໃຫ້ແກ່ບັນດານັກຮຽນກໍຄື ບຸກຄົນທົ່ວໄປ. ພວກເຮົາເປັນ ນັກຮຽນຄວນຕັ້ງຫນ້າຝຶກຝົນຮໍ່າຮຽນເອົາສິ່ງທີ່ດີງາມຂອງ ຈັນທິດາ ເພື່ອໃຫ້ຕົນ ກາຍເປັນຄົນຮູ້ຜູ້ດີ ແລະ ຮຽນເກັ່ງຄືກັນກັບລາວຕໍ່ໆໄປ.



# ພັນລະນາ ຊາວນາຄົນຫນຶ່ງ

ຢູ່ພາຍໃນບ້ານຂອງຫຼານມີພໍ່ນາດຸຫມັ່ນຄົນຫນຶ່ງລາວມີຊື່ວ່າ: ລຸງທອງດີ.. ເຊິ່ງເປັນ ປະຊາຊົນ ຄົນ ຫນຶ່ງທີ່ກຳເນີດ ເກີດຂຶ້ນຢູ່ໃນບ້ານຫ້ອຍຕ້ອງ ແລະ ກໍ່ເປັນຄົນຜູ້ທີ່ມີຄວາມ ຫ້າວຫັນເອົາໃຈໃສ່ຕໍ່ວຽກງານຂອງລາວໄດ້ດີ.

ລຸງທອງດີມີອາຍຸປະມານ 55 ປີ ແຕ່ລາວຍັງມີ ຄວາມຫ້າວຫັນ ແລະ ແຂງແຮງດີ. ລາວເປັນ ຄົນທີ່ມີຮູບຮ່າງໃຫຍ່ສູງ ລຳສັນ ແລະ ເຂັ້ມ ແຂງ, ຮ່າງກາຍ ຜິວພັນ ມີສີເນື້ອ ດຳແດງ ໃບຫນ້າເຄັ່ງຂຶມ, ປະສົມກັບ ກິ້ວອັນດົກຫນາຂອງລາວ, ເຖິງວ່າລາວຈະມີ ອາຍຸ ຂ້ອນຂ້າງເຖົ້າ ຄົນ ແລ້ວ ກໍຕາມ ແຕ່ຜົມຂອງ ລາວຍັງດົກດຳປີ້ໆປານຫມໍ້, ຫາຜົມຊົງທາງອກເສັ້ນຫນຶ່ງກໍ່ຍັງບໍ່ມີ ເລີຍ ລາວມັກຈົ່ງ ຫນວດ ກິ່ງຄືເຂົາຄວາຍມີສີດຳດັ່ງດຽວກັບຜົມ. ລຸງທອງດີ ລາວເປັນຄົນໃຈດີ. ມີຈິດໃຈກວ້າງຂວາງ. ເປັນຄົນຊື່ສັດບໍ່ມັກເວົ້າຫຼາຍ, ລາວມັກນຸ່ງເຄື່ອງຝ້າຍທີ່ຍ້ອມດ້ວຍສີນ້ຳ ນິນ ແລະ ມັກຄຽນຫົວ ດ້ວຍຜ້າຂາວມ້າ ເບິ່ງຍາມໃດກໍຄືວ່າລາວກຽມພ້ອມອອກໄປເຮັດວຽກຢູ່ກາງທົ່ງນາສະເຫມີ. ພໍເຖິງຍາມເຮັດນາ ລາວກໍຕັ້ງຫນ້າເອົາໃຈໃສ່ເຮັດວຽກຂອງຕົນຢ່າງຈູບຈ້າວ ຫ້າວຫັນ ເຊັ່ນວ່າ: ການໄຖນາຂອງລາວກໍໄຖເລິກ ຄາດ ແຫຼກ, ຄັນຄູ ທີ່ລາວປ້ານກໍໃຫຍ່ດີພໍ ຄວນ ແລະ ນ້ຳກໍບໍ່ຂາດ ເຮັດໃຫ້ຕົ້ນເຂົ້າຂອງລາວ ຂຽວງາມດີຕະຫຼອດປີ. ພໍເຖິງຍາມເກັບກ່ຽວ ລາວກໍໄດ້ເຂົ້າຫລາຍກວ່າຜູ້ອື່ນ. ລຸງທອງດີ ເປັນຄົນມີຄວາມມານະອົດທົນ ເອົາການເອົາງານ ເມື່ອລາວ ໄດ້ລົງມືເຮັດສິ່ງໃດແລ້ວ ລາວກໍຕັ້ງໃຈເຮັດສິ່ງນັ້ນຈົນສຳເລັດຜົນ ແລະ ວຽກທີ່ລາວ ເຮັດນັ້ນກໍມີຄຸນນະພາດີ, ທັງມີຄວາມລະອຽດອ່ອນອີກດ້ວຍ. ນອກຈາກທີ່ລາວມີຄວາມດຸຫມັ່ນ ແລ້ວ, ທັງເປັນແບບຢ່າງອັນດີງາມໃຫ້ແກ່ຊາວນາຄົນອື່ນໆອີກ, ຍ້ອນຄວາມດຸຫມັ່ນຂະຫຍັນພຽນ ເອົາຫລັງສູ້ຟັງ ເອົາຫນ້າສູ້ດິນ, ແດດກໍທົນ ຝົນກໍແຂ່ງຕໍ່ກັບຫນ້າທີ່ວຽກງານຂອງລາວ ຈຶ່ງ ເຮັດໃຫ້ຄອບຄົວຂອງລາວບໍ່ອຶດຢາກ ຊ້ຳຍັງໄດ້ສິ່ງເຂົ້າໄປຈຳຫນ່າຍຢູ່ທ້ອງຕະຫຼາດອີກດ້ວຍ ນັ້ນ ແຫລະ ເພິ່ນວ່າ" ສິບພໍ່ຄ້າຊາວພໍ່ຄ້າ ກໍມາໄຫວ້ພໍ່ນາ".

ພວກຫຼານຍັງເປັນເດັກນ້ອຍອະນາຄົດຍັງຍາວໄກ ຕ້ອງຝຶກຝົນຫຼໍ່ຫຼອມຕົນເອງໃຫ້ ກາຍເປັນນັກຮຽນ ຫຼື ອານຸຊົນ ເຍົາວະຊົນທີ່ດີ ມີຄວາມດຸຫມັ່ນຂະຫຍັນພຽນຮູ້ຮັກແພງ! ສາມັກຄີ ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃຫ້ຄືກັບລຸງທອງດີ ຊາວນາຜູ້ດູຫມັ້ນ.



# ພັນລະນາເພື່ອນໃນຫ້ອງຄົນຫນຶ່ງ

ທ້າວສົມຍາ ລາວຢູ່ຫ້ອງດຽວກັບຫຼານ ແລະ ລາວກໍເປັນເພື່ອນທີ່ຮັກແພງຂອງຫລານ ຄົນຫນຶ່ງ, ລາວເປັນຄົນຄິງບາງຮ່າງນ້ອຍ ແຕ່ວ່າເລື່ອງການຮຽນຂອງລາວເກັ່ງ ແລະ ດຸຫມັ່ນ.

ທ້າວກັນຍາ ເປັນຄົນສີເນື້ອດຳແດງ ອາຍຸຂອງລາວມາຮອດປີນີ້ 11 ປີພໍດີ, ລາວເປັນ ຄົນຈ່ອຍສູງກວ່າຫຼານຫນ້ອຍຫນຶ່ງ, ຫູບັງ, ໃບຫນ້າຂອງລາວຂ້ອນຂ້າງແຫຼມ, ຮີມສົບບາງໆ, ມີ ຂີ້ແມງວັນຢູ່ແກ້ມເບື້ອງຂວາ, ລາວເປັນຄົນເວົ້າຫລາຍ, ມັກມ່ວນ(ຕະຫຼົກ), ຖ້າຫາກຜູ້ໃດໄດ້ຢູ່ ໃກ້ຊິດກັບລາວແລ້ວ ສົບຈະບໍ່ຫຸ້ມແຂ້ວເລີຍລະ. ເພາະວ່າໄດ້ຫົວຢູ່ຕະຫຼອດ. ເຖິງວ່າລາວເປັນ ຄົນຕະລົກແຕ່ລາວກໍສຸພາບອ່ອນໂຍນ, ການນຸ່ງຖືກໍສຸພາບຮຽບຮ້ອຍ. ກົງກັນຂ້າມ, ປີກາຍນີ້ ລາວມີແຕ່ຫຼີ້ນເກືອບວ່າບໍ່ສົນໃຈໃນການຮໍ່າຮຽນເລີຍ, ການນຸ່ງຖືກໍມະເລີເຊີຊະ ຜົມກໍ່ຍາວ ເລັບມືກໍດຳ, ຈົນເຮັດໃຫ້ລາວບໍ່ມີຫມູ່ຫຼີ້ນນຳ, ແຕ່ວ່າມາຮອດປີນີ້, ລາວປ່ຽນໄປຫຼາຍ, ຕອນຕົ້ນ ປີລາວໄດ້ເວົ້າກັບຫລານວ່າ: ຈະເປັນນັກຮຽນດີຮຽນເກັ່ງໃຫ້ໄດ້, ລາວກໍ່ຖືເອົາຄະຕິເຕືອນໃຈ ຂອງລາວວ່າ " ຄວາມພະຍາຍາມຢູ່ໃສ ຄວາມສຳເລັດຢູ່ທີ່ນັ້ນ" ແຕ່ກໍສົມດັ່ງທີ່ລາວຕັ້ງໃຈໄວ້ ແທ່ໆ, ລາວຮຽນດີຮຽນເກັ່ງຕັ້ງແຕ່ເດືອນທຳອິດເລີຍ, ເວລາເຂົ້າຫ້ອງຮຽນລາວຕັ້ງໃຈຟັງຄຳຄູ ອະທິບາຍຈົດກ່າຍເອົາຄຳເວົ້າທີ່ຄູອະທິບາຍ, ຖ້າວ່າສິ່ງໃດບໍ່ເຂົ້າໃຈລາວກໍຍົກມືຂຶ້ນຖາມຄູ ໂລດ, ນອກ ຈາກທີ່ລາວຕັ້ງໃຈຮຽນແລ້ວລາວຍັງສາມາດຊ່ວຍຫມູ່ເພື່ອນຜູ້ທີ່ຍັງບໍ່ທັນເຂົ້າໃຈ ບົດຮຽນ ຊ່ວຍອະທິບາຍໃຫ້ເຂົາເຈົ້າ ໂດຍບໍ່ໄດ້ອ່ຽງອຳ. ເວລາຢູ່ບ້ານລາວກໍເຮັດວຽກເຮືອນ ຊ່ວຍພໍ່: ມ່ເຊັ່ນວ່າ: ກວາດເຮືອນ, ລ້າງຖ້ວຍ, ລ້າງບ່ວງ, ຊັກເຄື່ອງຂອງຕົນເອງ, ນອກນັ້ນລາວ ຍັງໃຊ້ເວລາຫວ່າງໃຫ້ເປັນປະໂຫຍດເຊັ່ນ: ເຂົ້າຫ້ອງສະມຸດອ່ານປຶ້ມ, ຖ້າມີວຽກບ້ານທີ່ຄູເອົາ ໃຫ້ລາວກໍເອົາໃຈໃສ່ແກ້ຈົນສຳເລັດ, ມາເວົ້າເຖິງການອອກແຮງງານຢູ່ພາຍໃນໂຮງຮຽນລາວກໍຕັ້ງຫນ້າເອົາ ໃຈໃສ່ເຮັດຫນ້າທີ່ວຽກງານຂອງຕົນຈົນສຳເລັດ, ຫມູ່ເພື່ອນໃຜໆກໍ່ຮັກແພງລາວ ສົມ ແລ້ວທີ່ລາວມີຄວາມຕັ້ງໃຈຕັ້ງຫນ້າຝຶກຝົນຫຼໍ່ຫຼອມຕົນເອງຈົນໄດ້ຮັບຄຳຍ້ອງຍໍສັນລະເສີນຈາກຫມູ່, ຄູ ແລະ ຄູອາຈານອີກດ້ວຍ.

ທ້າວກັນຍາ, ຍ້ອນຄວາມເອົາໃຈໃສ່ຂອງລາວແທ້ໆລາວຈິ່ງຮຽນເກັ່ງ, ທັງຊ່າງເວົ້າ •ຊ່າງວ່າອີກດ້ວຍ. ສະນັ້ນ, ຫລານເອງຈະເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ຮຽນດີຮຽນເກັ່ງ ແລະ ດຸຫມັ່ນຂະຫຍັນພຽນຄືກັນກັບລາວໃຫ້ໄດ້.

## ພັນລະນາ ພາບຄົນພວມກ່ຽວເຂົ້າ

ພໍເຖິງເດືອນສິບເອັດສິບສອງອາກາດ ໃນຊ່ວງນີ້ເປັນຊ່ວງຍ່າງເຂົ້າລະດູຫນາວເຮັດ, ໃຫ້ຫມອກກຸ້ມໄປທົ່ວບໍລິເວນ. ນອກນັ້ນ, ພວກເຮົາຈະເຫັນເຂົ້າສູກເຫຼືອງເຮືອງເຮື້ອເຫມືອນ ດັ່ງ ,ງຄໍາ ຢູ່ຕາມທົ່ງນາຄືວ່າອອນຊອນແທ້ ເຊິ່ງໄລຍະນີ້ແມ່ນລະດູເກັບກ່ຽວ.

ຊາວນາແຕ່ລະຄົນກໍກະກຽມ ແລະ ເອົາໃຈໃສ່ໃຫ້ທັນກັບເວລາທີ່ເຂົາພວມສຸກ ເຫຼືອງ, ແຕ່ເຊົ້າໆຊາວນາແຕ່ລະຄອບຄົວກໍຟ້າວນຸ່ງເຄື່ອງຈັບເອົາກ່ຽວ ແລະ ເຄື່ອງຮັບໃຊ້ອັນ ຈໍາເປັນອອກ ໄປສູ່ທົ່ງນາເພື່ອຊຸ້ນຂ້ຽວກ່ຽວເຂົ້າຂອງໃຜມັນຢ່າງຫ້າວຫັນ ລັດສະຫມີ ອັນສີເຫຼືອງ ອ່ອນຂອງດວງຕາເວັນກໍຄອຍໆພົ້ນຂຶ້ນເລັດລອດເຂົ້າມາ ເຮັດໃຫ້ ຫມອກອັນຂາວຈ່ານພ່ານ ຄ່ອຍໆລັບລາຫາຍໄປ, ຄວາມອົບອຸ່ນຈາກແສງແດດກໍ່ຄ່ອຍໆລ່ອງລອຍເຂົ້າມາສຽງແຄນຂອງ ອ້າຍບ່າວເຫີ່ມດັງມາແຕ່ຫົວບ້ານພຸ້ນປະສານກັບສຽງຄັບລໍາ ແລະ ບາດຕີນຍ່າງເຕະເອົາໃບໄມ້ ແຫ້ງດັງສະແຫຼະໆ, ຟັງແລ້ວເປັນຕາອອນຊອນມ່ວນຫູ, ຊາຍຫນຸ່ມພີ່ປ້ານ້າສາວຍ່າງຕາມຫຼັງເປັນແຖວມາຕາມຮ່ອມທາງ, ມຸ່ງຫນ້າເຂົ້າສູ່ທົ່ງນາ, ບາງຜ່ອງຈັບກ່ຽວ,ຖືພ້າໃສ່ກູບເບິ່ງໃບຫນ້າ ຂອງຜູ້ໃດກໍມີຄວາມເບີກບານມ່ວນຊືນ. ພໍມາຮອດທົ່ງນາເຂົາເຈົ້າກໍບໍ່ລໍຖ້າໃຜອີກ, ເຂົາເຈົ້າ ພ້ອມພາກັນຈັບກ່ຽວລົງສູ່ທ້ອງທົ່ງນາອັນມີເຂົ້າເຫຼືອງ ອາລ່າມ, ສຽງກ່ຽວເຂົ້າດັງເຊດງໆ, ບ່າວ ສາວກໍເວົ້າຢອກໄຍກັນຕາມພາສາ, ອ່ານຫນັງສື, ຂັບລໍາຕອບກັນຫົວຂວັນກັນເປັນແຊວໆ, ບາງ ຄົນບໍ່ມີແຂ້ວທາງຫນ້າເວລາຫົວກໍເອົາມືອັດປາກຕົນເອງໄວ້ເພາະອາຍ.ບາງຄົນໃຈຂຶ້ນກໍຟ້ອນ ແອະຟ້ອນແອ່ນຢູ່ກາງທົ່ງນາ, ເຮັດໃຫ້ບັນຍາກາດການກ່ຽວເຂົ້າໃນມື້ນັ້ນເຕັມໄປດ້ວຍຄວາມ ເບີກບານມ່ວນຊື່ນ. ພໍຕາເວັນທ່ຽງກໍເຫັນຟອນເຂົ້າທີ່ກ່ຽວແລ້ວໃຫມ່ໆຢາຍຢູ່ເປັນແຖວຕາມທົ່ງ ນາພໍ່ແມ່ພີ່ນ້ອງກໍພາກັນພັກ ຜ່ອນກິນເຂົ້າເອົາແຮງໄດ້ໄລຍະຫນຶ່ງແລ້ວ. ກໍພາກັນເຮັດວຽກຕໍ່ໄປ ຈົນຮອດຕາເວັນຄ້ອຍລັບສັນພູເຂົາເຈົ້າຈິ່ງພາກັນກັບຕ່າວຄືນເຮືອນ.

ຍ້ອນຄວາມດຸຫມັ່ນຫ້າວ ແລະ ຄວາມສາມັກຄີພ້ອມພຽງຮຽງຫນ້າກັນຈິ່ງເຮັດໃຫ້ ການເກັບກ່ຽວໄດ້ຮັບຜົນສໍາເລັດຢ່າງຈົບງາມ ແລະ ທັນກັບລະດູການ, ດັ່ງນັ້ນ, ຫຼານເອງທີ່ເປັນ ນັກຮຽນພ້ອມແລ້ວທີ່ຈະຕັ້ງຫນ້າຝຶກຝົນຕົນເອງໃຫ້ກາຍເປັນຄົນດຸຫມັ່ນຂະຫຍັນພຽນ ແລະ ຈະ ຂໍຮັກແພງປະຊາຊົນຊາວຜູ້ອອກແຮງງານ.



## 4. ພົນລະນາທຳມະຊາດ

### ພັນລະນາ, ທຳມະຊາດປ່າໄມ້.

ປ່າໄມ້ເປັນຊັບພະຍາກອນທຳມະຊາດອັນປະເສີດ, ເຊິ່ງເປັນບໍ່ເກີດໃຫ້ສິ່ງທີ່ມີຊີວິດເປັນສິ່ງດັດສົມອາກາດໃຫ້ສະຫມໍ່າສະເຫມີ, ຊ່ວຍຮັກສາ ແລະ ດູດຊຶມນ້ຳຜົນເຮັດໃຫ້ຝົນຕົກຖືກ ຕ້ອງຕາມລະດູການ.

ປ່າ ໄມ້ຍັງເປັນບ່ອນຢູ່ອາໄສຂອງສັດປ່ານາໆຊະນິດ, ເປັນບ່ອນຊອກຢູ່ຫາກິນຂອງຄົນເຮົາປຽບສະເຫມືອນເປັນສ້າງຢາພື້ນເມືອງໃຊ້ປິ່ນປົວພະຍາດຕ່າງໆ, ປະເທດລາວເຮົາກໍ່ເປັນ ປະເທດຫນຶ່ງທີ່ມີຄວາມອຸດົມສົມບູນ ເຕັມໄປດ້ວຍຊັບພະຍາ ກອນປ່າໄມ້ສີຂຽວ, ທີ່ມີຄວາມ ອຸດົມສົມບູນ, ຫ້ວຍນ້ຳລຳເຊ ແລະ ບໍ່ແຮຕ່າງໆ. ປະກອບດ້ວຍໄມ້ທີ່ມີຄຸນຄ່າສູງເຊັ່ນວ່າ:ໄມ້ດູ່. ໄມ້ແດງ ໄມ້ຂະຍຸງ, ໄມ້ແຕ້, ໄມ້ແຄນ, ໄມ້ສັກ ແລະ ອື່ນໆ. ນອກນັ້ນຍັງມີເຄື່ອງປ່າຂອງດົງເຊັ່ນ: ຄັ່ງ, ຍານ, ຂີ້ຊີ, ຫມາກແຫນ່ງຫວາຍ ກໍແມ່ນຊັບພະຍາກອນທີ່ສຳຄັນ ເຄີຍເປັນແຫຼ່ງລາຍຮັບອັນ ໃຫຍ່ຫຼວງ ໃຫ້ແກ່ປະເທດເຮົາ. ໃນເມື່ອກ່ອນຍ້ອນມີການທຳລາຍປ່າໄມ້ຢ່າງຊະລາຍເຊັ່ນ: ການຖາງປ່າ ເຮັດໄຮ່ ການຂຸດຄົ້ນໄມ້ຢ່າງຊະຊາຍ ຂາດການບຳລຸງຮັກສາ, ສະນັ້ນ, ຈຶ່ງເຮັດໃຫ້ປ່າໄມ້ໃນປະ ເທດຂອງພວກເຮົານັບມື້ ນັບຫນ້ອຍຖ້ອຍລົງ ແລະ ອີກຢ່າງຫນຶ່ງ ໃນປາງສົງຄາມກໍ ເຮັດໃຫ້ປ່າໄມ້ຖືກທຳລາຍໄປເຊັ່ນດຽວກັນ. ຍ້ອນແນວນັ້ນ, ມາເຖິງປັດຈຸບັນນີ້ລັດຖະ ບານ ຂອງພວກເຮົາຈິງ ໄດ້ວາງແນວທາງປ່ຽນແປງໃຫມ່ທາງດ້ານເສດຖະກິດ ໂດຍໄດ້ສົ່ງເສີມການປູກ ຕົ້ນໄມ້ໃຫ້ເປັນປ່າທົດແທນ, ຈຳກັດການຖາງປ່າເຮັດໄຮ່, ກຳນົດເຂດປ່າສະຫງວນຢ່າງຈະແຈ້ງ. ຖ້າຫາກມີການບຸກເບີກກໍຕ້ອງມີແຜນການຄັກແນ່, ຈະເປັນການສຸກຍູ້ໃຫ້ວຽກງານດ້ານອື່ນໆດີ ຂຶ້ນ ບໍ່ພຽງແຕ່ຈະມີທຶນຮອນເພື່ອສ້າງບ້ານແປງເມືອງ ແລະ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນເທົ່າ ນັ້ນ, ຍັງເຮັດໃຫ້ແນວທາງຂອງປະເທດເຮົາ ກາຍເປັນປະເທດຫນຶ່ງທີ່ມີປ່າໄມ້ສີຂຽວ, ມີອາກາດ ສົດຊື່ນແບບທຳມະຊາດອີກດ້ວຍ.

ສະນັ້ນ, ເພື່ອບໍ່ຢາກໃຫ້ປ່າໄມ້ສີຂຽວທີ່ສວຍສົດງົດງາມຕ້ອງຖືກທຳລາຍນັ້ນ, ພວກຄວນປົກປັກຮັກສາອະນາຄົດປ່າໄມ້ຂອງປະເທດເຮົານັ້ນ ແມ່ນຂຶ້ນຢູ່ກັບພວກເຮົາ ຫມົດທຸກຄົນເປັນຜູ້ປົກປັກຮັກສາເພື່ອໃຫ້ຢູ່ຄູ່ໄປຈົນຮອດຊົ່ວລູກຊົ່ວຫຼານສືບຕໍ່ໄປ.




# ພັນລະນາພາບແມ່ນ້ຳລຳເຊ

ປະເທດລາວເຮົາ ເປັນປະເທດທີ່ເຕັມໄປດ້ວຍຊັບພະຍາກອນທຳມະຊາດເປັນຕົ້ນແມ່ນ ພູຜາປ່າດົງ ແລະ ແມ່ນ້ຳລຳເຊ ແມ່ນ້ຳລຳເຊເປັນແມ່ນ້ຳທີ່ສາຄັນຫລາຍສາຍ ທີ່ໄຫຼຜ່ານປະເທດເຮົາ ໃນນັ້ນແມ່ນ້ຳທີ່ສຳຄັນແມ່ນ ແມ່ນ້ຳຂອງ.

ແມ່ນ້ຳຂອງເປັນແມ່ນ້ຳທີ່ສຳຄັນ ແລະ ໃຫຍ່ກວ່າຫມູ່ໃນປະເທດລາວຂອງເຮົາ ແມ່ນ້ຳຂອງປຽບເຫມືອນສາຍເລືອດຂອງປະຊາຊົນລາວທັງຊາດ. ແມ່ນ້ຳສາຍນີ້ ທາງພາກເຫນືອມີແກ້ງໃຫຍ່ຫຼາຍບ່ອນ ເຊິ່ງເປັນອຸປະສັກໃຫ້ແກ່ການຄົມມະນາຄົມຂົນສົ່ງ, ສ່ວນພາກກາງກວ້າງ ແລະ ສະດວກໃນການເດີນເຮືອ, ພາກໃຕ້ລົງໄປຮອດ ຕອນພະເພັງ ແລະ ຫຼີຜີ ພັດມີແກ້ງ ແລະ ມີເກາະດອນນ້ອຍ ແລະ ໃຫຍ່ຢັ່ງຢາຍກັນຢູ່ ເຊິ່ງໃນນັ້ນມີນ້ຳຕົກຕາດຄອນພະເພັງທີ່ສວຍງາມ ມີຄວາມສູງປະມານ 15 ແມັດ ລຽບ ຕາມແຄມສອງຝັ່ງແມ່ນ້ຳ ຍັງມີບ້ານເຮືອນປະຊາຊົນຢັ່ງຢາຍກັນໄປຕາມແຄມແມ່ນ້ຳ ບວກກັບຄວາມສວຍງາມຂອງທຳມະຊາດສອງຝັ່ງຢ່າງງາມຕາ, ເປັນຫນ້າສະອອນໃນການເດີນເຮືອທ່ຽວຊົມ. ນອກຈາກແມ່ນ້ຳຂອງແລ້ວ ຍັງມີສາຂາທີ່ສາຄັນອີກຫຼາຍສາຍ ເຊັ່ນວ່າ: ນ້ຳອູ, ນ້ຳຄານ, ນ້ຳງື່ມ, ນ້ຳງຽບ, ເຊບັ້ງໄຟ, ເຊໂດນ, ເຊກອງ...ສາຍນ້ຳເຫຼົ່ານີ້ມີ ຄຸນປະໂຫຍດແກ່ຄົນເຮົາຫຼາຍເພາະມັນເປັນແຫຼ່ງທຳມາຫາກິນ ແລະ ສະຫນອງພະ ລັງ ງານໃຫ້ແກ່ ໂຮງຈັກໂຮງງານ ໂດຍສະເພາະແມ່ນເຂື່ອນໄຟຟ້າງຕ່າງໆເຊັ່ນ: ເຂື່ອນໄຟຟ້າ ນ້ຳງືມແຂວງວຽງຈັນ, ເຂື່ອນໄຟຟ້ານ້ຳເທີນຢູ່ແຂວງຄຳມ່ວນ ແລະ ອານາຄົດ ເພິ່ນກໍຍັງ ຈະສ້າງອີກຫຼາຍໆແຫ່ງຢູ່ພາກເຫນືອ ແລະ ພາກໃຕ້ຂອງລາວເຮົາ ເພື່ອສ້າງຮັ່ງຄູນມີໃຫ້ ແກ່ປະເທດຊາດບ້ານເມືອງ.

ຍ້ອນແມ່ນ້ຳລຳເຊໄດ້ເອື້ອອຳນວຍຄວາມສະດວກ ໃຫ້ແກ່ປະຊາຊົນລາວທັງ ຊາດ ຢ່າງມະຫາສານ, ດັ່ງນັ້ນ, ພວກເຮົາເປັນອານຸຊົນ ແລະ ເຍົາວະຊົນຄວນປົກປັກແຫຼ່ງນ້ຳໄວ້ໃຫ້ສະອາດສົດໃສໄຫຼເຢັນ ເປັນປະໂຫຍດໃຫ້ແກ່ປວງຊົນລາວໄດ້ນຳໃຊ້ເຂົ້າໃນການຜະລິດສືບຕໍ່ໆໄປ.



# ບົດທີ 4

# ການແຕ່ງບົດອະທິບາຍ

ໃນການຮຽນການສອນວິຊາຫັດແຕ່ງເປັນວິຊາໜຶ່ງທີ່ມີຄວາມສໍາຄັນຫຼາຍໃນຊີວິດປະຈໍາວັນ.ດັ່ງນັ້ນ,ຈິ່ງຮຽກຮ້ອງໃຫ້ນັກຮຽນຄູພວກເຮົາທຸກຄົນຕ້ອງເອົາໃຈໃສ່ທິດສະດີໃຫ້ລະອຽດຈະແຈ້ງ ແລະ ເຂົ້າໃຈດີເພື່ອນໍາເອົາທິດສີດີນີ້ໄປນໍາໃຊ້ໃນການແຕ່ງຕົວຈິງໃຫ້ມັນຖືກຕ້ອງເໝາະສົມຕາມຫົວບົດ ແລະ ສາມາດແຕ່ງບົດສອນໄດ້ເພື່ອໄປສອນທົດລອງໃນຫ້ອງ ແລະ ອະນາຄົດ ດ້ວຍເຫດນັ້ນໃນບົດນີ້ພວກເຮົາຈະໄດ້ຮຽນຮູ້ກ່ຽວກັບຄວາມໝາຍແລະຄວາມສໍາຄັນຂອງບົດອະທິບາຍ,ວິທີແຕ່ງບົດອະທິບາຍ ແລະ ການສອນຕົວຈິງໃນຫ້ອງຮຽນ.

## 1. ຄວາມໝາຍ ແລະ ຄວາມສໍາຄັນຂອງການສອນຂຽນບົດອະທິບາຍ

### 1.1 ຄວາມໝາຍຂອງການສອນຂຽນບົດອະທິບາຍ

ການສອນຂຽນບົດອະທິບາຍແມ່ນການສອນກ່ຽວກັບການສອນຂຽນບົດປະເພດໜຶ່ງ ທີ່ໃຊ້ທິດສະດີເພື່ອອະທິບາຍບັນຫາໃດໜຶ່ງເພື່ອຊີ້ແຈງເຫດຜົນຕໍ່ບັນຫານັ້ນໃຫ້ຈະແຈ້ງເພື່ອໃຫ້ຜູ້ອ່ານຜູ້ຟັງເຊື່ອໝັ້ນ ແລະ ເຂົ້າໃຈຕໍ່ບັນຫານັ້ນຢ່າງເລິກເຊິ່ງ.

### 1.2 ຄວາມສາຄັນຂອງການສອນຂຽນບົດອະທິບາຍ

ມີຄວາມສໍາຄັນຫຼາຍ ເພື່ອຊ່ວຍໃຫ້ນັກຮຽນຮູ້ຈັກຄົ້ນຄິດທາງດ້ານທິດສະດີ ຫຼື ເຫດຜົນຕົວຈິງຂອງການແຕ່ງບົດ. ນອກນັ້ນຍັງໃຊ້ເຂົ້າໃນການຂຽນບົດຕ່າງໆເຊັ່ນ: ບົດນໍາ,ບົດຄວາມ,ບົດປະກອບຄໍາເຫັນເນື່ອງໃນໂອກາດຕ່າງໆ. ບົດອະທິບາຍການເມືອງສັງຄົມ, ບົດອະທິບາຍວັນນະຄະດີແລະອື່ນໆ.

## 2. ວິທີສອນຂຽນບົດອະທິບາຍ

ຢາກແຕ່ງບົດອະທິບາຍໄດ້ດີເຮົາຄວນປະຕິບັດຕາມສອງວິທີ

- ຮູ້ລະດັບຄາດໝາຍເນື້ອໃນຕົ້ນຕໍຂອງຫົວບົດ
- ສ້າງໂຄງຮ່າງຂອງບົດອະທິບາຍ

### 2.1. ຊອກຮູ້ລະດັບຄາດໝາຍເນື້ອໃນຕົ້ນຕໍຂອງຫົວບົດ

ກ່ອນອື່ນໝົດຕ້ອງອ່ານຫົວບົດໃຫ້ເຂົ້າໃຈສູງ,ອ່ານຫຼາຍເທື່ອເພື່ອຕີລາຄວາມໝາຍວ່າມັນມີຄວາມໝາຍແປນແລະຄວາມໝາຍເລິກແນວໃດ? ຫົວບົດນີ້ຕ້ອງການໃຫ້ອະທິບາຍບັນຫາໃດແດ່? ມີຂໍ້ຄວາມສໍາຄັນຈັກຂໍ້? ແລະ ຂໍ້ໃດສໍາຄັນກວ່າໝູ່ຂໍ້ໃດເປັນສໍາຮອງ

**ຕົວຢ່າງ:** ຫົວບົດອະທິບາຍຄາສຸພາສິດທີ່ວ່າ

ໄມ້ລໍາດຽວລ້ອມຮົ້ວບໍ່ໄຊວ່ ໄພ່ບໍ່ພ້ອມແປງບ້ານບໍ່ເຮືອງ

ໃນຫົວບົດນີ້ມີສອງຂໍ້ຄວາມທີ່ຕ້ອງການໃຫ້ອະທິບາຍຄື:

- ຄວາມໝາຍແປນແມ່ນເອົາຄວາມຈິງໃນຊີວິດປະຈໍາວັນມາເວົ້າເຊັ່ນ: ໄມ້ລໍາດຽວລ້ອມຮົ້ວບໍ່ໄຊວ່ ໃຫ້ຄວາມໝາຍວ່າໄມ້ລໍາດຽວບໍ່ສາມາດເຮັດອ້ອມສວນໄດ້.

- ຄວາມໝາຍອັນກວ້າງໆອອກໄປນັ້ນແມ່ນຢາກເວົ້າເຖິງຄວາມສ່ວນພ້ອມພຽງຮຽງໜ້າກັນ,ຮ່ວມແຮງ ຮ່ວມໃຈກັນ,ສາມັກຄີປຸ້ມລຸມກັນຊ່ວຍເຫຼືອເຊິ່ງກັນແລະກັນ,ເຮັດໜ້າທີ່ວຽກງານໃນການສ້າງບ້ານ ແປງເມືອງຈຶ່ງຈະສຳເລັດຜົນ. ສະນັ້ນ,ບູຮານຈຶ່ງໄດ້ເວົ້າເປັນບັນໄວ້ວ່າ: ໄພ່ບໍ່ພ້ອມແປງບ້ານບໍ່ເຮືອງ

## 2.2 **ສ້າງໂຄງຮ່າງຂອງບົດອະທິບາຍ**

ບົດຫັດແຕ່ງທຸກໆປະເພດລ້ວນແຕ່ປະກອບດ້ວຍ 3 ພາກສ່ວນຄື:ຕັ້ງບັນຫາ,ແກ້ໄຂບັນຫາ ແລະ ສະຫຼຸບບັນຫາ. ຢາກຂຽນບົດຫັດແຕ່ງໄດ້ດີພາຍຫຼັງຕີລາຄາເນື້ອໃນ,ລະອຽດຕ້ອງສ້າງໂຄງເລື່ອງເພື່ອປະຕິບັດ ຕາມແຕ່ລະບາດກ້າວຄື:ຕັ້ງບັນຫາ,ແກ້ໄຂບັນຫາ ແລະ ສະຫຼຸບບັນຫາ.

### ກ. ຕັ້ງບັນຫາ

ການຕັ້ງບັນຫາມີສອງວິທີຄື: ທາງກົງ ແລະ ທາງອ້ອມ. ໃນສອງວິທີນີ້, ການຕັ້ງບັນຫາຕ້ອງສັ້ນ ກວມລວມເອົາເນື້ອໃນ ຂອງຫົວບົດ,ເອົາຫົວບົດຫຼືຄຳທີ່ຄ້າຍຄືຫົວບົດມາອັດທ້າຍຈະເປັນຄຳພະຫຍາຫຼືພາສິດຫຼື ຄຳຄະຕິພົດຕ່າງໆ

- **ການຕັ້ງບັນແບບທາງກົງ**
  ການຕັ້ງບັນແບບທາງກົງແມ່ນເຂົ້າສູ່ບັນຫາໂດຍກົງໂລດ,ຕ້ອງສັ້ນກະທັດຮັດ,ຈະແຈ້ງ ແລະ ອ່ານງ່າຍ
- **ການຕັ້ງບັນຫາແບບທາງອ້ອມ**
  ການຕັ້ງບັນຫາແບບທາງອ້ອມແມ່ນການຊອກຫາຄຳເວົ້າອື່ນເພື່ອມາເວົ້າອ້ອມໃສ່ບັນຫາເນື້ອໃນຕົ້ນຕໍ ຂອງບົດ

ຕ້ອງເວົ້າໃຫ້ຈະແຈ້ງອ່ານແລ້ວສາມາດເຂົ້າໃຈໄດ້.

### ຂ. ແກ້ໄຂບັນຫາ

ແມ່ນອີງໃສ່ເນື້ອໃນຂອງຫົວບົດທີ່ມີບັນຫາຫຼາຍຫຼືໜ້ອຍແຕກຕ່າງກັນ

- ແກ້ບັນຫາໄປຕາມແຕ່ລະຈຸດຕາມໂຄງຮ່າງທີ່ສ້າງໄວ້
- ອະທິບາຍແລະຍົກຕົວຢ່າງມາປະກອບຕາມຄວາມເໝາະສົມ
- ແກ້ໄຂບັນຈົນໝົດເນື້ອໃນຂອງຫົວບົດ

### ຄ. ສະຫຼຸບບັນຫາ

- ສັງລວມເນື້ອໃນສຳຄັນໂດຍຫຍໍ້
- ສະແດງທັດສະນະຂອງຕົນເອງຕໍ່ກັບຫົວບົດ
- ເອົາບົວບົດມາອັດທ້າຍ

**ຕົວຢ່າງ: ການສ້າງໂຄງຮ່າງຄຳສຸພາສິດທີ່ວ່າ:**

**ໄມ້ລຳດຽວ ລ້ອມຮົ້ວບໍ່ໄຂວ່**

**ໄພ່ບໍ່ພ້ອມ ແປງບ້ານບໍ່ເຮືອງ**

- **ຕັ້ງບັນຫາ**

ທາງກົງ: ຄວາມສາມັກຄີແມ່ນກ້ອນກຳລັງອັນມະຫາສານ ສາມາດຕັດສິນທຸກວຽກງານບໍ່ວ່າຈະວຽກໜ້ອຍຫຼືວຽກໃຫຍ່,ຍາກງ່າຍ,ໜັກ,ເບົາ ຢາກເຮັດວຽກດັ່ງກ່າວນັ້ນສຳເລັດຜົນຕ້ອງມີຄວາມສາມັກຄີ,ຄຳສຸພາສິດທີ່ວ່າ: ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່

ທາງອ້ອມ: ປະເທດຊາດໃດໜຶ່ງກ່ອນຈະມີຄວາມຈະເລີນໄດ້ເມື່ອຄົນໃນຊາດນັ້ນເປັນຈິດໜຶ່ງໃຈດຽວກັນ,ຮ່ວມແຮງຮ່ວມໃຈກັນສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງດັ່ງຄຳສຸພາສິດທີ່ວ່າ ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່

- **ແກ້ໄຂບັນຫາ**

**ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່ ແມ່ນແນວໃດ?**

- ອະທິບາຍຄວາມໝາຍແປນ
- ອະທິບາຍຄວາມໝາຍເລິກ ເຊິ່ງເປັນຄວາມໝາຍທີ່ແທ້ຈິງຂອງຄຳສຸພາສິດນີ້ ໄພ່ບໍ່ພ້ອມແປງບ້ານບໍ່ເຮືອງ
- ອະທິບາຍໂດຍຫຍໍ້
- ອະທິບາຍບົດບາດຂອງຄວາມສາມັກຄີ
- ຄວາມສາມັກຄີແມ່ນຫຍັງ ອະທິບາຍ
- ຂາດຄວາມສາມັກຄີແລ້ວຈະເປັນແນວໃດ? ອະທິບາຍອ້າງຫຼັກຖານແລະບົດວິຈານ
- ຄວາມສາມັກຄີມີຜົນດີແນວໃດ ຊີ້ແຈງເຫດຜົນທີ່ເກີດຈາກຄວາມສາມັກຄີມີຫຍັງແດ່? ຄວາມສາມັກຄີມີເຜີນດີແກ່ຕົນເອງ,ສັງຄົມແລະປະເທດແນວໃດ.

- **ສະຫຼຸບບັນຫາ**

- ເວົ້າເຖິງຄວາມສຳຄັນຂອງຄວາມສາມັກຄີທີ່ມີຕໍ່ທຸກຄົນ,ສັງຄົມແລະປະເທດຊາດ
- ທຸກຄົນຄວນສ້າງຕົນເອງໃຫ້ມີຄວາມສາມັກຄີ,ຊ່ວຍເຫຼືອເຊິ່ງກັນແລະກັນ
- ຖ້າຫາກມີຄວາມສາມັກຄີທຸກຄົນຍ່ອມຈະໄດ້ຮັບຄວາມສຸກແລະສຳເລັດຜົນໃນທຸກວຽກງານ
- ເອົາຫົວບົດມາອັດ

**ຕົວຢ່າງ:** ມາຕິຂອງກອງປະຊຸມໃຫຍ່ຂອງພັກໄດ້ຢັ້ງຢືນວ່າ: ແຕ່ກ່ອນກໍ່ຄືປັດຈຸບັນພວກເຮົາເຮັດທຸກຢ່າງເພື່ອເພີ່ມທະວີຄວາມສາມັກຄີແບບສູ້ຮົບແບບສາຍພົວພັນແບບພິເສດແລະຮ່ວມມືຮອບດ້ານກັບຫວຽດນາມ,ກຳປູເຈຍບົນພື້ນຖານລັດທິມາດເລນິນ ແລະ ລັດທິສາກົນກຳມະຊີບ ອະທິບາຍຄຳເວົ້າດັ່ງກ່າວ

- **ຕັ້ງບັນຫາ**

- ເວົ້າເຖິງຄວາມສຳຄັນຂອງຄວາມສາມັກຄີ
- ເນັ້ນໜັກເຖິງຄວາມສາມັກຄີສູ້ຮົບສາຍພົວພັນແບບພິເສດ,ການຮ່ວມມືຮອບດ້ານລະຫວ່າງລາວ-ຫວຽດ, ກຳປູເຈຍບົນພື້ນຖານລັດທິສາກົນກຳມະຊີບ, ດັ່ງສູນກາງພັກເຮົາຢັ້ງຢືນວ່າ " ແຕ່ກ່ອນກໍຄືປະຈຸບັນພວກເຮົາເຮັດທຸກຢ່າງ ເພື່ອເພີ່ມທະວີຄວາມສາມັກຄີແບບສູ້ຮົບສາຍພົວພັນພິເສດ ແລະ ການ

ຮ່ວມມືຮອບດ້ານກັບຫວຽດນາມ, ກຳປູເຈຍບົນພື້ນຖານລັດທິມາກ - ເລນິນ ແລະ ລັດທິສາກົນການມະຊີບ. ”

- **ແກ້ໄຂບັນຫາ**

ຄວາມສາມັກຄີແມ່ນຫຍັງ ແມ່ນປະຕິກິລິຍາອັນໜຶ່ງທີ່ສະແດງໃຫ້ເຫັນຄວາມເປັນເອກະພາບກັນຂດງກົມກອງ,ອົງການຈັດຕັ້ງ,ນັບທັງແນວຄິດແລະການກະທຳຕົວຈິງບົນຫຼັກການໃດໜຶ່ງ ແລະ ບົນສິດຜົນປະໂຫຍກລວມຂອງທຸກຝ່າຍເຫຼົ່ານັ້ນ.

ລາວ - ຫວຽດ ແລະ ກາປູເຈຍ ມີເງື່ອນໄຂທາງດ້ານປຫວັດສາດ,ພູມສາດໃກ້ຊິດຕິດພັນກັນ,ເຄີຍຖືກຮຸກຮານມາຕະຫຼອດ. ສະນັ້ນ,ຈຶ່ງມີສາຍພົວພັນສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນຜ່ານຍຸກສະໄໝຕ່າງໆ

ສາມັກຄີແບບພິເສດແມ່ນແນວໃດ? ພິເສດຢູ່ບ່ອນໃດ ພິເສດຢູ່ບ່ອນວ່າສາຍພົວພັນແລະຄວາມສາມັກຄີທີ່ບໍ່ເຄີຍມີກັບຊາດອື່ນ. ມັນແມ່ນສາຍພົວພັນແລະຄວາມສາມັກຄີຮອບດ້ານຄື: ດ້ານການເມືອງ, ເສດຖະກິດ,ວັດທະນະທຳແລະການທະຫານ

ສາຍພົວພັນແລະຄວາມສາມັກຄີແບບພິເສດນີ້ມັນໄດ້ສ້າງຂຶ້ນບົນຫຼັກການ,ອຸດົມການດຽວກັນນັ້ນແມ່ນບົນຫຼັກການລັດທິມາກ - ເລນິນອັນແທ້ຈິງ

- **ສະຫຼູບ**

ຄວາມສາມັກຄີລະຫວ່າງລາວ - ຫວຽດ ແລະກຳປູເຈຍແມ່ນຄວາມສາມັກຄີທີ່ມີມາແຕ່ບູຮານນະການ, ມາຮອດປັດຈຸບັນມັນຍິ່ງໄດ້ຮັບການບຸລະນະໃຫ້ດີຂຶ້ນເປັນກ້າວໆຄວາມສາມັກຄີລະຫວ່າງສາມຊາດອິນດູຈີນໄດ້ກາຍເປັນກົດເກນການຄົງຕົວອັນໜຶ່ງຂອງສາມຊາດເຮົາ.

ຢູ່ໃນໄລຍະໃໝ່ຂອງການປະຕິວັດ 3 ຊາດອິນດູຈີນ, ຄວາມສາມັກຄີດັ່ງກ່າວຍິ່ງຈະຕ້ອງໄດ້ຮັດແໜ້ນກວ່າເກົ່າ ມະຕິກອງປະຊຸມໃຫຍ່ຂອງສູນກາງພັກເຮົາຈຶ່ງໄດ້ຢັ້ງຢືນວ່າ: “ ແຕ່ກອນກໍຄືປັດຈຸບັນພວກເຮົາເຮັດທຸກຢ່າງເພື່ອເພີ່ມທະວີແບບສູ້ຮົບສາຍພົວພັນແບບພິເສດ ແລະ ການຮ່ວມມືຮອບດ້ານກັບວຽດນາມ, ກຳປູເຈຍບົນພື້ນຖານລັດທິມາກ - ເລນິນ ແລະ ລັດທິສາກົນການມະຊີບ ”.

# ບົດອະທິບາຍທົ່ວໄປ

## ປະເພນີ

ປະເພນີກັບວັດທະນະທາຄືກັນ ຫຼື ວ່າແຕກຕ່າງກັນ? ປະເພນີໝາຍເຖິງສິ່ງທີ່ເຮັດສືບຕໍ່ກັນມາແຕ່ເຫິງນານແລ້ວເຊັ່ນ: ການບວດ, ແຕ່ງດອງ, ປະເພນີໃດທີ່ດີງາມແມ່ນໄດ້ປະຕິບັດສືບຕໍ່ກັນມາແຕ່ເຫິງນານແລ້ວເຊັ່ນ: ບຸນປີໃໝ່( ກຸດສົງການ) ສົງນໍ້າຜູ່ເຖົ້າຜູ່ແກ່, ຜູ້ເປັນພໍ່, ແມ່ເພື່ອຂໍພອນຂໍໄຊເຊິ່ງມີຄວາມໝາຍກວ້າງຂວາງໄດ້ກວມເອົາທາງດ້ານວັດຖຸ ແລະ ຈິດໃຈ.

ເມື່ອເວົ້າເຖິງປະເພນີແລ້ວສາມາດແບ່ງອອກເປັນ 3 ພາກສ່ວນຄື: ຈາຮີດປະເພນີ, ຂະນິບປະເພນີ ແລະ ທຳນຽມປະເພນີ.

**ຈາຮີດປະເພນີ** ໝາຍເຖິງປະເພນີທີ່ກ່ຽວຂ້ອງກັບເລື່ອງສິນທຳຖ້າໃຜບໍ່ປະຕິບັດຕາມຈາຮີດປະເພນີຖືວ່າຜິດສິນທຳເຊັ່ນ: ລູກຕ້ອງມີຄວາມກະຕັນຍູກະຕະເວທີ ແລະ ເຄົາລົບນົບນອມຕໍ່ພໍ່ແມ່ ຖ້າຫາກວ່າບຸກຄົນໃດບໍ່ລ້ຽງດູພໍ່ແມ່ເມື່ອເພິ່ນເຖົ້າແກ່ຊະລາຄົນຜູ້ນັ້ນຕ້ອງໄດ້ຮັບການຕິສິນນິນທາຈາກໝູ່ຄູ່ກໍຄືຄົນທັງຫຼາຍ.

**ຂະນົບປະເພນີ** ໝາຍເຖິງປະເພນີທີ່ປະຕິບັດກັນມາຢ່າງມີແບບແຜນເຊັ່ນ: ປະເພນີແຕ່ງດອງ(ກິນດອງ). ປະເພນີທີ່ມີລະບຽບແບບແຜນເຊັ່ນນີ້ບາງເທື່ອກໍເອີ້ນວ່າພິທີ: ພິທີແຕ່ງດອງ, ພິທີທຳລາບາສີສູ່ຂວັນ, ພິທີສູ່ຂໍບ່າວສາວ, ພິທີຂຶ້ນເຮືອນໃໝ່ ແລະ ອື່ນໆ.

**ທຳນຽມປະເພນີ** ໝາຍເຖິງປະເພນີຄົນທົ່ວໄປນິຍົມຊົມຊອບປະຕິບັດສືບຕໍ່ກັນມາ ຖ້າຜູ້ໃດປະຕິບັດຕາມກໍຖືວ່າມີມາລະຍາດທີ່ດີມີຄຸນສົມບັດທີ່ດີເຊັ່ນ: ການຖາມສະບາຍດີເມື່ອພົບພໍ້ກັນ ແລະ ທຳຄວາມເຄົາລົບນັບຖືກັນເປັນຕົ້ນ.

ປະເພນີທັງ 3 ປະເພດທີ່ເລົ່າມານີ້ ຖ້າເປັນປະເພນີທີ່ຄົນລາວທົ່ວປະເທດນິຍົມຊົມຊອບພາກັນປະພຶດປະຕິບັດເຮົາກໍຖືວ່າເປັນປະເພນີຂອງຊາດ ແລະ ກໍຖືວ່າເປັນວັດທະນະທຳປະຈຳຊາດນອກຈາກນີ້ແລ້ວກໍຍັງມີປະເພນີສະເພາະຂອງແຕ່ລະທ້ອງຖິ່ນເຊັ່ນ: ປະເພນີສູ່ຂວັນງົວ, ຄວາຍ.

ການທີ່ຊາວນາເປັນເຈົ້າຂອງງົວ, ຄວາຍໄດ້ປະກອບພິທີນີ້ຂຶ້ນກໍເພື່ອລະນຶກເຖິງບຸນຄຸນຂອງສັດລ້ຽງທີ່ໄດ້ອອກແຮງງານດຶງແກ່ຄາດ, ແກ່ໄຖ ຊ່ວຍເຮື່ອແຮງຂອງຄົນ.

ດັ່ງນັ້ນ, ຈິ່ງໄດ້ຈັດພິທີນີ້ຂຶນ ເພື່ອຂໍໂທດທີ່ໄດ້ທຸບຕີ ດ່າວ່າໃນຂະນະທີ່ດຶງແກ່ຄາດ, ແກ່ໄຖການເຮັດເຊັ່ນນີ້ ເປັນການສະແດງເຖິງຄວາມກະຕັນຍູກະຕະເວທີຂອງມະນຸດທີ່ມີຕໍ່ສັດເດຍລະສານ ແລະ ທັງເປັນການຕອບບຸນແທນຄຸນຕໍ່ຜູ້ທີ່ມີຄຸນໂດຍທາງອ້ອມ.

# ປະເພນີສູ່ຂວັນ

ພາຍຫຼັງທີ່ຊາວໄຮ່ຊາວນາໄດ້ນໍາເອົາເຂົ້າເຊິ່ງແມ່ນຜົນຜະລິດຂອງຕົນຂຶ້ນໃສ່ເລົ້າ, ໃສ່ເຍຍແລ້ວ, ຕອນເຊົ້າຂອງມື້ໃໝ່, ເຂົາຈຶ່ງນໍາເອົາດອກໄມ້, ທູບທຽນ ແລະ ແກ້ວເຫຼົ້າໜຶ່ງແກ້ວພ້ອມໄກ່ໜຶ່ງໂຕນໍາໄປຮອດລານທີ່ກອງເຂົ້າເຄີຍກອງຢູ່ນັ້ນຈຶ່ງຄ່ອຍເຊີນຂວັນເຂົ້າໃຫ້ຂຶ້ນສູ່ເລົ້າສູ່ເຍຍ.

ການປະກອບພິທີຂອງຊາວໄຮ່ຊາວນາແມ່ນຍ້ອນວ່າ ພວກເຂົາມີຄວາມເຊື່ອເຂົ້າທີ່ພວກເຂົາຮັບປະທານຢູ່ທຸກວັນນີ້ ແມ່ນມີເທບທິດ, ຮັກສາປະຈໍາຢູ່ ມີຊື່ວ່າ " ແມ່ໂພສົບ " ປະເພນີທີ່ກ່າວມານີ້ກໍ່ແມ່ນສິ່ງທີ່ບົ່ງບອກເຖິງການຮັບຮູ້ບຸນຄຸນຂອງຜູ້ທີ່ມີພະຄຸນຕໍ່ຕົນເອງ.

ການເອີ່ຍປາກຄໍາວ່າ " ເຂົ້າ " ອອກມາໃຜກໍຮັບຮູ້ ແລະ ບໍ່ສາມາດປະຕິເສດໄດ້ຢ່າງເດັດຂາດເພາະວ່າເຂົ້າຄືປັດໃຈລ້ຽງຊີວິດ ແລະ ຊ່ວຍຊີວິດຂອງຄົນເຮົາ.





# ການແຕ່ງບົດອະທິບາຍ 1

## ຫົວບົດ: ຈົ່ງອະທິບາຍຄຳເວົ້າທີ່ວ່າ: "ຮຽນຫນັງສືແມ່ນຮັກຊາດ "

ການສຶກສາຮ່ຳຮຽນແມ່ນການຄົ້ນຄ້ວາຊອກຮູ້ສິ່ງຕ່າງໆເພື່ອເພີ່ມພູນຄວາມຮູ້ຂອງຕົນເອງໃຫ້ສູງຂຶ້ນ, ຄວາມຮູ້ ແມ່ນໄດ້ມາຈາກການສຶກສາຮ່ຳຮຽນ ເພື່ອຈະນຳໄປພັດທະນາປະເທດຊາດໃຫ້ມີຄວາມຈະເລີນສີວິໄລ ໄປພ້ອມໆກັບ ປະເທດອື່ນໆ. ການພັດທະນາຕົນເອງໃຫ້ມີຄວາມຮູ້ ຄວາມສາມາດເພື່ອນປະກອບສ່ວນເຂົ້າໃນການສ້າງສາບ້ານເມືອງ ມັນແມ່ນຫນ້າທີ່ຂອງຄົນລາວທຸກຄົນ, ສະນັ້ນ, ມັນຈຶ່ງສອດຄ່ອງແລະຖືກຕ້ອງກັບຄຳເວົ້າທີ່ວ່າ: " ຮຽນຫນັງສືແມ່ນຮັກຊາດ ”

ທຸກຄົນທີ່ເກີດມາບົນຫນ້າໂລກນີ້ລ້ວນແຕ່ຕ້ອງໄດ້ຮັບການສຶກສາຮ່ຳຮຽນທັງນັ້ນ, ຖ້າຜູ້ໃດບໍ່ໄດ້ຮັບການສຶກສາ ຮ່ຳຮຽນຄົນຜູ້ນັ້ນກໍຈະກາຍເປັນຄົນບໍ່ມີຄວາມຮູ້ ຄວາມສາມາດ ແລະ ເປັນຜູ້ທີ່ກືກຫນັງສືນັ້ນເອງ. ກົງກັນຂ້າມຜູ້ທີ່ໄດ້ຮັບ ການສຶກສາຮ່ຳຮຽນຄົນຜູ້ນັ້ນກໍຈະມີຄວາມຮູ້ຄວາມສາມາດ ນຳພາສ້າງສາປະເທດຊາດໃຫ້ຈະເລີນກ້າວຫນ້າໄດ້. ບໍ່ມີໃຜ ຢາກຝາກຝັງທຶນຮອນອັນປະເສີນ ແລະ ປະເທດຊາດໄວ້ກັບຄົນທີ່ບໍ່ມີຄວາມຮູ້ຄວາມສາມາດດອກ ຄວາມຮູ້ນັ້ນເປັນ ສິ່ງທີ່ດີ ແລະ ມັນເຫມືອນດັ່ງແສງສະຫວ່າງນຳພາຕົນໄປສູ່ຄວາມກ້າວຫນ້າ, ຄວາມຮູ້ນັ້ນບໍ່ສາມາດຊື້-ຂາຍຄືກັນກັບສິ່ງຂອງ ຕ່າງໆຕາມທ້ອງຕະຫຼາດ, ເຮົາຊອກຮູ້ຮ່ຳຮຽນແມ່ນເຮົາມີຄວາມຮູ້, ກົງກັນຂ້າມຖ້າເຮົາບໍ່ຮຽນກໍບໍ່ຮູ້. ສະນັ້ນ, ພວກເຮົາ ຢາກມີຄວາມຮູ້ຄວາມສາມາດບໍ່ມີທາງອື່ນໃດ ມີແຕ່ຮຽນເລື້ອຍເທົ່ານັ້ນຈຶ່ງຈະເຮັດໃຫ້ຕົນເອງມີຄວາມຮູ້ສູງຂຶ້ນໄປ ເລື້ອຍໆດັ່ງຄຳເວົ້າທີ່ວ່າ: “ຮຽນແລ້ວຮຽນອີກ ຮຽນເລື້ອຍໆໄປ". ການຮຽນບໍ່ມີວັນສິ້ນສຸດ, ບໍ່ມີວັນທີ່ຈະພຽງພໍຈັກ ເທື່ອ ເພື່ອມາປະກອບອາຊີບຄືວຽກເຮັດງານທຳນັ້ນເອງ ເຊິ່ງກົງກັບຄຳເວົ້າທີ່ວ່າ: “ຮຽນຫນັງສືແມ່ນຮັກຊາດ”. ຄົນໃນຊາດຖ້າຂາດການສຶກສາຮ່ຳຮຽນແລ້ວກໍບໍ່ສາມາດນຳເອົາວິທະຍາສາດໄປນຳພາຜູ້ອື່ນໄດ້ ແລະ ບໍ່ສາມາດແລກປ່ຽນຄວາມຄິດ ເຫັນເຊິ່ງກັນ ແລະ ກັນ. ຖ້າເປັນເຊັ່ນນັ້ນ ປະເທດຊາດກໍ່ຈະບໍ່ມີຄວາມຈະເລີນກ້າວຫນ້າຄືກັບປະເທດອື່ນໆໄດ້, ການຮຽນທີ່ແທ້ຈິງຄືການຍົກບົດບາດຂອງການຮຽນຮູ້ ແລະ ຢາກໃຫ້ຕົນເອງມີຄວາມຮູ້ຄວາມສາມາດ, ສະຫຼາດຫຼັກແຫຼມ, ມີຫົວຄິດປະດິດສ້າງສິ່ງໃຫມ່ໆຈຶ່ງມີຄວາມສຳເລັດໃນຫນ້າທີ່ການງານໄດ້. ການຮຽນແມ່ນການສະແຫວງຫາຄວາມຮູ້ຄວາມ ສາມາດໃຫມ່ໆ ເພື່ອທີ່ຈະມາປັບປຸງຕົນເອງໃຫ້ດີຂຶ້ນ ແລ້ວນຳເອົາສິ່ງເຫຼົ່ານັ້ນໄປພັດທະນາທາງດ້ານຄວາມຮູ້ຄວາມສາມາດ ໃຫ້ສູງຂຶ້ນ. ການຮຽນມີຜົນດີຄືໃຫ້ເກີດຄວາມຮູ້ຄວາມ, ສາມາຕເພື່ອນຳໄປພັດທະນາປະເທດຊາດບ້ານເມືອງຂອງເຮົາໃຫ້ ຈະເລີນຮຸ່ງເຮືອງ. ພ້ອມກັນນັ້ນການສຶກສາຮ່ຳຮຽນເຖິງວ່າຈະຫຍຸ້ງຍາກສັບສົນປານໃດກໍຕາມ ຖ້າຫາກມີຄວາມພະຍະ ຍາມແລ້ວ ແນ່ນອນສິ່ງທີ່ເຮົາຢາກຮູ້ຢາກເຫັນຢາກໄດ້ກໍຈະເປັນຂອງເຮົາ ແລະ ສິ່ງນັ້ນແຫຼະມັນຈະເປັນສິ່ງເສີມສ້າງ ຄວາມຮູ້ຄວາມສາມາດຂອເຮົາໃຫ້ສູງຂຶ້ນເລື້ອຍໆ ເພື່ອຈະຊ່ວຍປະກອບສ່ວນເຂົ້າໃນການພັດທະນາປະເທດຊາດຂອງ ເຮົາໃຫ້ບັນລຸສຳເລັດຜົນໄດ້.ເຖົ້າແກ່ບູຮານລາວຈຶ່ງມີຄຳເວົ້າກ່າວໄວ້ວ່າ: “ ຄວາມພະຍາຍາມເປັນບໍ່ເກີດແຫ່ງຜົນສຳເລັດ, ມີຄວາມພະຍາຍາມຢູ່ໃສຜົນສຳເລັດຍ່ອມເກີດຂຶ້ນຢູ່ບ່ອນນັ້ນຢ່າງແນ່ນອນ ".

ຜ່ານການສະເຫນີມານັ້ນຈຶ່ງເວົ້າໄດ້ວ່າ ການສຶກສາຮຽນຮູ້ເປັນສິ່ງສຳຄັນທີ່ສຸດສຳລັບທຸກຄົນ, ມີແຕ່ຄົ້ນຄ້ວາຮ່ຳ ຮຽນເທົ່ານັ້ນຈຶ່ງຈະສາມາດຍົກລະດັບຄວາມຮູ້ຂອງຕົນໃຫ້ສູງຂຶ້ນ ເຊິ່ງຄຳເວົ້າທີ່ວ່າ ຮຽນຫນັງສືແມ່ນຮັກຊາດໄດ້ຊີ້ໃຫ້ເຮົາ ເຫັນວ່າການຮຽນມີບົດບາດສຳຄັນ ແລະ ຈຳເປັນໃນຊີວິດຂອງຄົນເຮົາ, ໂດຍສະເພາະແມ່ນນັກຮຽນດັ່ງພວກເຮົາຄວນຕັ້ງຫນ້າເຝິກຝົນຕົນເອງໃຫ້ມີຄວາມຮູ້ ຄວາມສາມາດ ສະຫຼາດຫຼັກແຫຼມເພື່ອທີ່ຈະນຳໄປພັດທະນາປະເທດຊາດໃຫ້ຈະເລີນ ກ່າວຫນ້າ, ດັ່ງນັ້ນ, ມັນຈຶ່ງຖືກຕ້ອງ ແລະ ສອດຄ່ອງກັບຄາເວົ້າທີ່ວ່າ: “ ຮຽນຫຍັງສືແມ່ນຮັກຊາດ ”.

## ການແຕ່ງບົດອະທິບາຍ 2

**ຫົວບົດ : “ ຮົ້ວຫຼາຍຫຼັກຈິ່ງຫມັ້ນ ພີ່ນ້ອງຫຼາຍຊັ້ນຈິ່ງດີ ”**

ໃນການສ້າງສາ ພັດທະນາປະເທດຊາດບ້ານເມືອງໃຫ້ມີຄວາມສີວິໄລຮຸ່ງເຮືອງໄດ້ນັ້ນ ຮຽກຮ້ອງໃຫ້ຄົນພາຍໃນຊາດ ມີຄວາມສາມັກຄີ ຮ່ວມແຮງ ຮ່ວມໃຈກັນ ດັ່ງນັ້ນ ຈຶ່ງສອດຄ່ອງກັບຄຳສຸພາສິດທີ່ວ່າ: " ຮົ້ວຫຼາຍຫຼັກຈິ່ງຫມັ້ນ ພີ່ນ້ອງຫຼາຍຊັ້ນຈິ່ງດີ "

ແມ່ນແລ້ວ ຮົ້ວແມ່ນຕາຫນ່າງ ທີ່ໃຊ້ປ້ອງກັນສັດສາວາສິ່ງ ຫຼື ຜູ້ຮ້າຍ ອ້າຍຂະໂມຍ ທີ່ເຂົ້າມາຮຸກຮານຜົນລະປູກ ແລະ ຊັບສິນເງິນຄຳຂອງພວກເຮົາ. ພະນັ້ນ, ເວລາເຮັດຮົ້ວເຮັດຮາວ ມັນຕ້ອງການຄວາມຫມັ້ນຄົງ ເພື່ອ ກັ້ນກາງ ການທຳລາຍຂອງສັດສາວາສິ່ງ ແລະ ອື່ນໆ ກົງກັນຂ້າມ ຖ້າເຮັດຮົ້ວໃສ່ໄມ້ຫຼັກດຽວ ຫຼື ຫນ້ອຍຫຼັກມັນກໍ່ບໍ່ທັນການ ແລະ ບໍ່ໝັ້ນຫນຽວໃນທີ່ສຸດກໍຈະເຮັດໃຫ້ງົວຄວາຍ ແລະ ອື່ນໆ ເຂົ້າໄປທຳລາຍເຄື່ອງປູກຂອງຝັງຂອງພວກເຮົາ, ດັ່ງນັ້ນ, ໃນການເຮັດຮົ້ວເຮັດຮາວ ມັນຕ້ອງມີຫຼາຍຫຼັກຫຼາຍລຳ ຈິ່ງໝັ້ນແກ່ນແໜ້ນໜາດີ. ພ້ອມນີ້ເມື່ອພວກເຮົາມາທຽບໃສ່ຄົນເຮົາ ແລ້ວ ມັນກໍ່ຄືກັນກັບຄຳວ່າ: ພີ່ນ້ອງຫຼາຍຊັ້ນຈິ່ງດີ ແມ່ນແທ້ ຄົນຜູ້ໃດຫາກມີອ້າຍເອື້ອຍນ້ອງເພື່ອນຝູງຫຼາຍຄົນ ຜູ້ນັ້ນກໍ່ຈະມີຄວາມສະດວກສະບາຍຫຼາຍຢ່າງ ເພາະວ່າມັນຈະຊ່ວຍພວກເຮົາ ໃນເວລາພົບອຸປະສັກຕ່າງໆ. ກົງກັນຂ້າມຖ້າວ່າ ຜູ້ໃດຫາກຢູ່ໂດດດ່ຽວປຽວພອຍຂາດຄວາມເອື້ອເຟື້ອເພື່ອແຜ່ຕໍ່ຜູ້ອື່ນແລ້ວເດັດຂາດຜູ້ນັ້ນຈະບໍ່ຊະນະ ກັບຄວາມ ຫຍຸ້ງຍາກ. ດັ່ງນັ້ນ, ຈຶ່ງເອກຄ່ອງກັບຄຳບຸນສິດທີ່ວ່າ: **“ ຟືນຕົ້ນດຽວຍັງໄປບໍ່ລຸກ ”** ຄົນເຮົາເມື່ອຢູ່ຮ່ວມກັນແລ້ວ ຈະຕ້ອງມີຄວາມສາມັກຄີຢ່າງກ້ວາງຂວາງ ເພື່ອເປັນກ້ອນກຳລັງອັນມະຫາສານ ຜາບແພ້ກັບອຸປະສັກຕ່າງໆ ສອດຄ່ອງກັບຄຳສຸສິດທີ່ວ່າ: **" ຜົມບໍ່ງາມໃຫ້ຕົ້ມຊ້ອງ ພີ່ນ້ອງບໍ່ຫຼາຍໃຫ້ຊອກສ່ຽວ ສະຫາຍ "** ນີ້ມັນກໍສະແດງໃຫ້ເຫັນວ່າ ມີຫຼາຍຄົນແມ່ນດີແທ້ ເຊັ່ນວ່າ ການປຸກຫໍຍໍເຮືອນ ຫຼື ເຮັດວຽກໜັກງານໜາ ມັນຕ້ອງຮຽກຮອງເຖິງກຳລັງຄົນຫຼາຍ ຊ່ວຍອູ້ມຊູຢູ້ໜູນ ເຊິ່ງກັນ ແລະ ກັນ ພ້ອມກັນເຮັດຊ່ວຍກັນທຳ ໜັກຊ່ວຍກັນຫາບ ຫຍາບຊ່ວຍກັນດຶງ, ຊ່ວຍກັນແລກປ່ຽນຄວາມຄິດຄວາມເຫັນ ບໍ່ພຽງແຕ່ເທົ່ານັ້ນ ເມື່ອເວລາທຸກກໍ່ທຸກດ້ວຍກັນ ເຖິງຍາມສຸກກໍສຸກດ້ວຍກັນ. ບໍ່ຄິດກໍ່ພັກແຍກພວກ ແບ່ງກຸ່ມແບ່ງກ້ອນ ຢ້ານລື່ນ ຢ້ານເຫຼືອ ອິດສາບັງບຽດ ຫຼື ມີ ແນວຄິດເຫັນແກ່ສິດຜົນປະໂຫຍກສ່ວນຕົວສູງກວ່າສ່ວນລວມ. ນອກຈາກບັນຫາທີ່ກ່າວມາຂັ້ນເທິງນັ້ນ ຍັງບໍ່ທັນພຽງພໍ ຜູ້ທີ່ມີຄວາມສາມັກຄີ ຍັງຈະຕ້ອງຮູ້ຈັກຕຳນິສິ່ງຂ່າວ ກໍ່ສ້າງຊ່ວຍເຫຼືອເຊິ່ງກັນ ແລະ ກັນດ້ວຍຄວາມຈິງໃຈ ເພື່ອພ້ອມ ກັນກ້າວຫນ້າ ກົງກັນຂ້າມ ຖ້າຂາດຄວາມສາມັກຄີກໍ່ຈະບໍ່ມີຜົນຫຍັງຫມົດແກ່ຕົນເອງ, ຊ້ຳບໍ່ຫນຳຍັງນຳເອົາຄວາມເສຍຫາຍ ແລະ ຄວາມເດືອດຮ້ອນມາໃຫ້ແກ່ຕົນເອງ. ດັ່ງຄຳສຸພາສິດທີ່ວ່າ: **“ ໂຮມກັນເຮົາຢູ່ ແຍກຫມູ່ເຮົາຕາຍ”** ນີ້ກໍສະແດງໃຫ້ ເຫັນວ່າ ຖ້າຂາດຄວາມສາມັກຄີແລ້ວ ເຮົາກໍຈະຢູ່ນຳຫມູ່ ແລະ ສັງຄົມບໍ່ໄດ້ ນີ້ມັນກໍເຊັ່ນດຽວກັນ ຢາກໃຫ້ປະເທດຊາດ ມີຄວາມຈະເລີນຮຸ່ງເຮືອງ ມັນບໍ່ແມ່ນມີແຕ່ຜູ້ຫນຶ່ງຜູ້ດຽວຈະມາສ້າງສາພັດທະນາປະເທດຊາດໄດ້ມັນຕ້ອງຮຽກຮ້ອງໃຫ້ ຫມົດທຸກຄົນພາຍໃນຊາດພ້ອມພຽງຮຽງຫນ້າກັນ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ພ້ອມນັ້ນກໍຜູກ

ແໜ້ນຄວາມສາມັກຄີກັບ ບັນດາປະເທດເພື່ອນມິດໃນໂລກເຊັ່ນ: ຫວຽດນາມ, ກຳປູເຈຍ ແລະ ບັນດາປະເທດເພື່ອນມິດອື່ນໆ ທີ່ມີຄວາມຫວັງດີ ຕໍ່ປະເທດເຮົາ ພວກເຮົາເປັນຄົນເກີດໃຫຍ່ໃຫ່ຍລຸນ ຈະຕ້ອງອອກແຮງງານຢ່າງຫມົດຈິດຫມົດໃຈ ເພື່ອປົກປັກຮັກສາດິນດອນຕອນຫຍ້າອັນອຸດົມສົມບູນຮັ່ງມີຂອງຊາດເຮົາ ໃຫ້ຍືນຍົງຄົງຕົວຕະຫຼອດໄປ.

ລວມຄວາມວ່າ ຈາກການອະທິບາຍ - ຄໍາສຸພາສິດທີ່ກ່າວມານັ້ນ ພວກເຮົາອາດເວົ້າໄດ້ວ່າ: ຄວາມສາມັກຄີ ມັນ ແມ່ນສິ່ງປະເສີດເລີດລໍ້າຄ່າທີ່ສຸດ ສໍາລັບທຸກໆຄົນ ແລະ ຄວາມສາມັກຄີຍັງແມ່ນບໍ່ເກີດແຫ່ງຄວາມສຸກຄວາມສະບາຍ. ສະນັ້ນ; ພວກເຮົາຄວນເຝິກຝົນຕົນເອງ ໃຫ້ເປັນຜູ້ທີ່ມັກຄວາມສາມັກຄີ, ຮູ້ຮັກແພງຊ່ວຍເຫຼືອເຊິ່ງກັນ ແລະ ກັນເພື່ອ ພ້ອມກັນກ້າວຫນ້າ, ພ້ອມນັ້ນກໍຕົນໃຫ້ເປັນຄົນດີ, ມີຄຸນສົມບັດ ແລະ ເປັນທີ່ຮັກແພງຂອງຫມູ່ຄູ - ອາຈານ ແລະ ບັນດາພໍ່ແມ່ພີ່ນ້ອງ.

# ບົດທີ 5
# ການແຕ່ງບົດພິສູດ

**1. ຄວາມໝາຍ, ຄວາມສຳຄັນຂອງບົດພິສູດ**

- ຄວາມໝາຍຂອງການສອນຂຽນບົດພິສູດ

ແມ່ນການສອນບົດແຕ່ງປະເພດໜຶ່ງທີ່ໃຊ້ຫຼັກຖານ ຫຼື ເຫດຜົນຕົວຈິງມາອ້າງອີງ ເພື່ອຢັ້ງຢືນບັນຫາທີ່ຍົກຂຶ້ນມາພິສູດນັ້ນໃຫ້ຈະແຈ້ງແລະໜ້າເຊື່ອຖື

- **ຄວາມສຳຄັນຂອງການສອນການພິສູດບົດ**

ການຂຽນບົດພິສູດມີຄວາມສຳຄັນຫຼາຍເພາະມັນຊ່ວຍໃຫ້ນັກຮຽນໄດ້ຮູ້ຈັກໃນການຄົ້ນຄິດທາງຫຼັກຖານ ຫຼື ເຫດຜົນຕົວຈິງ ເຂົ້າໃນການແຕ່ງບົດ,ນອກນັ້ນຍັງນຳໃຊ້ເຂົ້າໃນການຂຽນບົກປະພັນປະເພດຕ່າງເຊັ່ນ: ບົດເລົ່າເລື່ອງ,ບົດໂອ້ລົມສົນທະນາ,ບົດລາຍງານບົດວິເຄາະດບົດປະພັນວັນນະຄະດີ,ເພືອໃຫ້ບັນຫານັ້ນຈະແຈ້ງແລະ ເດັ່ນຊັດຂຶ້ນຕື່ມ

**2. ວິທີສອນຂຽນບົດພິສູດມີ 3 ຂັ້ນຕອນ**

- ຕ້ອງແນະນຳໃຫ້ນັກຮຽນຊອກຮູ້ເນື້ອໃນແລະລະດັບຄາດໝາຍຂອງບັນຫາທີ່ຈະເອົາມາພິສູດ
- ຄູຕ້ອງແນະນານັກຮຽນຊອກຫາຫຼັກຖານມາອ້າງອີງ
- ແນະນານັກຮຽນກາເນື້ອໃນບົດຮຽນໄດ້ພາກສ່ວນຕ່າງໆຂອງບົດພິສູດ

**3. ຢາກແຕ່ງບົດພິສູດໄດ້ດີ ຄວນປະຕິບັດຕາມຂັ້ນຕອນດັ່ງນີ້:**

**1. ຕ້ອງຊອກເນື້ອໃນແລະລະດັບຄາດໝາຍຂອງບັນຫາທີເອົາມາພິສູດ**

**ກ.ຊອກຫາລະດັບຄາດໝາຍ**

ກອນອື່ນໝົດນັກຮຽນຕ້ອງຮູ້ວ່າພິສູດຫຍັງ? ເພື່ອຫຍັງ ? (ຊອກຮູ້ບັນຫາທີຈະນຳເອົາມາພິສູດ) ຈະເອົາຫຼັກຖານຫຼືເຫດຜົນອັນໃດມາຢັ້ງຢືນ? ຢັ້ງຢືນແນວໃດ? ແລະດວ້ຍວິທີ່ໃດ?

**2 ຊອກເນື້ອໃນ**

ເນື້ອໃນຂອງແຕງລະບົດທີ່ນັກຮຽນຈະເອົາມາພິສູດມີຄວາມແຕກຕ່າງກັນຕາມແຕກໍ່ລະນີດັ້ງນັ້ນຮຽນຕອ້ງເຂົ້າໃຈຕີຄວາມໝາຍແລ້ວຈິງເຂົ້າເຖິງເນື້ອໃນ ຕົວຢ່າງ: ພິສູດຄຳສຸພາສິດທີວ່າ ຢາກກິນໝາກຕ້ອງປູກຜົນ ຢາກເປັນຄົນຕ້ອງຮຽນຄວາມຮູ້ເນື້ອໃນພິສູດຄຳສຸພາສິດນີ້ ມີສອງບັນຫາຄື: ຢາກກິນໝາກຕ້ອງປູກຜົນ,ນີ້ແມ່ນບັນຫາທີໜຶ່ງ ຢາກເປັນຄົນຕ້ອງຮຽນຄວາມຮູ້ ,ນີ້ແມ່ນບັນຫາທີສອງ

**3 ຊອກຫຼັກຖານມາອ້າອີງ**

ຕ້ອງເລືອກເຟັ້ນເອົາບັນຫາທີ່ມີລັກສະນະເປັນຕົວແທນ,ມີຕົວຈິງ,ເໝາະສົມກັບແຕ່ລະແງ່ຂອງບັນຫາທີຈະເອົາມາພິສູດບໍ່ແມ່ນສິ່ງໃດກໍ່ຈະເກັບມາເປັນຫຼັກຖານອ້າງອີງຈົນໝົດ ຕ້ອງສະເໜີຕາມລຳດັບໃຫ້ສົມເຫດສົມຜົນ

- **ວິທີອ້າງເຫດຜົນ**

**+ ຄວາມໝາຍຂອງເຫດຜົນ**

ເຫດຜົນໝາຍເຖິງຄວາມຄິດທີ່ຫຼັກການທົ່ວໄປ, ກົດເກນ,ບັນຫາ ຫຼື ທັນສະນະທີ່ສະນັບສະໜູນ ,ຂໍ້ສະຫຼຸບ,ຂໍ້ຕັດສິນ,ມະຕິ,ຫຼື ຂໍ້ຍັດຕິ ກ່ຽວກັບເລື່ອງໃດໜຶ່ງ ໝາຍຄວາມວ່າເຫດຜົນເຮັດໜ້າທີ່ເປັນພື້ນຮອງຮັບ,ເຮັດໃຫ້ເປັນໜ້າເຊື່ອຖືໃຫ້ແກ່ບຸກຄົນ ແລະຮູ້ຈັກພິຈະລະນາ

ຖ້າການສະແດງເຫດຜົນມີແຕ່ສະແດງຂໍ້ສະໜັບສະໜູນອອກໄປຢ່າງດຽວກໍ່ບໍ່ສາມາດສື່ຄວາມໝາຍໄດ້ຊັດເຈນ; ຖ້າສະແດງແຕ່ຂໍ້ສະຫຼຸບອອກໄປໂດຍບໍ່ມີຂໍ້ສະໜັບສະໜູນຄວາມໜ້າເຊື່ອຖືຈະບໍ່ສູງ ແລະ ຈະບໍ່ໄດ້ຮັບຄວາມເຊື່ອຖືເລີຍກໍ່ໄດ້.

**ຕົວຢ່າງ**

1. ຂ້ອຍໄດ້ໃຊ້ຄວາມພະຍາຍາມຫຼາຍຄັ້ງແລ້ວເພື່ອຂຽນບົດເລື່ອງສັ້ນນີ້.
2. ສະນັ້ນການຂຽນຄັ້ງໜຶ່ງໃຫ້ສົມບູນໂລດມັນເປັນໄປບໍ່ໄດ້.

ຈາກຕົວຢ່າງຂ້າງເທິງນີ້ ເຫັນວ່າຕົວຢ່າງໜຶ່ງຍັງບໍ່ໄດ້ສື່ຄວາມໝາຍຢ່າງສົມບູນເທື່ອ, ຕ້ອງມີຂໍ້ສະຫຼຸບໃດໜຶ່ງຕໍ່ໃສ່, ສ່ວນຕົວຢ່າງສອງແມ່ນຂາດພາກສ່ວນຄໍານໍາໜ້າ.

ການສະແດງເຫດຜົນຂອງຄົນເຮົານັ້ນ ເມື່ອປະກົດອອກມາເປັນຄໍາເວົ້າ ຫຼື ຂຽນແລ້ວກໍ່ເປັນທັດສະນະຂອງບຸກຄົນນັ້ນເອງ ການໃຊ້ພາສາໃນເວລາສະແດງເຫດຜົນມີຂໍ້ສັງເກດດັ່ງນີ້:

ການສະແດງເຫດຜົນມັກໃຊ້ຄໍາເຊື່ອມ ແລະ ຄໍາຕໍ່ເຊັ່ນ: ຈິ່ງ, ດັ່ງນັ້ນ, ໂດຍທີ່ວ່າ, ເມື່ອ, ເພາະ, ເພາະວ່າ, ເພາະສະນັ້ນ, ຍ້ອນວ່າເປັນຕົ້ນ.

**ຕົວຢ່າງ**

ນັກຮຽນຄວນຄົ້ນຄ້ວາຫາຄວາມຮູ້ດ້ວຍຕົນເອງໄດ້ຫຼາຍ <u>ເພາະວ່າ</u> ການຮຽນຕາມຫຼັກສູດໃໝ່ນີ້ຄູຈະບໍ່ໄດ້ເຮັດໜ້າທີ່ເປັນຜູ້ສິດຄວາມຮູ້ໃຫ້ແກ່ນັກຮຽນພຽງຜູ້ດຽວ ແຕ່ຈະເປັນຜູ້ແນະນໍາໃຫ້ນັກຮຽນໄປຄົ້ນຄ້ວາຫາຄວາມຮູ້ດ້ວຍຕົນເອງເປັນສ່ວນຫຼາຍ.

ບາງຄັ້ງແມ່ນສະແດງເຫດຜົນບໍ່ຕ້ອງໃຊ້ຄໍາເຊື່ອມ ແລະ ຄໍາຕໍ່ ມີແຕ່ຕ້ອງຮຽບຮຽງ ແລະ ຈັດວາງຂໍ້ຄວາມທີ່ເປັນເຫດຜົນ ແລະ ຂໍ້ສະຫຼຸບໄວ້ໃຫ້ເໝາະສົມເທົ່ານັ້ນ, ຜູ້ຟັງ ແລະ ຜູ້ອ່ານກໍ່ຈະເຂົ້າໃຈ.

**ຕົວຢ່າງ** ໝາກມ່ວງຕົ້ນນີ້ປູກດ້ວຍມືຂອງຂ້ອຍເອງ, ຂ້ອຍຈະບໍ່ຍອມໃຫ້ໃຜຕັດເດັດຂາດ.

ການສະແດງເຫດຜົນນັ້ນບາງເທື່ອພວກເຮົາອາດຈະໃຊ້ກຸ່ມຄໍາຮຽງກັນໃຫ້ເປັນການຊີ້ບອກເຖິງເຫດຜົນ ຫຼື ຂໍ້ສະຫຼຸບ ເຊັ່ນ ຂ້າພະເຈົ້າຂໍສະຫຼຸບວ່າພວກເຮົາທຸກຄົນຕ້ອງປະຕິບັດຕາມຕາຕະລາງຮຽນຢ່າງເຂັ້ມງວດ. ການສະຫຼຸບເຊັ່ນນີ້ມີເຫດຜົນສໍາຄັນ ຍ້ອນວ່າການຂາດໂຮງຮຽນ, ການເລີກກ່ອນໂມງລ້ວນແຕ່ເປັນຜົນສະທ້ອນເຖິງການສອບເສັງທັງນັ້ນ.

ໃນການໃຊ້ພາສາສະແດງເຫດຜົນຜູ້ເວົ້າ ຫຼື ຜູ້ຂຽນຕ້ອງການໃຫ້ເຫດຜົນຫຼາຍໆຂໍ້ປະກອບເຂົ້າກັນ ເພື່ອເພີ່ມນໍ້າໜັກໃຫ້ແກ່ຂໍ້ສະຫຼຸບຂອງຕົນ. ໃນກໍລະນີເຊັ່ນນີ້ ການສະແດງເຫດຜົນຕ້ອງໄປຕາມລໍາດັບຂອງເຫດການ, ກາລະ, ເທສະ. ຫຼັກຖານ ຫຼື ເຫດຜົນທີ່ນໍາມາອ້າງອີງນັ້ນຕ້ອງເລືອກເຟັ້ນເອົາແຕ່ສິ່ງທີ່ເດັ່ນ, ມີລັກສະນະຕົວແທນ, ມີຈິງ ແລະ ເໝາະສົມກັບບັນຫາທີ່ຈະພິສູດ.

- **ຂະບວນການສະແດງເຫດຜົນ**

ເຖິງວ່າມະນຸດເຮົາສາມາດສະແດງເຫດຜົນໃນເລື່ອງຕ່າງໆໄດ້ບໍ່ວ່າຈະເປັນເລື່ອງສ່ວນຕົວ, ເລື່ອງກ່ຽວກັບທຸລະກິດ, ການເມືອງ, ສັງຄົມ ແລະ ວັດທະນະທໍາ. ເຫດຜົນທີ່ສະແດງນັ້ນອາດຈະສະຫຼັບສັບຊ້ອນ, ຍືດຍາວປານໃດກໍ່ຕາມ ກໍ່ອາດຈະແບ່ງຂະບວນການໃນການສະແດງເຫດຜົນດັ່ງກ່າວອອກເປັນ2ປະເພດດ້ວຍ

ກັນຄື ການສະແດງເຫດຜົນຈາກອັນລວມໄປຫາອັນສະເພາະເອີ້ນວ່າ ວິທີນິລະໄນ ແລະ ການສະແດງເຫດຜົນຈາກອັນສະເພາະໄປຫາອັນລວມເອີ້ນວ່າ ວິທີອຸປະໄນ.

- **ວິທີນິລະໄນ.**

ເພື່ອໃຫ້ເຂົ້າໃຈງ່າຍຈຶ່ງສັງເກດຕົວຢ່າງການສະແດງເຫດຜົນວິທີນິລະໄນດັ່ງຕໍ່ໄປນີ້.

- ມະນຸດທັງປວງຕ້ອງການປັດໄຈສີ່ຢ່າງ. ເຊັ່ນ ທີ່ຢູ່ອາໄສ, ອາຫານການກິນ, ເຄື່ອງນຸ່ງຫົ່ມ ແລະ ຢາປົວພະຍາດ.
- ຂ້ອຍເປັນມະນຸດເພາະສະນັ້ນ ເພາະສະນັ້ນ, ຂ້ອຍຈຶ່ງຕ້ອງການປັດໄຈສີ່ຢ່າງ.
- ການສະແດງເຫດຜົນຕາມຕົວຢ່າງນີ້ສ່ວນທີ່ເປັນເຫດຜົນກໍ່ຄືມະນຸດທັງປວງຕ້ອງການປັດໄຈສີ່ຢ່າງ ແລະ ຂ້ອຍເປັນມະນຸດ, ສ່ວນທີ່ເປັນຂໍ້ສະຫຼຸບຂ້ອຍຕ້ອງການປັດໃຈສີ່ຢ່າງ.

ພວກເຮົາຈະເຫັນໄດ້ວ່າ ມະນຸດທັງປວງຕ້ອງການປັດໄຈສີ່ຢ່າງ ເປັນຫຼັກແຫ່ງຄວາມຈິງທົ່ວໄປເປັນອັນລວມ ແລະ ບໍ່ສາມາດຫຼີກເວັ້ນໄດ້. ສ່ວນປະໂຫຍກຕໍ່ມາກໍ່ຄືຂ້ອຍເປັນມະນຸດນັ້ນເປັນກໍລະນີສະເພາະ. ສະນັ້ນ, ຂ້ອຍຕ້ອງການປັດໄຈສີ່ຢ່າງ ແມ່ນຂໍ້ສະຫຼຸບທີ່ໄດ້ຈາກທັງສອງປະໂຫຍກທີ່ກ່າວມາແລ້ວ. ຈະເຫັນໄດ້ວ່າ ການສະແດງເຫດຜົນດ້ວຍວິທີນິລະໄນ ເລີ່ມຈາກອັນລວມໄປຫາອັນສະເພາະແລ້ວສາມາດໄດ້ຂໍ້ສະຫຼຸບ.

- **ວິທີອຸປະໄນ**

ວິທີໃຊ້ຂໍ້ມູນຕົວຈິງຕ່າງໆເປັນຫຼັກຖານ ຫຼື ຂໍ້ອ້າງອີງ(ຂໍ້ສະໜັບສະໜູນ) ໃນການຫາຂໍ້ສະຫຼຸບທີ່ເປັນຫຼັກ ຫຼື ກົດເກນທົ່ວໄປ.

**ຕົວຢ່າງ** ການສະແດງເຫດຜົນດ້ວຍວິທີອຸປະໄນ

ໃນໄລຍະກ່ອນປີໃໝ່ລາວ ແລະ ລະຫວ່າງປີໃໝ່ລາວມັກຈະມີລົມພາຍຸພັດແຮງ ແລະບາງເທື່ອກໍ່ມີຝົນຕົກໜັກເຊິ່ງເຮົາເອີ້ນວ່າ ພາຍຸປີໃໝ່. ປາກົດການເຊັ່ນນີ້ມັກຈະເກີດຂຶ້ນເປັນປະຈໍາທຸກປີ ເຮົາຈຶ່ງສະຫຼຸບວ່າເຖິງປີໃໝ່ລາວຈະມີລົມພາຍຸທຸກເທື່ອ, ການສະຫຼຸບເຊັ່ນນີ້ເອີ້ນວ່າ ວິທີອຸປະໄນ.

ອີກຕົວຢ່າງໜຶ່ງ ນັກຮຽນຫຼາຍຄົນໄດ້ໄປເບິ່ງຮູບເງົາເລື່ອງໜຶ່ງ ແລ້ວກໍ່ພາກັນເວົ້າວ່າ ເປັນຮູບເງົາທີ່ມ່ວນຊື່ນຕື່ນເຕັ້ນ ແລະ ກຸ້ມຄ່າທີ່ໄດ້ໄປເບິ່ງ. ເມື່ອໄດ້ຮັບຂໍ້ມູນດັ່ງກ່າວນີ້ແລ້ວພວກເຂົາກໍສາມາດສະຫຼຸບໄດ້ວ່າຖ້າຫາກຜູ້ອື່ນໄດ້ໄປເບິ່ງນໍາກັນກໍ່ຈະເວົ້າເປັນສຽງດຽວກັນ, ການສະຫຼຸບເຊັ່ນນີ້ກໍ່ເອີ້ນວ່າ ວິທີອຸປະໄນເຊັ່ນດຽວກັນ.

ໃນການສະແດງເຫດຜົນດ້ວຍວິທີອຸປະໄນນີ້ ນອກຈາກການໃຊ້ກໍລະນີສະເພາະ ຫຼື ກໍລະນີຕົວຢ່າງດັ່ງທີ່ໄດ້ກ່າວມາແລ້ວ, ບາງທີອາດຈະໃຊ້ວິທີປຽບທຽບເພື່ອຫາຂໍ້ສະຫຼຸບ.

**ຕົວຢ່າງ** ນັກຮຽນຄົນໜຶ່ງເຄີຍສະໝັກສອບເສັງເຂົ້າຮຽນມະຫາວິທະຍາໄລແຫ່ງຊາດ ແລະ ກໍ່ໄດ້ຮັບຜົນສໍາເລັດມາແລ້ວ. ນັກຮຽນຄົນນັ້ນອາດຈະເອົາປະສົບການຂອງຕົນໄປເປັນສິ່ງປຽບທຽບໃຫ້ຂໍ້ສະຫຼຸບແກ່ເພື່ອນນັກຮຽນຮຸ່ນນ້ອງວ່າ ຈະກຽມຕົວແນວໃດ ຈຶ່ງຈະປະສົບຜົນສໍາເລັດໃນການສອບເສັງ. ຂໍ້ແນະນໍານັ້ນແມ່ນຂໍ້ສະຫຼຸບທີ່ອາໄສການປຽບທຽບນັ້ນເອງ. ອາດຈະເວົ້າໄດ້ວ່າເປັນການສົມທຽບກໍລະນີຂອງນັກຮຽນຮຸ່ນອ້າຍກັບ

ຮຸ່ນນ້ອງ ໂດຍຖືເອົາຫຼັກທີ່ທັງສອງຄົນນັ້ນຢູ່ໃນສະພາບຄ້າຍຄືກັນ ຄືຈຸດມຸ້ງໝາຍໃນຊີວິດໃກ້ຄຽງກັນ, ມີພື້ນຖານຄວາມຮູ້ບໍ່ແຕກຕ່າງກັນເປັນຕົ້ນ. ຖ້າຮຸ່ນນ້ອງໃຊ້ວິທີການດຽວກັນກັບນັກຮຽນຮຸ່ນອ້າຍກໍ່ອາດຈະປະສົບຄວາມສຳເລັດເຊັ່ນດຽວກັນ.

### 3.3 ພາກສ່ວນຕ່າງໆຂອງບົດພິສູດ

ບົດພິສູດກໍ່ຄືກັນກັບບົດຫັດແຕ່ງປະເພດອື່ນໆ ເຊິ່ງປະກອບດ້ວຍ 3 ພາກສ່ວນຄື ຕັ້ງບັນຫາ, ແກ້ໄຂບັນຫາ, ສະຫຼຸບບັນຫາ.

**ກ. ຕັ້ງບັນຫາ**

- ຕັ້ງບັນຫາ ແມ່ນສັງລວມບັນຫາທີ່ຈະນຳມາພິສູດ ເຊັ່ນ ສະພາບແວດລ້ອມ, ກາລະ, ເທສະ ແລະ ອື່ນໆ ແລ້ວເອົາຫົວບົດມາອັດທ້າຍ.

**ຂ. ແກ້ໄຂບັນຫາ**

ແກ້ໄຂບັນຫາ ແມ່ນການແກ້ບັນຫາທີ່ໄດ້ຕັ້ງໄວ້ຢ່າງເປັນລະບົບ ແລະ ຕໍ່ເນື່ອງ ໂດຍໃຊ້ເຫດຜົນ ແລະ ຫຼັກຖານຕົວຈິງມາອ້າງອີງ.

- ໃຊ້ເຫດຜົນ ແລະ ຫຼັກຖານຕົວຈິງມາອ້າງອີງບັນຫາທີ1 ແລ້ວຫາຂໍ້ສະຫຼຸບຫຍໍ້.
- ໃຊ້ເຫດຜົນ ແລະ ຫຼັກຖານຕົວຈິງມາອ້າງອີງບັນຫາທີ2 ແລ້ວຫາຂໍ້ສະຫຼຸບຫຍໍ້ບັນຫານັ້ນ ແລະ ຕໍ່ໆໄປຈົນຈົບ.

**ຄ. ສະຫຼຸບບັນຫາ**

ສະຫຼຸບບັນຫາແມ່ນການສະຫຼຸບຜົນການພິສູດ ແລະ ຜົນການສະແດງຄວາມຄິດເຫັນສ່ວນຕົວກ່ຽວກັບບັນຫາພິສູດຊີ້ຊ່ອງທາງໄວ້ໃຫ້ຄິດຢ່າງໃດຢ່າງໜຶ່ງ ເອົາຫົວບົດມາອັດທ້າຍ.

- **ໂຄງຮ່າງບົດພິສູດ**

**ຕົວຢ່າງ 1** ໂຄງຮ່າງພິສູດຄຳສຸພາສິດທີ່ວ່າ

"ໄຮ່ບໍ່ຮົກ ຍ້ອນເຈົ້າໝັ່ນພຽນ
ໃຮ່ນາພຽງ ຍ້ອນເຈົ້າໝັ່ນປ້ອງ "

**ກ. ຕັ້ງບັນຫາ**

ຄວາມດຸໝັ່ນຂະຫຍັນພຽນໃນການອອກແຮງງານເປັນປັດໄຈໜຶ່ງທີ່ຮັບປະກັນໃຫ້ແກ່ໝາກຜົນຂອງວຽກງານ ແລະ ຄຸນະພາບຂອງການຜະລິດດັ່ງຄຳສຸພາສິດທີ່ວ່າ

"ໄຮ່ບໍ່ຮົກ ຍ້ອນເຈົ້າໝັ່ນ
ໃຮ່ນາພຽງ ຍ້ອນເຈົ້າປ້ອງ "

**ຂ. ແກ້ໄຂບັນຫາ**

- **ໄຮ່ບໍ່ຮົກຍ້ອນເຈົ້າຂອງໝັ່ນພຽນໝາຍຄວາມວ່າແນວໃດ?**
  - ແມ່ນໄຮ່ທີ່ມີແຕ່ຕົ້ນເຂົ້າ ຫຼື ສາລີຂຽວງາມດີ ໂດຍປາສະຈາກຫຍ້າ ແລະ ຕົ້ນໄມ້ອື່ນໆ.
  - ສະແດງເຖິງຄວາມດຸໝັ່ນເຈົ້າຂອງໄຮ່ໃນການຮັກສາບົວລະບັດເສຍຫຍ້າ, ຂ້າຮຸ່ນເປັນຕົ້ນ.

- ຖ້າເອົາໃຈໃສ່ບົວລະບັດໄຮ່ ຫຼື ສວນດີຜົນໄດ້ຮັບຈະເປັນຢ່າງໃດ?(ຫາຫຼັກຖານຕົວຈິງມາອ້າງອີງ).

- **ໃຮ່ນາພຽງຍ້ອນເຈົ້າໝັ່ນປ້ອງໝາຍຄວາມວ່າແນວໃດ?**
  - ແມ່ນໃຮ່ທີ່ມີພື້ນທີ່ຮາບພຽງດີ, ຮັກສານໍ້າໄວ້ຫຼໍ່ລ້ຽງຕົ້ນເຂົ້າສະໝໍ່າສະເໝີ
  - ຖ້າແປງດິນ ແລະ ບົວລະບັດເຂົ້ານາດີຜົນເກັບກ່ຽວຈະເປັນແນວໃດ?( ຫາຫຼັກຖານມາອ້າງອີງ )
- **ນໍ້າໃຈດຸໝັ່ນຂະຫຍັນພຽນມີບົດບາດສໍາຄັນຢູ່ໃນຂົງເຂດວຽກງານ**
  - ຄວາມດຸໝັ່ນຂະຫຍັນພຽນພາໃຫ້ບັນລຸຜົນສໍາເລັດ ( ຍົກຕົວຢ່າງມາປະກອບ )

**ຄ. ສະຫຼຸບບັນຫາ.**

- ສິ່ງທີ່ພິສູດມາຂ້າງເທິງນັ້ນເປັນສິ່ງທີ່ຖືກຕ້ອງ.
- ຄວາມດຸໝັ່ນຂະຫຍັນພຽນມີຄວາມສໍາຄັນແນວໃດ?
- ຄວນເຝິກຜົນຕົນເອງແນວໃດຈິ່ງຈະກາຍເປັນບຸກຄົນດຸໝັ່ນ?
- ເອົາຫົວບົດມາອັດທ້າຍ.

**ຕົວຢ່າງ 2:** ການສ້າງໂຄງຮ່າງບົດພິສູດດັ່ງຄໍາສຸພາສິດທີ່ວ່າ: " ຢາກກິນໝາກຕ້ອງປູກຜົນ ຢາກເປັນຄົນຕ້ອງຮຽນຄວາມຮູ້".

**ກ. ຕັ້ງບັນຫາ**

ຄວາມຮູ້ຂອງຄົນເຮົາບໍ່ຫອ່ນເກີດຂຶ້ນມາເອງໄດ້, ຖ້າເຮົາຢາກເປັນຄົນທີ່ມີຄວາມຮູ້,ຄວາມສາມາດກໍ່ຕ້ອງຮຽນຄືກັນກັບເຮົາຢາກກິນໝາກໄມ້ກໍ່ຕ້ອງປູກຕົ້ນໄມ້. ດັ່ງຄໍາສຸພາສິດບູຮານເຄີຍເວົ້າວ່າ "ຢາກກິນໝາກຕ້ອງປູກຜົນ ຢາກເປັນຄົນຕ້ອງຮຽນຄວາມຮູ້ ".

**ຂ. ແກ້ໄຂບັນຫາ**

- **ພິສູດ "ຢາກກິນໝາກຕ້ອງປູກຜົນ ".**
  - ເປັນຫຍັງຈິ່ງເວົ້າວ່າ ຢາກກິນໝາກຕ້ອງປູກຜົນ?(ອະທິບາຍຫຍໍ້).
  - ຍົກຫຼັກຖານມາພິສູດ ເຊັ່ນ ຊາວນາຢາກກິນເຂົ້າຕ້ອງປູກເຂົ້າ, ຊາວສວນຢາກກິນຜັກຕ້ອງປູກຜັກ, ຢາກກິນສາລີກໍ່ຕ້ອງປູກສາລີ.
- **ພິສູດ "ຢາກເປັນຄົນຕ້ອງຮຽນຄວາມຮູ້ ".**
  - ຢາກເປັນຄົນຢູ່ບ່ອນນີ້ໝາຍເຖິງຢາກເປັນຄົນທີ່ມີຄວາມຮູ້, ຄວາມສາມາດ, ຢາກມີຄວາມຮູ້ຄວາມສາມາດຕອ້ງຮຽນ.
  - ຕ້ອງຮຽນເຮັດຫຍັງແດ່?(ພິສູດ).

ຮຽນນໍາພໍ່ແມ່ ເຊັ່ນ ເລີ່ມຈາກຮຽນຍ່າງ, ຮຽນເວົ້າ, ຮຽນເຮັດວຽກເຮືອນການຊານ, ຮຽນເອົາຄໍາແນະນໍາສັ່ງສອນຂອງພໍ່ແມ່ ແລະ ອື່ນໆ. ຮຽນນໍາຄູອາຈານເຊັ່ນ ຢາກຮູ້ອ່ານກໍ່ຕ້ອງຮຽນອ່ານ, ຢາກຮູ້ຂຽນກໍ່ຕ້ອງຮຽນຂຽນ, ຢາກມີຄວາມຮູ້ກໍ່ຕ້ອງຮຽນ, ຄູອາຈານເປັນຜູ້ສິດສອນຖ່າຍທອດໃຫ້. ຢາກປະພຶດຕົວໃຫ້ເປັນຄົນດີກໍ່ຕ້ອງຟັງຄໍາສັ່ງສອນຂອງພໍ່ແມ່ ແລະ ຄູອາຈານ.

ຮຽນນຳໝູ່ຄູ່ ແລະ ສັງຄົມ ເຊັ່ນ ຮຽນຮູ້ກ່ຽວກັບການໄປການມາ, ການນຸ່ງຖື, ກິລິຍາມາລະຍາດທີ່ຈົບງາມ, ຮຽນຮູ້ການພົວພັນສັງຄົມ ແລະ ອື່ນໆ.

**ຄ. ສະຫຼຸບ.**

ການຮຽນເປັນສິ່ງສຳຄັນທີ່ສຸດສຳລັບທຸກຄົນ, ຢາກມີຄວາມຮູ້ຄວາມສາມາດກໍ່ຕ້ອງຮຽນ, ສຳລັບພວກເຮົາທີ່ເປັນນັກຮຽນຍິ່ງມີຄວາມສຳຄັນຫຼາຍ. ການເຝິກຝົນຕົນເອງໃຫ້ກາຍເປັນຄົນດຸໝັ່ນຕໍ່ການຮຽນ ນັ້ນເປັນເສັ້ນທາງທີ່ພາໃຫ້ຕົນເອງກາຍເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ນຳໄປສູ່ຄວາມສຸກ ຄວາມສຳເລັດໃນໜ້າທີ່ການງານ ດັ່ງຄຳສຸພາສິດທີ່ວ່າ: “ ຢາກກິນໝາກຕ້ອງປູກຜົນ ຢາກເປັນຄົນຕ້ອງຮຽນຄວາມຮູ້. ”

# ການແຕ່ງບົດພິສູດ

**ຕົວຢ່າງ ບົດພິສູດຄຳສຸພາສິດທີ່ວ່າ**

**" ຢາກກິນໝາກຕ້ອງປູກຜົນ ຢາກເປັນຄົນຕ້ອງຮຽນຄວາມຮູ້."**

ຄວາມຮູ້ຂອງຄົນເຮົາບໍ່ຫອນເກີດຂຶ້ນມາເອງໄດ້, ຖ້າເຮົາຢາກເປັນຄົນທີ່ມີຄວາມຮູ້ຄວາມສາມາດກໍ່ຕ້ອງຮຽນ ຄືກັນກັບເຮົາຢາກກິນໝາກໄມ້ກໍ່ຕ້ອງປູກຕົ້ນໄມ້. ດັ່ງຄຳສຸພາສິດບູຮານໄດ້ເວົ້າ " ຢາກກິນໝາກຕ້ອງປູກຜົນ ຢາກເປັນຄົນຕ້ອງຮຽນຄວາມຮູ້. "

ໃນຊີວິດການເປັນຢູ່ຂອງຄົນເຮົາ, ເມື່ອເວົ້າເຖິງອາຫານການກິນຕ່າງໆແລ້ວ ບໍ່ມີຈັກເທື່ອຈະເກີດຂຶ້ນໂດຍທີ່ເຮົາບໍ່ຊອກຫາ. ເຮົາຈະມີຢູ່ມີກິນໄດ້ກໍ່ຍ້ອນເຮົາເອງຊອກຫາມາ, ບໍ່ມີຫຍັງຈະພູມໃຈເທົ່າກັບສິ່ງທີ່ເຮົາຫາມາໄດ້ດ້ວຍຢາດເຫື່ອ ແລະ ແຮງງານຂອງເຮົາເອງ ບໍ່ແມ່ນລໍຖ້າກິນແຕ່ນຳຜູ້ອື່ນ. ຢາກມີກິນກໍ່ຕ້ອງປູກຝັ່ງທຳມາຫາກິນເພິ່ງຕົນເອງກຸ້ມຕົນເອງ ເຊັ່ນ: ຊາວໃຮ່ນາຢາກກິນເຂົ້າກໍ່ຕ້ອງປູກເຂົ້າ, ຊາວສວນຢາກກິນຜັກກໍ່ຕ້ອງປູກຜັກ, ຢາກກິນສາລີຕ້ອງປູກສາລີ...ພະນັກງານ, ທະຫານ, ຕຳຫຼວດ, ພໍ່ຄ້າຊາວຂາຍ...ຢາກມີຢູ່ມີກິນກໍ່ຕ້ອງໄດ້ເຮັດວຽກຕາມໜ້າທີ່ຂອງຕົນ. ຖ້າເຮົາບໍ່ປູກຝັງ, ບໍ່ຊອກເຮັດຊອກຫາເຮົາກໍ່ບໍ່ໄດ້ກິນ. ດັ່ງນັ້ນ, ຢາກກິນໝາກກໍ່ຕ້ອງປູກຜົນແຕ່ຜົນທີ່ຊອກຫາມາໄດ້ນັ້ນກໍ່ຕ້ອງໄດ້ມາດ້ວຍຄວາມຊື່ສັດສຸຈະລິດບໍ່ສໍ້ໂກງຜູ້ອື່ນ.

ໃນເມື່ອພວກເຮົາເກີດມາເປັນຄົນຜູ້ໜຶ່ງກໍ່ນັບວ່າໂຊກດີທີ່ສຸດແລ້ວ ແຕ່ສິ່ງສຳຄັນຈະເປັນຄົນແບບໃດ ແລະຈະເຮັດແນວໃດຈຶ່ງຈະວ່າໂຊກດີດັ່ງກ່າວ. ຈາກເນື້ອໃນຕົ້ນຕໍຂອງຄຳສຸພາສິດນີ້ໝາຍເຖິງວ່າ ຢາກເປັນຄົນດີມີຄວາມຮູ້, ຄວາມສາມາດກໍ່ຕ້ອງຮຽນ. ການຮຽນເຮັດໃຫ້ຄົນເຮົາສະຫຼາດສະຫຼຽວມີຫົວຄິດປັນຍາຈຶ່ງເອີ້ນວ່າເປັນຄົນທີ່ແທ້ຈິງ. ການຮຽນບໍ່ມີຍາມທີ່ຈະສິ້ນສຸດ, ທ່ານ ເລນິນ ຜູ້ນຳທີ່ຫຍິ່ງໃຫຍ່ຍັງເວົ້າໄວ້ວ່າ "ຮຽນ, ຮຽນແລ້ວ, ຮຽນອີກ, ຮຽນເລື້ອຍໆໄປ". ການຮຽນເຮັດໃຫ້ເຮົາມີຄວາມຮູ້. ເມື່ອຍັງນ້ອຍພວກເຮົາຮຽນນຳພໍ່ແມ່, ພໍ່ແມ່ບອກສອນພາເຮົາຮູ້ເວົ້າ, ຈູງແຂນເຮົາແອບຍ່າງ, ຕັກເຕືອນສິ່ງທີ່ດີ ສອນໃຫ້ເຮົາຮູ້ເຮັດວຽກຄອບຄົວ. ເຮົາຈະເວົ້າໄດ້ ຈະໄປໄດ້, ຈະຮູ້ເຮັດວຽກເຮືອນການຊານກໍ່ຍ້ອນເຮົາຮຽນນຳພໍ່ແມ່. ຈາກນັ້ນເມື່ອເຮົາໃຫຍ່ຂຶ້ນມາເຮົາ ໄປເຂົ້າໂຮງຮຽນຍິ່ງມີຄວາມຈຳເປັນສຳລັບເຮົາທີ່ສຸດໃນການຮຽນຮູ້.ຄູອາຈານເປັນຜູ້ສິດສອນໃຫ້ເຮົາອ່ານໄດ້ຂຽນເປັນ ຈົນເຖິງຖ່າຍທອດຄວາມຮູ້ຄວາມສາມາດຕ່າງໆເຊັ່ນ ສອນໃຫ້ເຮົາປະພຶດຕົນໃຫ້ເປັນຄົນດີ, ຈາກສິ່ງທີ່ບໍ່ເຄີຍຮູ້ກໍ່ໄດ້ຮູ້ ບໍ່ເຄີຍເຫັນກໍ່ໄດ້ເຫັນ ແລະ ເຂົ້າໃຈຈົນເກີດມີຄວາມຮູ້, ຄວາມສາມາດຂຶ້ນມາ.

ບໍ່ພຽງແຕ່ເທົ່ານັ້ນ, ພວກເຮົາຍັງຕ້ອງຮໍ່າຮຽນນຳໝູ່ຄູ່, ນຳສັງຄົມ ຮູ້ຈັກປະຕິບັດຕົນໃຫ້ຖືກຕ້ອງກັບໝູ່ຄູ່, ສັງຄົມເຊັ່ນ ຮຽນຮູ້ການໄປມາ, ການນຸ່ງຖື, ຮູ້ກິລິຍາມາລະຍາດທີ່ດີ, ຮູ້ຮັກແພງຊ່ວຍເຫຼືອຜູ້ອື່ນ, ຮູ້ລະບຽບວິໄນ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ. ເມື່ອເຮົາຫາກມີຄວາມຕັ້ງໃຈຊອກຮູ້ຮໍ່າຮຽນດຸໝັ່ນຄົ້ນຄ້ວາ, ຟັງຄຳສັ່ງສອນຂອງພໍ່ແມ່ ແລະ ຄູອາຈານເຮົາກໍ່ຈະກາຍເປັນຜູ້ທີ່ມີຄວາມຮູ້ ຄວາມສາມາດມີຄຸນສົມບັດ ແລະເປັນທີ່ຮັກແພງກັບທຸກຄົນ.

ເວົ້າລວມແລ້ວ ການຮຽນແມ່ນສິ່ງທີ່ສຳຄັນທີ່ສຸດຢາກເປັນຄົນກໍ່ຕ້ອງຮຽນໃຫ້ເກັ່ງ. ສຳລັບນັກຮຽນພວກເຮົາຍິ່ງມີຄວາມສຳຄັນຫຼາຍ ຄວນເຝິກຝົນຕົນເອງໃຫ້ເປັນຄົນດຸໝັ່ນຕໍ່ການຮ່ຳຮຽນເພື່ອໃຫ້ຕົນເອງກາຍເປັນຄົນທີ່ແທ້ຈິງ ນັ້ນຄືຄົນທີ່ມີຄວາມຮູ້ຄວາມສາມາດໃນອະນາຄົດ.

# ບົດທີ 6

# ການແຕ່ງບົດວິຈານ

ບົດວິຈານແມ່ນບົດແຕ່ງປະເພດໜຶ່ງ ເຊິ່ງອີງໃສ່ຄວາມຮູ້, ຄວາມຄິດ ແລະ ທັດສະນະຫຼັກໝັ້ນຂອງຜູ້ຂຽນ ເພື່ອສັງເກດເບິ່ງບັນຫານັ້ນວ່າ ຖືກ ຫຼື ຜິດ, ໂດຍມີການຕຳໜິພິຈາລະນາ ແລະ ຄົ້ນຄິດຕຶກຕອງໄປພ້ອມ. ບໍ່ວ່າວຽກງານຈະດີ ຫຼື ຮ້າຍ, ຖືກ ຫຼື ຜິດ ກໍສາມາດຍົກຂຶ້ນມາວິຈານໄດ້. ຕາມທຳມະດາແລ້ວ ການວິຈານບັນຫາໃດໜຶ່ງແມ່ນຍ້ອງຍໍສິ່ງທີ່ຖືກຕ້ອງ ແລະ ຕຳໜິສິ່ງທີ່ຜິດພາດຂອງບັນຫາດັ່ງກ່າວ ເພື່ອເຮັດແນວໃດໃຫ້ຜູ້ອ່ານມີຄວາມຮັບຮູ້ ແລະ ນຳໄປເຖິງການກະທຳທີ່ຖືກຕ້ອງ.

## 1. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນຂຽນບົດວິຈານ

### 1.1 ຄວາມໝາຍຂອງການສອນຂຽນບົດວິຈານ

ການສອນຂຽນບົດວິຈານ ແມ່ນການສອນກ່ຽວກັບບົດຂຽນປະເພດໜຶ່ງ ທີ່ຕຳໜິພິຈາລະນາ ແລະ ຕີລາຄາໃດໜຶ່ງກ່ຽວກັບການເມືອງ, ສັງຄົມເສດຖະກິດ ແລະ ວິຈານວັນນະຄະດີໂດຍມີຫົວຂໍ້ສະຫຼຸບວ່າ: ບັນຫານັ້ນຖືກ ຫຼື ຜິດ. ແລ້ວຍົກເອົາຄວາມໝາຍ ແລະ ຄຸນປະໂຫຍດຂອງມັນເພື່ອຖອດຖອນເປັນບົດຮຽນ.

### 1.2 ຄວາມສຳຄັນຂອງການສອນຂຽນບົດວິຈານ

ການສອນຂຽນບົດວິຈານ ມີຄວາມສຳຄັນຄື ສອນໃຫ້ນັກຮຽນຮູ້ຈັກວິທີສັງເກດ, ຕຶກຕອງຕີລາຄາຮອບດ້ານ ແລະ ຊັດເຈນ, ຮູ້ຍ້ອງຍໍສິ່ງເສີມສິ່ງທີ່ຖືກຕ້ອງ ແລະ ຕຳໜິສິ່ງທີ່ຜິດພາດ ແລະ ນຳໄປສູ່ການກະທຳສິ່ງທີ່ຖືກຕ້ອງຢູ່ໃນຊີວິດປະຈຳວັນ.

- ນັກຮຽນ-ຄູພ້ອມກັນສະຫຼຸບເປັນເອກະພາບກັນ.

## 2. ວິທີສອນຂຽນບົດວິຈານ

ວິທີສອນຂຽນບົດວິຈານ ມີຫຼາຍວິທີ ຫຼາຍຮູບແບບ ທີ່ແຕກຕ່າງກັນແລ້ວແຕ່ຄູຈະເລືອກນຳໄປໃຊ້ເຊັ່ນ: ສອນແບບບັນຍາຍ, ສອນແບບສົນທະນາ ແລະ ຄົ້ນຄວ້າກຸ່ມ, ສອນແບບຕັ້ງຄຳຖາມ ແລະ ອື່ນໆ.

## 3. ປະເພດຂອງບົດວິຈານ

ບົດວິຈານແບ່ງອອກເປັນ 2 ປະເພດຄື: ວິຈານການເມືອງ ສັງຄົມ ເສດຖະກິດ ແລະ ວິຈານວັນນະຄະດີ.

### 3.1 ວິຈານການເມືອງ ສັງຄົມ ແລະ ເສດຖະກິດ

ແມ່ນບົດແຕ່ງປະເພດໜຶ່ງ ທີ່ວິຈານສະເພາະທາງດ້ານການເມືອງ ສັງຄົມ ເສດຖະກິດ ສ່ວນຫຼາຍບົດແຕ່ງປະເພດນີ້ຈະພົບເຫັນຢູ່ຕາມໜ້າໜັງສືພິມ, ວາລະສານ, ສາລະຄະດີ ແລະ ອື່ນໆ. ສ່ວນປະກອບຂອງບົດວິຈານດັ່ງກ່າວປະກອບມີ ພາກສ່ວນເລົ່າຄືນ, ອ້າງຫຼັກຖານ ແລະ ພາກສ່ວນວິຈານ.

### 3.2 ວິຈານວັນນະຄະດີ

### ກ. ວິຈານຄຳຄະຕິພົດ, ຄຳສຸພາສິດ, ຄຳຜະຫຍາ, ສຳນວນຄຳເວົ້າ ແລະ ອື່ນໆ

ແມ່ນບົດແຕ່ງປະເພດໜຶ່ງທີ່ວິຈານເນື້ອໃນ ແລະ ຄວາມໝາຍຂອງຄາເຫຼົ່ານັ້ນວ່າຖືກ ຫຼື ຜິດໂດຍໃຊ້ຫຼັກຖານທາງທິດສະດີ ແລະ ຕົວຈິງມາພິສູດໃຫ້ເຫັນຄວາມຖືກຕ້ອງ ແລະ ຜິດພາດ, ຖືກໃນແງ່ໃດ ແລະ ຜິດໃນແງ່ໃດ ແລ້ວສະຫຼຸບ ແລະ ຖອດຖອນເປັນບົດຮຽນ.

**ຕົວຢ່າງ**: ວິຈານຄຳສຸພາສິດ"ເພິ່ນບໍ່ເອີ້ນຢ່າຂານ ເພິ່ນບໍ່ວານຢ່າຊ່ວຍ"

- **ຄຳສຸພາສິດນີ້ສາມາດວິຈານໄດ້ ສອງ ແງ່ ຖືກ ແລະ ຜິດ**

ແງ່ທີ່ຖືກ "ເພິ່ນບໍ່ເອີ້ນຢ່າຂານ ເພິ່ນບໍ່ວານຢ່າຊ່ວຍ" ເວົ້າຕາມຄຳບູຮານດັ່ງກ່າວແມ່ນຖືກຕ້ອງຢ່າຕື່ນຕົວຊ່ວຍຄົນຜູ້ທີ່ເຂົາບໍ່ຕ້ອງການໃຫ້ເຮົາຊ່ວຍ ບາງທີຊ່ວຍຖືກຜູ້ທີ່ບໍ່ຫວັງດີຕໍ່ເຮົາເຂົາຈະຄຽດຊັງເຮົາຄືນ ເພາະວ່າ ຄົນເຮົາຖ້າຜູ້ໃຈໂຫດຮ້າຍ, ຂີ້ຖີ່, ມັກໂລບ...ຖ້າຊ່ວຍຖືກກຸ່ມຄົນບໍ່ດີເຮົາອາດຈະຖືກຕີກັບ ແລະ ຮັບໂທດແທນເຂົາ. ຊ່ວຍຖືກຜູ້ຂີ້ຖີ່ເຂົາເຈົ້າຈະວ່າ ເຮົາຢາກໄດ້ຜົນປະໂຫຍດອັນໃດອັນໜຶ່ງຈາກເຂົາ, ຖ້າຢາກຊ່ວຍແທ້ໃຫ້ພິຈາລະນາຖີ່ຖ້ວນສາກ່ອນ ຜົນດີຈຶ່ງຈະເກີດມີ.

ແງ່ຜິດ ແມ່ນ ເພິ່ນບໍ່ເອີ້ນ, ບໍ່ວານ, ແຕ່ເຮົາຕ້ອງເບິ່ງ, ຕ້ອງຊ່ວຍເພິ່ນ, ເພາະຄົນເຮົາດຳລົງຊີວິດຢູ່ໃນສັງຄົມຕ້ອງມີການພົວພັນກັນ, ຊ່ວຍເຫຼືອເພື່ອແຜ່ກັນ ເຊັ່ນ: ເຮົາພົບເຫັນຜູ້ເຖົ້າ, ແມ່ມານ, ເດັກນ້ອຍ ຢູ່ໃນເຫດການທີ່ຊ່ວຍເຫຼືອຕົນເອງບໍ່ໄດ້. ເຖິງວ່າເພິ່ນບໍ່ເອີ້ນ ບໍ່ວານ ກໍຈຳເປັນຕ້ອງຊ່ວຍເພາະມັນເປັນຄຸນນະທຳປະຈຳໃຈ ແລະ ກໍແມ່ນມາລະຍາດທີ່ດີງາມຂອງຄົນເຮົາຜູ້ໜຶ່ງ

ບົດວິຈານມີທັງສັນນິຖານ ແລະ ສົນທະນາ ພວກເຮົາສາມາດວິຈານໄດ້ທຸກບັນຫາກ່ຽວກັບເນື້ອໃນທີ່ມີລັກສະນະດີ ຫຼື ຮ້າຍ, ຖືກ ຫຼື ຜິດ.

### ຂ. ວິຈານບົດປະພັນວັນນະຄະດີ

ວິຈານບົດປະພັນວັນນະຄະດີ ແມ່ນວິຈານທາງດ້ານໂຄງເລື່ອງ, ເນື້ອໃນ, ຮູບການສິລະປະການແຕ່ງ ຂອງນັກແຕ່ງບົດປະພັນວັນວັນນະຄະດີໃດໜຶ່ງ ໂດຍຍົກເອົາຈຸດດີ, ຈຸດອ່ອນ ມາວິຈານ ການຕຳໜິວິຈານຕ້ອງມີຫຼັກຖານ , ມີເຫດຜົນທາງດ້ານທິດສະດີ ແລະ ຕົວຈິງຢ່າງຄົບຖ້ວນ, ມີທັດສະນະຫຼັກໝັ້ນການເມືອງສູງ, ມີຄວາມຮູ້ທາງດ້ານທິດສະດີວັນນະຄະດີ ແລະ ປະຫວັດວັນນະຄະດີອີກດ້ວຍ.

## 4. ລັກສະນະ ແລະ ວິທີແຕ່ງບົດວິຈານ

### 4.1.ລັກສະນະຂອງບົດວິຈານ

### ກ. ວິຈານບັນຫາທີ່ຖືກໝົດ

**ຕົວຢ່າງ**: ວິຈານຄາເວົ້າຂອງທ່ານເລນິນທີ່ວ່າ "ຮຽນ, ຮຽນແລ້ວ,ຮຽນອີກ, ຮຽນເລື້ອຍໆໄປ".

ຄຳເວົ້ານີ້ຖືກໝົດ ເພາະຄົນເຮົາກຳເນີດອອກມາຈາກທ້ອງແມ່ ມືນຕາມາເຫັນດິນ, ເຫັນຟ້າ ກໍເລີ່ມຕົ້ນຮຽນຄື: ຮຽນດູດນົມແມ່,ຮຽນຄານ, ຮຽນເວົ້າ, ຮຽນໜັງສື, ຮຽນວິຊາສະເພາະ... ຈົນເຖິງເຖົ້າແກ່. ການຮຽນຂອງຄົນເຮົາບໍ່ມີຍາມສິ້ນສຸດ.

### ຂ. ວິຈານບັນຫາທີ່ມີທັງຖືກ ແລະ ຜິດ

**ຕົວຢ່າງ:** ວິຈານຄຳສຸພາສິດທີ່ວ່າ :"ຕົກໝູ່ແຮ້ງເປັນແຮ້ງ ຕົກໝູ່ກາເປັນກາ ".

**ຄ. ວິຈານບັນຫາທີ່ຜິດໝົດ**

**ຕົວຢ່າງ:** ວິຈານບັນຫາທີ່ວ່າ: "ຄົນເຮົາຈະຮັ່ງມີ ຫຼື ທຸກຍາກແມ່ນຍ້ອນໂຊກຊາຕາກຳ".

ຄຳເວົ້ານີ້ແມ່ນຜິດໝົດເພາະວ່າ: ຄົນເຮົາຈະທຸກ ຫຼື ຮັ່ງບໍ່ໄດ້ຂຶ້ນກັບໂຊກຊາຕາກຳ, ແຕ່ມັນຂຶ້ນກັບຫຼາຍປັດໄຈເຊັ່ນ:ກາລະໂອກາດ, ສະພາບແວດລ້ອມ, ເຄົ້າກຳເນີດ...ສິ່ງສຳຄັນແມ່ນເຮົາເອງຕ້ອງເປັນຜູ້ຕັດສິນ. ອີກແງ່ໜຶ່ງ ຄຳເວົ້ານີ້ເຮັດໃຫ້ຄົນເຮົາອ່ອນແອ, ບໍ່ກ້າຕໍ່ສູ້, ທໍ້ຖອຍ, ໝົດກຳລັງໃຈ, ບໍ່ມີທາງອອກ ແລະ ໃນທີ່ສຸດກໍກ້າວໄປເຖິງບ່ອນງົມງາຍ. ແຕ່ກໍມີບາງກໍລະນີຄົນເຮົາຮັ່ງມີຍ້ອນຖືກຫວຍ(ເລກ) ແຕ່ສິ່ງເຫຼົ່ານັ້ນມັນແມ່ນການບັງເອີນ ແລະ ມີໜ້ອຍທີ່ສຸດ ບໍ່ສາມາດເປັນຫຼັກຖານທີ່ຖືກຕ້ອງໄດ້.

**4.2 ວິທີແຕ່ງບົດວິຈານ**

**ກ. ພາກສ່ວນບົດວິຈານ**

ບົດວິຈານກໍຄືກັບກັບບົດແຕ່ງປະເພດອື່ນໆ ເຊິ່ງປະກອບດ້ວຍສາມພາກສ່ວນຕົ້ນຕໍຄື: ຕັ້ງບັນຫາ, ແກ້ໄຂບັນຫາ ແລະ ສະຫຼຸບບັນຫາ.

- **ຕັ້ງບັນຫາ**

  ເວົ້າເຖິງສະພາບແວດລ້ອມ, ກາລະ ເທສະ ແລະ ອື່ນໆ ທີ່ມີການພົວພັນກັບເລື່ອງ ທີ່ເຮົາຈະວິຈານ.

- **ແກ້ໄຂບັນຫາ**
  - ສັງເກດເບິ່ງບັນຫານັ້ນຖືກ ຫຼື ຜິດ ຖືກໝົດ ຫຼື ຜິດໝົດ, ຫຼື ຖືກແຕ່ບາງສ່ວນ, ຜິດຢູ່ໃດ, ຜິດໃນແງ່ໃດເປັນຕົ້ນ.
  - ອ້າງເຫດຜົນເພື່ອຢັ້ງຢືນແງ່ທີ່ຖືກໝົດ ແລະ ຕຳໜິວິຈານແງ່ທີ່ຜິດໝົດພ້ອມທັງສະແດງທ່າທີເຫັນດີ ຫຼື ຄັດຄ້ານ.
  - ສະຫຼຸບບັນຫາທີ່ຍົກຂຶ້ນມາເປັນຫຼັກຖານໃນແງ່ວິຈານ ແລະ ຖອດຖອນບົດຮຽນເພື່ອນຳໃຊ້ເຂົ້າໃນການດຳລົງຊີວິດ.
  - ຍົກເອົາບັນຫາ ຫຼື ກໍລະນີພິເສດ(ຖ້າມີ)ອະທິບາຍ, ຈຳແນກ ແລະ ປົກປ້ອງທິດສະດີຂອງຕົນ.

- **ສະຫຼຸບ**
  - ຢັ້ງຢືນຄືນອີກເທື່ອໜຶ່ງວ່າບັນຫາຕ່າງໆທີ່ວິຈານນັ້ນຖືກໝົດ ຫຼື ຜິດໝົດ.
  - ແນະນຳໃຫ້ຜູ້ອ່ານຮູ້ຈັກທິດທາງເພື່ອຫຼີກເວັ້ນຄວາມຜິດພາດ.
  - ສັນລະເສີນສິ່ງທີ່ຖືກຕ້ອງ ແລະ ແນະນຳໃຫ້ຜູ້ອ່ານເອົາເປັນແບບຢ່າງ.

**ຂ. ຕົວຢ່າງໂຄງຮ່າງວິຈານຄຳສຸພາສິດ**

"ຕົກໝູ່ແຮ້ງເປັນແຮ້ງ ຕົກໝູ່ກາເປັນກາ"

- **ຕັ້ງບັນຫາ**

ສະພາບແວດລ້ອມມີຜົນສະທ້ອນເຖິງການດຳລົງຊີວິດຂອງຄົນເຮົາຢ່າງເລິກເຊິ່ງ. ສະນັ້ນ, ຈຶ່ງມີຄຳສຸພາສິດທີ່ວ່າ:"ຕົກໝູ່ແຮ້ງເປັນແຮ້ງ ຕົກໝູ່ກາເປັນກາ"

- **ແກ້ໄຂບັນຫາ**
  - ອະທິບາຍຄວາມໝາຍຂອງຄຳສຸພາສິດໂດຍຫຍໍ້
  - ຄົນເຮົາດຳລົງຊີວິດຢູ່ໃນສະພາບແວດລ້ອມໃດ, ຢູ່ໃນກຸ່ມຄົນໃດ ແນ່ນອນຕ້ອງໄດ້ຮັບຜົນສະທ້ອນອັນດີ ຫຼື ບໍ່ດີຈາກສະພາບແວດລ້ອມ ຫຼື ກຸ່ມຄົນນັ້ນ.
  - **ຢັ້ງຢືນສ່ວນທີ່ຖືກ ແລະ ຕຳໜິສ່ວນທີ່ຜິດ**

ສະພາບແວດລ້ອມຂອງສັງຄົມ, ການພົວພັນໃນສັງຄົມມີຜົນສະທ້ອນຢ່າງແນ່ນອນເຖິງຄົນເຮົາ(ອະທິບາຍ, ພິສູດ). ຄົນເຮົາອາດຈະໄດ້ຮັບຜົນສະທ້ອນອັນດີຈາກສະພາບແວດລ້ອມ ແລະ ກົງກັນຂ້າມ. ຖ້າຄົນເຮົາຫາກຄອນແຄນກໍອາດຈະໄດ້ຮັບຜົນສະທ້ອນອັນບໍ່ດີເຊັ່ນກັນ.

- **ຕຳໜິສ່ວນທີ່ຜິດພາດ**

- ປັດໄຈຕ່າງໆຂອງສະພາບແວດລ້ອມ ທີ່ສະທ້ອນເຖິງຄົນເຮົາບໍ່ອາດຕັດສິນຊີ້ຂາດຢ່າງຂາດຕົວໄດ້ເພາະວ່າຄົນເຮົາສາມາດດັດແປງສະພາບແວດລ້ອມຂອງສັງຄົມໄດ້(ອະທິບາຍ ແລະ ພິສູດຕື່ມ).
- ຄົນເຮົາມີຊີວິດຢູ່ໃນສະພາບແວດລ້ອມທີ່ດີແລ້ວກໍບໍ່ໝາຍຄວາມວ່າ ຈະດີໄປໝົດ, ຖ້າວ່າບໍ່ຮູ້ຈັກຮ່ຳຮຽນ ແລະ ດັດແປງຕົວເອງໄປ ນຳກໍບໍ່ສາມາດຈະດີນຳສະພາບແວດລ້ອມນັ້ນໄດ້(ອ້າງຫຼັກຖານ).
- ຄົນເຮົາມີຊີວິດຢູ່ໃນສະພາບແວດລ້ອມທີ່ບໍ່ດີແລ້ວ ກໍບໍ່ໝາຍຄວາມວ່າ ເປັນຄົນຊົ່ວໄປໝົດຖ້າວ່າເຮົາຮູ້ດັດແປງສິ່ງແວດລ້ອມ ແລະ ປ່ຽນແປງຕົນເອງ ກໍຈະກາຍເປັນຄົນດີໄດ້ເໝືອນກັນ.

**• ຕຶກຕອງພິຈາລະນາ**

-ຄຳສຸພາສິດໄດ້ຊີ້ບອກໃຫ້ເຮົາເຫັນວ່າ ສະພາບແວດລ້ອມຂອງການດຳລົງຊີວິດມັນໄດ້ສົ່ງ ຜົນສະທ້ອນເຖິງຄົນເຮົານັ້ນແມ່ນກົດເກນການສົ່ງຜົນສະທ້ອນເຊິ່ງກັນ ແລະ ກັນ.

-ເພື່ອຢາກໃຫ້ຕົນເອງກາຍເປັນຄົນດີໃນການເຮັດວຽກງານ, ການປະກອບອາຊີບ ແລະ ອື່ນໆຕ້ອງດຸຫມັ່ນສຶກສາຮ່ຳຮຽນເລື້ອຍໆ, ແຕ່ຫາກຢູ່ໃນສະພາບແວດລ້ອມທີ່ຫຍຸ້ງຍາກບໍ່ສະດວກ. ເຮົາກໍບໍ່ຍອມນັ່ງກອດເຂົ່າຢູ່ລ້າໆ, ບໍ່ປະປ່ອຍໃຫ້ຜົນສະທ້ອນອັນຊົ່ວຊ້າດຶງດູດເອົາໄປສະນັ້ນ ເຮົາຕ້ອງເປັນເຈົ້າການ ຕໍ່ສູ້ດັດແປງສະພາບແວດລ້ອມແຫ່ງຊີວິດດ້ວຍການຫຼໍ່ຫຼອມ ແລະ ປ່ຽນແປງແນວຄິດຈິດໃຈຂອງຕົນເອງ.

• ອ້າງຫຼັກຖານ

ໃນການຮ່ຳຮຽນ ແລະ ການພົວພັນກັບຫມູ່ເພື່ອນ ຕ້ອງຕ້ານການພົວພັນກັບຄົນທີ່ຈະພາເຮົາ ໄປທາງບໍ່ດີ, ດັ່ງນັ້ນ, ຈະຕ້ອງເລືອກເອົາການພົວພັນທີ່ຖືກຕ້ອງ (ມີການສັງເກດພິຈາລະນາ ແລະ ຈຳແນກອັນດີອັນຮ້າຍ).

• ສະຫຼຸບ

ຄຳສຸພາສິດນີ້ໄດ້ຊີ້ແຈງໃຫ້ພວກເຮົາເຫັນການພົວພັນ, ການກະທົບເຊິ່ງກັນ ແລະ ກັນລະ ຫວ່າງສະພາບແວດລ້ອມກັບຊີວິດຂອງຄົນເຮົາມັນມີທັງສ່ວນຖືກ ແລະ ສ່ວນຜິດ, ແຕ່ຄສຸພາສິດນີ້ ກໍມີຜົນດີໃຫ້ແກ່ພວກເຮົາ, ເຕືອນພວກເຮົາໃຫ້ເອົາໃຈໃສ່ດັດແປງສະພາບແວດລ້ອມທີ່ບໍ່ດີ, ອັນຊົ່ວ ຮ້າຍ ສ້າງຕົນເອງ ແລະ ຫມູ່ຄູ່ໃຫ້ກ້າວຂຶ້ນເລື້ອຍໆ.

ຄ. ຕົວຢ່າງບົດວິຈານການເມືອງ

“ບາດກ້າວໃຫມ່ໃນສາຍພົວພັນລະຫວ່າງສະຫະລັດອາເມຣິກາ ແລະ ຫວຽດນາມ”,

ໃນວັນອັງຄານອາທິດນີ້, ປະທານາທິບໍດີບິນຄິນຕັນ ແຫ່ງສະຫະລັດອາເມຣິກາໄດ້ປະ ກາດການສະຖາປະນາສາຍພົວພັນທາງດ້ານການທູດຢ່າງເຕັມຮູບແບບ ກັບສາທາລະນະລັດສັງ ຄມນຍົມຫວຽດນາມ. ສິ່ງດັ່ງກ່າວກາຍເປັນເຫດການ ແລະ ບາດກ້າວໃຫມທີ່ມີຄວາມຫມາຍທາງ ປະຫວັດສາດຂອງການພົວພັນຮ່ວມມືລະຫວ່າງສະຫະລັດອາເມຣິກາ ແລະ ຫວຽດນາມ, ທັງເປັນ ການຕັດສິນໃຈທີ່ສອດຄ່ອງກັບທ່າອ່ຽງຂອງອາຊີ-ປາຊີຟິກ ແລະ ໂລກ. ແລະ ຄວາມມຸ່ງມາດປາຖະຫນາຂອງປະຊາຊົນອາເມລິກາ ແລະ ປະຊາຊົນຫວຽດນາມ.

ສອງທົດສະວັດແຫ່ງຄວາມເປັນຊາໃນສາຍພົວພັນສະຫະລັດອາເມລິກາ ແລະ ຫວຽດນາມ ທີ່ສືບເນື່ອງມາຈາກນະໂຍບາຍຕ້ານຫວຽດນາມຂອງຜູ້ນຳສະຫະລັດໃນອາດີດນັ້ນ ໄດ້ສ້າງຜົນເສຍຫາຍອັນຫຼວງຫຼາຍມາສູ່ສອງປະເທດ, ເປັນການກີດກັ້ນເຮັດໃຫ້ການແກ້ໄຂບັນຫາທີ່ຕ່າງຝ່າຍຕ່າງມີຄວາມຊັກຊ້າ ນັກທຸລະກິດສະຫະລັດສູນເສຍໂອກາດ ແລະ ເວລາໄປຢ່ງໜ້າ ເສຍດາຍ, ຢ່າງໃດກໍຕາມມາໃນສະໄຫມອານາດການປົກຄອງຂອງທ່ານ ບິນຄິນຕັນ ທ່ານໄດ້ ເຮັດໃຫ້ສາຍພົວພັນອັນເຢັນຊານັ້ນ ມີຄວາມອົບອຸ່ນ
ຂຶ້ນມາເປັນຂັ້ນຕອນ  ໂດຍການຈັດສົ່ງຜູ້ຕ່າງຂອງຕົນໄປປຶກ ສາຫາລືວຽກງານ ແລະ ແລກປ່ຽນຄຳຄິດຄຳເຫັນກັບຝ່າຍຫວຽດນາມຫຼາຍຂຶ້ນ, ໃນເດືອນກຸມພາປີຜ່ານມາ ກໍໄດ້ປະກາດຍົກເລີກການຂອ້ຳບາດທາງດ້ານເສດຖະກິດຕໍ່ຫວຽດນາມ. ທີ່ມີມາຕັ້ງ 20 ປີນັ້ນອອກໄປ ເຊິ່ງເປັນໂອກາດໃຫ້ນັກ ລົງທຶນໃນຫວຽດນາມ ໄລ່ມາເຖິງດຽວນີ້ກໍເປັນມູນຄ່າຫຼາຍຮ້ອຍລ້ານໂດລາແລ້ວ. ມາໃນຕົ້ນປີນີ້ກໍໄດ້ປະກາດຕັ້ງ ນັກງານຜູ້ຕາງຫນ້າຂອງສະຫະລັດອາເມຣິກາປະຈຳນະຄອນຫຼວງຮ່າໂນ້ຍ ແລະ ມາໃນຕົ້ນອາທິດ ນີ້ກໍປະກາດສະຖາປະນາສາຍພົວພັນທາງການທູດຢ່າງເປັນທາງການກັບ ສ.ສ ຫວຽດນາມ ແລະ ໃນລະຫວ່າງ ວັນທີ 5-6 ສິງຫານີ້ ທ່ານ ວໍເຣນຄີຣສ ຕົບເຟີ  ລັດຖະມົນຕີການຕ່າງປະເທດຂອງອາເມລິກາກໍ່ໄດ້ເດີນທາງມາຢ້ຽມຢາມຫວຽດນາມຢ່າງເປັນທາງການເພື່ອປຶກສາຫາລືເຖິງສາຍພົວພັນ  ແລະ ການຮ່ວມມືທາງດ້ານເສດຖະກິດລະຫວ່າງສອງປະເທດ ເຊິ່ງເປັນການເປັນການເປີດສັງກາດໃຫມ່ໃນການພົວພັນ ແລະ ການຮ່ວມມືຫຼາຍດ້ານລະ ຫວ່າງສອງປະ ເທດ, ເປັນການຊ່ວຍຈຳກັດ ແລະ ລຶບລ້າງຄວາມອາຄາດບາດໝາງ ພ້ອມກັນເສີມສ້າງຄວາມໄວ້ວາງໃຈ ເຮັດໃຫ້ສະຖຽນລະພາບໃນຂົງເຂດສົດໃສ ແລະ ຫມັ້ນຄົງກວ່າເກົ່າ, ສ ປ ປ ລາວ ໃນຖານະເປັນບ້ານໃກ້ເຮືອນ ຄຽງກັບ ສ.ສ ຫວຽດນາມ ແລະ ທັງເປັນປະເທດທີ່ມີສາຍພົວພັນກັບສະຫະລັດອາເມລິກາມາແຕ່ ດົນນານນັ້ນ ຍິນດີເປັນຢ່າງຍິ່ງຕໍ່ການສະຖາປະນາຄວາມສຳພັນດັ່ງກ່າວ ແລະ ເມື່ອວັນທີ 13 ກໍລະກົດນີ້ ກະຊວງການຕ່າງປະເທດແຫ່ງ ສ ປ ປ ລາວ ໂດຍຕາງຫນ້າ ໃຫ້ລັດຖະບານລາວກໍໄດ້ ອອກຖະແຫຼງການ ມີຕອນຫນຶ່ງຂຽນວ່າ “ລັດຖະບານ ແລະ ປະຊາຊົນລາວຖືການຕັດສິນໃຈ ກ່າວເປັນການຖືກຕ້ອງ ທັງເປັນການຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ ຫວຽດນາມ ແລະ ອາເມຣິກາເອງກໍ່ຄືປະຊາຊົນອາຊີອາຄະເນ ແລະ ໂລກ”.
(ຄັດຈາກຫນັງສືພິມວຽງຈັນໃຫມ່ສະບັບທີ 4658075 ລົງວັນທີ 15/7/1995, ຫນ້າທີ່ 8)

**ຕົວຢ່າງ ໂຄງຮ່າງບົດວິຈານການເມືອງ.**

“ບາດກ້າວໃຫມ່ໃນສາຍພົວພັນລະຫວ່າງສະຫະລັດອາເມຣິກາ ແລະ ຫວຽດນາມ”.

**• ຕັ້ງບັນຫາ**

ເລີ່ມແຕ່ວັນອັງຄານອາທິດນີ້ ຈົນເຖິງຄວາມມຸ່ງມາດປາຖະຫນາຂອງປະຊາຊົນອາເມຣິ ແລະ ປະຊາຊົນຫວຽດນາມ.

- ກ່າວເຖິງເຫດການ, ບາດກ້າວໃຫມ່ທີ່ມີຄວາມຫມາຍປະຫວັດສາດຂອງການພົວພັນຮ່ວມ) ລະຫວ່າງສະຫະລັດອາເມຣິກາ ແລະ ຫວຽດນາມ, ເປັນການຕັດສິນໃຈທີ່ຖືກຕ້ອງ, ສອດຄ່ອງ ສຸດກັບທ່າອຽງລວມຂອງຍຸກສະໄຫມ.

• **ແກ້ບັນຫາ**

ເລີ່ມແຕ່ສອງທົດສະວັດແຫ່ງຄວາມເປັນຊາຈົນເຖິງສົດໃສ ແລະ ໜັ້ນຄົງກວ່າເກົ່າການຜ່ ໄຂບັນຫານີ້ ຜູ້ຂຽນໄດ້ເລົ່າຄືນເຫດການໃນອະດີດດັ່ງນີ້.

• ເວົ້າເຖິງຄວາມເປັນຊາໃນສາຍພົວພັນລະຫວ່າງສະຫະລັດອາເມຣິກາ ກັບ ຫວຽດນາມ ເຊິ່ງມັນໄດ້ສົ່ງຜົນສະທ້ອນອັນບໍ່ດີຕໍ່ທັງສອງປະເທດ.

- ເປັນການກີດກັ້ນເຮັດໃຫ້ການແກ້ໄຂບັນຫາທີ່ຕ່າງຝ່າຍຕ່າງມີຄວາມສົນໃຈຊັກຊ້າ
- ນັກທຸລະກິດຂອງສະຫະລັດສູນເສຍກາລະໂອກາດທີ່ຈະມາລົງທຶນຢູ່ຫວຽດນາມ

•ໃນສະໄໝອຳນາດການປົກຄອງຂອງທ່ານ ບິນຄິນຕັນ ໄດ້ເຮັດໃຫ້ສາຍພົວພັນທີ່ເປັນຊານັ້ນ ຄ່ອຍໆມີຄວາມອົບອຸ່ນຂຶ້ນມາ ເຊິ່ງມັນໄດ້ສົ່ງຜົນສະທ້ອນອັນດີຕໍ່ປະຊາຊົນທັງສອງຊາດ.

- ປະກາດສະຖາປະນາດ້ານການທູດຢ່າງເປັນທາງການ
- ເປີດສັງກາດໃໝ່ໃນການຮ່ວມມືດ້ານເສດຖະກິດ,

• **ສະຫຼຸບ**

ການພົວພັນຄືນໃໝ່ລະຫວ່າງສະຫະລັດອາເມຣິກາກັບຫວຽດນາມເປັນການຈຳກັດ ແລະ ລຶບລ້າງຄວາມອາຄາດບາດໝາງ ພ້ອມທັງເສີມສ້າງຄວາມໄວ້ວາງໃຈເຊິ່ງກັນ ແລະ ກັນເຮັດໃຫ້ ສະຖຽນລະພາບໃນຂົງເຂດນີ້ສົດໃສໝັ້ນຄົງກວ່າເກົ່າ.

ປະຊາຊົນລາວມີຄວາມເຫັນດີ, ເຫັນພ້ອມຕໍ່ເຫດການອັນຍິ່ງໃຫຍ່ ແລະ ມີຄວາມໝາຍ ປະຫວັດສາດນັ້ນ.

**ງ. ຕົວຢ່າງ ບົດວິຈານສັງຄົມ**

ໃນເລື່ອງ "ຢາກກິນຫຼາຍໄດ້ກິນທໍ່ກ້ອຍ". ປູ່ຍ່າຕາຍາຍເຮົາເຄີຍສອນວ່າ:

"ຢາກມີຫຼາຍ ມັນໄຮ້

ຢາກໄດ້ຫຼາຍ ມັນຕາຍ",

ພວກພະນັກງານທັງຫຼາຍກໍບໍ່ສົນໃຈນຳເລີຍ ເພາະເຂົາຄິດວ່າ "ລວຍທາງລັດ" ເປັນວິທີດຽວ ເພື່ອການດຳລົງຊີບຈົນມີຄຳວ່າ "ຜູ້ທຸກຊື້ຫວຍ ຜູ້ລວຍຊື້ເບີ" ແລະ ມັນກໍມີອຳນາດດຶງດູດໃຫ້ຄົນຊື້ ຢ່າງແກະບໍ່ອອກ ໂດຍສະເພາະແມ່ນຍາມອອກເລກຫວຍແຕ່ລະຄັ້ງບໍ່ວ່າ ຂອງລາວ ຫຼືຂອງໄທ, ທັງຖືກຕ້ອງ, ທັງເຖື່ອນ.

ຄວາມຈິງແລ້ວ ຄົນເຮົາສ່ວນຫຼາຍກໍມັກຊື້ຫວຍພັດທະນາເພື່ອສ່ຽງໂຊກ, ສ່ຽງມ່ວນພໍ ໃຫ້ ເບົາສະໝອງໄປ, ແຕ່ຄົນຈຳນວນໜຶ່ງພັດຫຼົ້ມກາຍເປັນຊີວິດຈິດໃຈກາຍເປັນອາຊີບທີ່ບໍ່ຊອບທຳ. ຜູ້ມີເງິນໜ້ອຍກໍຊື້ຕາມແບບເລກບອກ, ຜູ້ຫຼົ້ມແທ້ກໍ່ແມ່ນຊື້ແບບເລກຄູນຂຶ້ນເລື້ອຍໆ ຈົນກະທັ້ງລັດ ຖະກອນໃນບາງສຳນັກງານກໍພາຍຖົງຫວຍເຖື່ອນ ແລະ ຂາຍເປັນປະຈຳ,

ໃນທີ່ສຸດກໍພາໃຫ້ເກີດສະພາບຂວ້ຳຄົວເຮືອນ, ຕົກທຸກໄດ້ຍາກໄປແລ້ວຫຼາຍລາຍ, ບາງຄົນ ເຄີຍຮັ່ງມີສີສຸກກໍຕົກມາເປັນຄົນທຸກຍາກ, ບາງຄົນເຄີຍເປັນເຈົ້າໜີ້ກໍກາຍເປັນລູກໜີ້ຖ້ວມຫົວ, ແຕ່ ປາກົດວ່າເຂົາເຫຼົ່ານັ້ນກໍຍັງບໍ່ຫຼາບບໍ່ຈື່.

ຄວາມໄຝ່ຝັນຢາກຮັ່ງຢາກມີຂຶ້ນໃນພິບຕາດຽວນີ້ ແມ່ນແກ້ຍາກທີ່ສຸດ ເພາະວ່າກໍ່ມີຄົນ ຈານວນບໍ່ໜ້ອຍຖືກແທ້, ໄວ້ແທ້ ຍ້ອນຊື້ຫວຍລວຍເບີ, ຜູ້ໄດ້ໂທລະທັດ, ຕູ້ເຢັນ, ຜູ້ໄດ້ລົດຈັກ, ລົດກະບະກໍມີແລ້ວ, ຈາກນັ້ນ, ບັນຫາຊື້ເລກຈິ່ງກາຍເປັນບັນຫາໃຈກາງຂອງກຸ່ມຄົນຈຳນວນໜຶ່ງ,ປະສົນທະນາກັນຢູ່ພາເຂົ້າ ຫຼືສະພາກາເຟ, ຕາມຖະໜົນຫົນທາງ ຫຼື ຢູ່ໃນສຳນັກງານອົງການ ແມ່ນເວົ້າເຖິງການຊື້ເລກ ຊື້ເບີ ຕົວເດັດຈົດຈຳທີ່ສຸດກໍ່ແມ່ນຮອດເວລາປະກາດຜົນຂອງການ ") ແມ່ເລກຂອງຕົນບໍ່ຖືກບາງຄົນກໍໄດ້ແຕ່ຫັນໃຈຍາວ, ຄຳເຕື່ອຍ

ໄປຖືວ່າໂຊກບໍ່ທັນມາເຖິງ ແລ້ວກໍຄິດໄລ່ຕົວເລກທີ່ຈະຊື້ໃນງວດຕໍ່ໄປ ເຊິ່ງເປັນຮອບວຽນທີ່ບໍ່ຊິ້ນສຸດ ແລະ ສ່ວນຫຼາຍແມ່ນຕິດການພະນັນແບບນີ້ ມັກຈະສິ້ນເນື້ອປະດາຕົວບໍ່ຂຶ້ນບໍ່ເກີນ.

ທີ່ກ່າວມານັ້ນ ເປັນພຽງບາງເຫດການກ່ຽວກັບຜູ້ທີ່ໃຝ່ຝັນຢ່າງຕົກຂຸມເງິນ, ຂຸມຄຳໂດຍບໍ່ຕ້ອງອອກແຮງງານເຊິ່ງເປັນປາກົດການຫຍໍ້ທີ່ວັນໜຶ່ງທີ່ປະກົດໃນສັງຄົມບ້ານເຮົາຄວນທີ່ຈະສຶກສາອົບຮົມຈຳກັດພວກທີ່ຄ້າຂາຍເລກເຖື່ອນອັນເປັນຜົນເສຍຫາຍສ່ວນຕົວຂອງເຂົາເຈົ້າເອງ.

(ຄັດຈາກໜັງສືພິມປະຊາຊົນວັນຕາກົດລາຍສັບປະດາສະບັບ 286 ລົງວັນທີ 19/5/6 ໜ້າ 1) ໂດຍ ສ ພ.

ຈ. ຕົວຢ່າງບົດວິຈານວັນນະຄະດີ

• ວິຈານວັນນະຄະດີຄຳຮ້ອຍກອງ

ຫົວເລື່ອງ ອ່ອນຊອນປ່າໄມ້"

ເດີນດົງດົ້ນປ່າ

| | |
|---|---|
| ຊ້ຳທ່ານີ້ | ເດີນດົວດົ້ນປ່າ |
| ພັນລະນາປ່າໄມ້ | ໄປໜ້າປ່າເຂົາ |
| ມີໝູ່ເລົ່າແກມຫໍ້ | ກໍເຕີຍຕົ້ນຕ່ຳ |
| ຕາວຕານເຕັ້ຍ | ແກມໄມ້ໄຜ່ບົງ |
| ລຳໂຄໄນໂຄ້ງໂນ້ງ | ບົງຈ່ອງແກມຊາງ |
| ມີທັງຂາງແກມຂ້າງ | ກິນຊາງຊ້າງໃຫຍ່ |
| ຮອຍມັນເຊາະຊອກໃຊ້ | ກິນໄມ້ໄຜ່ບົງ. |
| ມີທັງພົງໄພກວ້າງ | ໝູກວາງເມີຍມັ່ງ |
| ເມີຍມັ່ງມ້າ | ໝາພັດໄລ່ຄຸບໝູ |
| ຫນ້ອຍໜຶ່ງຫມີຄຸມຫມາ | ໝູ່ເມີຍຄຸບມ້າ |
| ແລເຫັນໝີໝາເຕັ້ນ | ໝີເມີຍຄຸບມັ່ງ |
| ຫຼຽວເບິ່ງມັນແມບມ້າຍ | ໝາໄໝ້ໄລໝີ |
| ໝີໄລ່ມ້າ | ໝາໄລ່ຄຸບໝູ |
| ພູນັ້ນເປັນພູຮົກ | ມືດມຸງເປັນມຸ້ງ |
| ມຸງເປັນຖ້ານ | ເປັນຖັນແຖວຖີ່ |
| ມີຢູ່ແຖບປາກຖ້ຳ | ແຖວນັ້ນຖີ່ຖັນ |
| ມີທັງຈັນໄດພ້ອມ | ປີນກັນກັບຈັນດອນ |
| ແມງຊົມດອກຊ້ອນ | ບິນແສ້ວແສ່ວລະອອງ |
| ໂຕກະຍອງຍ່ອງຜ້າຍ | ກາຍໝູເສືສາງ |
| ສຽງສະນິມັນຄາງ | ຢູ່ເທິງປາຍໄມ້ |

ກອນເດີນດົງ ຂອງທ່ານ ອາຈານ ມະຫາສິລາ ວິລະວົງ ແຕ່ງໄວ້ນີ້ເປັນກອນທີ່ມີລາຍການແຕ່ງ ແລະ ເນື້ອໃນມ່ວນອອນຊອນດີ,ຜູ້ແຕ່ງອາດໄດ້ພາບໃຫ້ເຫັນຄວາມອຸດົມຮັ່ງມີຄວາມສວຍສົດງົດງາມ ຄວາມໜາແໜ້ນຕຶບຕັນ ແລະ ສິບສິນຂອງປ່າດົງພົງໄພອັນກ້ວາງໃຫຍ່ມະຫາສານຮ່ອງຮອຍພູຜາ ສາຍນ້ຳ ແລະ ປ່ານາໆຊະນິດສີສັນ ແລະ ອາຍອຸ່ນຂອງ.ທຳມະຊາດປະສານສຳຜັດກັບບາດກ້າວເດີນຂອງຜູ້ຊົມດົງປະກົດຍິ່ງຂຶ້ນຍິ່ງມີຊີວິດຊີວາ. ຮູບພາບນັ້ນສ້າງຮ້ອຍປະທັບໃຈເລີດເຊິ່ງດຶງດູດໃຈຜູ້ອ່ານຜູ້ຟັງ ໃຫ້ເກີດມີຄວາມມ່ວນອອນຊອນໄປນຳໝື

ອນດັ່ງໂຕໄດ້ເດີນຊີມດົງ  ຂຶ້ນໂຄກສູງ ລົງໂຄກຄ້ອຍ ງອຍດິນປິ່ນໜ້າຄືນບ້ານເກົ່າ ແລະ ໂອ່ອ່າວເຖິງຍ່ານພູຜາປ່າດົງທີ່ຍາວໄກໃນຕໍ່ໜ້າບ່ອນທີ່ດຸ່ງເດີນໄປອີກ.

ພູມີປະເທດເຂດນໍ້າແດນດິນ ທີ່ອຸດົມສົມບູນໄປດ້ວຍຕົ້ນໄມ້ທີ່ມີຄ່າລາຄາສູງ.ຊັບພະຍາກອນທຳມະຊາດທີ່ບໍ່ອາດພັນລະນານັບ, ສັດປ່ານາໆຊະນິດ,ດົງດອນລະບາຍສີຂຽວຢູ່ຕະຫຼອດປີດອກໄມ້ເບັ່ງບານສົ່ງກິ່ນຫອມຫວນໄປຕາມສາຍລົມເຢັນ.ໝູ່ນົກກາໂບກບິນຮ້ອງສຽງຫວານປະສານກັບສຽງເຕັ້ນເປັນຈັ່ງຫວະດ້ວຍຄວາມຮັກຫອມບ້ານເກີດເມືອງນອນ.ວິກອນເດີນດົງນີ້ໄດ້ກະຕຸກຈິດໃຈໃຫ້ຫວນຄະນຶງປະເທດຊາດທີ່ສຸດແສນຮັກຢ່າງບໍ່ມີວັນຫຼົງລືມ.

ອາຈານ ມາຫາສີລາ ວິລະວົງ ໄດ້ແຕ່ງກອນເດີນດົງນີ້ຂຶ້ນ ແມ່ນແຕ່ງຕາມກອນລລຳປະເພດລຳເຍີ້ນ. ລະບຽບການແຕ່ງກອນຂອງເພິ່ນນີ້, ທ່ານ ພູມີ ວົງວິຈິດໄດ້ຂຽນໄວ້ຢ່າງລະອຽດໃນປຶ້ມໄວຍາກອນລາວ ແລະໄດ້ໃຫ້ຄຳນິຍາມວ່າ   ກອນເຍີ້ນແມ່ນກອນລຳທີ່ຂຽນທີ່ຄົບເປັນຕອນສີ່ວັກ,ໃຊ້ຄຳເອກ,ຄຳໂທ ປະຈຳບ່ອນໃຫ້ເນື່ອງກັນ,ໃຊຊ້ຄຳບຸບພະບົດ ແລະ ຄຳສ້ອຍຕື່ມ,ໃຊ້ສຳຜັດນອກ ແລະ ສຳຜັດໃນຕິດຕໍ່ກັນໄປເລືອຍໆຈົນສຸດກອນ. ກອນລຳເຍີ້ຍເປັນກອນລຳທີ່ມີຕັ້ງແຕ່ 7 ຄຳ ໄປເຖິງ 8,9,10,11,12,13,14 ຫຼື 15 ຄຳ ແລະໃຊ້ຫຼັກການຄຳປະຈຳບ່ອນສຳຜັດດັ່ງດຽວກັບການອ່ານອັກສອນສັງວາດ

ຕົວຢ່າງ  ກອນ  "ເມືອງລາວສວລງາມ ແລະ ຮັ່ງມີ " ຂອງທ່ານ ພູມີວົງວິຈິດໄດ້ຂຽນໄວ້ວ່າ

ປະເທດລາວແມ່ນຕັ້ງ        ຢູ່ແຫຼມໃຫຍ່ອິນດູຈີນ
ມີແຜ່ນດິນດອນຜືນ        ໃຫຍ່ຍາວໄກກ້ວາງ
ກໍ້າຝ່າຍທາງເໜືອນພຸ້ນ        ດິນຈີນກ້ວາງໃຫຍ່
ຕັ້ງຂະໜົງເນັ້ງໄວ້        ຂວາງກັ້ນເຂດແດນ
ທາງຝ່າຍແຄ້ວນ        ແດນດ່ານບົວລະພາ
ມີປ່າດົງພູຜາ        ຊໍ່ຊອນລຽນຊັ້ນດ
ພູຫຼວງເປັນແດນໃຫ້        ຫວຽດນາມນ້ອງພີ່
ສາມັກຄີຢູ່ເລື້ອຍ        ບໍ່ມີມື້ຈືດຈາງ

(ພູມີ ວົງວິຈິດ, ໄວຍາກອນລາວພະແນກສຶກສາສູນກາງ 1967 ໜ້າ 219-222)

ກອນລາເດີນດົງຂອງອາຈານ ມະຫາສີລາ ວິລລະວົງ ອັນມີສີລາແບບກອນເຍີ້ນເຊິ່ງມີການສາຜັດນອກ ສຳຜັດໃນ  ແລະ ການເນື່ອງສຽງສອດຄ່ອງເກາະກ່າຍຖືກຕ້ອງຕາມຫຼັກການກອນ

ສຽງສະນິມັນຮ້ອງ        ໄດ້ຍິນໄກວິ່ວອນ
ຈັກວ່າກຳກ່ອນກີ້        ເວນແທ້ຈັ່ງໃດ
ພາກນັ້ນໄດ້        ລັດລວ່ງດົງຫຼວງ
ໂຕຈິ່ງແລຫຼົງລັບ        ປ່າເລົ້າລຽນລ້ອມ
ດູດັ່ງລອມລຽນໄວ້        ລຽນໄລລຽບໄລ່
ຫຼົງລຳໄມ້        ລຳລຽນປ່າລຽນ

ໜ້ອຍແລ້ວເລື້ອນໆຍ້າຍ ລັບຫຼູ່ຽມເລີຍລິງ
ເຫັນພູເຂົາຫຼິງ ອາດວິງລະວັງໄວ້
ຫຼິງລິງໄປສອງຂ້າງ ຝູງປາລອຍລ່ອງ
ຕາມຄະນອງແລ່ນບ້ອນ ຊອນແກ້ງແກ່ວງຫາງ
ຟັງສຽງດັງຕຶ້ງ ນໍ້າຝັ່ງເຟືອນຕິງ
ຫຼິງດູເຕັນງອຍມອງ ຈອບປາຄອຍເຕັ້ນ
ເຕັນມັນມາຄອຍລີ້ ກິນປາຕາມທ່າ
ເຕັ້ນນັ້ນມາຈອບລີ້ ຕາມຊູ່ມພູ່ມໜາມ
ໜ້ອຍນຶ່ງສຽງດັງຕ້າມ ຕາມໝູ່ປາຊິວ
ນົກເຕັນລິວເລີຍໂຕນ ຕອດຕາມດັງຕ້າມ
ພໍເຖິງຍາມແລງຄ້ອຍ ນົກເຕັນວອຍບິນເອີ່ນ
ອິດສາເດີນຕໍ່ໜ້າຕໍ່ ຕາເວີ້ງທ່ວາງໝອງ
ຟັງຍິນເປັດປ່ອງຮ້ອງ ເປົ່າປ່າຫາກິນ
ເບິ່ງມັນບິນຫາຊູມ ເອີ່ນລິງວັງນໍ້າ
ຕາມລະນາມໜອງນີ້ ມີຄະນາຫຼາຍຢ່າງ
ຕ່າງຝ່າຍລອຍລ່ອງຫຼິ້ນ ຕາມໄຄ້ໄລ່ແມງ
ຢູ່ຕາມວັງຫາດແກ້ງ ລຸຍລ່ອງມອງປາ

ຕ່າງໂຕລິງຫາກິນ ອີ່ມໝຽງສຽງຮ້ອງ
ດູມັນນອງນັນແໜັນ ແສນອັນອະນັນເນກ
ສັງເກດນັບບໍ່ໄດ້ ຕາມໄລ້ໄລ່ຫຍຸມ
ມີທັງຊຸມແຊງລ້ານ ກະຍາງຍໍຄໍກ່ານ
ນົກກະຊຸມຊ່າງລ້ານ ຫານຫາວຢ່າງບິນ
ບໍ່ໄດ້ນັບໃຫ້ສິ້ນ ທຸກທີ່ວຕົວສັດ
ມີໄປສາລະພັດ ອະເນກນອງສຽງຮ້ອງ
ພໍໂຕມັນມອງດູແລ້ວ ເລີຍກະຍ້າຍຢ່າງໆລາງ...

( ໂດຍມະຫາສີລາ ວິລະວົງ 1905-1987)

ແລະ ວາດຊີງຂອງເຂົາເຈົ້າ.ພວກເຮົາຄວວນພັນລະນາທາງດ້ານແນວຄິດຄວາມສານຶກຈິດໃຈ ແລະ ອຸດົມຄະຕິຂອງຕົວລະຄອນຕື່ມອີກ,ເຮັດໃຫ້ຕວົລະຄອນມີຊີວິດຊີວາກວ່າເກົ່າ.

ເວົ້າເຖິງ ວັນນະຄະດີປະຕິວັດພວກເຮົາ ສ່ວນຫຼາຍແມ່ນແຕ່ງແບບເລົ່າເລື່ອງຈິງຄົນແທ້ ຂະາດບົດເລື່ອງ , ສັ້ນນະວະນິຍາຍ ທີ່ມີລັກສະນະປັ້ນແຕ່ງ, ດັ່ງນັ້ນ, ຈິ່ງເຮັດໃຫ້ບົດເລື່ອງບໍ່ມີຊີວິດຊີວາປານໃດ.

ຕໍ່ກັບເລື່ອງກໍ່ເຊັ່ນດຽວ, ຍັງບໍ່ທັນໄດ້ສ່ອງແສງທຸກດ້ານ,ຍັງບໍ່ທັນໄດ້ເປີດກ້ວາງທົ່ວເລື່ອງ,ສ່ວນຫຼວງຫຼາຍພວກເຮົາມັກແຕ່ງເລື່ອງສູ້ຣົບ,ເລື່ອງຈັບນັກສອບແນມ, ພວກປຸ້ນຄວາມຈິງໃນສະພາບນັ້ນ,ຫົວເລື່ອງສູ້ຣົບເປັນຈຸດສຳຄັນທີ່ພວກເຮົາຈະເອົາໃຈໃສ່, ແຕ່ໃນດ້ານອື່ນເຊັ່ນດ້ານກະສິກຳ, ເສດຖະກິດ, ສາທາລະນະສຸກ,ດ້ານການສຶກສາການກໍ່ສ້າງສັງຄົມໃໝ່ຢູ່ໃນເຂດປົດປ່ອຍ ແລະ ດ້ານອື່ນໆ... ທີ່ຢູ່ແນວຫຼັງຮັບໃຊ້ໃຫ້ແກ່ການສູ້ຣົບຢູ່ແນວໜ້າກໍ່ເປັນບັດຫາສໍ່ຄັນ ແລະ ນັກແຕ່ງທັນຫຼາຍຕ້ອງໄດ້ເອົາໃຈໃສ່ຕື່ມອີກ.ສະເພາະໜ້າຂອງວັນນະຄະດີປະປະຕິວັດແມ່ນໄດ້ສ່ອງແສງໃຫ້ເຫັນວຽກງານໃໝ່ທີ່ປະກົດຂຶ້ນໃນສັງຄົມໃໝ່.

ດ້ານສີລະການແຕ່ງ,ບາງເທື່ອພວກເຮົາແຕ່ງແລ້ວເຫັນຍັງຕໍ່າ,ເປັນຕົ້ນແມ່ນການສ້າງໂຄງຮ່າງຂອງເລື່ອງຍັງບໍ່ທັນໄດ້ດີຕົວລະຄອນຍັງບໍ່ມີຊີວິດຊີວາ,ການພັນລະນາບາງຄັ້ງຍັງບໍ່ທັນເໝາະກັບຫົວເລື່ອງການໃຊ້ສັບໃນບົດເລື່ອງດູດດື່ມຈິດໃຈຂອງຜູ້ອ່ານ.

ເຫດຜົນທີ່ພາໃຫ້ມີຈຸດອ່ອນເຫຼົ່ານັ້ນກໍ່ຍ້ອນວ່າ ນັກຂຽນຂອງພວກເຮົາສ່ວນຫຼາຍຍັງບໍ່ທັນຊຊີ້ນເຄີຍໃນການແຕ່ງ,ບາງເທື່ອພວກເຮົາແຕ່ງແລ້ວ ແຕ່ຍັງບໍ່ທັນເອົາໃຈໃໃສ່ດັດແປງໃຫ້ມີສີລະປະ ຫຼື ບາງເທື່ອພວກເຮົາຍັງແລ່ນນຳປະລິມານ ບໍ່ທັນໄດ້ເອົາໃຈໃສ່ຄຸນນະພາບຂອງເລື່ອງ. ແຕ່ເຖິງຢ່າງໃດກໍ່ຕາມ,ຈຸດອ່ອນທີ່ພວກເຮົາເວົ້າມາຂ້າງເທິງນັ້ນເປັນຈຸດອ່ອນສຳຮອງເທົ່ານັ້ນ ຕໍ່ກັບວັນນະຄະດີທີ່ສ້າງຂຶ້ນໃໝ່,ພວກເຮົາເຊື່ອໝັ້ນວ່າ ໃນຕໍ່ນ້ານັກຂຽນຂອງພວກເຮົາຈະມີຄວາມສາມາດດັດແປງໄດ້ຈຸດອ່ອນດັ່ງກ່າວ ແລະ ຈະນຳມາສະເໜີຕໍ່ຜູ້ອ່ານທັງຫຼາຍໃຫ້ມີເນື້ອໃນ ແລະ ສີລະປະດີຂື້ນ.

ຈາກແນວທາງປະຕິວັດຊາດປະຊາທິປະໄຕ ແລະ ແນວທາງສິລະປະວັນນະຄະດີອັນຖືກຕ້ອງຂອງສູນກາງ. ກົງກັນຂ້າມມັນໄດ້ຢັ້ງຢືນໃຫ້ເຫັນວ່າແນວທາງການເມືອງຂອງສູນກາງແມ່ນຖືກຕ້ອງທີ່ສຸດ ແລະ ສອດຄ່ອງກັບຕົວຈິງການຕໍ່ສູ້ຂອງປະຊາຊົນລາວ.ວັນນະຄະດີປະຕິວັດເຖິງວ່າຫາກຳກຳເນີດໃໝ່ທີ່ສຸດ,ແຕ່ໄດ້ຮັບຜົນສຳອັນດີງາມ,ສຳຄັນກ່ວາໝູ່ແມ່ນມັນໄດ້ຢັ້ງຢືນວ່າ ຢູ່ປະເທດເຮົາມີວັນນະຄະດີແບບໃໝ່, ວັນນະດີປະຕິວັດທີ່ມີລັກສະນະຊາດ, ລັກສະນະສູ້ຣົບ, ລັກສະນະປະຊາຊົນ ແລະ ລັກສະນະວິທະຍາສາດ ຄືດັ່ງວັນນະຄະດີປະຕິວັດຂອງບັນດາປະເທດທີ່ດຳເນີນການຕໍ່ສູ້ປົດປ່ອຍຊາດ.

ວັນນະຄະດີປະຕິວັດຂອງຊາດເຮົາເວລລາໃດກໍ່ສ່ອງແສງຄວາມຈິງການຕໍ່ສູ້ ແລະ ການເພີ່ມພູນຜະລິດຜົນຂອງກອງທັບ ແລະ ປະຊາຊົນລາວເຮົາທົ່ວປະເທດແນໃສເພື່ອສົ່ງເສີມນໍ້າໃຈກຽດຕິຄຸນຄຸາແຫ່ງຊາດ.ເພາະສະນັ້ນ,ທາງດ້ານເນື້ອໃນຖ້າເບິ່ງລວມພວກເຮົາເຫັນວ່າ ວັນນະຄະດີປະຕິວັດໄດ້ຢັ້ງຢືນ ແລະ ທັງປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ກູ້ຊາດຂອງປະຊາຊົນທັງຊາດ,ປະກອບເຂົ້າໃນການສ້າງລະບອບໃໝ່,ສັງຄົມໃໝ່,ຄົນແບບໃໝ່ຢູ່ເຂດປົດປ່ອຍໃນເມືອກ່ອນກໍ່ຄືປະຈຸບັນ.

ທາງດ້ານສິລະປະການແຕ່ງ,ວັນນະຄະດີປະຕິວັດກໍ່ເຫັນວ່າໄດ້ຮັບຜົນດີສົມຄວນ ໂດຍໄດ້ຮັບມູນເຊື້ອວັນນະຄະດີປະຊາສາມັນ,ວັນນະຄະດີສະໄໝຕໍ່ຕ້ານພວກລ່າເມືອງຂຶ້ນແບບເກົ່າ,ວັນນະຄະດີປະຕິວັດຂອງພວກເຮົາໃນປະຈຸບັນ ໄດ້ມີຄົນແບບໃໝ່ປະກົດຂຶ້ນຄົນແບບໃໝ່ນີ້ບໍ່ແມ່ນຄືພວກຊາວໜຸ່ມທີ່ອົກຫັກ,ເສຍທ້ອງໃນວັນນະຄະດີຮູຣານ ຫຼື ວ່າຄືຊາວພວກໜຶ່ງທີ່ຂີ້ເຫຼົ້າ,ເມົາຢາ, ຫຼື ຫຼິ້ນໄພ້ດຳລົງຊີວິດແບບຕໍ່າຕ້ອຍຢູ່ໃນສັງຄົມ.ໃນເວລານັ້ນໄດ້ເກີດມີບັນດາບຸກຄົນແບບໃໝ່ຄື ສີທອງ, ທ່ານ ທ້າວຕູ້, ແມ່ເຖົ້າຊອງ,ນາງມາ, ແລະ ຜູ້ອື່ນໆ; ແລະຍັງມີນັກຣົບຢູ່ກອງພັນທີສອງວິລະຊົນ,ບັນດານັກຣົບທີ່ ກຳລັງສູ້ຣົບຢູ່ແນວໜ້າ ຫຼື ໜ່ວຍກອງ

ຫຼອນແມ່ຍິງທີ່ຍິງຍືນຢູ່ແຂວງຊຽງຂວາງ ແລະ ອື່ນໆ. ເຂົາເຈົ້າລ້ວນແຕ່ໄດ່ເປັນຄົນດຸໝັ່ນ,ພາກພຽນ,ມີຈິດໃຈເບີດບານມ່ວນຊື່ນ,ສັດຊື່ບໍລິສຸດ,ອາດຫານສູ້ຮົບຕ້ານສັດຕູທີ່ເຂົ້າມາຮຸກຮານປະເທດຊາດ.ພວກເຂົາແມ່ນລູກຮັກຫຼານແພງຂອງປະຊາຊົນຢ່າງແທ້ຈິງ.ແຕ່ວ່າພວດເຮົາເອົາເລື່ອງມາໄຈ້ແຍກ, ຈໍາແນກພວກເຮົາຈະເຫັນມີດ້ານແຂງ ແລະ ດ້ານອ່ອນຕ່າງກັນ.ດ້ານອ່ອນກ່າວໝູ່ນັ້ນແມ່ນການສ້າງຕົວລະຄອນບໍ່ເດັ່ນ ຕົວລະຄອນໃນເລື່ອງທີ່ເວົ້າຜ່ານມາ.ສ່ວນຫຼາຍຍັງເປັນຕົວລະຄອນເຊິ່ງຍັງບໍ່ທັນມີຊີວິດຊີວາ,ຍັງບໍ່ທັນເວົ້າໄດ້ຈຸດພິເສດຂອງແຕ່ລະຕົວລະຄອນ ເຊັ່ນ: ຄວາມຮັກ,ຄວາມກຽດຊັງ.

## ບົດວິຈານແບບຢ່າງ 1

### ຫົວບົດ: ວິຈານຄຳສຸພາສິດທີ່ວ່າ: " ຕົກຫມູ່ແຮ້ງເປັນແຮ້ງ ຕົກຫມູ່ກາເປັນກາ "

ການດຳລົງຊີວິດຂອງຄົນເຮົາແນ່ນອນຕ້ອງຢູ່ໃນສະພາບແວດລ້ອມໃດຫນຶ່ງ ບໍ່ມີຜູ້ໃດຈະຢູ່ນອກສະພາບແວດ ລ້ອມ ຫຼື ນອກສັງຄົມໄດ້ ຕ້ອງມີການພົວພັນເຊິ່ງກັນ ແລະ ກັນສະເຫມີ. ສະພາບແວດລ້ອມສັງຄົມ ມີສ່ວນສົ່ງຜົນ ສະທ້ອນຢ່າງເລິກເຊິ່ງເຖິງຄົນເຮົາຢ່າງແນ່ນອນ ດັ່ງນັ້ນ, ມັນຈຶ່ງຖືກຕ້ອງ ສອດຄ່ອງກັບຄຳສຸພາສິດທີ່ ກ່າວໄວ້ວ່າ: " ຕົກ ຫມູ່ແຮ້ງເປັນແຮ້ງ ຕົກຫມູ່ກາເປັນກາ "

ເມື່ອເຮົາດຳລົງຊີວິດຢູ່ໃນສະພາບແວດລ້ອມສັງຄົມແນວໃດ, ກຸ່ມຄົນແນວໃດກໍຍ່ອມຈະໄດ້ຮັບຜົນສະທ້ອນ ຈາກສະພາບແວດລ້ອມອັນນັ້ນ. ສະພາບແວດລ້ອມສັງຄົມເປັນປັດໄຈຢ່າງຫນຶ່ງທີ່ສະທ້ອນເຖິງແນວຄິດ, ຈິດໃຈ, ການ ປະພຶດ, ການກະທຳຕ່າງໆຂອງຄົນເຮົາທີ່ດຳລົງຊີວິດຢູ່ໃນສັງຄົມນັ້ນໆ. ສະພາບແວດລ້ອມສັງຄົມມີ ທັງອັນດີ ແລະ ອັນ ບໍ່ດີ, ຖ້າວ່າຄົນເຮົາຫາກມີຫຼັກຫມັ້ນດີກໍ່ຈະໄດ້ຮັບແຕ່ສິ່ງທີ່ດີ ແລະ ໃນທາງກົງກັນຂ້າມຖ້າຄົນ ເຮົາຫາກຄອນແຄນບໍ່ເປັນ ເຈົ້າການແກ່ຕົນ ກໍຈະໄດ້ຮັບສິ່ງທີ່ບໍ່ດີເຊັ່ນກັນດັ່ງສຸພາສິດລາວບົດຫນຶ່ງເຄີຍສັ່ງສອນໄວ້ ວ່າ: **" ພົບຄົນດີມີສີແກ່ຕົວ ພົບ ຄົນຊົ່ວພາຕົວຫມິ່ນຫມອງ "** ນັ້ນກໍ່ສະແດງໃຫ້ເຫັນຄວາມສຳຄັນຂອງສະພາບແວດລ້ອມສັງຄົມທີ່ມີຕໍ່ຄົນເຮົາ. ຖ້າພົວພັນ ກັບຄົນດີກໍຈະພາໃຫ້ເຮົາໄປໃນທາງທີ່ດີ, ຖ້າພົວພັນກັບຄົນຊົ່ວກໍ່ຈະພາເຮົາໄປໃນທາງທີ່ບໍ່ດີ ພາໃຫ້ເກີດຄວາມເສື່ອມ ເສຍເຊັ່ນ: ການພົວພັນລະຫວ່າງຫມູ່ເພື່ອນດ້ວຍກັນຖ້າເຮົາພົວພັນກັບ ເພື່ອນທີ່ດີເຊັ່ນ ເພື່ອນຂອງເຮົາເປັນຜູ້ມັກຮ່ຳຮຽນ, ພາເຮົາຄົ້ນຄ້ວາບົດຮຽນ, ຜົນທີ່ຕາມມາເຮົາກໍຈະກາຍເປັນຜູ້ມັກຮຽນ ແລະ ຮຽນໄດ້ດີ ໃນທາງກົງກັນຂ້າມ ຖ້າເຮົາຫາກ ມີຫມູ່ເປັນຄົນຂີ້ລັກມັນກໍ່ຈະຍຸຍົງ ຫຼື ຊັກຊວນ ແກ່ດຶງເຮົາໄປລັກຄືກັນກັບເຂົາ ແລ້ວຜົນສຸດທ້າຍກໍຈະຕົກເຂົ້າສູ່ເສັ້ນທາງ ທີ່ຜິດພາດ, ດັ່ງນັ້ນ, ເຮົາຈຶ່ງເຫັນໄດ້ວ່າສະພາບແວດລ້ອມມີສ່ວນທີ່ຈະສົ່ງຜົນສະທ້ອນຕໍ່ການກະທຳ ແລະ ແນວຄິດຂອງ ຄົນເຮົາຢ່າງແນ່ນອນ.

ເວົ້າແນວນີ້ບໍ່ຫມາຍຄວາມວ່າມັນຈະສົ່ງຜົນສະທ້ອນເຖິງຄົນເຮົາໄດ້ທຸກຢ່າງ. ຄຳສຸພາສິດບົດນີ້ມີສ່ວນຖືກຕ້ອງ ແລະ ຜິດພາດ, ສ່ວນທີ່ຜິດພາດ ຢູ່ບ່ອນວ່າ ຄົນເຮົາຈະຕົກຢູ່ໃນສະພາບແວດລ້ອມແນວໃດກໍຕາມ ສາມາດດັດແປງຕົນ ເອງໄດ້, ບໍ່ແມ່ນວ່າຄົນເຮົາຢູ່ໃນສະພາບແວດລ້ອມສັງຄົມທີ່ດີແລ້ວກໍຈະດີໄປຫມົດ.ຖ້າເຮົາຫາກບໍ່ຮູ້ຈັກຮຽນ, ບໍ່ຮູ້ຈັກເຝິກຝົນຫຼໍ່ຫຼອມຕົນເອງກໍບໍ່ສາມາດຈະດີໄດ້. ກົງກັນຂ້າມຫາກຢູ່ໃນສະພາບແວດລ້ອມທີ່ບໍ່ອຳນວຍກໍ່ບໍ່ຫມາຍຄວາມວ່າ ຄົນເຮົາຈະເປັນຄົນຊົ່ວໄປຫມົດ, ເມື່ອເຮົາຫາກຮູ້ຈັກຄິດໄລ່ໄຕ່ຕອງພິຈາລະນາດັດແປງຕົນເອງ ຮູ້ດີຮູ້ຊົ່ວ, ຮູ້ຖືກຮູ້ຜິດ ກໍ່ ສາມາດເຮັດໃຫ້ຕົນເອງກາຍເປັນຄົນດີໄດ້ຄືກັນ. ມີຫຼາຍຄອບຄົວ, ຫຼາຍບຸກຄົນ ພໍ່ແມ່ເປັນພຽງປະຊາຊົນທຳມະດາ, ບໍ່ມີ ລະດັບຄວາມຮູ້ ລູກເກີດມາກໍ່ບໍ່ແມ່ນວ່າຈະຄືກັບພໍ່ແມ່ຫມົດທຸກຢ່າງ ຖ້າຫາກ ຊອກສະແຫວງຫາຮຽນຮູ້ກໍສາມາດເປັນຜູ້ ທີ່ມີຄວາມກ້າວຫນ້າ ມີຄວາມຮູ້ຄວາມສາມາດສູງໄດ້ ໃນທາງກົງກັນຂ້າມ ເຖິງວ່າພໍ່ແມ່ ຫຼື ຄົນໃນຄອບຄົວ ຈະມີຄວາມຮູ້ ສູງພຽງໃດແຕ່ລູກພັດບໍ່ເອົາໃຈໃສ່ຮ່ຳຮຽນ, ບໍ່ສົນໃຈຊອກຫາວິຊາ ຄວາມຮູ້ໃສ່ຕົວ ລູກກໍບໍ່ສາມາດເປັນດັ່ງພໍ່ແມ່ໄດ້. ນີ້ ສະແດງໃຫ້ເຫັນວ່າສະພາບແວດລ້ອມບໍ່ສາມາດສົ່ງຜົນສະທ້ອນເຖິງຄົນເຮົາຫມົດທຸກຢ່າງໄດ້.ຄົນເຮົາຢູ່ໃນສັງຄົມໃດກໍ່ຕາມເມື່ອຢາກເປັນຄົນດີ, ມີຄວາມກ້າວຫນ້າ ກໍ່ອາດເລືອກເອົາສະພາບແວດລ້ອມທີ່ດີ, ຫມາຍຄວາມວ່າເລືອກພົວພັນແຕ່ສິ່ງທີ່ດີ. ເມື່ອຕົກຢູ່ໃນສະພາບແວດລ້ອມທີ່ບໍ່ດີແລ້ວ ກໍບໍ່ຄວນປະປ່ອຍໃຫ້ອັນບໍ່ດີ ແກ່ ດຶງເຮົາໄປ. ໃນການຮ່ຳຮຽນ ແລະ ການພົວພັນຫມູ່ຄູ່ກໍເຊັ່ນດຽວກັນ ຄວນເລືອກເອົາການພົວພັນທີ່ເຫັນວ່າ ຖືກຕ້ອງ ແລະ

ຈະນຳຕົນເອງໄປໃນທາງທີ່ດີ. ຫຼີກເວັ້ນການພົວພັນກັບກຸ່ມຄົນທີ່ຈະພາຕົນໄປໃນທາງເສຍຫາຍ, ເສຍການຮຽນ. ໃນ ການພົວພັນຫມູ່ຄູ່ກໍຄວນເບິ່ງອີກວ່າຜູ້ໃດດີແທ້, ຜູ້ໃດສົມຄວນຈະເອົາເປັນເພື່ອນ ແລະ ບໍ່ສົມຄວນເອົາເປັນເພື່ອນ. ສິ່ງ ດັ່ງກ່າວນີ້ ມັນເປັນສິ່ງທີ່ທຸກຄົນຕ້ອງໄດ້ພິຈາລະນາ, ຕຶກຕອງຈຶ່ງຈະບໍ່ໃຫ້ຕົນເສຍທາດຂາດຄຸນ ຫຼື ຮັບເອົາຜົນສະທ້ອນອັນບໍ່ດີຈາກສະພາບແວດລ້ອມນັ້ນ.

ຜ່ານຈາກການໄຈ້ແຍກມານັ້ນ ເຮົາສັງເກດເຫັນວ່າ ຄຳສຸພາສິດນີ້ມີທັງສ່ວນຖືກ ແລະ ສ່ວນຜິດ, ເຖິງຢ່າງໃດກໍ ຕາມ ມັນກໍ່ເປັນປະໂຫຍດໃນການຕັກເຕືອນສະຕິພວກເຮົາ ໃຫ້ເອົາໃຈໃສ່ເຖິງສະພາບແວດລ້ອມສັງຄົມທີ່ຢູ່ອ້ອມຂ້າງ. ຄວນຍອມຮັບເອົາສະພາບແວດລ້ອມທີ່ດີ ແລະ ພະຍາຍາມປະຕິເສດສະພາບແວດລ້ອມທີ່ບໍ່ດີ, ພ້ອມກັນນັ້ນ ກໍ ດັດແປງຕົນເອງອີກ. ສຳລັບນັກຮຽນພວກເຮົາສຸພາສິດນີ້ໄດ້ບອກ, ເປັນຄະຕິສອນໃຈໃຫ້ຮູ້ຈັກພົວພັນກັບຫມູ່ຄູ່ໃນສັງຄົມ ແລະ ຮູ້ຈັກຮ່ຳຮຽນເອົາແຕ່ສິ່ງທີ່ດີເທົ່ານັ້ນ, ເຮົາຕ້ອງເປັນເຈົ້າການດັດແປງປັບປຸງຕົນເອງໃຫ້ເຂົ້າກັບສະພາບແວດລ້ອມ ສັງຄົມທີ່ເຫມາະສົມ ແລະ ຖືກຕ້ອງ. ດັ່ງນັ້ນ, ມັນຈຶ່ງສອດຄ່ອງກັບສຸພາສິດທີ່ວ່າ: **" ຕົກຫມູ່ແຮ້ງເປັນແຮ້ງ ຕົກຫມູ່ກາເປັນກາ "**.

## ບົດວິຈານແບບຢ່າງ 2

### ຫົວບົດ: ຈົ່ງວິຈານຄຳເວົ້າທີ່ວ່າ: " ຄົນເຮົາຈະຮັ່ງມີ ຫຼື ທຸກຍາກແມ່ນຍ້ອນໂຊກຊະຕາ "

ຄົນຈະດີ ຫຼື ຊົ່ວ, ຮັ່ງມີ ຫຼື ທຸກຍາກນັ້ນຍັງມີຫຼາຍຄົນເຊື້ອກັນວ່າແມ່ນບຸນວາສະຫນາ ບໍ່ມີໃຜຈະຫຼີກຫນີສິ່ງ ນີ້ໄດ້ ເພາະອິນພົມຍົມມະໂລກໄດ້ລິຂິດເສັ້ນຊີວິດໄວ້ແລ້ວ ດັ່ງຄຳເວົ້າທີ່ວ່າ: " ຄົນເຮົາຈະຮັ່ງມີ ຫຼື ທຸກຍາກແມ່ນຍ້ອນໂຊກຊະຕາ "

ວາດສະຫນາ ຫຼື ໂຊກຊະຕາແມ່ນຄວາມເຊື້ອອັນຫນຶ່ງຂອງຄົນເຮົາມາແຕ່ຖືກດຳບັນ ມັນໄດ້ຝັງເລິກຢູ່ໃນແນວ ຄວາມຄິດຂອງຄົນເຮົາຈົນສືບທອດມາຮອດປັດຈຸບັນນີ້, ກໍ່ຍັງມີຫຼາຍຄົນເຊື້ອກັນວ່າເປັນຄວາມຈິ່ງ ຈົນມີຄຳເວົ້າທີ່ເຄີຍ ກ່າວຂານກັນວ່າ: ແຂ່ງເຮືອແຂ່ງພາຍໄດ້ ແຕ່ແຂ່ງບຸນວາດສະຫນາແຂ່ງບໍ່ໄດ້ ຫຼື ແຂ່ງຫຍັງແຂ່ງໄດ້ ແຕ່ບໍ່ມີໃຜແຂ່ງບຸນວາດ ສະຫນາໄດ້. ນີ້ກໍສະແດງວ່າຄົນເຮົາຈະເປັນແນວໃດນັ້ນ ແມ່ນຍ້ອນໂຊກຊະຕາວາດສະຫນາເປັນສິ່ງຕັດສິນ. ຄຳເວົ້າ ດັ່ງກ່າວເປັນຄຳເວົ້າທີ່ຜິດພາດທີ່ສຸດ, ຄົນເຮົາຈະຮັ່ງມີ ຫຼື ທຸກຈົນມັນບໍ່ຂຶ້ນກັບໂຊກຊະຕາ ແລະ ວາດສະຫນາແຕ່ຢ່າງໃດ ເລີຍ, ມັນຫາກຂຶ້ນກັບການກະທຳຂອງຄົນເຮົາຕ່າງຫາກ ຕົວຢ່າງເຮົາຢາກກິນເຂົ້າຈະຄອງຖ້າແຕ່ໂຊກຊະຕາ ແລະ ວາດ ສະຫນໍາ ໂດຍບໍ່ຊອກບໍ່ຫາ ຫຼື ບໍ່ເຮັດໄຮ່ເຮັດນາປູກເຂົ້າເຮົາຈະມີເຂົ້າກິນໄດ້ແນວໃດ? ສະນັ້ນ, ຄວາມຮັ່ງ ຫຼື ທຸກຍາກບໍ່ ແມ່ນວາດສະຫນາພາເປັນ. ຖ້າຢາກຮັ່ງມີ,ຢາກມີຢູ່ມີກິນອິ່ມຫນຳສຳລານ ແຕ່ບໍ່ເຮັດຫຍັງທຳຫຍັງມີແຕ່ຄອງຄອຍວາດສະ ຫມາ ຊາຕາມາຊ່ວຍຍູ້ຫນູນ ໂດຍບໍ່ເຮັດບໍ່ສ້າງຫຍັງ ຈະນັ່ງພາວະນາຖ້າອີກຊາດຫນ້າ ຫຼື ເປັນປີ, ເປັນເດືອນກໍບໍ່ສາມາດພົບພໍ ກັບສິ່ງທີ່ຢາກໄດ້ ຢາກມີ ຫຼື ມັນມັນບໍ່ສາມາດນິລະມິດຂຶ້ນມາໄດ້ດອກ. ຄົນເຮົາແຕ່ລະຄົນເກີດມາບໍ່ມີຜູ້ໃດດອກທີ່ຈະຖື ຖົງເງິນຖົງຄຳອອກມາຈາກທ້ອງແມ່ພ້ອມໃຜກໍລ້ວນແຕ່ເກີດມາດ້ວຍສອງມືເປົ່າກັນທັງນັ້ນ. ສິ່ງສຳຄັນຖ້າຢາກຮັ່ງຢາກມີ ຂຶ້ນມາໄດ້ ກໍຕ້ອງດີ້ນຮົນຊອກຫາດ້ວຍນໍ້າເຫື່ອ ແລະ ແຮງງານຂອງຕົນເອງ,ຄັ່ວດເຂ່ຍດ້ວຍຄວາມອົດທົນ ບາກບັ່ນ. ຫຼັງ ສູ້ຟ້າຫນ້າສູ້ດິນດ້ວຍສອງຝາມື,ຄົ້ນຄິດປະດິດສ້າງ ແລະ ຄວາມພາກພຽນຂອງເຮົາເທົ່ານັ້ນ ທີ່ຈະຊ່ວຍເຮົາໄດ້,ຈະໄປອາໄສ ໂຊກຊະຕານັ້ນ ແມ່ນເປັນໄປບໍ່ໄດ້ ຫຼື ເວົ້າອີກຢ່າງຫນຶ່ງໂຊກຊະຕາຂອງເຮົາຢູ່ທີ່ການກະທຳຂອງຄົນເຮົານັ້ນເອງ. ເມື່ອມີຄວາມເຊື່ອຄິດວ່າໂຊກຊະຕາຈະຊ່ວຍເຮົານັ້ນຈຶ່ງເປັນຄວາມຄິດທີ່ຜິດພາດທີ່ສຸດມີສຸພາສິດບົດຫນຶ່ງ ສັ່ງສອນໄວ້ວ່າ: ຄອຍແຕ່ບຸນມາຄໍ້າບໍ່ທຳເອົາມັນບໍ່ແມ່ນ ຄອຍແຕ່ບຸນສິ່ງໃຫ້ມັນຊິໄດ້ຮ່ອມໃດ. ຈຶ່ງນັບວ່າສຸພາສິດບົດນີ້ ຖືກຕ້ອງ ແລະ ໃຫ້ຄຸນຄ່າສອນໃຈແກ່ຄົນເຮົາຢ່າງຫຼວງຫຼາຍ. ຄົນທີ່ຖືໂຊກຊະຕາໄດ້ແຕ່ນັ່ງພາວະນາໃຫ້ໂຊກຊະຕາຕາມມາຊ່ວຍໂດຍບໍ່ໄດ້ເຮັດຫຍັງທຳຫຍັງນັ້ນ ປຽບເຫມືອນຄົນໂສສຸດຫມົດຫວັງ, ຊອກຫາເສັ້ນທາງອອກໃຫ້ແກ່ຕົນເອງບໍ່ໄດ້; ຊໍ້າບໍ່ຫນ້າ ເມື່ອຄິດວ່າຕົນເອງລຳບາກ ຫຼື ຕົກທຸກຈະເຮັດຫຍັງຈະກະທຳອັນໃດກໍຖິ້ມໂທດໃສ່ໂຊກຊະຕາບໍ່ຊ່ວຍ. ຖ້າຄິດ ແນວນີ້ບໍ່ມີໂອກາດທີ່ຈະກ້າວຫນ້າໄດ້ເດັດຂາດ, ບໍ່ມີໃຜດອກທີ່ຈະຮັ່ງມີ, ມີຄວາມສຸກໂດຍບໍ່ຜ່ານຜ່າຄວາມຫຍຸ້ງຍາກ ລຳບາກ ແລະ ຜ່ານວຽກງານຕົວຈິ່ງຢ່າງມີຄວາມມານະອົດທົນ.ການນອນເອົາມືກາຍຫນ້າຜາກຄິດເອົານັ້ນຄິດເອົານີ້ ໂດຍ ບໍ່ລົງມືເຮັດຕົວຈິງທີ່ຫວັງຮັ່ງມີດີໄດ້ແມ່ນຄວາມຄິດທີຜິດພາດທີ່ສຸດ, ຈຶ່ງເວົ້າໄດ້ວ່າ ຄົນເຮົາຈະຮັ່ງມີ ຫຼື ທຸກຍາກນັ້ນ ບໍ່ ແມ່ນຍ້ອຍໂຊກຊະຕາ, ຄວາມຈິງ ແລະ ຖືກຕ້ອງທີ່ສຸດ ແມ່ນຂຶ້ນກັບການກະທຳຂອງຄົນເຮົາເປັນຜູ້ຕັດສິນ. ຢ່າຄິດເອົາ ແຕ່ຄວາມເຊື່ອດັ່ງກ່າວນັ້ນເປັນສິ່ງຄອບງຳວິຖີຊີວິດຂອງຕົນ. ສິ່ງທີ່ສຳຄັນ ແລະ ຖືກຕ້ອງທີ່ສຸດຢູ່ທີ່ຕົວເຮົາເອງ. ໂຊກຊະ ຕານັ້ນກໍຢູ່ທີ່ຕົວເຮົາກະທຳເອົາ, ສ້າງເອົາ, ສະຫວັນຈະຊ່ວຍຄົນທີ່ຊ່ວຍຕົນເອງສະເຫມີ, ແຕ່ຈະບໍ່ຊ່ວຍຄົນທີ່ບໍ່ຍ້ອມສູ້, ບໍ່ ອອກແຮງງານ ແລະ ຄົນທີ່ບໍ່ຄິດຄົ້ນຫຍັງ.

ຜ່ານຈາກຈໍການໄຈແຍກມານັ້ນຈິ່ງສາມາດສະຫຼຸບໄດ້ວ່າ: ທຸກສິ່ງທຸກຢ່າງເກີດຂຶ້ນໃນຊີວິດແມ່ນການກະທໍາຂອງຄົນເຮົາ, ຖ້າສະແກວງຫາ ໃຝ່ຝັນໃນສິ່ງທີ່ດີມີຄວາມອິດທົນມັນກໍ່ຈະເກີດຂຶ້ນມາຢ່າງບໍ່ຕ້ອງສົງໄສ, ແຕ່ຖ້າມີແຕ່ຄອງຄອຍ ບໍ່ເຮັດຫຍັງທໍາຫຍັງມີແຕ່ນັ່ງກອດເຂົ່າເປົ່າເລັບມືຢູ່ຊື່ໆມັນກໍຈະບໍ່ມີສິ່ງໃດເກີດຂຶ້ນມາຢ່າງແນ່ນອນ.ສະນັ້ນ,ຄໍາເວົ້າທີ່ວ່າ: ຄົນເຮົາຈະຮັ່ງມີ ຫຼື ທຸກຍາກ ແມ່ນຍ້ອນບຸນວາດສະຫນາ ໂຊກຊະຕາ ແມ່ນຜິດພາດທີ່ທີ່ສຸດ ແລະ ບໍ່ມີວິທະຍາສາດ.

# ບົດທີ 7

# ບົດແຕ່ງປະສົມ

## 1. ຄວາມໝາຍ ແລະ ຄວາມສຳຄັນຂອງບົດແຕ່ງປະສົມ

1.1 ຄວາມໝາຍຂອງບົດແຕ່ງປະສົມ

ບົດແຕ່ງປະສົມ ແມ່ນບົດແຕ່ງປະເພາໜຶ່ງ ທີ່ໃຊ້ທິດສະດີ,ຂໍ້ມູນຕົວຈິງມາອະທິບາຍ,ພິສູດ,ວິຈານ ເພື່ອໃຫ້ຜູ້ຟັງເກີດມີຄວາມເຊື່ອໝັ້ນ ແລະ ມີການກະທຳຢ່າງຖືກຕ້ອງ.

1.2 ການສຳຄັນຂອງການສອນຂຽນບົດແຕ່ງປະສົມ

ການສອນຂຽນບົດແຕ່ງປະສົມມີຄວາມສຳ ແລະ ຈຳເປັນແກ່ນັກຮຽນເພາະມັນໄດ້ຊ່ວຍໃຫ້ເຂົາເຈົ້າເຂົ້າໃຈໃນການໃຊ້ບົດແຕ່ງຫຼາຍປະເພດປະກອບເຂົ້າກັນຢ່າງຖືກຕ້ອງ ແລະ ເໝາະສົມເຮັດໃຫ້ຜູ້ຮຽນເກີດມີຄວາມຮູ້ ແລະ ປະສົບການກ້ວາງຂວາງກ່ວາເກົ່າ,ຮູ້ນຳໃຊ້ເຫດຜົນ,ການອະທິບາຍ,ການຕີລາຄາບັນຫາຕ່າງໆໄດ້ເຊັ່ນ: ບົດອະທິບາຍ,ບົດພິສູດ,ບົດວິຈານ ເຊິ່ງບັນດາບົດເຫຼົ່ານີ້ໄດ້ເປັນເປັນພື້ນຖານໃຫ້ແກ່ການຂຽນບົດເລື່ອງສັ້ນ.ນະວະນິຍາຍ...

## 2. ວິທີສອນແຕ່ງບົດປະສົມ

ວິທີສະແດງຄຳເຫັນໃນບົດແຕ່ງປະສົມມີ 4 ວິທີຄື:

ກ . ວິທີອ້າງຫຼັກຖານ

- ຍົກຂໍ້ຄວາມທົ່ວໄປຂຶ້ນກ່ອນແລ້ວຈຶ່ງອ້າງຫຼັກຖານ.

ຕົວຢ່າງ ບົດຄວາມເລື່ອງ " ຂໍ້ມູນກອນຜະຫຍາມາຫາໄຊ 656 ຂໍ້ "

ດິນແດນທີ່ມີອະລິຍະທຳອັນເກົ່າແກ່ໃນສັດຕະວັດທີ VI ເປັນຕົ້ນມາ ແລະ ເສື່ອມອຳນາດລົງໃນສະໄໝສະຕັດວັດ IX ຊື່ວ່າອານາຈັກສີໂຄດຕະບອງ.ຫຼາຍຮ້ອຍປີຜ່ານໄປດິນແດນແຫ່ງນີ້ຍັງຢູ່ໃນຄວາມຊົງຈຳທາງປະຫວັດສາດ,ບູຮານຄະດີ,ປຸຊະນີຍະສະຖານຄື ພະທາດໂຄດຕະບອງ, ພະທາດພະນົມ (ຢູ່ຝັ່ງຂວານ້ຳຂອງ)ຊາກເມືອງຮ້າງທີ່ຫ່າງຈາກປາກນ້ຳເຊບັ້ງໄຟ ປະມານ 15 ກິໂລແມັດ (ປະຫວັດສາດຢັ້ງຢືນວ່າ ແມ່ນເມືອງມະຣຸກຂະນະຄອນເມືອງຫຼວງຂອງອານາຈັກສີໂຄດຕະບອງ) (ຄັດມາຈາກວາລະສານວັນນະສສິນສະບັບປະຈຳເດືອນ 5/95ໜ້າທີ33

- ອ້າງຫຼັກຖານແລ້ວຈຶ່ງຍົກຂໍ້ຄວາມຕາມຫຼັງ.

ຕົວຢ່າງ ບົດຄວາມເລື່ອງ ຮີບຮ້ອນບຸລະນະສ້ອມແປງໂຮງຮຽນ ໃຫ້ແກ່ມື້ໄຂສົກຮຽນໃໝ່ທີ່ຈະມາເຖິງຄືດັ່ງທີ່ພວກເຮົາຮູ້ດີແລ້ວວ່າ ປີນີ້ໄດ້ເກີດມີຟ້າຝົນຫຼາຍ ເຮັດໃຫ້ໂຮງຮຽນຫຼາຍບ່ອນຖືກນ້ຳຖ້ວມ,ຫຼັງຄາຮົ່ວ,ບໍ່ມີຝາແອ້ມ ແລະ ອື່ນໆ ຍິ່ງໄປກ່ວານີ້ມີໂຮງຮຽນບາງແຫ່ງໃນເວລາພັກປີຮຽນອຳນາດການປົກຄອງທ້ອງຖິ່ນບໍ່ໄດ້ເອົາໃຈໃສ່ປົກປັກຮັກສາປ່ອຍປະໃຫ້ສັດລ້ຽງເຂົ້າໄປທຳລາຍເຮັດໃຫ້ເປິະເປື້ອນ ໂດຍບໍ່ໄດ້ຮັບການບຸລະນະສ້ອມແປງເທົ່າທີ່ຄວນ. ປະກົດການທັງໝົດນີ້ຫາກພວກເຮົາເມີນເສີຍບໍ່ເຫັນໄດ້ຄວາມສຳຄັນຂອງວຽກງານການສຶກສາໃນທ້ອງຖິ່ນຂັ້ນຂອງຕົນ ແລະ ບໍ່ຮີບຮ້ອນລົງມືແກ້ໄຂປັວແປງກໍ່ຈະມີຜົນສະທ້ອນ ເຮັດໃຫ້ລູກຫຼານນັກຮຽນບໍ່ສາມາດເຂົ້າຮຽນໄດ້ທັນເວລາການສິດສອນຮ່ຳຮຽນບໍ່ເປັນປົກກະຕິຂາດວັກ,ຂາດຕອນເຮັດໃຫ້ຄຸນນະພາບການສຶກສາຕ່ຳບໍ່ມີປະສິດທິພາບສູງ. (ຄັດຈາກໜັງສືພິມວຽງຈັນໃໝ່ສະບັບເລກທີ 1/9/95 ໜ້າ 3).

## ຂ. ວິທີຕັ້ງຄຳຖາມ

ຢາກໃຫ້ຜູ້ອ່ານເອົາໃຈໃສ່ບັນຫາທີ່ຕົນເວົ້າ ແລະ ຂຽນອອກ ຕ້ອງໃຊ້ວິທີສະແດງຄຳແບບຕັ້ງຄຳຖາມແລະຕອບເລີຍ ຫຼື ຕັ້ງຄຳຖາມແຕ່ບໍ່ຕອບປະໃຫ້ຜູ້ອື່ນຄິດ ແລະ ຕອບເອົາເອງ.

ຕົວຢ່າງ 1 ຕັ້ງຄຳຖາມ ແລະ ຕອບເລີຍ.

1 . ຢາກເຮັດໃຫ້ຊີວິດການເປັນຢູ່ກິນອີ່ມນຸ່ງອຸ່ນພວກເຮົາຄວນເຮັດແນວໃດ?

- ພວກເຮົາຕ້ອງອອກແຮງງານເພີ່ມພູນຜະລິດຜົນຫາລ້ຽງກຸ້ມຕົນເອງ

2. ຄວາມສາມັກຄີແມ່ນຫັຍງ?

- ຄວາມສາມັກຄີແມ່ນບໍ່ເກີດແຫ່ງຄວາມສຳເລັດຂອງທຸກວຽກງານ.

3. ພວກເຮົາມໂຮງຮຽນທທຸກມື້ນີ້ເພື່ອຫັຍງ?

- ພວກເຮົາມາໂຮງຮຽນທຸກໆມື້ເພື່ອຮຽນໜັງສື.

ຕົວຢ່າງ 2 ຕັ້ງຄຳຖາມແຕ່ບໍ່ຕອບປະໃຫ້ຜູ້ອື່ນຄິດ ແລະ ຕອບເອງ.

- ຢາດຮຽນໜັງສືໃຫ້ເກັ່ງນັກຮຽນຄວນເຮັດແນວໃດ?
- ຢາກມີຄຸນສົມບັດທີ່ດີນັກຮຽນຄວນເຝິກຝົນຫຼໍ່ຫຼອມຫັຍງໃດແດ່?
- ຖ້າພວກເຮົາເປັນຄົນຂີ້ຄ້ານ,ມັກງ່າຍຈະມີຜົນສະທທ້ອນຫັຍງຕໍ່ການດຳລົງຊີວິດ?
- ຢາກສ້າງພັດທະນາປະເທດຊາດໃຫ້ຈະເລີນກ້າວໜ້າພວກເຮົາຄວນເຮັດແນວໃດ?

ຄ. ວິທີສະແດງຄຳຄິດເຫັນແບບຕ່ອງໂສ້

ວິທີສະແດງຄຳຄິດເຫັນແບບຕ່ອງໂສ້ ແມ່ນການສະແດງທີ່ມີຄຳເຫັນທີ່ມີລັກສະນະໃຫ້ແຕ່ບັນຫາເກາະກ່າຍກັນພົວພັນກັນແຕ່ຕົ້ນຮອດປາຍເຊັ່ນ:ບັນຫາສະເໜີກ່ອນເກາະໄປໃສ່ບັນຫາຫຼັງ ແລະຕໍ່ໆໄປ,ສຸດທ້າຍກໍ່ໄປຮອດບັນຫາຕົ້ນຕໍທີ່ແກ້.ສະນັ້ນ,ຈຸດພິເສດຂອງການສະແດງຄຳເຫັນແບບນີ້,ຍາມໃດບັນຫາກໍ່ຈະແກ້ໄຂຕ້ອງຢູ່ທ້າຍສະເໜີ.

ຕົວຢ່າງ ວັດທະນະທຳອັນຈີບງາມຂອງຊາດ ຈະຢູ່ຄຽງຄູ່ກັບຄົນລາວຕ້ອງອາໄສປະຊາຊົນລາວທັງຊາດເປັນຜູ້ປົກປັກຮັກສາ,ປະຊາຊົນລາວທັງຊາດປົກປັກຮັກສາວັດທະນະທຳໄວ້ຕ້ອງມີຄວາມຕື່ນຕົວ,ຢາກໃຫ້ປະຊາຊົນມີຄວາມຕື່ນຕົວຕ້ອງມີໂຄສະນາໃຫ້ເຂົ້າໃຈ,ສະນັ້ນ,ວຽກງານໂຄສະນາຂົນຂວາຍແມມມ່ນວຽກທີ່ສຳຄັນ.

ຢາກໃຫ້ໂຮງຮຽນມີຄວາມກ້າວໜ້າຕ້ອງມີຜູ້ນຳ,ຜູ້ນຳພາຕ້ອງມີແຜນການ,ຢາກໃຫ້ແຜນການສຳເລັດບຸກຄົນໃນຫ້ອງຕ້ອງເປັນເອກະພາບທາງດ້ານແນວຄິດ ແລະການກະທຳ,ຢາກເປັນເອກະພາບກັນຕ້ອງຕ້ານແນວຄິດເຫັນແກ່ຕົວ.ສະນັ້ນແນວຄິດເຫັນແກ່ຕົວແມ່ນບໍ່ດີ.

ງ. ວິທີສະແດງຄຳຄິດເຫັນແບບວິທີປຽບທຽບ

ຢາກໃຫ້ບັນຫາໃດໜຶ່ງພົ້ນເດັ່ນຂຶ້ນ,ເຮົາຕ້ອງໃຊ້ວິທີປຽບທຽບ,ສິ່ງທີ່ກົງກັນຂ້າມນັ້ນຈະແຈ້ງ ແລະ ບັນຫາທີ່ເຫັນຜູ້ອື່ນຮູ້ກໍ່ຍິ່ງເດັ່ນຂຶ້ນ.

ຕົວຢ່າງ ຢາກຮູ້ວ່າຕົນເອງຮຽນພາສາໄດ້ ຫຼື ບໍ່ກໍ່ປຽບທຽບໃສ່ເວລາເລີ່ມຕົ້ນຮຽນໃໝ່ກັບປະຈຸບັນ

ຢາກຮູ້ວ່າປະເທດ ສ.ປ.ປ.ລາວ ຈະເລີນກ້າວໜ້າກໍ່ຕ້ອງປຽບທຽບໃສ່ເວລາປົດປ່ອຍໃໝ່ເຮົາກໍ່ຮູ້ໄດ້ຢ່າງຈະແຈ້ງ.

**3.ການສົມທຽບລະຫ່ວາງບົດອະທິບາຍ,ບົດພິສູດ ແລະ ບົດວິຈານ**

**3.1 ຈຸດຄືກັນ**

- ບົດອະທິບາຍ,ບົດພິສູດ ແລະ ບົດວິຈານ ແຕ່ລະປະເພດລ້ວນແຕ່ນຳໃຊ້ການອະທິບາຍ,ການພິສູດ ແລະ ການວິຈານຮ່ວມກັນຈະນຳໃຊ້ຫຼາຍ ຫຼື ໜ້ອຍນັ້ນແມ່ນຂຶ້ນກັບຄວາມຕ້ອງການຂອງຫົວບົດເຊັ່ນ ຂຽນບົດພິສູດຕ້ອງໄດ້ເອົາບົດພິສູດເປັນຕົ້ນຕໍ ສ່ວນບົດ ອະທິບາຍ ແລະ ວິຈານເປັນສຳຮອງ.

- ບົດອະທິບາຍ,ບົດພິສູດ ແລະ ບົດວິຈານ ລ້ວນແຕ່ມີໂຄງຮ່າງຄືກັນ ເຊັ່ນ: ຕັ້ງບັນຫາ,ແກ້ໄຂບັນຫາ ແລະ ສະຫຼູບບັນຫາ.

3.2 ຈຸດຕ່າງກັນ

- ບົດອະທິບາຍແມ່ນໃຊ້ເຫດຜົນເພື່ອຊີ້ແຈ້ງ ບັນຫາເປັນຕົ້ນ,ສ່ວນການອ້າງຫຼັກຖານ ແລະ ການສັງເກດຕີລາຄາບັນຫາເປັນສຳຮອງ.

- ບົດພິສູດແມ່ນການນຳໃຊ້ຫຼັກຖານເປັນຕົ້ນຕໍ,ສ່ວນການນຳໃຊ້ເຫດຜົນ ແລະ ສັງເກດຕີລາຄາບັນຫາເປັສຳຮອງ.

- ບົດວິຈານ ແມ່ນການສັງການຕີລາຄາບັນຫາຖືກ,ບັນຫາຜິດ ແລະຊອກຫາຄຸນປະໂຫຍດຂອງບັນຫາເປັນຕົ້ນຕໍ,ສ່ວນການນຳໃຊ້ເຫດຜົນ ແລະ ການອ້າງອີງຫຼັກຖານຕົວຈິງເປັນສຳຮອງ.

3.3 ຕາຕະລາງປຽບທຽບລະຫ່ວາງບົດອະທິບາຍ,ບົດພິສູດ ແລະ ບົດວິຈານ.

| ບົດອະທິບາຍ | ບົດພິສູດ | ບົດວິຈານ |
|---|---|---|
| -ອະທິບາຍດ້ວຍເຫດ ແລະຜົນເປັນຕົ້ນຕໍ<br>- ວິຈານ ແລະ ພິສູດສັ້ນໆ | -ອ້າງຫຼັ້ກຖານຕົວຈິງເປັນຕົ້ນຕໍ<br>-ອະທິບາຍ ແລະ ວິຈານສັ້ນໆ. | - ວິຈານເປັນຕົ້ນຕໍ.<br>-ອະທິບາຍ ແລະ ພິສູດສັ້ນໆ. |

ຕົວຢ່າງ ໂຄງຮ່າງແກ້ໄຂບັນຫາໃນສາມປະເພດບົດຂ້າງເທິງ

ຫົວບົດ: ຄຳສຸພາສິດທີ່ວ່າ " ຮົ້ວຫຼາຍຫຼັກຈິ່ງໝັ້ນ,ພີ່ນ້ອງຫຼາຍຊັ້ນຈິ່ງດີ "

| ບົດອະທິບາຍ | ບົດພິສູດ | ບົດວິຈານ |
|---|---|---|
| - ສາມັກຄີແມ່ນແນວໃດ?<br>- ເຫດຈິ່ງເວົ້າວ່າຄວາມສາມັກຄີເປັນກ້ອນກຳລັງແຮງອັນມະຫາສານ (ຈຸດຕົ້ນຕໍ)<br>- ອ້າງຫຼັກຖານສັ້ນໆ | - ຄວາມສາມັກຄີແມ່ນຫັຍງ?<br>ອະທິບາຍສັ້ນໆ<br>- ອ້າງຫຼັກຖານສາມັກຄີເປັນກຳລັງແຮງອັນມະຫາສານ (ຈຸດຕົ້ນຕໍ) | - ຄວາມສມັກຄີແມ່ນຫັຍງ?<br>ອະທິບາຍສັ້ນໆ<br>- ອ້າງຫຼັກຖານສັ້ນໆ<br>- ຜົນປະໂຫຍດຂອງຄວາມສາມັກຄີ(ວິຈານ) |

| | | |
|---|---|---|
| - ຜົນປະໂຫຍດຂອງຄວາມສາມັກຄີ(ວິຈານສັ້ນໆ). | - ຜົນປະໂຫຍດຂອງຄວາມສາມັກຄີ(ວິຈານສັ້ນໆ) | - ສາມັກຄີກັບໃຜ?<br>- ສາມັກຄີແນວໃດ?<br>- ສາມັກຄີເພື່ອຫຍັງ? |

## 4. ໂຄງຮ່າງບົດແຕ່ງປະສົມ

**ໂຄງຮ່າງບົດແຕ່ງປະສົມມີ 3 ພາກສ່ວນຄື:**

**1. ຕັ້ງບັນຫາ**

- ຂຽນໃຫ້ສັ້ນກະທັດຮັດແຕ່ໃຫ້ກວມລວມເນື້ອໃນຕົ້ນຕໍຂອງຫົວບົດ.
- ເອົາຫົວບົດມາອັດ.

**2. ແກ້ໄຂບັນຫາ**

- ການແກ້ໄຂບັນຫາແມ່ນອີງໃສ່ຫົວບົດທີ່ເນື້ອໃນໜ້ອຍ,ຫຼາຍຕ່າງກັນ.
- ແກ້ໄຂບັນຫາໄປຕາມແຕ່ລະຈຸດ.
- ການອະທິບາຍ,ພິສູດ ແລະ ວິຈານຕາມຄວາມເໝາະສົມ.
- ແກ້ໄຂບັນຫາຈົນກ່ວາໝົດເນື້ອໃນຂອງຫົວບົດ.

**3. ສະຫຼູບບັນຫາ**

- ສັງລວມຄືນໂດຍຫຍໍ້ເນື້ອໃນຄວາມສຳຄັນຂອງບົດ.
- ສະແດງທັດສະນະຂອງຕົນຕໍ່ຫົວບົດ.
- ເອົາຫົວບົດມາອັດ.

ຕົວຢ່າງ 1 ຫົວບົດ: ເມື່ອເວົ້າເຖິງບັນຫາການຍົກບົດບາດຂອງຄູໃຫ້ສູງຂຶ້ນໃນສັງຄົມ ທ່ານ ໄກສອນ ພົມວິຫານ ກ່າວໄວ້ວ່າ ຄູຕ້ອງອອກແຮງຊອກຮູ້ຮ່ຳຮຽນດ້ວຍຕົນເອງ ເພື່ອຍົກລະດັບການເມືອງ, ວັດທະນະທຳ,ວິຊາສະເພາະຂອງຕົນໃຫ້ນັບມື້ນັບສູງຂຶ້ນ, ຕ້ອງມີລະດັດຄວາມກ່ຽວກັບວິຊາສະເພາະຕົນສອນຢ່າງເລິກເຊິ່ງ, ຕ້ອງເພີ່ມພູນຄູນສ້າງສີລະປະກ່ຽວກັບວິຊາຄົນໃຫ້ສູສຂຶ້ນ.ເລື້ອຍໆເພື່ອຊອກຫາວິທີທີ່ດີກ່ວາໃນການຖ່າຍທອດຄວາມຮູ້ໃຫ້ແກ່ນັກຮຽນ,ຕ້ອງປະພຶດໃສ່ເດັກດ້ວຍລັກສະນະທ່າທີ, ແບບແຜນການດຳນລົງຊີວິດອັນຖືກຕ້ອງ, ແລະ ມີບຸກຄະລິກະພາບດີ,ຕ້ອງເປັນແວ່ນແຍງອັນໃສແຈ້ງໃຫ້ແກ່ນັກຮຽນ,ນັ້ນແມ່ນຄວາມມຸ້ງຫັວງຂອງສັງຄົມທີ່ມີຕໍ່ຄູ-ອາຈານ.

(ຄັດຈາກປຶ້ມຍຸດຕະສາດການສຶກສາສຳລັບໄລຍະແຕ່ນີ້ເຖິງປີ 2000 ໜ້າ83 ພິມທີ່ວິສາຫະກິດການພິມຈຳໜ່າຍສຶກສາ)

ກ. ຕັ້ງບັນຫາ

- ການສ້າງສສາພັດທະນາປະເທດຊາດພັກ-ລັດ ຮຽກຮ້ອງຕ້ອງການຄູຄືແນວໃດ?
- ຄູຄວນອອກແຮງຊອກຮູ້ຮ່ຳຮຽນດ້ວຍຕົນເອງທາງດ້ານວິຊາສະເພາະ,ຍົກລະດັດທາງດ້ານເມືອງ,ດ້ານວັດທະນະທຳເປັນຄືແນວໃດ?

- ເອົາຫົວບົດຂຽນລົງໃສ່.

**ຂ. ແກ້ໄຂບັນຫາ.**

. ຄູຄວນຊອກຮູ້ຮໍ່າຮຽນດ້ວຍຕົນເອງ,ທາງດ້ານວິຊາສະເພາະ,ຍົກລະດັບທາງດ້ານການເມືອງ,ດ້ານວັດທະນະທໍາຂອງຕົນໃຫ້ນັບມື້ນັບສູງຂຶ້ນ (ອະທິບາຍ+ພິສູດ)

- ວຽກງານຂອງຄູແມ່ນວຽກງານໜຶ່ງທທີ່ຫຸ້ຍງຍາກແຕ່ມີກຽດອັນອັນສະຫງ່ງາມ(ຍົກຕົວຈິງມາພິສູດ).
- ຕ້ອງມີສີລະປະຕໍ່ກັບວິຊາສະເພາະອັນແນ່ນອນ.
- ຕ້ອງມີລະດັບຄວາມຮູ້ທີ່ຕົນສອນຢ່າງເລິກເຊິ່ງ(ອະທິບາຍ+ພິສູດ)
- ຕ້ອງມີສີລະປະກ່ຽວກັບວິຊາຄູ (ພິສດ)
- ເຂົ້າໃຈຫຼັກການ ແລະ ວິທີສອນຢ່າງເລິກເຊິ່ງ
- ມີຫົວຄິດປະດິດສ້າງ,ມີພິກໄຫວຄ່ອງແຄ່ວ.
- ສະດຸ້ງໄວ,ມີການປັບປຸງຄວາມຮູ້,ວິທີສອນໃຫ້ດີຂຶ້ນ.

. ຢາກມີລະດັບຄວາມຮູ້ທາງດ້ານວິຊາສະເພາະຄູຕ້ອງເຮັດແນວໃດ?

- ຕ້ອງສຶກສາຮໍ່າຮຽນຢູ່ໃນໂຮງຮຽນສ້າງຄູ.
- ຮຽນບໍາລຸງຄູ.
- ຊອກຮູ້ຮໍ່າຮຽນນໍາໝູ່ຄູ່ ແລະ ຊີວິດຕົວຈິງ.
- ຮຽນດ້ວຍຕົນເອງ (ອ່ານປຶ້ມຕ່າງໆ)

. ເປັນແວ່ນແຍງໃສແຈ້ງແກ່ນັກຮຽນ.

- ມີທັດສະນະທີ່ຖືກຕ້ອງ.
- ມີແບບແຜນການດໍາລົງຊີວິດທີ່ຈົບງາມ.
- ເຝິກຝົນຕົນເອງຮອບດ້ານໃຫ້ສອດຄ່ອງກັບຍຸກສະໄໝ.

. ຖ້າຄູຂາດການຊອກຮູ້ຮໍາຮຽນ ລະດັບຄວາມຮູ້ຕໍ່າ ເວລາສອນນັກຮຽນຈະເປັນແນວໃດ (ພິສູດ+ວິຈານ)

- ເຮັດການສອນບໍ່ມີປະສິດທິພາບ.
- ນັກຮຽນຂາດຄວາມເຊື່ອຖື.
- ສັງຄົມບໍ່ມີຄວາມກ້າວໜ້າ,ປະເທດບໍ່ມີຄວາມຈະເລີນ(ພິສູດ+ວິຈານ)

**ຄ. ສະຫຼຸບບັນຫາ**

- ສັງລວມຄືນບົດຍນດຂອງຄູ ໃນການກໍ່ສ້າງຄົນຮຸ່ນໃໝ່, ໃຫ່ກາຍເປັນຄົນດີຢູ່ໃນສັງຄົມ.
- ສະແດງທັດສະນະຂອງຕົນຕໍ່ບົດ
- ເອົາຫົວບົດມາອັດ

**ຕົວຢ່າງ 2 ຫົວບົດ: ປະທ່ານໂຮ່ຈິມິນເວົ້າວ່າ " ຄົນຜູ້ໜຶ່ງຕ້ອງວິຊາສະເພາະເລິກ ແລະ ຄຸນສົມບັດແດງ" (ອະທິບາຍ+ວິຈານ)**

**ກ. ຕັ້ງບັນຫາ**

ຄົນເຮົາເກີດມາໃນບົນໜ້າໂລກນີ້,ຢາມເປັນຄົນທີ່ສົມບູນແບບຕ້ອງມີຄວາມຮູ້, ຄວາມສາມາດ ແລະ ມີທັດສະນະທີ່ຖືກຕ້ອງ ດັ່ງຄຳເວົ້າຂອງທ່ານປະທານໂຮ່ຈິມິນໄດ້ເວົ້າວ່າ "ຄົນຜູ້ໜຶ່ງຕ້ອງມີວິຊາສະເພາະເລີກ ແລະ ຄຸນສົມບັດແດງ"

ຂ. ແກເໄຂບັນຫາ

. ວິຊາສະເພາະເລີດ ແລະ ຄຸນສົມບັດແດງໝາຍຄວາມວ່າແນວໃດ?

- ວິຊາສະເພາະ (ອະທິບາຍ)
- ຄຸນສົມບັດແດງ (ອະທິບາຍ)

. ຄົນທີ່ມີວິຊາສະເພາະເລີກ ແລະ ຄຸນສົມບັດແດງ ແມ່ນເປັນຄົນແນວໃດ?

- ຍົກຕົວຢ່າງມາຢັ້ງຢືນ
- ຄົນທີ່ມີວິຊາສະເພາະເລີກ ແລະ ຄຸນສົມບັດແດງ ຈະມີຄຸນປະໂຫຍດຫັຍງແດ່ຕໍ່ຕົນເອງ ແລະ ສ່ວນລວມ? (ວິຈານ)

.ຢາກມີວິຊາສະເພາະແດງ ແລະ ຄຸນສົມບັດເລີກຕ້ອງເຮັດແນວໃດ?

- ຮໍ່າຮຽນທິດສະດີ ແລະ ປະກົດການຕົວຈີງ
- ເຝິກຝົນທັດສະນະຄະຕິ ແລະ ການກະທຳໃຫ້ຖືກຕ້ອງ.

ຄ. ສະຫຼຸບ

- ສັງລວມກ່ຽວກັບເນື້ື້ື້ອໃນສຳຄັນໂດຍຫຍໍ້.
- ສະແດງທັດສະນະຂອງຕົນຕໍ່ຫົວບົດ.
- ເອົາຫົວບົດຂຽນລົງໃສ່.

ຕົວຢ່າງ 3 ຫົວບົດຄຳເວົ້າທີ່ວ່າ "ມີຄວາມສາມາດ ແຕ່ຂາດຄຸນສົມບັດ,ມີຄຸນສົມບັດແຕ່ຂາດຄວາມສາມາດເຮັດວຽກງງານຫັຍງກໍ່ຍາກ" (ພະສູດ + ວິຈານ )

**ກ. ຕັ້ງບັນຫາ**

ຄຸນສົມບັດ ແລະ ຄວາມສາມາດ ເປັນສິ່ງທີ່ຈຳເປັນ ແລະ ຂາດບໍ່ໄດ້ສຳລັບຄົນເຮົາ,ຖ້າຄົນຜູ້ໜຶ່ງຫາກຂາດໜຶ່ງໃນບັນຫາດັ່ງກ່າວນັ້ນຈະພົບຄວາມຫຸ້ຍງຍາກໃນການປະຕິບັດວຽກ ດັ່ງນັ້ນມັນຈິ່ງສອດຄ່ອງກັບຄຳເວົ້າທີ່ວ່າ ມີຄວາມສາມາດ ແຕ່ຂາດຄຸນສົມບັດ,ມີຄຸນສົມບັດແຕ່ຂາຄວາມສາມາດເຮັດວຽກຫັຍງກໍ່ຍາກ

**ຂ. ແກ້ໄຂບັນຫາ**

. ມີຄວາມສາມາດແຕ່ຂາດຄຸນສົມບັດເປນຫຍັງຈິ່ງພົບຄວາມຫຸ້ຍງຍາກ

- ຢາກເຮັດໃຫ້ວຽກມີປະສິດທິພາບສູງມີຮຽກຮ້ອງໃຫ້ມີຄຸນສົມບັດ (ຍົກຫຼັກຖານມາອ້າງອີງ)
- ຄຸນສົມບັດ ແລະ ຄວາມສາມາດ ແມ່ນສິ່ງຕັດສິນຜົນສຳເລັດວຽກງານ(ຍົກຜູ້ມີຄຸນສົມບັດດີ ແລະ ຜູ້ທີ່ມີຄຸນສົມບັດບໍ່ດີ) ວິຈານ

. ມີຄຸນສົມບັດແຕ່ຂາດຄວາມສາມາດເຮັດວຽກຫຍັງກໍ່ຍາກ

- ຢາກເຮັດວຽກໃຫ້ມີປະສິດທີ່ຜົນມັນຮຽກຮ້ອງໃຫ້ມີຄວາມສາມາດ (ຍົກຫຼັກຖານເຄື່ອນໄຫວວຽກງານຕ່າງໆ)
- ມີຄຸນສົມບັດແຕ່ຂາດຄວາມສາມາດເຮັດວຽກຫຍັງກໍ່ຍາກ (ເຮັດວຽກຊັກຊ້າ,ສຳເລັດບໍ່ສູງ,ບໍ່ສຳເລັດ) ອ້າງ ຫຼັກຖານ ແລະ ວິຈານ.
- ມີຄວາມສາມາດເຮັດວຽກຫັຍງກໍ່ສຳເລັດຜົນຢ່າງຈົບງາມ (ຍົກຫຼັກຖານ)
- ການນຳໃຊ້ຄວາມມາດ ເພື່ອເຮັດໃຫ້ວຽກງານສຳເລັດນັ້ນກໍ່ຕ້ອງມີການພົວພັນເຖິງຄຸນສົມບັດ.

**ຄ. ສະຫຼຸບ**

ຄຸນສົມບັດ ແລະ ຄວາມສາມາດເປັນສິ່ງທີ່ຂາດບໍ່ໄດ້ ແລະ ແມ່ນຄວາມຕ້ອງການຂອງສັງຄົມ,ຄົນທີ່ມີຄຸນສົມບັດດີ,ມີຄວາມສາມາດພຽງພໍເປັນກຳລັງແຮງໃນການສ້າງສາພັດທະນາປະເທດຊາດໃຫ້ຈະເລນຮຸ່ງເຮືອງ ເຮົາຄວນເຝິກຝົນຄວາມສາມາດ ແລະ ຄຸນສົມບັດແນວໃດ?

ແມ່ຍິງທີ່ຄູ່ກັບຄຳວ່າ ກຸລະສະຕີລາວທີ່ແທ້ຈິງ ຍ່ອມເປັນທີ່ເຂົ້າໃຈ ແລະເຫັນໄດ້ຄຸນຄ່າອັນສູງສົ່ງຂອງຮີດຄອງປະເພນີອັນດີງາມ ແລະ ລຳຄ່າຂອງລາວ,ບໍ່ວາດ້ານການກິນຢູ່, ນຸ່ງຖື, ກິລິຍາມາລະຍາດ, ວາດຊີວະຈາ ແລະ ຈິດໃຈ.ແຕ່ໃນທີ່ນີ້ຢາກຂໍກ່າວເຖິງບັນຫາດຽວເທົ້ານັ້ນ, ຄືການນຸ່ງຖືຂອງແມ່ຍິງລາວໂດຍສະເພາະແມ່ນ "ສິ້ນ" ສິ້ນແມ່ນສົມບັດອັນລ້ຳຄ່າທີ່ສືບທອດ ແລະ ຄວນປົກຮັກສາທາງນີ້ກໍ່ເພາະວ່າ ແມ່ນເອກະລັກທີ່ບົ່ງບອກໄດ້ທັນທີວ່າ ຜູ້ສວມໃສ່ເປັນແມ່ຍິງ 100% ນອກຈາກນີ້ແລ້ວສິ້ນກໍ່ຍັງສາມາດ ໃຫ້ຄຸນຄ່າຄວາມງາມທາງດ້ານວັດນະທຳແກ່ແມ່ຍິງລາວອີກດ້ວຍ,ເພາະວ່າໃນສິ້ນຜືນໜຶ່ງມີຫຼາຍສິ່ງ ຫຼາຍຢ່າງທີ່ສະແດງເຖິງຄວາມພາກພຽນ, ຄວາມສາມາດ ແລະ ຫົວຄິດປະດິດສ້າງ ຂອງຊ່າງຜູ້ມີສີມືອັນປະນິດ,ຄວາມລະອຽດອ່ອນດຫຼາກຫຼາຍ ແລະ ສີສັນລວມຄວາມແລ້ວກະຄືຄວາມອຸດົມສົມບູນ ແລະ ຮັ່ງມີດ້ານສິລະປະນັ້ນເອງ.

ສິ້ນເຖິງວ່າຈະມີມາຄູ່ກັບຄວາມເປັນແມ່ຍິງລາວ ແຕ່ບູຮານນະການຍາວນານແລ້ວກໍ່ຕາມແຕ່ຄຸນຄ່າ ແລະ ຄວາມງາມຂອງມັນ ກໍ່ຍັງບໍ່ທັນໄດ້ເສື່ອມຖາຍສະຫຼາຍຕົວເລີຍ,ກົງກັນຂ້າມມັນຍິ່ງ ໄດ້ຮັບການພັດທະນາໃຫ້ສວຍງາມເໝາະສົມ ແລະ ກ້າວໜ້າໄປຕາມຍຸກສະໄໝ ໄປຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ຊົມໃຊ້ເປັນຢ່າງໜ້າພາກພູມໃຈ.ໃນນັ້ນກໍ່ລວມທັງລວດລາຍ,ສີສັນອັນໂດດເດັ່ນ,ຄຸນນະພາບ ແລະ ນັບທັງປະລິມານການຜະລິດທີ່ນັບມື້ກວ້າງຂວາງ ແລະ ຫຼວງຫຼາຍກ່ວາແຕ່ກ່ອນ.ຍິ່ງມາໃນຍຸກສະໄໝເປີດກວ້າງການຕະຫຼາດຄືດູ່ມື້ນີ້ຜະລິດຕະພັນສິນຄ້າຜ້າແພໄໝລາວກໍ່ຍິ່ງມີການຂະຫຍາຍຕົວ ວ່ອງໄວ ແລະ ເປັນທຸລະກິດທີ່ສ້າງລາຍຮັບໃຫ້ແກ່.

- **ບົດອ່ານເພີ່ມ: ບົດອະທິບາຍ + ພິສູດ: ແຕ່ງດອງ ຫຼື ແຕ່ງງານ.ໂດຍ ພ. ພວງສະບາ**

ພິທີແຕ່ງດອງນີ້ບໍ່ວ່າຊາດໃດໆກໍ່ຄືກັນໝົດຕ່າງກັນແຕ່ພິທີເທົ່ານັ້ນເພາະວ່າຮີດຄອງປະເພນີວັດທະນະທຳຂອງແຕ່ລະຊາດນັ້ນ ຍ່ອມມີການແຕກຕ່າງກັນ ຫຼື ແມ່ນແຕ່ຄົນໃນຊາດດຽວກັນກໍ່ຍັງມີຄວາມແຕກຕ່າງກັນທາງດ້ານປະເພນີຮີດຄອງວັດທະນະທຳ ເຊິ່ງເປັນສິ່ງສະເພາະຂອງແຕ່ລະຊົນເຜົ່າ. ແຕ່ແນວໃດກໍ່ຕາມ ຄວາມໝາຍ

ຂອງການແຕ່ງດອງ ກໍ່ຍັງແມ່ນອັນດຽວກັນຄືເອົາຜູ້ບ່າວໄປສູ່ຜູ້ສາວ ຫຼື ເອົາຜູ້ສາວໄປສູ່ຜູ້ບ່າວ ເຊິ່ງທັງສອງມີຄວາມຮັກກັນຢູ່ກິນດ້ວຍກັນຕາມຮີດຄອງປະເພນີວັດທະນະທໍາ ແລະ ຮັບຮູ້ຖືກຕ້ອງຕາມກົດໝາຍບ້ານເມືອງ ເພື່ອດໍາເນີນຊີວິດເປັນຄູ່ຜົວເມຍຮັກຫອມຖະໜອມແພງກັນ ກາຍເປັນເຜິ້ງປ່ຽງດຽວກັນທາງດ້ານພຶດຕິກໍາດ້ວຍກາຍວາຈາໃຈ.

ແຕ່ສິ່ງທີ່ຢາກນໍາມາສະເໜີເພື່ອແລກປ່ຽນຄວາມຄິດຄວາມເຫັນກັບທ່ານຜູ້ອ່ານ, ທ່ານຜູ້ຮູ້ທັງຫຼາຍນັ້ນ ແມ່ນປະໂຫຍກຄໍາເວົ້າທີ່ວ່າ " ແຕ່ງດອງ ຫຼື ແຕ່ງງານ " ເພາະສັງເກດເຫັນວ່າການໃຊ້ປະໂຫຍກຄໍາເວົ້າດັ່ງກ່າວສັບສົນປົນເປກັນຢູ່. ສະໄໝທ່ານອາຈານ ມະຫາສີລາ ວິລະວົງ ເພິ່ນຍັງມີຊີວິດຢູ່ ເພິ່ນໄດ້ລົມກັບຜູ້ຂຽນໃນຖານະເປັນລູກສິດລູກຫຼານປາຍແຖວຂອງເພິ່ນ, ເພິ່ນເວົ້າວ່າ " ແຕ່ງດອງ ຫຼື ແຕ່ງງານ " ນັ້ນມີຄວາມໝາຍ ແລະ ແມ່ນຄໍາລາວແທ້ເພິ່ນອະທິບາຍຄໍາວ່າ " ດອງ " ສູ່ຜູ້ຂຽນຟັງວ່າ " ດອງ " ໝາຍເຖິງການແຕ່ງດອງເຊັ່ນ ດອງຫົວຜັກ, ດອງຜັກສົ້ມ ແລະ ອື່ນໆ.ເມື່ອເຮົາດອງເອົາໄວ້ດົນຈົນເປັນກິນແລ້ວຈິ່ງນໍາອອກມາກິນ ຫຼື ມາແຕ່ງກິນດັ່ງຄໍາວ່າ " ແຕ່ງດອງ " ກໍ່ຄືແຕ່ງຄວາມຮັກຂອງຜູ້ບ່າວ ຜູ້ສາວ ທີ່ໄດ້ດອງຄວາມຮັກເອົາໄວ້ຕໍ່ກັນມາດົນນານນັ້ນ. ພໍຮອດເວລາຈິ່ງຈັດພິທີແຕ່ງດອງຂຶ້ນຕາມຮີດຄອງປະເພນີເມື່ອຟັງຕາມການເລົ່າເຖິງຄວາມໝາຍ ດັ່ງທີ່ທ່ານ ອາຈານ ມະຫາສີລາ ວິລະວົງ ໄດ້ເລົ່າສູ່ຟັງນັ້ນ, ຜູ້ຂຽນກໍ່ເຫັນດີເຫັນພ້ອມນໍາເພິ່ນອີ່ຫຼືຄືຕ້ອງໃຊ້ຄໍາວ່າ " ແຕ່ງດອງ ຫຼື ກິນດອງ " ແມ່ນຄໍາລາວທີ່ຜູກພັນຢູ່ກັບຮີດຄອງປະເພນີວັດທະນະທໍາຂອງລາວເຮົາ.

ຜູ້ຂຽນ ເຄີຍໄດ້ຍິນຊາວບ້ານທາງເຂດຊົນນະບົດໄປເລົ່າພີ່ເລົ່ານ້ອງໃຫ້ໄປຮ່ວມມື້ດອງເພິ່ນເວົ້າວ່າ " ມາຮອດມາເຖິງພໍ່, ແມ່, ປ້າ, ລຸງ ໃຫ້ໄປຮ່ວມກິນດອງນໍາລູກຫຼານ " ແຕ່ບໍ່ເຄີຍໄດ້ຍິນເພິ່ນວ່າ " ມາຮອດມາເຖິງພໍ່, ແມ່, ປ້າ, ລຸງ ໃຫ້ໄປຮ່ວມກິນງານນໍາລູກຫຼານ " ຈັກເທື່ອ.

ອີກປະໂຫຍກຄໍາເວົ້າໜຶ່ງທີ່ນິຍົມໃຊ້ກັນຄືຄໍາວ່າ" ເຈົ້າພາບທັງສອງຝ່າຍ "ກັບຄໍາວ່າ " ພໍ່ແມ່ເຈົ້າໂຄດລຸງຕາທັງສອງກໍ້າສອງຝ່າຍ"ໃນບັດເຊີນບອກວ່າ" ເຈົ້າພາບທັງສອງຝ່າຍ"ແຕ່ຢູ່ພິທີຫຼັງຈາກບ່າວສາວສູ່ຂວັນຜູກແຂນຕາມຮີດຄອງປະເພນີເປັນທີ່ຮຽບຮ້ອຍແລ້ວ ກ່ອນຈະຈູງຄູ່ຜົວເມຍໃໝ່ເຂົ້າຫ້ອງນັ້ນ ເພິ່ນກໍ່ຍັງມີຂັນສົມມາຄາລະວະຂໍພອນຈາກພໍ່ແມ່ເຈົ້າໂຄດລຸງຕາ ເຊິ່ງຕອນນີ້ກໍ່ບໍ່ເຄີຍໄດ້ຍິນວ່າ " ພິທີສົມມາເຈົ້າພາບທັງສອງກໍ້າສອງຝ່າຍ" ຈັກເທື່ອ, ເຄີຍໄດ້ຍິນແຕ່ເພິ່ນເວົ້າວ່າ " ພິທີສົມມາພໍ່ແມ່ເຈົ້າໂຄດລຸງຕາ " ເມື່ອເປັນເຊັ່ນນີ້ຢູ່ໃນບັດເຊີນໃຊ້ຄໍາວ່າ " ພໍ່ແມ່ເຈົ້າໂຄດລຸງຕາທັງສອງຝ່າຍ " ຊິໄດ້ບໍ?

ເທົ່າທີ່ຜູ້ຂຽນຍົກມາຂຽນໃນນີ້ ກໍ່ບໍ່ທັນຢືນຢັນປະໂຫຍກຄໍາເວົ້າໃດຖືກຄໍາເວົ້າໃດຜິດເທື່ອພຽງແຕ່ໃຫ້ຜູ້ອ່ານ, ທ່ານຜູ້ຮູ້ທັງຫຼາຍຊ່ວຍກັນຄິດເທົ່ານັ້ນ ເພາະວ່າ ການປະຕິບັດຮີດຄອງປະເພນີວັດທະນະທໍາຂອງຊາດນັ້ນ ພິທີກໍາຕ່າງໆຕ້ອງໃຫ້ມີເອກະລັກທີ່ເປັນເຄົ້າມູນຂອງລາວທີ່ແທ້ຈິງທາງພຶດຕິກໍາ ແລະ ພາສາສໍານວນທີ່ເປັນຂອງຈິງ. ທັງພຶດຕິກໍາ ແລະ ພາສາສໍານວນທີ່ເປັນຂອງລາວເຮົາ ຈິ່ງຈະເປັນສິ່ງເອກອ້າງໄດ້ວ່າ ນີ້ແຫຼະ ປະເພນີວັດທະນະທໍາຂອງລາວ.

( ຄັດຈາກວາລະສານວັນນະສິນສະບັບປະຈໍາເດືອນ 5, 1995, ໜ້າທີ 36-37.)

# ບົດແບບຢ່າງການແຕ່ງປະສົມ 1

**ຫົວບົດ: ຈົ່ງອະທິບາຍ+ພິສູດ ຄຳເວົ້າທີ່ວ່າ: " ນັກຮຽນທີ່ດີຕ້ອງເປັນຜູ້ທີ່ມີລະບຽບວິໄນ ແລະ ຮ່ຳຮຽນເກັ່ງ "**

ການຮຽນເປັນສິ່ງສຳຄັນ ແລະ ຈຳເປັນໃນຊີວິດ, ແຕ່ຢາກໃຫ້ການຮຽນສຳເລັດຜົນຕ້ອງປະກອບດ້ວຍຫຼາຍໆປັດໄຈ ໃນນັ້ນ ປັດໄຈສຳຄັນຄືຕ້ອງມີລະບຽບວິໄນດີ, ເຂັ້ມງວດ ແລະ ຕັ້ງຫນ້າຕໍ່ການຮ່ຳຮຽນຈຶ່ງຈະກາຍເປັນ ນັກຮຽນດີໄດ້. ສະນັ້ນ, ມັນຈຶ່ງຖືກຕ້ອງ,ເຫມາະສົມ ແລະສອດຄ່ອງກັບຄຳເວົ້າທີ່ວ່າ: " ນັກຮຽນທີ່ດີຕ້ອງເປັນຜູ້ທີ່ມີ ລະບຽບວິໄນ ແລະ ຮ່ຳຮຽນເກັ່ງ "

ດັ່ງທີ່ຮັບຮູ້ນຳກັນແລ້ວວ່າ ໃນຂະບວນວິວັດຂອງການຮຽນແມ່ນຂະບວນການຫັນປ່ຽນວິຖີຊີວິດຂອງຄົນຜູ້ ຫນຶ່ງ. ຄົນເຮົາເກີດມາໃຜໆກໍ່ຢາກມີຄວາມກ້າວຫນ້າ, ຢາກມີຄວາມກ້າວຫນ້າຕ້ອງໄດ້ຮ່ຳຮຽນ, ການຮ່ຳຮຽນຕ້ອງເລີ່ມແຕ່ ນ້ອຍຫາໃຫຍ່, ແຕ່ງ່າຍຫາຍາກ, ແຕ່ຕ່ຳຫາສູງ, ການຮຽນຄືການປະຕິບັດລຶບລ້າງຄວາມໂງ່ຈ້າຫຼ້າຫຼັງ ຫຼື ເວົ້າຄວາມ! ຫນຶ່ງວ່າ ການຮຽນເປັນຂໍກະແຈໄຂປະຕູໄປສູ່ແສງສະຫວ່າງ, ແນ່ນອນຢາກປະສົບຜົນສຳເລັດກໍຕ້ອງໄດ້ເຝິກຝົນຫຼໍ່ຫຼອມ. ຕົນເອງໃນທຸກດ້ານເປັນຕົ້ນ ດ້ານລະບຽບວິໄນ ແລະ ຄວາມອົດທົນ, ລະບຽບວິໄນແມ່ນຂໍ້ບັງຄັບໃຫ້ທຸກຄົນຕ້ອງ ປະຕິບັດເພື່ອຄວາມເປັນລະບຽບຮຽບຮ້ອຍ, ຄວາມສອຍງາມຢູ່ໃນສັງຄົມ ກໍຄື ໃນຫ້ອງຮຽນ ແລະ ໂຮງຮຽນ. ທຸກໆ ໂຮງຮຽນໃນທົ່ວປະເທດຈະແມ່ນຢູ່ໃນເມືອງ ຫຼື ຊົນນະບົດ ພູດອຍລ້ວນແຕ່ຕ້ອງມີລະບຽບວິໄນ ແລ້ວຈະເກີດຄວາມດີ ຄວາມງາມຂຶ້ນແກ່ຕົນສະເຫມີ, ກົງກັນຂ້າມຫາກບໍ່ມີລະບຽບວິໄນແລ້ວມັນກໍ່ໃຫ້ເກີດຄວາມສັບສົນວຸ້ນວາຍຂຶ້ນຕົວຢ່າງ: ເວລາຄູຂຶ້ນສິດສອນຫາກນັກຮຽນບໍ່ຍອມປະຕິບັດລະບຽບວິໄນໃນການຮຽນແລ້ວ ໃນຊົ່ວໂມງນັ້ນກໍຈະເຮັດໃຫ້ປະສິດຕິ ພາບການສອນ-ການຮຽນບໍ່ໄດ້ຮັບຜົນເທົ່າທີ່ຄວນເຊັ່ນ:ໃນຫ້ອງ ມ.3 ທ້າວ....ບໍ່ຍອມປະຕິບັດລະບຽບວິໄນຂອງຫ້ອງໃນທີ່ຜົນການຮຽນຂອງລາວກໍບໍ່ປະສົບຜົນສຳເລັດໄດ້ຄື: ການສອບເສັງເລື່ອນຊັ້ນ ຫຼື ຈົບຊັ້ນບໍ່ໄດ້ ເລີຍຄ້າງຫ້ອງ ເກົ່າ, ກົງກັບຕາສູພາສິດລາວກ່າວໄວ້ວ່າ: ເຮັດນາຫມົດປີໄຟໄຫມ້ເລົ້າເຂົ້າ. ຫາກວ່າເປັນເຊັ່ນນີ້ເຖິງຈະຍົກຍ້າຍໄປຮຽນຢູ່ ໂຮງຮຽນໃດກໍຕາມຜູ້ກ່ຽວກໍຈະສ້າງຄວາມສັບສົນ, ເສື່ອມເສຍ ໃຫ້ແກ່ໂຮງຮຽນນັ້ນ, ເຮົາຕ້ອງເປັນເຈົ້າການປະຕິບັດລະບຽບວິໄນຢ່າງເຂັ້ມງວດ ຢ່າໃຫ້ລະບຽບເປັນເຈົ້າບັງຄັບຕົນ.

ໄປຄຽງຄູ່ກັນນັ້ນຢາກໃຫ້ການຮຽນປະສົບຜົນສຳເລັດ ນອກຈາກມີລະບຽບວິໄນດີແລ້ວຍັງບໍ່ທັນພຽງພໍເທື່ອ ເຮົາຕ້ອງເປັນຜູ້ທີ່ມັກຄົ້ນຄ້ວາຮ່ຳຮຽນຢູ່ສະເຫມີ, ເວລາຄູສິດສອນ, ອະທິບາຍບົດຮຽນຕ້ອງຕັ້ງໃຈຟັງຢ່າງຈົດຈໍ່ ຈົດກ່າຍ ບົດຮຽນໃຫ້ຄົບຖ້ວນ, ຖາມຄູເມື່ອຕົນບໍ່ເຂົ້າໃຈເພື່ອໃຫ້ບັນຫາຕ່າງໆທີ່ຕົນບໍ່ເຂົ້າໃຈນັ້ນກາຍເປັນບັນຫາຈະແຈ້ງ, ຈື່ຈຳ ໄດ້ດີ ດັ່ງສຸພາສິດລາວກ່າວໄວ້ວ່າ: ອາຍຄູບໍ່ໄດ້ຄວາມຮູ້ ອາຍຫມູ່ບໍ່ໄດ້ປົດຮຽນ. ການຮຽນບໍ່ແມ່ນຈະອ່ານພຽງຄັ້ງດຽວ, ຂຽນຄັ້ງດຽວຈະປະສົບຜົນສຳເລັດໂລດ ຕ້ອງຜ່ານເວລາຍາວນານຫຍຸ້ງຍາກສັບສົນ, ຫຼາຍຄັ້ງພໍສົມຄວນ ແລະ ຕັ້ງໃຈ ຮຽນອິຫຼີຈຶ່ງໄປເຖິງເປົ້າຫມາຍໄດ້ດັ່ງເຊັ່ນ: ທ່ານໄກສອນ ພົມວິຫານ ອາດີດເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວ, ອາດີດປະທານປະເທດ ສ ປປ ລາວ ເພິ່ນມີຄວາມສາມາດປາກເວົ້າພາສາຕ່າງປະເທດໄດ້ຫຼາຍພາສານັ້ນ ໃນເວລາຮ່ຳ ຮຽນເພິ່ນຕັ້ງຫນ້າຄົ້ນຄ້ວາຢ່າງເອົາຈິງເອົາຈັງຢູ່ພາຍໃນ ແລະ ຕ່າງປະເທດ, ບໍ່ປ່ອຍປະເວລາໃຫ້ລ່ວງເລີຍໄປຢ່າງໄຮ້ຄ່າ, ເພິ່ນຖືອຸດົມຄະຕິທີ່ວ່າ: ຮຽນຈຶ່ງຮູ້, ຮູ້ຈຶ່ງມີຄວາມສາມາດ, ມີຄວາມສາມາດຈຶ່ງເຮັດໄດ້, ເຮັດໄດ້ຈຶ່ງປະສົບຜົນສຳເລັດ. ສະນັ້ນ, ການຮຽນມີຄວາມສາຄັນທີ່ສຸດຕໍ່ທຸກຊີວິດຫາກຜູ້ໃດໃຝ່ຫາການສຶກສາຊອກຮູ້ຮ່ຳຮຽນແນ່ນອນຈະມີຄວາມກ້າວໜ້າບໍ່ຫຼາຍກໍ່ຄົງໜ້ອຍ ແລະ ດີກວ່າທີ່ບໍ່ໄດ້ຮຽນ ຫຼື ເວົ້າຢ່າງໜຶ່ງ ຖ້າຕັ້ງຕໍ່ການຮຽນກໍ່ສາມາດຂັບໄລ່ຄວາມໂງ່ຈ້າຫຼ້າຫຼັງໃຫ້ຫ່າງໄກຈາກຕົນໄດ້. ກົງກັນຂ້າມຫາກບໍ່ຕັ້ງໃຈຮ່ຳຮຽນກໍຈະກາຍເປັນຄົນທໍ້ຖອຍ, ເສຍເວລາໄປຊື່ໆ. ເວລາ ກວດກາສອບເສັງກໍຈະໄດ້

ຄະແນນຕໍ່າ.ຈາກການກວດກາ ແລະ ສອບເສັງນັ້ນມັນໄດ້ຊີ້ໃຫ້ເຫັນຜົນຂອງພຶດຕິກໍາໃນການ ຮຽນ. ໃນສູ່ມື້ນີ້ສັງຄົມຂະຫຍາຍຕົວກ່າວຫນ້ານໍາໃຊ້ເທັກໂນໂລຊີທີ່ທັນສະໄຫມເຂົ້າໃນການເຮັດວຽກໃນທຸກຂົງເຂດວຽກ ງານ ຫາກວ່າບໍ່ມີລະດັບການສຶກສາທີ່ແນ່ນອນໃນລະດັບໃດລະດັບໃດຫນຶ່ງກໍຈະກາຍເປັນຄົນຫ່ວາງງານ, ຄົນທີ່ສັງຄົມບໍ່ ໃຫ້ຄວາມສໍາຄັນ, ບໍ່ໃຫ້ຄວາມໄວ້ວາງໃຈ ໃນທີ່ສຸດກໍເປັນຄົນເລໂລ ເສເພກາຍເປັນມານຂອງສັງຄົມ.

ຜ່ານການສະເຫນີ, ພິສູດ ວິເຄາະ ມານັ້ນຈຶ່ງເຫັນໄດ້ວ່າການມີລະບຽບວິໄນດີມັນຈະເຮັດໃຫ້ຕົນເອງເປັນຜູ້ທີ່ມີ ລະບຽບວິໄນແລ້ວເກີດຄວາມງົດງາມແກ່ຕົນເອງ ໂດຍສະເພາະຕໍ່ການສຶກສາຮໍ່າຮຽນ ຫາກຂາດລະບຽບວິໄນກໍຈະບໍ່ ປະສົບຜົນສໍາເລັດໄດ້. ການສຶກສາຮໍ່າຮຽນມັນກໍສຸດທີ່ສໍາຄັນເປັນຢ່າງຍິ່ງ ແລະ ຂາດບໍ່ໄດ້ ຫາກວ່າຕັ້ງຕໍ່ເອົາໃຈໃສ່ການ ຮຽນດ້ວຍຄວາມອົດທົນແນ່ນອນກໍຈະກາຍເປັນນັກຮຽນດີ, ຮຽນເກັ່ງຂອງໂຮງຮຽນ ແລະ ສັງຄົມໄດ້. ດັ່ງນັ້ນ, ມັນຈຶ່ງ ສອດຄ່ອງກັບຄໍາເວົ້າທີ່ວ່າ ນັກຮຽນທີ່ດີຕ້ອງເປັນຜູ້ທີ່ມີລະບຽບວິໄນ ແລະ ຮໍ່າຮຽນເກັ່ງ.

## ບົດແບບຢ່າງແຕ່ງປະສົມ 2

**ຫົວບົດ: ຈົ່ງອະທິບາຍ, ພິສູດ ແລະ ວິຈານຄຳເວົ້າຂອງທ່ານມາກເລນິນທີ່ວ່າ:**
**" ຮຽນແລ້ວ ຮຽນອີກ ຮຽນເລື້ອຍໆໄປ "**

ຄວາມຮູ້ຂອງຄົນເຮົາບໍ່ມີຍາມພຽງພໍ ແລະ ບໍ່ມີຍາມອີ່ມເຕັມເປັນຈັກເທື່ອ,ບໍ່ມີໃຜດອກທີ່ຈະແກ່ກາຍຮຽນເຖິງ ຜົມຫງອກ,ເຖົ້າແກ່ ຖ້າມີຄວາມສາມາດກໍ່ຍັງຮຽນໄດ້.. ເພາະການຮຽນຮູ້ເປັນອາວຸດຕໍ່ສູ້ເພື່ອລົບລ້າງກັບຄວາມໂງ່ຈ້າ ຫູ້ໜວກ.ດັ່ງນັ້ນ, ເມື່ອຢາກມີຄວາມຮູ້ຄວາມສມາດຕອ້ງຮຽນ, ຮຽນຫຼາຍເທົ່າໃດກໍຍິ່ງເຮັດໃຫ້ເຮົາຮູ້ຫຼາຍເທົ່ານັ້ນ. ດັ່ງນັ້ນ, ຈຶ່ງຖືກຕ້ອງທີ່ສຸດກັບຄຳເວົ້າຂອງທ່ານ ເລນິນກ່າວໄວ້ວ່າ: " ຮຽນແລ້ວ ຮຽນອີກ ຮຽນເລື້ອຍໆໄປ "

ຄົນເຮົາເຖິງຈະມີຖານະໃດກໍຕາມ ບໍ່ມີໃຜດອກທີ່ຈະຮູ້ໄດ້ທຸກສິ່ງທຸກຢ່າງໂດຍບໍ່ຜ່ານການຮ່ຳຮຽນ, ແຕ່ເວົ້າ ແນວນີ້ກໍ່ບໍ່ຫມາຍຄວາມວ່າຄວາມຮູ້ຂອງຄົນເຮົາມີຂອບເຂດຈຳກັດຢູ່ໃນລະດັບໃດຫນຶ່ງກໍພໍແລ້ວ. ກົງກັນຂາມຄົນເຮົາ ສາມາດຮັບຮູ້ຫຼາຍສິ່ງຫຼາຍຢ່າງ, ມີຄວາມຮູ້ເລິກເຊິ່ງ ແລະ ກ້ວາງຂວາງໄດ້ດ້ວຍການຊອກສະແຫວງຫາຮຽນເຊັ່ນ:ຮຽນ ນຳປື້ມພັບຕຳລາ, ຮຽນນຳເອກະສານ, ຮຽນນຳຄູ-ອາຈານ, ຜູ້ອາວຸໂສທີ່ມີປະສົບການ,ຮຽນນຳສັງຄົມ. ບໍ່ມີໃຜດອກກ້າ ເວົ້າໄດ້ວ່າ:ຕົນເອງຮູ້ຫມົດທຸກສິ່ງທຸກຢ່າງແລ້ວບໍ່ຈຳເປັນຕ້ອງຮຽນອີກ. ການຮຽນຍິ່ງຮຽນຫຼາຍເທົ່າໃດກໍຍິ່ງເຮັດໃຫ້ເຮົາ ມີຄວາມຮູ້ຫຼາຍຂື້ນເທົ່ານັ້ນ. ສະນັ້ນ, ຄຳເວົ້າຂອງ ທ່ານມາກເລນິນທີ່ວ່າ: ຮຽນແລ້ວ, ຮຽນອີກ,ຮຽນເລື້ອຍໆໄປ ຈຶ່ງເປັນ ຄຳເວົ້າທີ່ຖືກຕ້ອງທີ່ສຸດ, ເປັນສັດຈະທາ ແລະເປັນວິທະຍາສາດ ເຊິ່ງບໍ່ມີຜູ້ໃດຈະປະຕິເສດໄດ້, ການຮຽນແມ່ນສິ່ງຈຳ ເປັນ ແລະ ສຳຄັນທີ່ສຸດສຳລັບທຸກໆຄົນ. ຄວາມສະຫຼຽວສະຫຼາດ, ສະຕິປັນຍາພິບໄຫວ ປະຕິພານຕ່າງໆຈະມີຂຶ້ນໄດ້ ຕ້ອງຜ່ານການຮຽນທັງນັ້ນ ນັບທັງຮຽນນຳຄູ-ອາຈານຢູ່ໃນໂຮງຮຽນ, ຫມູ່ເພື່ອນ, ພໍ່ແມ່, ຜູ້ມີຄວາມຮູ້ຄວາມສາມາດຢູ່ໃນ ສັງຄົມ. ການຮຽນສ້າງຄວາມຮູ້ຄວາມສາມາດໃຫ້ແກ່ຄົນຮູ້ນຳໃຊ້ໃຫ້ເກີດປະໂຫຍດເຂົ້າໃນການດຳລົງຊີວິດຕົວຈິ່ງໄດ້ດັ່ງ ຜົນສະຫຼຸບເປັນນິຍາມຂອງການຮຽນວ່າ: ຮຽນຈຶ່ງຮູ້ຈັກ, ຮູ້ຈັກຈຶ່ງເກີດຄວາມສາມາດ, ມີຄວາມສາມາດຈຶ່ງເຮັດໄດ້, ເຮັດໄດ້ຈຶ່ງເກີດຜົນສຳເລັດຕາມມາ..

ຄົນເຮົາທີ່ດຳລົງຊີວິດຢູ່ໃນສັງຄົມຢາກມີຄວາມຮູ້ຄວາມສາມາດ, ຢາກມີຄວາມກ້າວຫນ້າ, ຢາກມີຄວາມສຳເລັດ ໃນຫນ້າທີ່ວຽກງານຕ່າງໆນັ້ນ, ປັດໃຈທີ່ຕັດສິນທຸກບັນຫານັ້ນໄດ້ຄືຕ້ອງມີຄວາມຮູ້ຄວາມສາມາດນັ້ນເອງ. ແຕ່ຖ້າຢາກມີ ຄວາມຮູ້ຄວາມສາມາດກໍຕ້ອງຮຽນ.ການຮຽນຈະເກີດເປັນຜົນຂຶ້ນໃນມື້ຫນຶ່ງຍາມດຽວແມ່ນເປັນໄປບໍ່ໄດ້ມັນຕ້ອງໃຊ້ ເວລາທີ່ແນ່ນອນໃຊ້ຄວາມດຸຫມັ່ນເປັນຫຼັກ, ຂະຫຍັນພາກພຽງໄປຫເລື້ອຍໆ ແລະ ບໍ່ມີເວລາທີ່ຈະສອາຍເກີໄປ ມີແຕ່ ການຮຽນເທົ່ານັ້ນທີ່ຈະເຮັດໃຫ້ຄົນເຮົາເປັນຄົນເກັ່ງໄດ້.. ກົງກັນຂ້າມຖ້າຮຽນແນວດີບໍ່ຍາກຈັກຢ່າງເລີຍບົດດຽວກໍເຫັນ ຜົນປາກົດຂຶ້ນມາເຊັ່ນ: ຮຽນເປັນຄົນຂີ້ລັກ, ຮຽນເປັນນັກເລງອັນຕະພານ, ຮຽນຕົວະຕົ້ມຫຼອກລວງ, ຮຽນເປັນຄົນ ຂີ້ຄ້ານ... ການຮຽນບໍ່ແມ່ນຈະຮຽນເອົາແຕ່ທິດສະດີເທົ່ານັ້ນແລ້ວເຂົ້າໃຈວ່າຕົນເອງພຽງພໍແມ່ນເປັນໄປບໍ່ໄດ້, ຍັງຕ້ອງຮຽນນຳຜູ້ທີ່ມີຄວາມຮູ້ສູງ, ຮຽນນຳມະຫາຊົນ ແລະ ອື່ນໆ ຈິ່ງນັບວ່າເປັນການຮຽນຢ່າງບໍ່ສິ້ນສຸດເປັນຈັກເທື່ອ.ໃນຕົວຈິ່ງຄືນາຍຊ່າງກໍ່ເຮືອນຜູ້ຫນຶ່ງນອກຈາກລາວມີຄວາມຮູ້ກ່ຽວກັບວິທີເຮັດເຮືອນແລ້ວ ລາວ ຕ້ອງຮຽນຮູ້ຕື່ມວ່າເຮັດແນວໃດຈະເຮັດໃຫ້ເຮືອນນັ້ນງາມ ແລະ ຖືກໃຈຜູ້ຢູ່, ມີຄວາມທົນແຂງແກ່ນຢູ່ໄດ້ດົນ, ການຮຽນ ຮູ້ໃນເລື່ອງຕ່າງໆນັ້ນ ບໍ່ແມ່ນນາຍຊ່າງຈະຮູ້ໄດ້ໂລດທັງຮຽນ

ດ້ວຍທິດສະດີ ແລະ ເຮັດຕົວຈິ່ງ ຖອດຖອນບົດຮຽນພ້ອມ, ຮຽນນຳຜູ້ມີບົດຮຽນ, ຮຽນນຳທຸກສິ່ງທຸກຢ່າງທີ່ຈະເຮັດໃຫ້ລາວຮູ້ຈົນເກີດຄວາມຊຳນິຊຳນານ. ວິຊາຊີບດ້ານອື່ນໆກໍເຊັ່ນ ດຽວກັນ ຈະປະສົບຜົນສຳເລັດໄດ້ກໍຕ້ອງເກີດຈາກຜົນຂອງການຮຽນທັງຫມົດ, ດັ່ງນັ້ນ, ຈິ່ງເວົ້າໄດ້ວ່າການຮຽນນັ້ນມັນຈະ ນຳຄວາມຮູ້ຢ່າງຫຼວງຫຼາຍມາໃຫ້ແກ່ຕົນ ແລະ ຄວາມຮູ້ນັ້ນກໍບໍ່ມີຍາມພຽງພໍ. ຢາກມີ ມີແຕ່ເອົາໃຈໃສ່ຮຽນເທົ່ານັ້ນ ຮຽນ ໄປເລື້ອຍ ເພາະການຮຽນບໍ່ມີຍາມອີ່ມເຕັມ ແລະ ສິ້ນສຸດ.

ເພາະນັກຮຽນການຮຽນຖືເປັນສິ່ງສຳຄັນ, ເປັນຄະຕິປະຈຳໃຈສະເຫມີ, ຮຽນນາຍຄູ-ອາຈານຍັງບໍ່ພຽງພໍເທື່ອ, ຢາກເຂົ້າໃຈບົດຮຽນຢ່າງເລິກເຊິ່ງ ຕ້ອງເປັນຄົນຂະຫຍັນຫ້າວຫັນ, ດຸຫມັ່ນຮ່ຳຮຽນ, ຂີດຂຽນ, ຊອກຮູ້ດ້ວຍຕົນເອງ, ຫມັ່ນ ອ່ານ, ຫມັ່ນແກ້ບົດວຽກບ້ານ, ສັບຊ້ອນເວລາຮຽນໃຫ້ຫຼາຍກ່ວາເວລາຫຼິ້ນໄດ້ເທົ່າໃດຍິ່ງເປັນການດີ, ຖ້າເຮົາຮຽນຫຼາຍກໍ ຈະເຮັດໃຫ້ເຮົາມີຄວາມຮູ້ຫຼາຍຂຶ້ນ ແລະ ກ້ວາງຂວາງອອກໄປເລື້ອຍໆ. ກົງກັນຂ້າມຖ້າເຮົາບໍ່ຮຽນເຮົາກໍຈະບໍ່ຮູ້ຄວາໂງ່ຈ້າ ຫຼ້າຫຼັງກໍຈະຄອບງຳເຮົາຕະຫຼອດໄປ. ຄຳເວົ້າທີ່ວ່າ: ຮຽນແລ້ວຮຽນອີກ ຮຽນເລື້ອຍໆໄປ ຈິ່ງເປັນຄຳເວົ້າທີ່ຖືກຕ້ອງທີ່ສຸດ, ຊັດເຈນທີ່ສຸດ ແລະ ເປັນແສງສະຫວາງເບືອງທາງອະນາຄົນໃຫ້ແກ່ຕົນ, ເປັນຂໍກຸນແຈລູກສາຄັນເພື່ອໄຂປະຕູໄປສູ ຄວາມກ້າວຫນ້າ. ຖ້າຄົນໃດຫາກຍຶດຖືເອົາຄຳເວົ້ານີ້ເປັນແນວທາງ, ເປັນອຸດົມການໃນການຮຽນນັ້ນແນ່ນອນວ່າຕ້ອງ ປະສົບຜົນສຳເລັດເຊັ່ນ: ມີຄວາມກ້າວຫນ້າ ແລະ ມີຜົນສຳເລັດໃນຫນ້າທີ່ການງານທຸກຢ່າງໆບໍ່ຕ້ອງສົງໃສ.

ຜ່ານຈາກການນຳສະເຫນີ, ວິເຄາະ ແລະ ໄຈ້ແຍກມານັ້ນຈິ່ງເຫັນໄດ້ວ່າການຮຽນເປັນສິ່ງຈຳເປັນ, ສຳຄັນ ແລະ ຂາດບໍ່ໄດ້ໃນການດຳລົງຊີວິດຂອງຄົນເຮົາ. ຄຳເວົ້າຂອງ ທ່ານມາກເລນິນສັ່ງສອນໄວ້ນັ້ນ ນັບວ່າເປັນປະໂຫຍດຢ່າງໃຫຍ່ ຫຼວງ, ມີຄຸນຄ່າແກ່ເຮົາຄວນທີ່ຈະໄດ້ສຶກສາຄົ້ນຄ້ວາເພື່ອຈະເຮັດແນວໃດໃຫ້ຕົນເອງມີຄວາມຮູ້ອັນແທ້ຈິ່ງ, ການຮຽນນັ້ນ ບໍ່ເລືອກເວລາ, ເພດໄວ, ບໍ່ມີຂີດຈຳກັດ-ພຽງພໍ ແລະ ບໍ່ທັນສວາຍເກີນໄປ. ສຳລັບນັກຮຽນຕ້ອງຖືເປັນຄະຕິປະຈຳຕົວ ເພື່ອຄວາມກ້າວຫນ້າຂອງຕົນ. ມັນຈິ່ງຖືກຕ້ອງ ແລະ ເຫມາະສົມທີ່ສຸດກັບຄວາມເວົ້າຂອງທ່ານມາກເລນິນທີ່ວ່າ: " ຮຽນ ແລ້ວ ຮຽນອີກ ຮຽນເລື້ອຍໆໄປ "

# ບົດແບບຢ່າງການແຕ່ງປະສົມ 3

**ຫົວບົດ: ອະທິບາຍ - ພິສູດ ຄຳເວົ້າຂອງທ່ານສຸພານຸວົງ ທີ່ວ່າ:" ປະເທດລາວມີຫຼາຍຊົນຊາດຊົນເຜົ່າ ຖ້າສາມັກຄີກັນເຂົ້າ ຈະງາມດັ່ງດອກໄມ້ຫຼາຍສີທີ່ເກີດຂຶ້ນໃນຕົ້ນດຽວກັນ "**

ປະເທດຊາດໃດໜຶ່ງ ກ່ອນຈະມີຄວາມຮຸ່ງເຮືອງສີວິໄລໄດ້ນັ້ນ ກໍ່ຕໍ່ເມື່ອຄົນໃນຊາດນັ້ນຫາກມີຄວາມສາມັກຄີ ເປັນ , ຈິດໜຶ່ງໃຈດຽວກັນຢ່າງແໜ້ນແຟ້ນ ພ້ອມທັງຮ່ວມແຮງຮ່ວມໃຈກັນ ອອກແຮງສ້າງສາພັດທະນາປະເທດຊາດບ້ານເມືອງ ໃຫ້ບັນມີມີຄວາມຈະເລີນກ້າວໜ້າ ສວຍສົດງົດງາມ ແລະ ອຸດົມຮັ່ງມີ ເຊິ່ງມັນສອດຄ່ອງກັບຄຳເວົ້າທີ່ວ່າ:" ປະເທດລາວ ມີຫຼາຍຊົນຊາດຊົນເຜົ່າ ຖ້າສາມັກຄີກັນເຂົ້າຈະງາມດັ່ງດອກໄມ້ຫຼາຍສີທີ່ເກີດຂຶ້ນໃນຕົ້ນດຽວກັນ "

ປະເທດລາວເປັນປະເທດໜຶ່ງທີ່ຕັ້ງຢູ່ແຫຼມອິນດູຈີນ ແລະ ມີຊາຍແດນຕິດກັບຫຼາຍປະເທດເຊັ່ນ: ປະເທດ ຫວຽດນາມ, ກຊາປູເຈຍ, ໄທ ແລະ ຈີນ, ປະເທດລາວເປັນປະເທດທີ່ອຸດົມສົມບູນຮັ່ງມີໄປດ້ວຍຊັບພະຍາກອນທຳມະ ຊາດ ແລະ ວັດຖຸບູຮານອັນເກົ່າແກ່, ນອກນັ້ນປະເທດເຮົາກໍປະກອບດ້ວຍ ຫຼາຍຊົນຊາດຊົນເຜົ່າ ເຊິ່ງທຳມາຫາກິນດ້ວຍ ການປູກຝັງລ້ຽງສັດ ເຮັດວຽກ ເຮັດງານ ຕາມໜ້າທີ່ຮັບຜິດຊອບດ້ວຍຄວາມດຸໝັ່ນຂະຫຍັນພຽນ. ເຂົາເຈົ້າເຮັດວຽກ, ຢ່າງບໍ່ຮູ້ອິດຮູ້ເມື່ອຍ ຕື່ນເດິກລຸກເຊົ້າ ຫາຢູ່ຫາກິນດັ່ງຄຳສຸພາສິດທີ່ວ່າ: * ໄປຢຽບໜາ ມາຢຽບຂຽດ " ເຊິ່ງສະແດງໃຫ້ ເຫັນວ່າຄົນລາວມີຄວາມານະອົດທົນເຂົາເຈົ້າຍັງມີລູກພິເສດທາງດ້ານການດຳລົງຊີວິດ ຮີດຄອງປະເພນີ ການປາກເວົ້າກໍ ລ້ວນແລ້ວແຕ່ມີຄວາມແຕກຕ່າງກັນ, ແຕ່ບັນດາຊົນຊາດຊົນເຜົ່າດັ່ງກ່າວກໍລ້ວນແຕ່ແມ່ນຄົນລາວທັ້ງນັ້ນ.

ເມື່ອພວກເຮົາມາຫວນຄືນຫຼັງເບິ່ງ ຄາວພວກຈັກກະພັດອາເມລິກາປົກຄອງຊົນຊາດດັ່ງກ່າວມີການແບ່ງແຍກກັນ ບໍ່ມີຄວາມສາມັກຄີຮັກແພງກັນ, ເຮັດໃຫ້ພວກສັດຕູສວຍໂອກາດເຂົ້າມາທຳລາຍຈຸດເລົາເຜົາຜານເຮືອນຊານບ້ານຊ່ອງ ເຄື່ອງປູກຂອງຝັງເກືອບຈະບໍ່ມີຫຍັງເຫຼືອຄ້າງເປັນເວລາຫຼາຍສິບກວ່າປີ. ເມື່ອເວົ້າເຖິງການສູ້ຮົບເພື່ອປົກປ້ອງບ້ານເມືອງ ກໍ່ບໍ່ເປັນກຸ່ມເປັນກ້ອນ ບໍ່ມີການສົມທົບກັນເຊັ່ນ: ການຕໍ່ສູ້ຂອງຂະບວນພໍ່ກະດູກ, ອົງແກ້ວກົມມະດຳ ແລະ ເຈົ້າຟ້າປັດໃຈ ອາວຸດການຕໍ່ສູ້ກໍຍັງ ບໍ່ທັນສະໄໝມີພຽງໜ້າໜ້ອງ, ຫອກງ້າວ, ປືນແກັບ ສິ່ງສຳຄັນສຸດແມ່ນຂາດຜູ້ນຳພາໃນການຕໍ່ສູ້ ຈຶ່ງບໍ່ໄດ້ຮັບໄຊຊະນະ.

ເມື່ອມາເວົ້າເຖິງສະໄໝເຮັດການປະຕິວັດຊາດ ປະຊາທິປະໄຕແລ້ວເຮົາຈະເຫັນໄດ້ວ່າການຕໍ່ສູ້ປົດປ່ອຍຊາດ ແມ່ນມີພັກນຳພາອັນສະຫຼາດສ່ອງໃສຂອງ ທ່ານ ໄກສອນ ພົມວິຫານ, ທ່ານ ສຸພານຸວົງ ແລະ ບັນດາຜູ້ນຳອື່ນໆ ລ້ວນ ແລ້ວແຕ່ມີຈິດໃຈຮັກຊາດ ຮັກບ້ານເກີດເມືອງນອນ ມີຄວາມສາມັກຄີຮັກແພງກັບພໍ່ແມ່ປະຊາຊົນບັນດາເຜົ່າ ມີນ້ຳໃຈ ໂອບເອື້ອອາລີ ນ້ຳໃຈເສຍສະຫຼະອັນສູງສົ່ງ ຕໍ່ສິດຜົນປະໂຫຍດສ່ວນຕົວ ເພື່ອສ່ວນລວມ ໄດ້ເຕົ້າລວມບັນດາຊົນຊາດ ຊົນເຜົ່າ ເພື່ອພ້ອມກັນທຳການຕໍ່ສູ້ກັບພວກຈັກກະພັດຕ່າງດ້າວ ດ້ວຍຄວາມທົດລະຫົດອົດທົນ ເປັນເວລາຫຼາຍສິບກວ່າ ປີ ຈຶ່ງໄດ້ຮັບໄຊຊະນະມາສູ່ປວງຊົນລາວທັ້ງຊາດ. ດັ່ງຄຳສຸພາສິດທີ່ວ່າ: "ຄວາມສາມັກຄີ ບໍ່ແມ່ນເກີດແຫ່ງຄວາມສຳເລັດ "

ດັ່ງນັ້ນ, ພວກເຮົາເປັນຄົນລາວທີ່ເກີດໃນຜືນແຜ່ນດິນລາວ ຈຶ່ງຮ່ວມຈິດຮ່ວມໃຈເປັນນ້ຳໜຶ່ງໃຈດຽວກັນ ໃຫ້ເ ໝືອນກັບອ້າຍນ້ອງຮ່ວມອຸທອນດຽວ ຈຶ່ງຈະການມາເປັນກຳລັງອັນກ້າແກ່ນໃຫ້ແກ່ສັງຄົມ ແລະປະເທດຊາດ. ຖ້າພວກ ເຮົາຫາກຂາດຄວາມສາມັກຄີຈະນຳຄວາມເສຍຫາຍ ແລະ ຄວາມເດືອດຮ້ອນມາໃຫ້ແກ່ພວກເຮົາ ດັ່ງຄຳສຸພາສິດທີ່ວ່າ: " ໂຮມກັນເຮົາຢູ່ ແຍກໝູ່ເຮົາຕາຍ " ມັນສະແດງໃຫ້ພວກເຮົາເຫັນວ່າ ຖ້າຂາດຄວາມສາມັກຄີແລ້ວ ຈະພາໃຫ້ປະເທດ ຊາດໄປສູ່ເຫວເລິກອັນມືດມົວ

ພໍຕົກມາເຖິງລະບອບໃຫມ່ນີ້ ພັກ - ລັດເຮົາໄດ້ມີທິດທາງນະໂຍບາຍຕໍ່ຊົນຊາດຊົນເຜົ່າ ມີຄວາມຮັກແພງ ຊ່ວຍເຫຼືອເຊິ່ງກັນ ແລະ ກັນທັງນີ້ກໍ່ເພື່ອແນໃສ່ສຶກສາອົບຮົມວັດທະນາທໍາ ການດໍາລົງຊີວິດແບບໃຫມ່ແບບ ວິທະຍາສາດທີ່ກ້າວຫນ້າ ທັນສະໃຫມ ເຊັ່ນວ່າ: ໄດ້ປຸກລະດົມຊົນເຜົ່າເຂດພູດອຍໃຫ້ມາດໍາລົງຊີວິດຢູ່ຕາມທົ່ງພຽງ ແຄມ ແມ່ນ້ໍາລໍາເຊ ເພື່ອຫຼີກລ່ຽງການຖາງປ່າເຮັດໄຮ່, ປັດຈຸບັນປະເທດເຮົາພວມຢູ່ໃນໄລຍະກໍ່ສ້າງ ແລະ ພັດທະນາປະເທດ ຊາດ ຈຶ່ງຮຽກຮ້ອງໃຫ້ປະຊາຊົນບັນດາເຜົ່າສາມັກຄີເປັນພື້ນແຜ່ນແຫນ້ນຫນາຽວບໍ່ຈໍາແນກຊົນຊາດຊົນເຜົ່າໃຫ້ຖືວ່າເປັນຄົນ ລາວຕ້ອງມີຈິດໃຈເອກະພາບ, ມີສະຕິສູງ, ມີນ້ໍາໃຈຮັກເຊື້ອແພງຊາດ, ມີນ້ໍາໃຈສາມັກຄີຮັກແພງກັບບັນດາປະເທດອື່ນໆ ທີ່ຫວັງດີກັບປະເທດເຮົາ.

ລວມຄວາມວ່າ ຄວາມສາມັກຄີ ແມ່ນບໍ່ເກີດແຫ່ງຄວາມສຸກ ແລະ ເປັນປັດໄຈຕົ້ນຕໍທີ່ຕັດສິນວຽກງານຕ່າງໆໃຫ້ ສໍາເລັດຜົນ.. ສະນັ້ນ, ພວກນັກຮຽນຕ້ອງເຝິກຝົນຕົນເອງໃຫ້ມີຄວາມສາມັກຄີກັບຫມູ່ ຄູ່ ຄູອາຈານ ແລະ ປະຊາຊົນ ບັນດາເຜົ່າ ເພື່ອພ້ອມກັນສ້າງສາ ແລະ ພັດທະນາປະເທດຊາດໃຫ້ຮຸ່ງເຮືອງສີວິໄລ.

## ບົດແບບຢ່າງການແຕ່ງປະສົມ 4

**ຫົວບົດ: ອະທິບາຍ - ພິສູດ ຄຳເວົ້າທີ່ວ່າ: " ຄົນລາວທຸກຄົນມີໜ້າທີ່ຮັກສາ ແລະ ສົ່ງເສີມມູນເຊື້ອວັດທະນາທຳ ຮີດຄອງປະເພນີອັນດີງາມຂອງຊາດ ໄວ້ໃຫ້ ຍືນຍົງຄົງຕົວ ຢູ່ຄູ່ກັບຄົຍລາວຕະຫຼອດໄປ "**

ປະເທດລາວທີ່ແສງຮັກ ແລະ ຫວງແຫນຂອງພວກເຮົາ ມີທູນເຊື້ອວັດທະນາທຳ ແລະ ຮີດຄອງປະເພນີ ອັນ ດີງາມ ເປັນທີ່ເອກອ້າງທະນົງໃຈຂອງປວງຊົນທັງຊາດ, ດັ່ງນັ້ນ, ເພື່ອຮັກສາ ແລະ ສົ່ງເສີມມມູນເຊື້ອອັນເປັນ ເອກະລັກນີ້ ໄວ້ຕະຫຼອດໄປ ມັນຕ້ອງແມ່ນໜ້າທີ່ຂອງຄົນລາວໝົດທຸກຄົນ ສະນັ້ນ, ຈຶ່ງສອດຄ່ອງກັບຄຳເວົ້າທີ່ ວ່າ: " ຄົນລາວທຸກຄົນ ມີໜ້າທີ່ຮັກສາ ແລະ ສົ່ງເສີມມູນເຊື້ອວັດທະນາທຳ ຮີດຄອງປະເພນີອັນດີງາມຂອງຊາດ ໄວ້ໃຫ້ຍືນຍົງຄົງຕົວ ຢູ່ຄູ່ກັບຄົຍ ລາວຕະຫຼອດໄປ "

ພວກເຮົາຮູ້ແລ້ວວ່າຊາດລາວເຮົາ ສາມາດດຳລົງຄົງຕົວ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງມາ ເປັນເວລາ ຫຼາຍນານນັ້ນ ວັດທະນາທຳໄດ້ມີສ່ວນຮັດແໜ້ນຜູກພັນຄົນລາວໃຫ້ເຕົ້າໂຮມເຂົ້າກັນ ສ້າງສາປົກປັກຮັກສາປິຕຸ ພູມອັນແສນຮັກ ແລະ ແສນເຄົາລົບຂອງຕົນໄວ້. ພ້ອມນັ້ນ, ຍັງໄດ້ໃຊ້ຫົວຄິດປະດິດສ້າງ, ບັນຍາ, ຄວາມຮູ້ ຄວາມສາມາດ ແລະ ຄວາມພາກ ພຽນພະຍາຍາມ ເພື່ອເສີມສ້າງສັດທະນາທຳໃຫ້ຮຸ່ງເຮືອງຕະຫຼອດມາ. ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າຮີດຄອງປະເພນີ ແລະ ວັດທະນາທຳມັນແມ່ນມູນມໍລະດົກອັນລ້ຳຄ່າທີ່ໄດ້ຖ່າຍທອດມາຈາກຄົນຮຸ່ນ ກ່ອນສູ່ຄົນຮຸ່ນໃໝ່ຕໍ່ໆມາ.

ໃນພາລະແຫ່ງການພັດທະນາປະເທດຊາດໃຫ້ເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສີວິໄລ ແລະ ຍຸດຕິທຳ..ໃນທຸກວັນນີ້ບໍ່ວ່າໃນຂົງເຂດວຽກງານໃດ. ກ່ອນຈະບັນລຸຜົນສຳເລັດອັນດີງາມນັ້ນ ກ່ອນອື່ນ ໝົດ ມັນໄດ້ ຮຽກຮ້ອງໃຫ້ໝົດທຸກຄົນ ມີຄວາມຮັກຊາດ ຮັກບ້ານເກີດເມືອງນອນ ມີຄວາມຮູ້ຄວາມສາມາດ ແລະ ມີທັດສະນະ ຄຸນສົມບັດອັນດີງາມ ພ້ອມນັ້ນກໍຮູ້ຢ່າງເລິກເຊິ່ງເຖິງຄຸນຄ່າອັນສູງສົ່ງຂອງມູນເຊື້ອວັດທະນາ ທຳ ຮີດຄອງປະເພນີ ອັນ ສວຍສົດງົດງາມຂອງຊາດຕົນ ເພາະວ່າວັດທະນາທຳແມ່ນ ຄຸນຄ່າອັນລວມຍອດຂອງ ບັນດາຜະລິດຕະພັນທາງດ້ານ ວັດຖຸ ແລະ ຈິດໃຈ ທີ່ປູ່ຍ່າຕາຍາຍ ໃນສະໄໝກ່ອນໄດ້ປະດິດສ້າງຂຶ້ນມາ ໃນ ຂະບວນວິວັດຂອງປະວັດສາດກາຍເປັນສິ່ງ ທີ່ມີບົດບາດສຳຄັນໃນການສ້າງແນວຄິດ ຈິດສຳນຶກຂອງຄົນໃນ ສັງຄົມ ໃຫ້ມີຄວາມກ້າວໜ້າສີວິໄລບໍ່ວ່າໃນອະດີດ ປັດຈຸບັນ ແລະ ອະນາຄົດ, ຈາກຄຸນຄ່າອັນປະເສີດດັ່ງກ່າວ ນັ້ນ ຈຶ່ງມີຄວາມຈຳເປັນທີ່ສຸດທີ່ຄົນລາວເຮົາທຸກຄົນຄວນ ເອົາໃຈໃສ່ ໃນການຮັກສາ • ສົ່ງເສີມມູນເຊື້ອ ວັດທະນາທຳ ຮີດຄອງປະເພນີອັນເປັນເອກະລັກຂອງວິງຄະນາຍາດແຫ່ງ ຊາດ ທັງນີ້ ກໍເພື່ອເປັນການສືບຕໍ່ອຸດົມ ຄະຕິອັນຍືນຍົງຂອງບັນພະບຸລຸດ ທີ່ໄດ້ທຸ້ມເທສະຕິປັນຍາ ເຫຼືອແຮງເຂົ້າໃນການ ປະດິດສ້າງ ແລະ ເພື່ອປ້ອງກັນ ຄຸນຄ່າ ອັນລວມຍອດຂອງວັດທະນາທຳຮີດຄອງປະເພນີໃຫ້ຍືນຍົງຄົງຕົວ ແລະ ຂະຫຍາຍຕົວສືບມາ.

ຢາກເຮັດໄດ້ຄືແນວນັ້ນຕ້ອງມີຄວາມຮູ້ ຄວາມສາມາດ ມີຈິດໃຈຮັກຊາດອັນສູງສົ່ງສະແດງອອກທາງ ພຶດຕິກຳຕົວ ຈິງ ເຊັ່ນ: ການນຸ່ງຖືແບບແມ່ຍິງລາວ ນຸ່ງສິ້ນ ເກົ້າຜົມ ບ່ຽງແພ ສ່ວນຜູ້ຊາຍນຸ່ງເຄື່ອງ ສຸພາບ, ຕັດ ຜົມສັ້ນ, ການກິນຢູ່ ບໍ່ຟຸມເຟືອຍ, ການໄປມາສະຫາຽຽມຄ່ຽມຄົມ, ການປາກເວົ້າກໍອ່ອນນອນ ມ່ອນຫູ.. ເວົ້າເຖິງ ການມ່ວນຊື່ນ ກໍ່ຖືກ ລັກສະນະຊາດເຊັ່ນ: ຂັບລຳທ້ອງຖິ່ນ, ຟ້ອນລຳວົງລາວ ແລະ ຟັງເສບພື້ນເມືອງ.. ບໍ່ພຽງ ແຕ່ເທົ່ານັ້ນວັດທະນາທຳຍັງ ສະແດງອອກຫຼາຍດ້ານເຊັ່ນ: ດ້ານສີລະປະກຳ, ຫັດຖະກຳ, ວິຈິດຕະກຳ ແລະ ອື່ນໆ ເຊິ່ງຈະເຫັນໄດ້ໃນການຄວ້າ ລວດລາຍ, ການແຕ້ມລະບາຍສີການຕຳຫູກທໍໄໝ, ຕີ ເງິນຄຳ... ຮີດຄອງປະເພນີ ກໍ່ມີຫຼາຍຢ່າງທີ່ປູ່ຍ່າຕາຍາຍເຄີຍ ປະຕິບັດສືບຕໍ່ກັນມາເຊັ່ນ: ບຸນພະເວດ, ບຸນຊ່ວງເຮືອ, ບຸນບັ້ງໄຟ, ສູ່ຂວັນ ຕ່າງໆ ນອກນີ້ຍັງມີບຸນກິນຈຽງຂອງເຜົ່າມົ້ງ ບຸນເກຂອງເຜົ່າຂະມຸ ແລະ ອື່ນໆ ພ້ອມນັ້ນຍັງມີສັດຖຸບູຮານ ປູສະນີ

ຍະສະຖານອັນສວຍສົດງົດງາມເປັນຕົ້ນແມ່ນ ວັດວາອາຮາມ, ມີແກ້ງ, ມີຕາດ , ມີດ ມີຮູຫຼາຍແຫ່ງ ສິ່ງທີ່ກ່າວມານັ້ນ ລ້ວນແລ້ວແມ່ນວັດທະນາທຳ ອັນດີງາມ ຂອງຊາດລາວແທ້.. ດັ່ງນັ້ນ, ພວກເຮົາຕ້ອງຮູ້ຈັກຖະນຸບຳລຸງປົກປັກຮັກສາເສີມຂະຫຍາຍ ວັດທະນາທຳ ແລະ ຮີດຄອງ ປະເພນີອັນດີງາມຂອງຊາດໃຫ້ຢືນຢົງຄົງຕົວຕະຫຼອດໄປ , ຖ້າບຸກຄົນໃດບໍ່ເອົາໃຈໃສ່ປົກປັກຮັກສາ ຮີດຄອງປະເພນີ ແລະ ບໍ່ສົ່ງເສີມວັດທະນະທຳແລ້ວ ຈະເຮັດໃຫ້ປະເທດຊາດບໍ່ມີຄວາມຮຸ່ງເຮືອງ ເປັນຕົ້ນໃນສະໄຫມທີ່ຖືກຈັກກະພັດຄອບຄອງ ພວກເຂົາໄດ້ນຳເອົາວັດທະນະທຳອັນເປື່ອຍເປື່ອຍເນົ່າເຫມັນ ມາເບື່ອເມົາຊາວຫນຸ່ມ, ເຮັດໃຫ້ຄົນລາວເສຍທາດຂາດຖຸນ ທັງທຳລາຍຮີດຄອງປະເພນີອັນດີງາມຂອງຊາດເຮົາ. ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍມານີ້ ພັກ - ລັດ ເຮົາໄດ້ ເອົາໃຈໃສ່ຟື້ນຟູສົ່ງເສີມວັດທະນະທຳ ແລະ ຮີດຄອງປະເພນີ ໃຫ້ນັບມື້ນັບຈະເລີນຮຸ່ງເຮືອງ.

ຈາກການອະທິບາຍ - ພິສູດ ຄຳເວົ້າທີ່ກ່າວມານັ້ນພວກເຮົາຈຶ່ງເຫັນໄດ້ວ່າ ຮີດຄອງປະເພນີ ແລະ ວັດທະນະທຳ ແມ່ນມໍລະດົກອັນລ້ຳຄ່າຂອງຊາດ ທັງເປັນແຫຼ່ງລາຍຮັບທາງດ້ານເສດຖະເສດ ແລະ ຍັງເປັນທີ່ເອກອ້າງທະນົງໃຈຕໍ່ ແຂກຕ່າງດ້າວ. ສະນັ້ນ, ພວກເຮົາເປັນນັກຮຽນຄວນເຝິກຝົນຕົນເອງ ໃຫ້ຮູ້ຈັກປົກປັກຮັກສາ ແລະ ສົ່ງເສີມຮີດຄອງ ປະເພນີອັນດີງາມຂອງຊາດໄວ້ຕະຫຼອດໄປ.

# ບົດທີ 8

# ການແຕ່ງບົດວິເຄາະ

## 1. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນຂຽນບົດວິເຄາະ

### 1.1. ຄວາມໝາຍຂອງບົດວິເຄາະ

ຄຳວ່າ "ວິເຄາະ" ມາຈາກພາສາປາລີວ່າ: "ວິຄະຫະ" ແລະ ພາສາສັນສະກິດວ່າ: "ວິຄະຣະຫະ" ແປວ່າ: ແຍກອອກມາເປັນສ່ວນໆເຊັ່ນ: ວິເຄາະສັບ, ປະໂຫຍກ, ຂ່າວບົດຄວາມ, ບົດປະພັນວັນນະຄະດີ ແລະ ອື່ນໆ.

ບົດວິເຄາະແມ່ນບົດແຕ່ງປະເພດໜຶ່ງທີ່ໄຈ້ແຍກອອກເປັນສ່ວນໆ ເພື່ອພິຈາລະນາບັນຫາໃດໜຶ່ງ, ບົດປະພັນວັນນະຄະດີໃດໜຶ່ງ, ຕົວລະຄອນໃດໜຶ່ງ. ໂດຍມີການຕີລາຄາຕາມທັດສະນະ ແລະ ຄວາມຄິດຂອງຜູ້ວິເຄາະຢ່າງລະອຽດຖີ່ຖ້ວນ ໂດຍໃຊ້ເຫດຜົນທາງທິດສະດີ ແລະ ຫຼັກຖານຕົວຈິງມາວິເຄາະ.

ບົດວິເຄາະລວມມີ: ບົດວິເຄາະການເມືອງ-ສັງຄົມ, ບົດວິເຄາະບົດປະພັນວັນນະຄະດີ ແລະ ບົດວິເຄາະຕົວລະຄອນ.

**ກ. ບົດວິເຄາະການເມືອງ-ສັງຄົມ**

ການເມືອງ-ສັງຄົມແມ່ນບັນຫາໜຶ່ງທີ່ເກີດຂຶ້ນໃນຊີວິດປະຈຳວັນຂອງຄົນເຮົາ. ການວິເຄາະການເມືອງ-ສັງຄົມຈະຕ້ອງໄດ້ໄຈ້ແຍກໃຫ້ເຫັນເຫດການໃດເຫດການໜຶ່ງ, ບັນຫາໃດ ບັນຫາໜຶ່ງ ລວມທັງດ້ານດີ ແລະ ດ້ານບໍ່ດີ ທີ່ເກີດຂຶ້ນໃນສັງຄົມກໍຄືປະເທດຊາດ. ການວິເຄາະຄວນມີການໄຈ້ແຍກປະເດັນຕ່າງໆຂອງເລື່ອງໂດຍຍົກໃຫ້ເຫັນທີ່ໄປ ແລະ ທີ່ມາຂອງເລື່ອງເພື່ອໃຫ້ຮູ້ເຫດການທີ່ຈະເກີດຂຶ້ນໃນອະນາຄົດ.

ພາສາທີ່ໃຊ້ໃນການຂຽນບົດວິເຄາະຕ້ອງແມ່ນພາສາທີ່ເປັນທາງການ, ຊັດເຈນ, ອ່ານແລ້ວເຂົ້າໃຈງ່າຍ.

**ຂ. ວິເຄາະບົດປະພັນວັນວັນນະຄະດີ**

ວິເຄາະບົດປະພັນວັນນະຄະດີ ແມ່ນການຄົ້ນຄວ້າ ການພິຈາລະນາຈຳແນກເນື້ອໃນແນວຄິດ, ຮູບການສິລະປະ ແລະ ຕີລາຄາຄຸນຄ່າຂອງບົດປະພັນວັນນະຄະດີໃດໜຶ່ງຕາມທັດສະນະຫຼັກໝັ້ນຄວາມຮູ້ ຄວາມເຂົ້າໃຈຂອງຜູ້ວິເຄາະ.

**ຄ. ບົດວິເຄາະຕົວລະຄອນ**

ບົດວິເຄາະຕົວລະຄອນ ແມ່ນບົດວິເຄາະປະເພດໜຶ່ງ ເຊິ່ງໄຈ້ແຍກລົງເລິກໃຫ້ເຫັນຈຸດພິເສດດ້ານຕ່າງໆຂອງຕົວລະຄອນໃດໜຶ່ງໃນເລື່ອງ ໂດຍອາໄສຂໍ້ປົກຍ່ອຍຂອງເລື່ອງເພື່ອສະແດງໃຫ້ເຫັນຈຸດພິເສດທາງດ້ານແນວຄິດ, ນິໄສໃຈຄໍ, ພ້ອມທັງຕີລາຄາຕົວລະຄອນນັ້ນຕາມທັດສະນະ ແລະ ຄວາມຄິດຂອງຜູ້ແຕ່ງ.

### 1.2. ຄວາມສຳຄັນຂອງການສອນບົດວິເຄາະ

ການສອນບົດວິເຄາະບົດປະພັນວັນນະຄະດີ ແມ່ນເພື່ອຊ່ວຍໃຫ້ນັກຮຽນຮັບຮູ້ ແລະ ເຂົ້າໃຈຄຸນຄ່າທາງດ້ານເນື້ອໃນ ແລະ ສິລະປະການແຕ່ງ, ພ້ອມທັງຈຳແນກຈຸດດີ, ຈຸດອ່ອນຂອງບົດປະພັນວັນນະຄະດີດັ່ງກ່າວ. ນອກຈາກນັ້ນ, ຍັງຊ່ວຍໃຫ້ຜູ້ຂຽນບົດວິເຄາະຮູ້ຈັກການແກ້ໄຂຈຸດບົກຜ່ອງຂອງຕົນເພື່ອເຮັດໃຫ້ການປະດິດແຕ່ງບົດປະພັນວັນນະຄະດີເລື່ອງອື່ນໆດີຂຶ້ນ.

## 2. ຫຼັກການວິເຄາະບົດປະພັນວັນນະຄະດີ

### 2.1. ໃຊ້ຫຼັກການພິຈາລະນາ

ການສອນບົດປະພັນວັນນະຄະດີແຕ່ລະປະເພດ ຄູຄວນແນະນຳໃຫ້ນັກຮຽນສຶກສາຄົ້ນຄວ້າເບິ່ງລັກສະນະ ແລະ ວິທີການແຕ່ງບົດວັນນະຄະດີແຕ່ລະປະເພດ ເພື່ອໃຫ້ຮູ້ວ່າມັນມີລັກສະນະສະເພາະແນວໃດ, ການວິເຄາະບົດປະພັນແຕ່ລະເລື່ອງຕ້ອງໃຫ້ສອດຄ່ອງກັບລັກສະນະສະເພາະ. ສະນັ້ນ, ພວກເຮົາບໍ່ສາມາດໃຊ້ຫຼັກການອັນດຽວກັນສຳລັບວິເຄາະບົດປະພັນວັນນະຄະດີທຸກໆເລື່ອງໃນປະເພດຄຳຮ້ອຍກອງ ແລະ ປະເພດຄຳຮ້ອຍແກ້ວ.

### 2.2. ໃຊ້ເຫດຜົນ

ບົດປະພັນວັນນະຄະດີໃດໜຶ່ງຕ້ອງອີງໃສ່ເຫດຜົນ ແລະ ຄວາມຖືກຕ້ອງ ບໍ່ແມ່ນຄວາມຮູ້ສ່ວນຕົວມາຕັດສິນຄຸນຄ່າບົດປະພັນວັນນະຄະດີ.

### 2.3. ໃຊ້ຄວາມຍຸດຕິທຳ

ວິເຄາະບົດປະພັນວັນນະຄະດີບໍ່ຄວນເບິ່ງດ້ານໃດດ້ານໜຶ່ງ ຄວນເບິ່ງທັງດ້ານດີ ແລະ ດ້ານອ່ອນໄປພ້ອມໆກັນ.

## 3. ວິທີວິເຄາະບົດປະພັນວັນນະຄະດີ

### 3.1. ຂັ້ນຕອນຂອງການວິເຄາະບົດປະພັນວັນນະຄະດີ

ການວິເຄາະບົດປະພັນວັນນະຄະດີແບ່ງອອກເປັນ 2 ຂັ້ນຕອນຄື: ຂັ້ນຕອນກະກຽມ ແລະ ຂັ້ນຕອນວິເຄາະ.

**ກ. ຂັ້ນຕອນກະກຽມ**

- **ໄລຍະອ່ານ**

ຢາກວິເຄາະໄດ້ດີ ກ່ອນອື່ນໝົດຕ້ອງເຂົ້າໃຈເນື້ອໃນຂອງບົດປະພັນວັນນະຄະດີນັ້ນສາກ່ອນ, ຢາກເຂົ້າໃຈເນື້ອໃນຂອງບົດປະພັນນັ້ນຕ້ອງອ່ານຫຼາຍໆເທື່ອ, ວິທີອ່ານທີ່ສຳຄັນຄວນສຶກສາຄົ້ນຄວ້າອົງປະກອບທີ່ສຳຄັນຂອງປຶ້ມຄື: ຄຳນຳ, ສາລະບານ, ເນື້ອເລື່ອງ, ພາກເພີ່ມເຕີມ, ບັນນານຸກົມ ແລະ ອື່ນໆ.

- **ຄຳນຳ** ແມ່ນບອກຄວາມມຸ່ງໝາຍໃນການແຕ່ງເນື້ອໃນສຳຄັນຂອງເລື່ອງ ແລະ ບາງຄັ້ງບອກວິທີໃຊ້ປຶ້ມໄວ້ອີກດ້ວຍ. ການອ່ານຄຳນຳເຮັດໃຫ້ຜູ້ອ່ານຮູ້ຈຸດປະສົງໃນການແຕ່ງ ແລະ ວິທີສຶກສາເລື່ອງໃນປຶ້ມ.
- **ສາລະບານ** ແມ່ນບອກຂອບເຂດເນື້ອໃນແຕ່ລະບົດ, ແຕ່ລະພາກຕາມລຳດັບກ່ອນ-ຫຼັງ ຕະຫຼອດເຖິງສ່ວນຕ່າງໆຂອງປຶ້ມ.
- **ເນື້ອເລື່ອງ** ແມ່ນບອກເຖິງເນື້ອໃນລະອຽດທັງໝົດຂອງປຶ້ມ ຖ້າເຮົາຕ້ອງການຈຸດໃດຈຸດໜຶ່ງຄວນເບິ່ງສາລະບານແລ້ວກໍເປີດເອົາເລີຍ.

- ການອ່ານບົດປະພັນວັນນະຄະດີ ຄວນອ່ານສອງ-ສາມເທື່ອຈົນກວ່າເຂົ້າໃຈເນື້ອໃນຂອງເລື່ອງ ເພື່ອພິຈາລະນາວ່າ ເລື່ອງນີ້ມີເນື້ອໃນສຳຄັນຕົ້ນຕໍເວົ້າເຖິງຫຍັງ, ຕົວລະຄອນເອກແມ່ນໃຜ? ຕົວລະຄອນສຳຮອງແມ່ນໃຜ? ໃຜເປັນຜູ້ແຕ່ງ? ສຳນັກພິມໃດ ແລະ ພິມໃນປີໃດ?...

- **ໄລຍະຊອກຫາຂໍ້ມູນ**

ບັນທຶກຂໍ້ປີກຍ່ອຍ ແລະ ລາຍລະອຽດຕ່າງໆກ່ຽວກັບຕົວລະຄອນ, ເຫດການເຄື່ອນໄຫວໃນເລື່ອງ ເຊິ່ງຈະຢູ່ໃນຕອນຕ່າງໆຂອງບົດປະພັນເຊັ່ນ: ກິລິຍາທ່າທາງ, ການກະທຳ, ຄວາມເວົ້າ, ຮູບຮ່າງ, ຄວາມຄິດ, ແບບແຜນດຳລົງຊີວິດ, ການນຸ່ງຖື, ການກິນຢູ່ ແລະ ອື່ນໆ. ຖ້າຫາກຜູ້ວິເຄາະ ແລະ ຄົ້ນຄວ້າເນື້ອໃນ, ຂອບເຂດບົດປະພັນຍັງບໍ່ທັນຄົບຖ້ວນຄວນຊອກອ່ານເອກະສານອື່ນໆ ທີ່ມີສ່ວນພົວພັນກ່ຽວຂ້ອງກັບບົດເຊັ່ນ: ປຶ້ມປະຫວັດສາດ, ປຶ້ມປະຫວັດວັນນະຄະດີ, ທິດສະດີວັນນະຄະດີ, ປະຫວັດນັກແຕ່ງ, ປຶ້ມເລື່ອງ, ວາລະສານ,ໜັງສືພິມ ແລະ ອື່ນໆ.

**ຂ. ຂັ້ນຕອນຂອງການວິເຄາະ**

ຫຼັງຈາກເກັບກຳຂໍ້ມູນໄດ້ຮຽບຮ້ອຍແລ້ວກໍສ້າງໂຄງຮ່າງ.

( ອາດຈະສ້າງໂຄງຮ່າງກ່ອນຊອກຂໍ້ມູນກໍໄດ້) ແລ້ວວິເຄາະແຕ່ລະບັນຫາຕາມໂຄງຮ່າງ.

**3.2. ໂຄງຮ່າງວິເຄາະບົດເລື່ອງເປັນຄຳຮ້ອຍແກ້ວ**

**ກ. ຕັ້ງບັນຫາ**

- ສະເໜີຄວາມເປັນມາ ສະພາບແວດລ້ອມທາງປະຫວັດສາດທີ່ບົດປະພັນວັນນະຄະດີກຳເນີດ.
- ສະເໜີຊື່ ແລະ ປະຫວັດຜູ້ແຕ່ງ ຫຼື ນາມປາກກາ.
- ສະເໜີເນື້ອໃນຕົ້ນຕໍຂອງເລື່ອງໂດຍຫຍໍ້.

**ຂ. ແກ້ໄຂບັນຫາ**

ການວິເຄາະແຕ່ລະບົດອາດບໍ່ຄືກັນ ໂດຍອີງໃສ່ຈຸດພິເສດຂອງບົດ ບາງບົດເຮົາອາດວິເຄາະໄປຕາມເນື້ອໃນ ແລະ ຄວາມໝາຍຂອງແຕ່ລະຕອນ, ບາງບົດອາດຈະວິເຄາະໄປຕາມສາຍຕົວລະຄອນ, ການວິເຄາະທາງດ້ານສິລະປະການແຕ່ງນັ້ນບົດໃດກໍຕ້ອງເຮັດໃຫ້ເປັນລະບົບຈະແຈ້ງ ແລະ ມີເຫດຜົນ.

- ວິເຄາະເນື້ອໃນຄວາມໝາຍຂອງຕົວລະຄອນ.
- ວິເຄາະການກະທຳຂອງຕົວລະຄອນ.
- ວິເຄາະບັນຫາອື່ນໆຕາມທີ່ຜູ້ວິເຄາະເຫັນວ່າຈຳເປັນ.
- ຈຳແນກເນື້ອໃນ ແລະ ສິລະປະ.
- ວິເຄາະສິລະປະການແຕ່ງ.
- ຕຳໜິວິຈານການແຕ່ງ.

**ຄ. ສະຫຼຸບ**

- ຕີລາຄາລວມຜົນສະທ້ອນ, ຄຸນປະໂຫຍດ ແລະ ການນຳໃຊ້.
- ສະແດງທັດສະນະຄວາມຮູ້ສຶກຂອງຕົນເອງ.

**3.3. ໂຄງຮ່າງວິເຄາະບົດປະພັນວັນນະຄະດີຄຳຮ້ອຍກອງ**

ຫົວບົດ "ເມືອງລາວສວຍງາມຮັ່ງມີ" (ຄັດຕອນ) ປຶ້ມແບບຮຽນພາສາລາວ ແລະ ວັນນະຄະດີຊັ້ນມັດທະຍົມປີທີສາມ ໜ້າ 91-95.

‹...›

| | |
|---|---|
| ເມືອງລາວເປັນເຂດບ້ານ | ສະຖານຖິ່ນງາມຕາ |
| ............................ | ...................... |
| ............................ | ...................... |
| ຫີນສີລາຢູ່ນ້ຳ | ເປັນແກ້ວຄ່າແພງ. |

**ກ. ຕັ້ງບັນຫາ**

- ສະເໜີເຄົ້າກຳເນີດສະພາບແວດລ້ອມທາງດ້ານປະຫວັດສາດຂອງບົດກອນ.
- ສະເໜີຊື່ ແລະ ປະຫວັດຜູ້ແຕ່ງ ຫຼື ນາມປາກກາ.
- ສະເໜີເນື້ອໃນຕົ້ນຕໍຂອງບົດກອນຄັດຕອນໂດຍຫຍໍ້.

**ຂ. ແກ້ໄຂບັນຫາ**

- ແບ່ງຕອນ ເລີ່ມແຕ່ເມືອງລາວເປັນເຂດບ້ານສະຖານຖິ່ນງາມຕາ ຮອດ ກະຈາຍກົ້ວທົ່ວແດນ.

  ເວົ້າເຖິງ ເມືອງລາວທາງພາກເໜືອເຕັມແຕ່ພູຜາປ່າໄມ້, ຮອດລະດູບານໃໝ່ດອກໄມ້ນາໆພັນຫຼາກຫຼາຍສີໄດ້ບານເຕັມປ່າ ຍາມເມື່ອລົມໂຊຍພັດກິ່ນຫອມຂອງດວງດອກໄມ້ໄດ້ກະຈາຍໄປທົ່ວດົງດອນ.
- ແຕ່ ນັບແຕ່ໃນເຂດແຄວ້ນ ຮອດ ແຈຈົ້ວສິ່ງສຽງ.

  ເວົ້າເຖິງໃນປ່າມີໄມ້ມີຄ່າຢ່າງຫຼວງຫຼາຍ ສາມາດເອົາໄປຂາຍ ຫຼື ແລກເຄື່ອງໃຊ້ຂອງສອຍ ແລະ ນອກຈາກນີ້, ກໍຍັງມີສັດປ່ານາໆຊະນິດ ມີທັງສັດສີ່ຕີນ, ສອງຕີນ ແລະ ສັດປີກ. ເຊິ່ງໄດ້ສົ່ງສຽງຮ້ອງໄປທົ່ວດົງ.
- ແຕ່ ຟັງສຽງທາດງພ້ຽງ ຮອດ ສະເໜີປັ້ນປ່ຽງຄຳ.

  ເວົ້າເຖິງ ຢູ່ໃນປ່າຍັງມີນ້ຳໂຕນຕາດໄຫຼລິງສູ່ສາຍນ້ຳຕ່າງໆ ແລ້ວໄຫຼລົງໄປໂຮມຢູ່ນ້ຳຂອງ. ຢູ່ທາງດິນພຽງກໍຍັງມີທົ່ງນາອັນກວ້າງໄກສຸດສາຍຕາເຕັມໄປດ້ວຍປູປາ ແລະ ແສງຕາເວັນສ່ອງໃນຍາມເຊົ້າເບິ່ງຮວງເຂົ້າແລ້ວເປັນສີເຫຼືອງຄືດັ່ງຄຳ.
- ແຕ່ ນອກຈາກເຂົ້າ ແລະ ນ້ຳ ຮອດ ເປັນແກ້ວຄ່າແພງ.

  ເວົ້າເຖິງ ເມືອງລາວຍັງມີວັດຖຸບູຮານອັນລ້ຳຄ່າເຊັ່ນ: ພະບາງ ແລະ ທາດທີ່ສຳຄັນຕ່າງໆຄື:ທາດພູສີ, ທາດຫຼວງ ຕະຫຼອດຮອດວັດວາອາຮາມ; ຢູ່ວຽງຈັນມີ: ວັດອິນແປງ, ອຸບມຸງ, ອິງຕື້, ຊຽງຢືນ ແລະ ວັດສີສະເກດ. ຢູ່ຊຽງຂວາງມີ: ທົ່ງໄຫຫີນ, ວັດວາອາຮາມ. ທາງສະຫວັນນະເຂດມີ: ທາດ ອິງຮັງ. ແລະ ທາງພາກໃຕ້ມີ: ວັດພູຈຳປາສັກ. ເມືອງລາວຍັງມີຊັບໃນດິນສິນໃນນ້ຳອັນມີມູນຄ່າມະຫາສານ.

**4. ວິເຄາະບົດປະພັນວັນນະຄະດີ**

**ຕົວຢ່າງ:** ວິເຄາະນິດເລື່ອງ "ປູ່ເຍີ".

**4.1. ນິດເລື່ອງ "ປູ່ເຍີ".**

ຍ່າເຍີເລົ່າພື້ນໃຫ້ລູກຂອງຕົນຟັງດ້ວຍຄວາມໂສກເສົ້າ ເຊິ່ງເປັນເລື່ອງທີ່ລະທົມຂົມຂື່ນມາຫຼາຍຟ້າຫຼ້າປີແລ້ວ ທີ່ມັນອັດອັ້ນໃນຊວງເອິກຂອງເພິ່ນ.

ລູກເອີຍ! ນັບເປັນເວລາເຫິງນານມາແລ້ວ ທີ່ແມ່ຄອງຄອຍຖ້າລູກມີປັນຍາພໍຈະຮັບຟັງເລື່ອງແມ່ເລົ່າ, ພໍ່ຂອງເຈົ້າມີຊື່ວ່າ: ປູ່ເຍີ, ສ່ວນແມ່ເອງກໍບໍ່ແມ່ນມະນຸດທຳມະດາດອກ. ແຕ່ເດີມພໍ່ແມ່ນີ້ແມ່ນແຖນ ເຊິ່ງຖືກພະຍາອິນພະຍາພົມ ສົ່ງລົງມາຍັງໂລກມະນຸດ ເພື່ອເປັນເຈົ້າຈອມແຫ່ງສັດສາວາສິ່ງທັງຫຼາຍ.

ຄາວກ່ອນ ໂລກນີ້ກໍມີມະນຸດແລ້ວ, ແຜ່ນດິນນີ້ເຢືອກເຢັນ, ຄົນເຮົາດຳລົງຊີວິດດ້ວຍຄວາມທຸກຍາກລຳບາກທີ່ສຸດ ມີລົມມິດຕັດມິດແຖພັດວີ່ໆປານວ່າຈະແຫກເນື້ອແຫກໜັງ ມະນຸດມີຂົນດົກປົກຕົນໂຕ, ເປືອຍເນື້ອເປືອຍກາຍເຮັດຫຍັງກໍບໍ່ເປັນ ນອນນຳດິນກິນນຳຫຍ້າ...ພໍຕາເວັນປາກົດຂຶ້ນແຕ່ລະເທື່ອສ່ອງແສງລົງສູ່ໜ້າດິນ ມະນຸດເຮົາຈຶ່ງຫຼຸດຜ່ອນຄວາມໜາວ, ຕົ້ນໄມ້ໃບຫຍ້າ, ສັດສາວາສິ່ງຈຶ່ງພື້ນຊີບຄືນມາ.

ໃນແຕ່ລະຄັ້ງທີ່ຕາເວັນລັບໄປ ແຜ່ນດິນກັບເຢືອກເຢັນລົງ ມະນຸດໜາວສັ່ນທົດໆ ກົກໄມ້ໃບຫຍ້າຮ່ວງໂຮຍ, ຍຸບຍອບ, ຫ່ຽວແຫ້ງ, ສັດສາວາສິ່ງຂົດໂຂໂງກະດ້າງ. ຄົນເຮົາຮຽກຊຸມກັນເປັນກຸ່ມເປັນກ້ອນ ພາກັນຫຼັ່ງທົ່ງເທມຸ່ງໜ້າໄປສູ່ດວງຕາເວັນ. ມຸ່ງໜ້າໄປເລື້ອຍໆຈົນທົນຄວາມຫິວໂຫຍບໍ່ໄດ້ກໍຕາຍອຶດຕາຍຫິວໄປ. ເຂົາເຈົ້າຕາຍຊຸຕາຍຫຼິ່ນ ແຕ່ກໍໄປບໍ່ຮອດບ່ອນມີດວງຕາເວັນ. ພໍ່ເຈົ້າເຫັນເປັນຈັ່ງຊັ້ນ ຍາມໃດກໍອຸກອັ່ງຄັ່ງແຄ້ນຊອກຫາວິທີໃຫ້ມະນຸດບັນເທົາຄວາມທຸກໄຮ້ເຂັນໃຈ, ພໍ່ເຈົ້າໄປຮອດພູໜ່ວຍໜຶ່ງ ເຊິ່ງມີນໍ້າໂຕນຕາດຕຸ້ມໆ, ອາຍນໍ້າພຸ່ງຂຶ້ນມືດກຸ້ມດັ່ງເມກປົກຄຸມໜ່ວຍພູ, ຄວາມເຢັນພຸ່ງອອກດັ່ງລູກສອນຮ້ອຍເຫຼັ້ມພັນເຫຼັ້ມສຽບແທງເນື້ອກາຍ, ພໍ່ເຈົ້າເຫັນບ່ອນນັ້ນມີໝາກໄມ້ມະນີໂຄດ ຍ້ອນໄດ້ກິນໝາກໄມ້ນັ້ນທັນໃດພໍ່ເຈົ້າກໍເກີດກຳລັງມະຫາສານ. ຕໍ່ແຕ່ນັ້ນມາ ພໍ່ເຈົ້າທ່ຽວໄປທຸກຫົນທຸກແຫ່ງເພື່ອໃຊ້ເຫື່ອແຮງຂອງຕົນຊ່ວຍຊູມວນມະນຸດຕ້ານທານຄວາມໜາວ, ຕ້ານທານຍັກມານ, ຜີສາງນາງຮ້າຍ ແລະ ສັດຮ້າຍຕ່າງໆ. ແຕ່ເຖິງປານນັ້ນມະນຸດຍັງປະສົບຄວາມທຸກຍາກລຳບາກຢູ່; ເມື່ອເຫັນແນວນັ້ນພໍ່ເຈົ້າຈຶ່ງອຸກອັ່ງ, ລາວຕັ້ງໃຈເດັດດ່ຽວວ່າ: ເຮັດແນວໃດຈະຊ່ວຍມະນຸດໃຫ້ມີຄວາມສຸກ. ພໍ່ເຈົ້າຈຶ່ງໂສຕາຍທະຍານເຫາະຂຶ້ນໄປບ່ອນມີດວງຕາເວັນຢູ່, ໃນບ່ອນນັ້ນມີກອງໄຟມະໄລກັນອັນມະຫຶມາ ຍາມໃດໄຟກໍລຸກວີ່ໆຢູ່ຈັ່ງຊັ້ນ ສົ່ງແສງແຈ້ງສະຫວ່າງສະໄຫວຢູ່ທຸກເວລາ. ພໍ່ເຈົ້າຈຶ່ງລັກເອົາໄຟກ້ອນໜຶ່ງໄປຍັດໃສ່ໃຈກາງຂອງໜ່ວຍໂລກ. ໄຟກ້ອນນັ້ນນັບມື້ນັບໃຫຍ່ຂຶ້ນ ແລະ ໄໝ້ລາມໄປທົ່ວແກນຂອງດິນ ຈຶ່ງເຮັດໃຫ້ພື້ນແຜ່ນດິນເກີດຄວາມອົບອຸ່ນ. ຍ້ອນແນວນັ້ນສັດສາວາສິ່ງທັງປວງຈຶ່ງເກີດແມ່ແຜ່ລູກຢ່າງໄວວາ. ນັບແຕ່ມີໄຟມາການດຳລົງຊີວິດຂອງມະນຸດກໍມີການປ່ຽນແປງຕ່າງເກົ່າ. ມະນຸດຢູ່ທຸກຫົນທຸກແຫ່ງຕ່າງກໍຮ້ອງລຳທຳເພງເພື່ອສັນລະເສີນຄຸນງາມຄວາມດີຂອງພໍ່ເຈົ້າ.

ມື້ໜຶ່ງພະອິນຢ້ຽມຜ່ານຫຼືບເມກສ່ອງລົງມາເຫັນວ່າ: ໂລກມະນຸດມີເຮືອນຊານບ້ານຊ່ອງເກີດຂຶ້ນຫຼາຍດັ່ງໃບໄມ້ໃນປ່າ, ຜູ້ຄົນຫຼັ່ງທົ່ງເທກັນໄປອອກແຮງງານທຳມາຫາກິນດັ່ງຝູງມົດຝູງປວກ.

ພະອິນມີຄວາມໂກດເຄືອງທີ່ສຸດເພາະຮູ້ວ່າ: ພໍ່ຂອງເຈົ້າໄດ້ນຳເອົາໄຟໄປສູ່ໂລກມະນຸດ. ພະອິນກໍຮຽກເອົາພໍ່ຂອງເຈົ້າໄປລົງໂທດ ແລະ ສັ່ງໃຫ້ເອົາໄຟຍັດໃສ່ທ້ອງພໍ່ເຈົ້າ, ໄຟເຜົາໄໝ້ພໍ່ເຈົ້າຕາຍ, ຊາກສົບຂອງພໍ່ເຈົ້າເລີຍ

ກາຍເປັນພູເຂົາໄຟມະໄລກັນ ໃນໃຈກາງຂອງພູນັ້ນ ຍາມໃດໄຟກໍລຸກວູ່ໆເຜົາຕັບໄຕໄສ້ພຸງພໍ່ເຈົ້າຕະຫຼອດເວລາ, ຄອນໆໄຟພັດພຸ່ງຂຶ້ນໝົດມື້ໝົດຄືນ ເຖິງວ່າພໍ່ເຈົ້າຕາຍໄປແລ້ວກໍຕາມພໍ່ເຈົ້າຍັງເປັນຫ່ວງເປັນໃຍນຳມະນຸດຢ້ານມະນຸດຈະຖືກດັບສູນຍ້ອນຄວາມໜາວ...

**4.2. ບາດກ້າວໃນການແຕ່ງບົດວິເຄາະ**

**ກ. ບາດກ້າວທີ 1** ອ່ານບົດເລື່ອງ "ປູ່ເຍີ".

ຜ່ານການອ່ານເລື່ອງ "ປູ່ເຍີ" ພວກເຮົາເຫັນວ່າ "ປູ່ເຍີ" ເປັນຜູ້ໂຜດມະນຸດ ເຊິ່ງເປັນສັນຍະລັກແຫ່ງຄວາມມຸ່ງມາດປາດຖະໜາ ແລະ ນ້ຳໃຈຕໍ່ສູ້ຢ່າງເດັດດ່ຽວຂອງມວນມະນຸດ. ຕົວລະຄອນ "ປູ່ເຍີ" ແມ່ນຕົວລະຄອນເອກຂອງເລື່ອງ.

**ຂ. ບາດກ້າວທີ 2** ຈົດຂໍ້ປີກຍ່ອຍຕ່າງໆ

- ພໍ່ເຈົ້າເຫັນຈັ່ງຊັ້ນ, ຍາມໃດກໍອຸກອັ່ງຄັ່ງແຄ້ນ ຊອກຫາວິທີໃຫ້ມະນຸດບັນເທົາຄວາມທຸກໄຮ້ເຂັນໃຈ.
- ພໍ່ເຈົ້າໄດ້ທ່ຽວໄປທຸກຫົນທຸກແຫ່ງ ເພື່ອໃຊ້ເຫື່ອແຮງຂອງຕົນຊ່ວຍຊູມະນຸດ.
- ຍ້ອນໄດ້ກິນໝາກໄມ້ມະນີໂຄດ, ທັນໃດພໍ່ເຈົ້າກໍເກີດມີກຳລັງແຮງອັນມະຫາສານ.
- ເມື່ອເຫັນມະນຸດພົບຄວາມທຸກຍາກລຳບາກພໍ່ເຈົ້າຍິ່ງອຸກອັ່ງ.
- ພໍ່ເຈົ້າຈຶ່ງໂສຕາຍທະຍານເຫາະຂຶ້ນເອົາໄຟໄປຍັດໃສ່ໃຈກາງຂອງໜ່ວຍໂລກ.
- ມະນຸດທີ່ຢູ່ທຸກຫົນ ທຸກແຫ່ງຕ່າງກໍຮ້ອງລຳທຳເພງເພື່ອສັນລະເສີນຄຸນງາມຄວາມດີຂອງພໍ່ເຈົ້າ.
- ຊາກສົບຂອງພໍ່ເຈົ້າເລີຍກາຍເປັນພູໄຟມະໄລກັນນັບແຕ່ນັ້ນມາ.
- ເຖິງວ່າພໍ່ເຈົ້າຈະຕາຍໄປແລ້ວກໍຕາມ, ພໍ່ເຈົ້າກໍຍັງເປັນຫ່ວງເປັນໄຍນຳມະນຸດ ຢ້ານມະນຸດຈະຖືກດັບສູນຍ້ອນຄວາມໜາວ ແລະ ອື່ນໆ.

**ຄ. ສະຫຼຸບຂໍ້ປີກຍ່ອຍ**

- ນ້ຳໃຈຮັກຫອມມະນຸດ ແລະ ນ້ຳໃຈເສຍສະຫຼະອັນສູງສົ່ງຂອງປູ່ເຍີທີ່ມີຕໍ່ມະນຸດ.
  - ຄວາມສຳນຶກຂອງປູ່ເຍີ.
  - ນ້ຳໃຈເສຍສະຫຼະອັນສູງສົ່ງຂອງປູ່ເຍີ.
- ຫຼັກຖານອ້າງອີງ
  - ພໍ່ເຈົ້າເຫັນຈັ່ງຊັ້ນ, ຍາມໃດກໍອຸກອັ່ງຄັ່ງແຄ້ນຊອກຫາວິທີໃຫ້ມະນຸດບັນເທົາຄວາມທຸກໄຮ້ເຂັນໃຈ.
  - ເມື່ອເຫັນມະນຸດພົບຄວາມທຸກຍາກລຳບາກພໍ່ເຈົ້າຍິ່ງອຸກອັ່ງ.
  - ຊາກສົບຂອງພໍ່ເຈົ້າເລີຍກາຍເປັນພູເຂົາໄຟມະໄລກັນ.
- ນ້ຳໃຈຕໍ່ສູ້ກັບໄພທຳມະຊາດ
  - ກຳລັງມະຫາສານຂອງປູ່ເຍີເພື່ອເອົາຊະນະກັບທຳມະຊາດ.

- ຄວາມຕັ້ງໃຈອັນເດັດດ່ຽວຂອງປູ່ເຍີໃນການຕໍ່ສູ້ຕ້ານກັບໄພທໍາມະຊາດ ເພື່ອຍາດເອົາຊີວິດຂອງມະນຸດ.

- ຫຼັກຖານ
  - ພໍ່ເຈົ້າທ່ຽວໄປທຸກຫົນທຸກແຫ່ງເພື່ອໃຊ້ເຫື່ອແຮງຂອງຕົນຊ່ວຍຊູມະນຸດ.
  - ພໍ່ເຈົ້າຈຶ່ງລັກເອົາໄຟກ້ອນໜຶ່ງໄປຍັດໃສ່ໃຈກາງຂອງໜ່ວຍໂລກ ແລະ ອື່ນໆ.

**4.3. ບົດວິເຄາະຕົວຈິງ**

**ກ. ຕັ້ງບັນຫາ**

ເລື່ອງ "ປູ່ເຍີ" ແມ່ນເທບນິຍາຍພື້ນເມືອງຂອງລາວໃນສະໄໝບູຮານ ທີ່ສ່ອງແສງໃຫ້ເຫັນນໍ້າໃຈເສຍສະຫຼະອັນສູງສົ່ງ, ນໍ້າໃຈຕໍ່ສູ້ອັນເດັດດ່ຽວ ແລະ ນໍ້າໃຈຮັກຫອມມອນມະນຸດເພື່ອຕ້ານກັບໄພທໍາມະຊາດຍາດເອົາຄວາມສຸກມາໃຫ້ແກ່ມວນມະນຸດ ເລື່ອງນີ້ແມ່ນປະຊາຊົນຜູ້ອອກແຮງງານເປັນຜູ້ແຕ່ງ.

**ຂ. ແກ້ໄຂບັນຫາ**

ບົດ ເລື່ອງ "ປູ່ເຍີ" ແມ່ນສະແດງໃຫ້ເຫັນຕົວລະຄອນທີ່ມີຈິດໃຈປະເສີດ ແລະ ສູງສົ່ງຫຼາຍ. ເພິ່ນເປັນຜູ້ຮັກຫອມມອນມະນຸດຢ່າງແທ້ຈິງ, ທຸກໆເວລາເພິ່ນໄດ້ແຕ່ຄິດເປັນຫ່ວງເປັນໄຍ, ອຸກອັ່ງຄັ່ງແຄ້ນ. ເມື່ອເຫັນມະນຸດພົບຄວາມລໍາບາກ ດັ່ງຕອນໜຶ່ງຂອງບົດເລື່ອງເວົ້າວ່າ:"ພໍ່ເຈົ້າເຫັນຈັ່ງຊັ້ນ, ຍາມໃດກໍອຸກອັ່ງຄັ່ງແຄ້ນຊອກຫາວິທີໃຫ້ມະນຸດບັນເທົາຄວາມທຸກໄຮ້ເຂັນໃຈ..." ຄວາມສໍານຶກຂອງປູ່ເຍີເວລາໃດກໍຢາກໃຫ້ມະນຸດຫຼຸດພົ້ນອອກຈາກຄວາມທຸກຍາກລໍາບາກ. ເມື່ອເຫັນມະນຸດລໍາບາກ, ລົ້ມຫາຍຕາຍໄປກໍຍິ່ງເຮັດໃຫ້ປູ່ເຍີມີຄວາມອຸກອັ່ງ. ດັ່ງຕອນໜຶ່ງຂອງເລື່ອງເວົ້າວ່າ: "ເມື່ອເຫັນມະນຸດພົບຄວາມທຸກຍາກລໍາບາກພໍ່ເຈົ້າຍິ່ງອຸກອັ່ງ..." ນີ້ສະແດງວ່າ: ປູ່ເຍີ ໄດ້ມີຈິດໃຈຮັກຫອມມະນຸດ ແລະ ເປັນຫ່ວງ ເປັນໄຍຢ່າງແທ້ຈິງ.

ຈາກຄວາມເປັນຫ່ວງເປັນໄຍ ອັນບໍ່ມີຂອບເຂດຂອງປູ່ເຍີທີ່ມີຕໍ່ມະນຸດນັ້ນ ໄດ້ກາຍເປັນສິ່ງຊຸກຍູ້ໃຫ້ປູ່ເຍີມີຈິດໃຈອັນປະເສີດ ແລະ ສູງສົ່ງຄື: ນໍ້າໃຈເສຍສະຫຼະ. ຄວາມເສຍສະຫຼະດັ່ງກ່າວນັ້ນບໍ່ມີສິ່ງໃດຈະປຽບທຽບໄດ້. ປູ່ເຍີ ໄດ້ສ່ຽງຕໍ່ຄວາມລໍາບາກນາໆປະການ ເພື່ອໄປຊອກຫາບ່ອນທີ່ມີຕາເວັນ ແລ້ວນໍາເອົາຄວາມອົບອຸ່ນມາໃຫ້ແກ່ມວນມະນຸດ. ດັ່ງຕອນໜຶ່ງຂອງບົດເລື່ອງໄດ້ກ່າວວ່າ: "ພໍ່ເຈົ້າຈຶ່ງໂສຕາຍທະຍານເຫາະຂຶ້ນໄປສູ່ບ່ອນຕາເວັນຢູ່..." ເຖິງຈະມີໄພອັນຕະລາຍຮ້ອຍຢ່າງພັນແນວ, ເຖິງຕົນເອງຈະພົບຄວາມທຸກຍາກ ປູ່ເຍີ ກໍຍອມສະຫຼະສ່ຽງຕໍ່ຄວາມຕາຍເພື່ອຊ່ວຍເຫຼືອມະນຸດ. ດັ່ງຕອນໜຶ່ງຂອງເລື່ອງກ່າວວ່າ: "ຊາກສົບຂອງພໍ່ເຈົ້າເລີຍກາຍເປັນພູເຂົາໄຟມະໄລກັນ..." ປູ່ເຍີໄດ້ຕາຍຍ້ອນຖືກພະອິນລົງໂທດ ແຕ່ນໍ້າໃຈເສຍສະຫຼະອັນສູງສົ່ງນັ້ນຍັງຄົງຢູ່ໃນດວງໃຈຂອງມະນຸດໂດຍບໍ່ມີວັນຈະຫຼົງລືມໄດ້. ໃຜໆກໍຍ້ອງຍໍສັນລະເສີນຄຸນງາມຄວາມດີຂອງປູ່ເຍີ ດັ່ງຕອນໜຶ່ງຂອງເລື່ອງກ່າວວ່າ: "ມະນຸດທີ່ຢູ່ທຸກຫົນທຸກແຫ່ງຕ່າງກໍພາກັນຮ້ອງລໍາທໍາເພງ ເພື່ອສັນລະເສີນຄຸນງາມຄວາມດີຂອງພໍ່ເຈົ້າ..." ຍາມໃດເພິ່ນກໍເປັນຫ່ວງເປັນໄຍ ແລະ ນໍ້າໃຈອັນປະເສີດຂອງປູ່ເຍີບໍ່ໄດ້ຕາຍໄປພ້ອມກັບການຕາຍຂອງປູ່ເຍີ, ເຖິງເພິ່ນໄດ້ຕາຍໄປແລ້ວກໍຕາມແຕ່ຍັງເປັນຫ່ວງເປັນໄຍນໍາມະນຸດ, ຢ້ານມະນຸດຖືກດັບສູນຍ້ອນຄວາມໜາວ.

ນອກຈາກນໍ້າໃຈເສຍສະຫຼະດັ່ງກ່າວນັ້ນແລ້ວ, ປູ່ເຍີຍັງເປັນນັກຕໍ່ສູ້ອັນເດັດດ່ຽວໜຽວແໜ້ນ, ເປັນວິລະບຸລຸດທີ່ອົງອາດກ້າແກ່ນ. ເພື່ອເອົາຊະນະກັບທຳມະຊາດ, ກຳລັງວັງຊາຂອງປູ່ເຍີເກີດຂຶ້ນຍ້ອນໄດ້ກິນໝາກໄມ້ມະນີໂຄດ ເຊິ່ງກຳລັງແຮງດັ່ງກ່າວຍິ່ງເພີ່ມໃຫ້ນໍ້າໃຈຕໍ່ສູ້ຂອງປູ່ເຍີທະວີຄູນຂຶ້ນ. ປູ່ເຍີໄດ້ໃຊ້ກຳລັງຂອງຕົນເດີນໄປທຸກຫົນທຸກແຫ່ງດ້ວຍຄວາມເດັດດ່ຽວ, ດັ່ງບົດເລື່ອງຕອນໜຶ່ງກ່າວວ່າ: "ພໍ່ເຈົ້າທ່ຽວໄປທຸກຫົນທຸກແຫ່ງ ເພື່ອໃຊ້ເຫື່ອແຮງຂອງຕົນຊ່ວຍມະນຸດ..." ການຕໍ່ສູ້ຂອງປູ່ເຍີນັ້ນແມ່ນຕໍ່ສູ້ດ້ວຍຊີວິດ, ບໍ່ຫວັ່ນໄຫວຢ້ານກົວຕໍ່ອຸປະສັກໃດໆ, ເຖິງທຳມະຊາດຈະນາບຂູ່ ແລະ ມີອັນຕະລາຍຫຼາຍຮ້ອຍຢ່າງພັນແນວ, ດ້ວຍນໍ້າໃຈຕໍ່ສູ້ຂອງປູ່ເຍີນັ້ນບໍ່ມີສິ່ງໃດຈະກັ້ນຫ້າມໄດ້. ປູ່ເຍີ ໄດ້ໃຊ້ກຳລັງແຮງຂອງຕົນທີ່ມີລັກເອົາໄຟໄປຍັດໃສ່ໃຈກາງຂອງໜ່ວຍໂລກ ເພື່ອໃຫ້ມະນຸດເກີດຄວາມອົບອຸ່ນ ດັ່ງບົດເລື່ອງໄດ້ກ່າວວ່າ: "ພໍ່ເຈົ້າຈຶ່ງລັກເອົາໄຟກ້ອນໜຶ່ງໄປຍັດໃສ່ໃຈກາງຂອງໜ່ວຍໂລກ..." ຄວາມຕັ້ງໃຈອັນແຮງກ້າຂອງປູ່ເຍີນັ້ນ ເຮັດໃຫ້ປູ່ເຍີ ສາມາດເອົາຊະນະກັບອຸປະສັກທຸກປະການ ແລະ ສາມາດຍາດເອົາຄວາມສຸກມາໃຫ້ແກ່ມວນມະນຸດ ເຊິ່ງມະນຸດທຸກຄົນບໍ່ອາດຈະຫຼົງລືມໄດ້.

ຈາກຄວາມເສຍສະຫຼະ ແລະ ນໍ້າໃຈອັນສູງສົ່ງດັ່ງກ່າວ ມັນໄດ້ສະແດງໃຫ້ເຫັນຈິດໃຈຂອງມະນຸດເຮົາໃນສະໄໝກ່ອນ ເຖິງວ່າເຂົາເຈົ້າຈະທຸກຍາກລຳບາກແຕ່ກໍມີຈິດໃຈປະເສີດເອື້ອເຟື້ອເພື່ອແຜ່, ຊ່ວຍເຫຼືອເຊິ່ງກັນ ແລະ ກັນເປັນຢ່າງດີ. ມາຮອດປັດຈຸບັນນີ້, ມະນຸດເຮົາໄດ້ກ້າວໜ້າຫຼາຍແລ້ວແຕ່ຄຸນຄ່າທາງຈິດໃຈ ແລະ ການກະທຳຂອງປູ່ເຍີຍັງສາມາດນຳເອົາມາເປັນບົດຮຽນອັນລໍ້າຄ່າຕໍ່ຄົນເຮົາ, ເປັນແວ່ນແຍງອັນໃສແຈ້ງໃນການພົວພັນ ແລະ ຢູ່ຮ່ວມກັນໃຫ້ມີຄວາມຜາສຸກ.

**ຄ. ສະຫຼຸບ**

ຜ່ານການວິເຄາະເລື່ອງ "ປູ່ເຍີ" ຈຶ່ງເຫັນວ່າ ແມ່ນເລື່ອງທີ່ເວົ້າເຖິງບຸກຄົນທີ່ກ້າວໜ້າ, ຍົກຍ້ອງສັນລະເສີນດ້ານຈິດໃຈກໍຄືການກະທຳຂອງຕົວລະຄອນ"ປູ່ເຍີ". ພວກເຮົາທຸກຄົນຈຶ່ງສົມຄວນນຳເອົາໄປເປັນບົດຮຽນໃນການດຳລົງຊີວິດ ໂດຍສະເພາະການມີນໍ້າໃຈຕໍ່ກັນ, ຮູ້ຮັກແພງກັນ, ຮູ້ຊ່ວຍເຫຼືອຜູ້ອື່ນໃນຍາມຫຍຸ້ງຍາກ ແລະ ຮູ້ຈັກເສຍສະຫຼະຊີວິດສ່ວນຕົວ ເພື່ອຜົນປະໂຫຍດລວມຂອງມະນຸດ ດັ່ງຄຳສຸພາສິດບູຮານກ່າວວ່າ: "ເງິນຄຳຂອງຫາໄດ້ນໍ້າໃຈຂອງຫາຍາກ".

# ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2009). **ປື້ມວິຊາພາສາລາວລະບົບ 11+3 ປີທີ 1.** ນະຄອນຫຼວງວຽງຈັນ: Nhan Dan Printing House HCHC.

ກະຊວງສຶກສາທິການ ແລະ ກິລາ. (2009). **ປື້ມວິທີສອນພາສາລາວ 2**. ນະຄອນຫຼວງວຽງຈັນ: Nhan Dan Printing House HCHC.

ກະຊວງສຶກສາທິການ ແລະ ກິລາ. (2009). **ປື້ມແບບຮຽນພາສາລາວຫ້ອງ ມ1**. ນະຄອນຫຼວງວຽງຈັນ: Nhan Dan Printing House HCHC.

ນະຄອນຫຼວງວຽງຈັນ ( 2019 ) **ປື້ມຫັດແຕ່ງ ພາສາລາວ - ວັນນະຄະດີ lao langguage and literature**